# ບົດລາຍງານກ່ຽວກັບສະພາບການເຄື່ອນຍ້າຍ ຖິ່ນຖານໃນ ສ.ປ.ປ ລາວ

## ປີ 2023

ຄວາມຄິດເຫັນທີ່ສະແດງຢູ່ໃນສິ່ງພິມສະບັບດັ່ງກ່າວນີ້ແມ່ນມາຈາກແນວຄວາມຄິດຂອງຜູ້ຂຽນ ແລະ ບໍ່ໄດ້ສະທ້ອນໃຫ້ເຫັນທັດສະນະຂອງອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍ (IOM) ແຕ່ຢ່າງໃດ. ການກຳນົດການຈ້າງງານ ແລະ ການນຳສະເຫນີເອກະສານ ຕະຫຼອດເຖິງການພິມເຜີຍແຜ່ ແມ່ນບໍ່ໄດ້ມີການສະແດງຄວາມຄິດເຫັນໃດໆໃນສ່ວນຂອງ ອົງການ IOM ກ່ຽວກັບສະຖານະພາບທາງດ້ານກົດຫມາຍຂອງປະເທດ, ຂອບເຂດຊາຍແດນ, ເມືອງ ຫຼື ຂົງເຂດ, ຫຼື ຂອງເຈົ້າຫນ້າທີ່, ຫຼື ກ່ຽວກັບຊາຍແດນ ຫຼື ເຂດແດນຂອງຕົນ.

ອົງການ IOM ໄດ້ຍຶດໝັ້ນໃນຫຼັກການທີ່ວ່າ ການເຄື່ອນຍ້າຍຖິ່ນຖານແບບມີມະນຸດສະທຳ ແລະ ເປັນລະບຽບຈະກໍ່ໃຫ້ເກີດຜົນປະໂຫຍດແກ່ຜູ້ອົບພະຍົບ ແລະ ສັງຄົມ. ອົງການ IOM ເປັນອົງການຈັດຕັ້ງສາກົນທີ່ໄດ້ຈັດຕັ້ງປະຕິບັດວຽກງານຮ່ວມກັນກັບ ຄູ່ຮ່ວມງານເພື່ອ: ຊ່ວຍເຫຼືອໃນການຕອບສະຫນອງສິ່ງທ້າທາຍໃນການດຳເນີນງານຂອງການເຄື່ອນຍ້າຍຖິ່ນຖານ; ຄວາມເຂົ້າໃຈລ່ວງໜ້າກ່ຽວກັບບັນຫາການເຄື່ອນຍ້າຍ; ຊຸກຍູ້ການພັດທະນາເສດຖະກິດ-ສັງຄົມໂດຍຜ່ານຂະບວນການຂອງການການເຄື່ອນຍ້າຍ; ແລະ ຮັກສາກຽດສັກສີຂອງມະນຸດ ແລະ ສະຫວັດດີການຂອງຊາວອົບພະຍົບ.

---

ຜູ້ຈັດພິມ: ອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ
UN House, 3rd Floor, Lane Xang Avenue
P.O. Box 345
Vientiane
Lao People’s Democratic Republic
Tel.: +856 (21) 26 7734; +856 (20) 020 222 0565
Fax: +856 (21) 267799
Email: IOMVientiane2@iom.int
Website: www.iom.int/countries/lao-peoples-democratic-republic

ຮູບໜ້າປົກ: Caption. © IOM Year/Name SURNAME

ການອ້າງອີງທີ່ຈຳເປັນ: ອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ(2023). ບົດລາຍງານກ່ຽວກັບ ‘’ສະພາບການເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ ປີ 2023’’. IOM, Geneva.

---

ISBN XXX-XX-XXXX-XX-X (PDF)

**© IOM 2023**

ສະຫງວນລິຂະສິດສິດບາງຢ່າງ. ສໍາລັບວຽກງານດັ່ງກ່າວນີ້ແມ່ນມີ ໄດ້ມີການສະຫງວນລິຂະສິດສິດບາງຢ່າງ. ຢູ່ພາຍໃຕ້ການCreative Commons Attribution-NonCommercial-NoDerivs 3.0 IGO License (CC BY-NC-ND 3.0 IGO).*

ສໍາລັບລາຍລະອຽດເພີ່ມເຕີມກະລຸນາເບິ່ງຕື່ມ ໄດ້ທີ່Copyright and Terms of Use.

ສິ່ງພິມສະບັບນີ້ບໍ່ຄວນຖືກນໍາໃຊ້, ຈັດພິມ ຫຼື ແຈກຢາຍຄືນໃໝ່ ເພື່ອຜົນປະໂຫຍດທາງການຄ້າ ຫຼື ການຊົດເຊີຍທາງການເງິນ, ຍົກເວັ້ນຈຸດປະສົງດ້ານການສຶກສາ, ເຊັ່ນ:. ຈະຖືກລວມເຂົ້າໃນປຶ້ມແບບຮຽນ.

ການອະນຸຍາດ: ສໍາລັບການຮ້ອງຂໍເພື່ອນໍາໃຊ້ທາງການຄ້າ ຫຼື ຮ້ອງຂໍສໍາລັບສິດທິ ແລະ ລິຂະສິດໃນຕໍ່ໜ້າ ແມ່ນສາມາດສົ່ງຄໍາຮ້ອງຂໍໄປທີ່ publications@iom.int.* https://creativecommons.org/licenses/by-nc-nd/3.0/igo/legalcode

# ບົດລາຍງານກ່ຽວກັບສະພາບການເຄື່ອນຍ້າຍຖິ່ນຖານ:

# ໃນ ສປປ ລາວ ປີ 2023

## ຄຳນຳ

ການເຄື່ອນຍ້າຍຖິ່ນຖານ ແມ່ນກຸນແຈສຳລັບ ສປປ ລາວ ເຊິ່ງຖືໄດ້ວ່າເປັນທ່າແຮງໃນການຫຼຸດຜ່ອນຄວາມທຸກ ຍາກ ແລະ ຊ່ວຍສົ່ງເສີມການພັດທະນາເສດຖະກິດ-ສັງຄົມ ຢູ່ໃນເຂດຊົນນະບົດ ແລະ ເຂດທີ່ກຳລັງພັດທະນາ. ດັ່ງນັ້ນ, ສປປ ລາວ ແມ່ນປະເທດໜຶ່ງທີ່ປຽບສະເໝືອນເປັນປະເທດຕົ້ນທາງ, ປະເທດທາງຜ່ານ ແລະ ປະເທດປາຍ ທາງ ສຳ ລັບວຽກງານການເຄື່ອນຍ້າຍຖິ່ນຖານ ແລະ ເຫັນໄດ້ວ່າໃນຊ່ວງໄລຍະສອງທົດສະວັດທີ່ຜ່ານມາ, ຈຳນວນ ຄົນລາວທີ່ ໄດ້ອອກໄປອາໄສຢູ່ຕ່າງປະເທດແມ່ນມີຈຳນວນເພີ່ມຂຶ້ນຢ່າງຫຼວງຫຼາຍ.

ຈຳນວນການເພີ່ມຂຶ້ນຂອງຄົນລາວ ໃນການເຄື່ອນຍ້າຍຖິ່ນຖານ ແລະ ກະແສທີ່ພາໃຫ້ມີການເຄື່ອນຍ້າຍໄປອອກ ແຮງງານແບບປະສົມປະສານທັງພາຍໃນ ແລະ ຕ່າງປະເທດທີ່ນັບມື້ນັບຫຼາຍຂຶ້ນຈຶ່ງຮຽກຮ້ອງໃຫ້ມີການເກັບກຳຂໍ້ມູນ ຂອງປະຊາກອນທີ່ເຄື່ອນຍ້າຍຢ່າງຄົບຖ້ວນໂດຍອີງໃສ່ການພັດທະນາຫຼັກຖານຂໍ້ມູນບັນດານະໂຍບາຍທີ່ຕິດພັນກັບ ການເຄື່ອນຍ້າຍຖິ່ນຖານ ແລະ ໜ້າທີຮັບຜິດຊອບຂອງພາກລັດໃນການຄຸ້ມຄອງວຽກງານດັ່ງກ່າວ.

ດັ່ງນັ້ນ, ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ( ກະຊວງແຜນການ ແລະ ການລົງທຶນ (MPI) ຈຶ່ງເປັນໄດ້ເປັນຜູ້ຊີ້ນຳ-ນຳພາຫຼັກ ໃນການ DRI), ຮ່າງບົດລາຍງານກ່ຽວກັບ "ສະພາບການເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ ປີ 2023'' ທີ່ໄດ້ຮັບການສະໜັບສະໜູນທາງດ້ານວິຊາການ ແລະ ງົບປະມານ ຈາກອົງການຈັດຕັ້ງ ສາກົນເພື່ອການເຄື່ອນຍ້າຍຖິ່ນຖານ IOM ປະຈຳ ສປປ ລາວ.

ບົດລາຍງານກ່ຽວກັບ "ສະພາບການເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ ປີ 2023" ສະບັບນີ້ ແມ່ນເປັນສະບັບທຳອິດ ຂອງ ສປປ ລາວ ທີ່ໄດ້ສັງລວມຂໍ້ມູນ ກ່ຽວກັບຮູບແບບ, ທ່າອ່ຽງ, ຜົນກະທົບຕໍ່ຂົງເຂດການພັດທະນາທີ່ສຳຄັນ ແລະ ການຄຸ້ມຄອງທາງດ້ານວຽກງານການເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ. ບົດລາຍງານການເຄື່ອນຍ້າຍ ຖິ່ນຖານ ແມ່ນເປັນໜຶ່ງໃນຂະບວນການລິເລີ່ມທີ່ມີຈຸດປະສົງເພື່ອອຳນວຍຄວາມສະດວກໃນການກຳນົດນະໂຍບາຍໂດຍ ອີງໃສ່ຫຼັກຖານການເຄື່ອນຍ້າຍຖິ່ນຖານ ແລະ ຍັງສາມາດເປັນເຄື່ອງມືໃນການສ້າງຂີດຄວາມສາມາດໃຫ້ແກ່ພາກລັດ ແລະ ບັນດາອົງການຈັດຕັ້ງສາກົນຕ່າງໆ. ການເຄື່ອນຍ້າຍຖິ່ນຖານແມ່ນຮາກຖານທີ່ໝັ້ນຄົງເພື່ອບັນລຸເປົ້າໝາຍການ ພັດທະນາເພື່ອຄວາມຍືນຍົງ (SDG) ເຊິ່ງຢູ່ໃນເປົ້າໝາຍຍ່ອຍທີ່ 10.7 "ການອຳນວຍຄວາມສະດວກຕໍ່ກັບການ ເຄື່ອນຍ້າຍຖິ່ນຖານຢ່າງເປັນລະບຽບ, ປອດໄພ, ແລະ ມີຄວາມຮັບຜິດຊອບ ທີລວມທັງການຈັດຕັ້ງປະຕິບັດ ນະໂຍບາຍການຄຸ້ມຄອງການເຄື່ອນຍ້າຍຖິ່ນຖານເປັນຢ່າງດີ" ແລະ ຢູ່ໃນເປົ້າໝາຍ 17 ແລະ 18 "ການຍົກລະດັບ ການສະໜັບສະໜູນການສ້າງຂີດຄວາມສາມາດໃຫ້ແກ່ບັນດາປະເທດທີ່ກຳລັງພັດທະນາ ເຊິ່ງລວມທັງປະເທດທີ່ ດ້ອຍພັດທະນາ (LDC) ແລະ ໝູ່ເກາະຂະໜາດນ້ອຍທີ່ກຳລັງພັດທະນາ ເພື່ອເພີ່ມທະວີຄຸນນະພາບຂອງບັນດາຂໍ້ມູນ ທີ່ມີຢູ່ໃຫ້ສູງຂຶ້ນ, ໃຫ້ທ່ວງທັນກັບສະພາບການ, ແລະ ສາມາດເຊື່ອຖືໄດ້ ເຊິ່ງແບ່ງຕາມລາຍລະອຽດເປັນຕົ້ນ: ລາຍ ຮັບ, ເພດ, ອາຍຸ, ເຊື້ອຊາດ, ຊົນເຜົ່າ, ສະຖານະພາບການເຄື່ອນຍ້າຍ, ຄວາມພິການ, ທີ່ຕັ້ງພູມສັນຖານ ແລະ ຄຸນລັກສະນະອື່ນໆ ທີ່ກ່ຽວຂ້ອງຕາມສະພາບການ ຂອງປະເທດ ພາຍໃນປີ 2020".

ບົດລາຍງານການເຄື່ອນຍ້າຍຖິ່ນຖານ ຍັງມີເປົ້າໝາຍເພື່ອສ້າງຄວາມເຂົ້າໃຈໃນການຄຸ້ມຄອງ ແລະ ການໝູນໃຊ້ຜົນ ປະໂຫຍດຈາກການເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ ເພື່ອສະໜັບສະໜູນການກຳນົດນະໂຍບາຍໂດຍອີງໃສ່ຂໍ້ມູນ

ຫຼັກຖານໃນການປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ- ສັງຄົມ ໃນໄລຍະ 5 ປີ ຄັ້ງທີ 9 (2021-2025) ທີ່ກ່ຽວຂ້ອງກັບການເຕີບໂຕທາງດ້ານເສດຖະກິດ-ສັງຄົມ, ທຶນມະນຸດ (ຄວາມຮູ້,ຄວາມສາມາດ ແລະ ທັກສະໃນການດຳລົງຊີວິດ), ແລະ ຄວາມຢູ່ດີກິນດີຂອງປະຊາຊົນ. ນອກຈາກນີ້, ຍັງສອດຄ່ອງກັບການປະກອບສ່ວນຂອງອົງການສະຫະປະຊາຊາດໃນແຜນວາລະດຳເນີນງານໃນປີ 2030 ຕາມທີໄດ້ລະບຸໃນຍຸດທະສາດທີ 4 ພາຍໃຕ້ກອບການຮ່ວມມືດ້ານການພັດທະນາແບບຍືນຍົງຂອງສະຫະປະຊາຊາດ (UNSDCF) ໃນປີ 2022-2026 ຢູ່ ສປປ ລາວ. ເນື່ອງຈາກການແຜ່ລະບາດຂອງພະຍາດໂຄວິດ-19 ໃນໄລຍະຜ່ານມາໄດ້ສົ່ງຜົນກະທົບຕໍ່ກັບການເຄື່ອນຍ້າຍຖິ່ນຖານ ເອກະສານດັ່ງກ່າວແມ່ນຈະເປັນຂໍ້ມູນທີ່ສຳຄັນເພື່ອເຂົ້າໃຈກັບບັນຫາດັ່ງກ່າວ ແລະ ສິ່ງທ້າທາຍຕໍ່ເຄື່ອນຍ້າຍຖິ່ນຖານໃນອານາຄົດໄດ້ເປັນຢ່າງດີ

ການພັດທະນາບົດລາຍງານການເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ ສະບັບນີ້ ແມ່ນເປັນໝາກຜົນຈາກກອງປະຊຸມປຶກສາຫາລື ແລະ ກອງປະຊຸມສຳມະນາ ທີ່ສະໜັບໜູນຈາກຫຼາຍຂະແໜງການພາກລັດ, ອົງການສະຫະປະຊາຊາດ, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ, ຊ່ຽວຊານ, ນັກຄົ້ນຄວ້າ ແລະ ບຸກຄົນອື່ນໆ ທີ່ເຂົ້າຮ່ວມ. ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈຢ່າງຈິງໃຈມາຍັງຄະນະໂຄງການຊີ້ນຳລວມ ແລະ ສະມາຊິກຄະນະຈັດຕັ້ງປະຕິບັດໂຄງການ (ITWG) ສຳລັບການສ້າງບົດລາຍງານກ່ຽວກັບ ‘’ສະພາບການເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ ປີ 2023; ທີ່ສຸມທຸກກຳລັງແຮງ ແລະ ຄວາມມຸ່ງໝັ້ນຢ່າງບໍ່ຢຸດຢັ້ງ ທີ່ສາມາດເຮັດໃຫ້ບົດລາຍງານ ແລະ ການທົບທວນຄືນຮ່າງຕ່າງໆທີອອກມາໃຫ້ມີຜົນສຳເລັດຕາມຈຸດປະສົງ.

ພວກຂ້າພະເຈົ້າ ຂໍສະແດງຄວາມຂອບໃຈຢ່າງຈິງໃຈ ມາຍັງອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ (IOM) ປະຈຳ ສປປ ລາວ ທີ່ໄດ້ໃຫ້ການສະໜັບສະໜູນທາງດ້ານວິຊາການ ແລະ ດ້ານງົບປະມານ ເພື່ອເຮັດໃຫ້ບົດລາຍງານສະບັບນີ້ສຳເລັດຕາມຈຸດປະສົງ. ຂໍສະແດງຄວາມເຂົ້າໃຈ ມາຍັງທ່ານ ນາງ ປອ ເຣເລັນ ຊວິກ ທີ່ປຶກສາຈາກອົງການ IOM ປະຈຳພາກພື້ນ ທີ່ໄດ້ສ້າງບົດລາຍງານສະບັບນີ້ ໂດຍການສະໜັບສະໜູນຈາກຄະນະຈັດຕັ້ງປະຕິບັດໂຄງການ (ITWG) ທີ່ປະກອບມີຫຼາຍຂະແໜງການພາກລັດເຂົ້າຮ່ວມ. ສຸດທ້າຍນີ້, ຂ້າພະເຈົ້າຂໍສະແດງຄວາມຂອບໃຈມາຍັງທຸກຂະແໜງການພາກລັດ, ອຳນາດການປົກຄອງທ້ອງຖິ່ນ, ຄູ່ຮ່ວມພັດທະນາ, ພາກສ່ວນເອກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ຜູ້ມີສ່ວນຮ່ວມອື່ນໆ ທີ່ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາບົດລາຍງານກ່ຽວກັບ ‘’ການເຄື່ອນຍ້າຍຖິ່ນຖານ ໃນ ສປປ ລາວ ໃຫ້ມີຜົນສຳເລັດຕາມຈຸດປະສົງ.

ສະນັ້ນ, ສາມາດເວົ້າໄດ້ວ່າ ບົດລາຍງານກ່ຽວກັບ ‘’ສະພາບການເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ ປີ 2023” ສະບັບນີ້ ແມ່ນຜົນໄດ້ຮັບຈາກການແຮງ-ຮ່ວມໃຈ ໃນການຈັດຕັ້ງປະຕິບັດຮ່ວມກັນ ຕາມແນວທາງຂອງພາກລັດ ແລະ ສ່ວນຮ່ວມຈາກພາກສ່ວນຕ່າງໆຈາກສັງຄົມ ໃນການເກັບກ່ຽວເອົາຜົນປະໂຫຍດຂອງການເຄື່ອນຍ້າຍຖິ່ນຖານຕາມເສັ້ນທາງໃນ ສປປ ລາວ. ຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ບົດລາຍງານການເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ ສະບັບນີ້ຈະເປັນແຫຼ່ງຂໍ້ມູນທີ່ເປັນປະໂຫຍດ ທີ່ຊ່ວຍໃນການກຳນົດນະໂຍບາຍຕາມຫຼັກຖານການເຄື່ອນຍ້າຍຖິ່ນຖານ ແລະ ມີການເຊື່ອມສານວຽກງານການເຄື່ອນຍ້າຍຖິ່ນຖານເຂົ້າໃສ່ການວາງແຜນການພັດທະນາຂອງປະເທດໃນຕໍ່ໄປ.

**ທ່ານ ນາງ ຊາຣິນ ທູລາດາຣ**

**ຫົວໜ້າຫ້ອງການ**

**ອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ ປະຈຳ ສປປ ລາວ**

**ທ່ານ ປອ ສະຖາບັນດິດ ອິນສີຊຽງໃໝ່**

**ຮອງລັດຖະມົນຕີ**

**ກະຊວງແຜນການ ແລະ ການລົງທຶນ**

## TABLE OF CONTENTS


**ຄຳນຳ.......... v**

**ຕາຕະລາງ .......... X**

**ຮູບສະແດງ.......... X**

**ຄຳສັບຫຍໍ້.......... XIV**

**ຄະນະຮັບຜິດຊອບຈັດຕັ້ງປະຕິບັດໂຄງການຄົ້ນຄວ້າການເຄື່ອນຍ້າຍຖິ່ນຖານ ໃນ ສປປ ລາວ .......... XVI**

**ອະທິບາຍຄຳສັບ .......... XIX**

**ແຜນທີ່ປະເທດລາວ ແລະ ສະຖິຕິທີ່ສຳຄັນ: ສຳລັບ ສ ປປ ລາວ.......... XXI**

**ບົດສັງລວມຫຍໍ້.......... XXIV**

**ການນຳສະເໜີ ຂໍ້ສະເໜີແນະເບື້ອງຕົ້ນ.......... XXXI**

*ຄວາມເປັນມາໃນດ້ານປະຊາກອນ ແລະ ເສດຖະກິດ-ສັງຄົມຂອງ ສ ປປ ລາວ.......... xxxi*
*ສະພາບລວມຂອງການຍ້າຍຖິ່ນຖານ.......... xxxii*
*ວິທີວິທະຍາ ໃນການຄົ້ນຄວ້າ ແລະ ຂໍ້ຈຳກັດ.......... xxxii*

**ພາກທີ I. ແນວໂນ້ມຂອງການເຄື່ອນຍ້າຍຖິ່ນຖານ ແລະ ຄຸນລັກສະນະຂອງຜູ້ເຄື່ອນຍ້າຍ .......... 1**

*1.1. **ການເຄື່ອນຍ້າຍຖິ່ນຖານ**.......... 1*
*1.2. ການເຄື່ອນຍ້າຍຖິ່ນຖານອອກນອກປະເທດ.......... 9*
*1.3. ການເຄື່ອນຍ້າຍຖິ່ນຖານບໍ່ປົກກະຕິ.......... 21*
*1.4. ການເຄື່ອນຍ້າຍຖິ່ນຖານພາຍໃນປະເທດ.......... 27*
*1.5. ການຍ້າຍຖິ່ນຖານກັບຄືນ.......... 33*
*1.6. ການເຄື່ອນຍ້າຍຖິ່ນຖານແບບບໍ່ສະໝັກໃຈ.......... 35*

**ພາກທີ 2: ຜົນກະທົບຂອງການເຄື່ອນຍ້າຍຖິ່ນຖານຢູ່ໃນຂົງເຂດພັດທະນາທີ່ສຳຄັນ.......... 36**

*2.1. ການເຄື່ອນຍ້າຍຖິ່ນຖານ ແລະ ການພັດທະນາປະຊາກອນພາຍໃນປະເທດ.......... 36*
*2.2.ການເຄື່ອນຍ້າຍຖິ່ນຖານ ແລະ ການພັດທະນາເສດຖະກິດ .......... 41*
*2.3.ການເຄື່ອນຍ້າຍຖິ່ນຖານ, ການຈ້າງງານ ແລະ ຕະຫຼາດແຮງງານ.......... 49*
*2.4. ການເຄື່ອນຍ້າຍຖິ່ນຖານ ແລະ ການພັດທະນາສັງຄົມ .......... 60*
*2.5. ການເຄື່ອນຍ້າຍຖິ່ນຖານ ແລະ ສຸຂະພາບ .......... 67*

**ພາກທີ 3: ການປົກຄອງການເຄື່ອຍຍ້າຍຖິ່ນຖານ.......... 75**

*3.1.ກອບນະໂຍບາຍ.......... 75*
*3.2. ໂຄງຮ່າງການຈັດຕັ້ງສະຖາບັນ .......... 89*
*3.3. ກອບແຜນວຽກໃນລະດັບພາກພື້ນ ແລະ ລະດັບສາກົນ.......... 95*

**ພາກທີ 4: ສິ່ງທີ່ຄົ້ນພົບ, ຜົນກະທົບທາງດ້ານນະໂຍບາຍ ແລະ ຄຳແນະນຳ .......... 113**

*4.1. ບັນຫາຫຼັກທີ່ຄົ້ນພົບກ່ຽວກັບທ່າອ່ຽງຂອງການເຄື່ອນຍ້າຍຖິ່ນຖານໃນປັດຈຸບັນ.......... 113*

*4.2. ຄຳແນະນຳກ່ຽວກັບ ວິທີການປັບປຸງ ສະຖິຕິຂອງການເຄື່ອນຍ້າຍຖິ່ນຖານ* ........................................................ *114*

*4.3. ຄຳແນະນຳກ່ຽວກັບແຜນດຳເນີນງານ ການຄຸ້ມຄອງວຽກງານການເຄື່ອນຍ້າຍຖິ່ນຖານ* ........................................ *119*

*4.4. ຄຳແນະນຳກ່ຽວກັບ ການລິເລີ່ມນຳເອົາບັນຫາກ່ຽວກັບການເຄື່ອນຍ້າຍຖິ່ນຖານໄປສູ່ການພັດທະນາ ປັບປຸງທາງດ້ານ ນະໂຍບາຍ* ........................................................................................................ *119*

**ເອກະສານປະກອບ 1** ........................................................................................................ **122**

*ການລົງຢ້ຽມຢາມຢູ່ພາກສະໜາມ ໃນເດືອນ ຕຸລາ 2022* ........................................................................ *122*

**ເອກະສານ ອ້າງອີງ** ........................................................................................................ **124**

## ຕາຕະລາງ

**ຕາຕະລາງ 1 ກໍລະນີການຄ້າມະນຸດ, 2016 – 2021**......25

ຕາຕະລາງ 2. ປະເພດ ແລະ ການອອກວີຊ່າເຂົ້າ-ອອກ ສ ປປ ລາວ...... 82

ຕາຕະລາງ 3. ສົນທິສັນຍາຂອງອົງການແຮງງານສາກົນທີ່ໄດ້ໃຫ້ສັດຕະຍາບັນໂດຍ ...... 102

ຕາຕະລາງ 4. ລາຍຊື່ແນະນຳກ່ຽວກັບ ການເຄື່ອນຍ້າຍຖິ່ນຖານ ຈາກອົງການຈັດຕັ້ງແຮງງານສາກົນ ...... 105

ຕາຕະລາງ 5 ສະໜອງຂໍ້ມູນກ່ຽວກັບແຂວງ, ເມືອງ ແລະ ບ້ານທີ່ໄດ້ໄປຢ້ຽມຢາມ...... 123

## ຮູບສະແດງ

ຮູບສະແດງທີ 1. ຜູ້ເຄື່ອນຍ້າຍຖິ່ນຖານລະຫວ່າງປະເທດໃນການປີ ......2

ຮູບສະແດງທີ 2. 5 ປະເທດທີ່ມີການເຄື່ອນຍ້າຍແຮງງານຂ້າມປະເທດໃນຊ່ວງປີ 1990–2020......3

ຮູບສະແດງທີ 3. ອັດຕາສ່ວນຂອງການປ່ຽນແປງການເຄື່ອນຍ້າຍຂ້າມປະເທດ ໂດຍປະເທດຕົ້ນທາງໃນລະຫວ່າງປີ 1990 ຫາ 2020 (ຫົວໜ່ວຍ %)......3

ຮູບສະແດງທີ 4. ຕົວເລກຄົນຕ່າງປະເທດ ແລະ ຄົນເຊື້ອຊາດລາວ ເຂົ້າມາ ສປປ ລາວ, ໃນປີ 2013–2022 ( ຫົວໜ່ວຍ:ລ້ານ)......5

ຮູບສະແດງທີ 5. ຕົວເລກຄົນຕ່າງປະເທດທີ່ເຄື່ອນຍ້າຍເຂົ້າມາ ສປປ ລາວ ທີ່ແບ່ງເປັນ ເພດຊາຍ, 2013–2022 (ຫົວໜ່ວຍ:ລ້ານ).5

ຮູບສະແດງທີ 6. ການຈົດທະບຽນຄອບຄົວ ແລະ ເພື່ອປ່ຽນສັນຊາດໃນປີ 2021 (ຫົວໜ່ວຍ: ເປີເຊັນ ແລະ ຈຳນວນ) ......6

ຮູບສະແດງທີ 7. ຈຳນວນຄົນເຊື້ອຊາດລາວ ແລະ ຄົນຕ່າງປະເທດທີ່ເຂົ້າມາ ສປປ ລາວ ເຊິ່ງແບ່ງຕາມເຫດຜົນ 2013–2020 (ຫົວໜ່ວຍ: ລ້ານຄົນ) ......7

ຮູບສະແດງທີ 8. ການເຄື່ອນຍ້າຍນັກສຶກສາຕ່າງປະເທດໃນຊັ້ນມັດທະຍົມ ແລະ ອັດຕາການເຄື່ອນຍ້າຍເຂົ້າ 2000 ຫາ 2019 (ຫົວໜ່ວຍ: ເປີເຊັນ)......8

ຮູບສະແດງທີ 9. ຕົວເລກ ໃນການເຄື່ອນຍ້າຍຂອງນັກສຶກສາໃນ 5 ປະເທດ ຕັ້ງແຕ່ປີ ......8

ຮູບສະແດງທີ 10. ການຂະຫຍາຍຕົວຂອງປະຊາກອນລາວທີ່ດຳລົງຊີວິດຢູ່ຕ່າງປະເທດ ເຊິ່ງແບ່ງຕາມເພດ ແລະ ອັດຕາການເຕີບໂຕຂອງປະຊາກອນທີ່ອາໃສ່ຢູ່ຕ່າງປະເທດ......10

ຮູບສະແດງທີ 11. ຕົວເລກຂອງການເຄື່ອນຍ້າຍອອກນອກປະເທດຂອງ ຄົນຕ່າງປະເທດ ແລະ ຄົນລາວ 2013–2022 (ຫົວໜ່ວຍລ້ານຄົນ)......11

ຮູບສະແດງທີ 12. ຕົວເລກຂອງການເຄື່ອນຍ້າຍອອກນອກປະເທດຂອງ ຄົນຕ່າງປະເທດ ແລະ ຄົນລາວ ທີ່ແບ່ງຕາມເພດ 2013–2022 (ຫົວໜ່ວຍລ້ານຄົນ) ......12

ຮູບສະແດງທີ 13. ຕົວເລກຂອງການເຄື່ອນຍ້າຍອອກນອກປະເທດຂອງ ຄົນຕ່າງປະເທດ ແລະ ຄົນລາວ ດ້ວຍເຫດຜົນ 2013–2022 (ຫົວໜ່ວຍລ້ານຄົນ) ......13

ຮູບສະແດງທີ 14. ເຫດຜົນຂອງສະຫະພາບເອີຣົບໃນການອອກໃບອານຸຍາດທີ່ຢູ່ໃຫ້ຄົນລາວເປັນຄັ້ງທຳອິດ, 2013–2020 (ຫົວໜ່ວຍຕົວເລກ ແລະ ເປີເຊັນ)......14

ຮູບສະແດງທີ 15. ການເຄື່ອນຍ້າຍຂອງແຮງງານລາວຢ່າງເປັນປົກກະຕິເຊິ່ງແບ່ງເປັນເພດ ແຕ່ປີ 2016-2022 (ຫົວໜ່ວຍໃນພັນ) ....15

ຮູບສະແດງທີ 16. ຕົວເລກຂອງແຮງງານລາວທີ່ໄປອອກແຮງງານຢູ່ຕ່າງປະເທດ ໂດຍແບ່ງອອກເປັນ ອາຊີບ ແລະ ການເຂົ້າຮ່ວມຝຶກອົບຮົມ.(ຫົວໜ່ວຍ ພັນ) ......16

ຮູບສະແດງທີ 17. ແຮງງານລາວທີ່ຍ້າຍໄປປະເທດໄທ, ແຕ່ລະປີ, ປະເພດ (ພາຍໃຕ້ MOU ຫຼື ນະໂຍບາຍຂອງລັດ) ແລະ ເພດ, 2016-2022 (ເປັນພັນໆຄົນ) ......17

ຮູບສະແດງທີ 18. ການເຄື່ອນຍ້າຍແຮງງານລາວໄປປະເທດຍີ່ປຸ່ນ ເຊິ່ງແຍກເປັນປີ ແລະ ເພດ ......18

ຮູບສະແດງທີ 19. ການເຄື່ອນຍ້າຍຂອງແຮງງານລາວໄປ ເກົາຫຼີໃຕ້ໂດຍແບ່ງຕາມ ປີ ແລະ ເພດ ໃນລະຫວ່າງປີ 2018–2022......19

ຮູບສະແດງທີ 20. ການອອກໃບອານຸຍາດຂອງຄົນລາວໃນສະຫະພາບເອີຣົບ ໂດຍແບ່ງປະເພດຂອງການເຮັດວຽກໃນປະຊາກອນ 2013 ຫາ 2020......20

ຮູບສະແດງທີ 21. ອັດຕາສ່ວນຂອງນັກສຶກສາລາວທີ່ສຶກສາຢູ່ຕ່າງປະເທດໃນປີ 2000–2020 ......21

ຮູບສະແດງທີ 22. ປະເທດປາຍທາງທີ່ຄົນລາວເຂົ້າໄປສຶກສາຢູ່ຕ່າງປະເທດ, 2000–2019 ......21

ຮູບສະແດງທີ 23. ຈຳນວນລວມທັງໝົດໃນປັດຈຸບັນ ແລະ ການເຄື່ອນຍ້າຍຖິ່ນຖານພາຍໃນແຂວງ ແບ່ງຕາມແຂວງ ໃນລະຫວ່າງປີ 2005 ເຖິງ 2015 (ຄິດເປັນຮ້ອຍລະ ຂອງປະຊາກອນທີ່ອາໄສຢູ່ພາຍໃນ 10 ປີ ແລະ ຫຼາຍກວ່າ)......29

ຮູບສະແດງທີ 24. ຜູ້ເຄື່ອນຍ້າຍຖິ່ນຖານປັດຈຸບັນໂດຍ ປະເພດ ແລະ ເພດ ໃນປີ 2015 (ເປັນຕົວເລກ ແລະ ຮ້ອຍລະ)......30

ຮູບສະແດງທີ 25. ຮູບປີລະມິດປະຊາກອນຂອງກຸ່ມຜູ້ເຄື່ອນຍ້າຍຖິ່ນຖານປັດຈຸບັນຕາມກຸ່ມອາຍຸໃນປີ 2015 (ຄິດເປັນ ຮ້ອຍລະ) .....31

ຮູບສະແດງທີ 26. ຜູ້ເຄື່ອນຍ້າຍຖິ່ນຖານຈາກຕ່າງປະເທດໃນລະຫວ່າງປີ 2005 ເຖິງ 2015, ຕາມປະເທດຕົ້ນທາງ ໃນປີ 2015 (ຄິດເປັນຮ້ອຍລະ ແລະ ຕົວເລກ) ......34

ຮູບສະແດງທີ 27. ປະຊາກອນລວມທັງໝົດ ແລະ ຄ່າສະເລ່ຍການຂະຫຍາຍຕົວປະຈຳປີ,....................................................37

ຮູບສະແດງທີ 28. ປະຊາກອນທີ່ອາໄສຢູ່ຕົວເມືອງ ແລະ ຊົນນະບົດ ແລະ ຄ່າສະເລ່ຍປະຈຳປີຂອງປະຊາກອນໃນຕົວເມືອງ, ປີ 1950 ເຖິງ 2050 (ຄິດເປັຮຮ້ອຍລະ ແລະ ຫົວໜ່ວຍພັນ) ..............................................................................38

ຮູບສະແດງທີ 29. ຕົວເລກ ແລະ ອັດຕາການຄິດໄລ່ຂອງຈຳນວນຜູ້ເຄື່ອນຍ້າຍຖິ່ນຖານ, 1975 ເຖິງ 2020.............................40

ຮູບສະແດງທີ 30. ການແຈກກະຈາຍທາງດ້ານອາຍຸແລະເພດຂອງແຮງງານເຄື່ອນຍ້າຍສາກົນ ແລະ ຈຳນວນປະຂາກອນທັງໝົດ, 2019 ..............................................................................................................................41

ຮູບສະແດງທີ 31. ການເຕີບໂຕທາງດ້ານ GDP, 2017-2024 (ຄິດເປັນຮ້ອຍລະ).......................................................42

ຮູບສະແດງທີ 32. ການເຕີບໂຕຂອງ GDP ຕໍ່ຫົວຄົນໃນ ສປປ ລາວ, ປະເທດອາຊຽນ ແລະ ອາຊີ, 2017-2024 (ຄິດເປັນຮ້ອຍລະ) ..............................................................................................................................43

ຮູບສະແດງທີ 33. ບັນຊີກະແສລາຍວັນຂອງ ສປປ ລາວ ປະເທດອາຊຽນ ແລະ ອາຊີ, 2017-2024 (ຄິດເປັນຮ້ອຍລະຂອງ GDP) 44

ຮູບສະແດງທີ 34. ວິວັດທະນາການຂອງການກະແສເງິນໄຫຼເຂົ້າ, ໄຫຼອອກ ແລະ ການສົ່ງເງິນກັບບ້ານແບບສຸດທິ, 2007 - 2020.46

ຮູບສະແດງທີ 35. ການສົ່ງເງິນກັບບ້ານຂອງສ່ວນບຸກຄົນທີ່ໄດ້ຮັບ (ຄິດເປັນຮ້ອຍລະ ຂອງ GDP ) .....................................47

ຮູບສະແດງທີ 36. ບັນດາປະເທດອັນດັບຕົ້ນທີ່ແຮງງານສົ່ງເງິນກັບບ້ານ,.......................................................................48

ຮູບສະແດງທີ 37. 3 ປະເທດອັນດັບຕົ້ນທີ່ຮັບເງິນຈາກການໂອນເງິນກັບບ້ານ, ..............................................................49

ຮູບສະແດງທີ 38. ປະຊາກອນກຸ່ມໃນກຸ່ມອາຍຸເຮັດວຽກຂອງແຮງງານເຄື່ອນຍ້າຍສາກົນແຍກຕາມເພດ, 2015 ເຖິງ 2017 .........51

ຮູບສະແດງທີ 39. ປະຊາກອນໃນກຸ່ມອາຍຸເຮັດວຽກແບ່ງຕາມເພດ, ລະດັບການສຶກສາ, ແລະ ສະຖານະພາບການເຄື່ອນຍ້າຍຖິ່ນຖານ, 2017 ..........................................................................................................................52

ຮູບສະແດງທີ 40. ປະຊາກອນໃນກ່ມອາຍຸເຮັດວຽກທີ່ເປັນຕ່າງປະເທດ, ປີ 2005 ແລະ 2015. ........................................53

ຮູບສະແດງທີ 41. ປະຊາກອນໃນກຸ່ມອາຍຸເຮັດວຽກຕາມສັນຊາດ ແລະ ເພດ, 2015.......................................................53

ຮູບສະແດງທີ 42. ການຫວ່າງການຂອງແຮງງານເຄື່ນອຍ້າຍຕາມເພດ ແລະ ອາຍຸ, 2015..................................................54

ຮູບສະແດງທີ 43. ການແຈກຢາຍຂອງການຈ້າງງານຕາມຂະແໜງການ, ເພດ, ແລະສະຖານນະພາບການເຄື່ອນຍ້າຍຖິ່ນຖານ, 2017 (ໃນຮ້ອຍລະ)...........................................................................................................................55

ຮູບສະແດງທີ 44. ການຈ້າງງານຕາມເພດ, ລະດັບທັກສະ, ແລະສະຖານະການເຄື່ອນຍ້າຍຖິ່ນຖານ (2017)............................56

ຮູບສະແດງທີ 45. ການຈ້າງງານຕາມເພດ, ອາຊີບ, ແລະສະຖານະການເຄື່ອນຍ້າຍຖິ່ນຖານ, 2005 ແລະ 2015 (ຄິດເປັນຮ້ອຍລະ) ..........................................................................................................................................57

ຮູບສະແດງທີ 46. ລາຍໄດ້ສະເລ່ຍຕໍ່ເດືອນຂອງພະນັກງານຕາມເພດ ແລະ ສະຖານະການເຄື່ອນຍ້າຍຖິ່ນຖານ, 2017 (ສະກຸນເງິນທ້ອງຖິ່ນ)..........................................................................................................................58

ຮູບສະແດງທີ 47. ລວມຍອດລາຍຮັບແຫ່ງຊາດຕໍ່ຫົວຄົນ (ເປັນ USD ໃນປັດຈຸບັນ) ແລະ ການຂະຫຍາຍຕົວຂອງລາຍຮັບແຫ່ງຊາດລວມຕໍ່ຫົວຄົນ, 2001-2021 (ໃນຮ້ອຍລະ) ........................................................................................61

# ຄຳສັບຫຍໍ້

| | |
|---|---|
| **ADB** | ທະນາຄານພັດທະນາອາຊີ |
| **ASEAN** | ສະມາຄົມອາຊີຕາເວັນອອກສ່ຽງໃຕ້ |
| **DESA** | ກົມເສດຖະກິດ, ສັງຄົມ ແລະ ການຕ່າງປະເທດ |
| **DRI** | ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ |
| **EPS** | ລະບົບສັນຍາການຈ້າງງານ |
| **FGD** | ກຸ່ມສົນທະນາ |
| **GMS** | ປະເທດລຸ່ມພາກພື້ນແມ່ນ້ຳຂອງ |
| **GNI** | ລວມຍອດລາຍຮັບແຫ່ງຊາດ |
| **HICS** | ໂຄງການບັດປະກັນສຸຂະພາບ |
| **ILO** | ອົງການຈັດຕັ້ງແຮງງານສາກົນ |
| **IMF** | ອົງການການເງິນສາກົນ |
| **IOM** | ອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ |
| **ITWG** | ຄະນະຈັດຕັ້ງປະຕິບັດໂຄງການ |
| **KII** | ການສຳພາດເອົາຂໍ້ມູນທີ່ຈຳເປັນ |
| **LECS** | ການສຳຫຼວດການຊົມໃຊ້ ແລະ ລາຍຈ່າຍ ຂອງລາວ |
| **LFS** | ການສຳຫຼວດກຳລັງແຮງງານ |
| **LSB** | ສູນສະຖິຕິແຫ່ງຊາດ |
| **LWU** | ສູນກາງສະຫະພັນແມ່ຍິງລາວ |
| **MOES** | ກະຊວງສຶກສາທິການ ແລະ ກິລາ |
| **MOFA** | ກະຊວງການຕ່າງປະເທດ |
| **MOH** | ກະຊວງສາທາລະນາສຸກ |
| **MOHA** | ກະຊວງພາຍໃນ |
| **MOLSW** | ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ |
| **MOPS** | ກະຊວງປ້ອງກັນຄວາມສະຫງົບ |
| **MOU** | ບົດບັນທຶກຄວາມເຂົ້າໃຈ |
| **MPI** | ກະຊວງແຜນການ ແລະ ການລົງທຶນ |
| **NEM** | ກົນໄກເສດຖະກິດໃໝ່ |
| **NGO** | ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ |
| **NSEDP** | ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ |

| | |
|---|---|
| **OECD** | ອົງການຈັດຕັ້ງສາກົນເພື່ອການພັດທະນາຮ່ວມມືສາກົນ |
| **PHC** | ການສຳຫຼວດປະຊາກອນ ແລະ ຄົວເຮືອນ |
| **SDG** | ເປົ້າໝາຍການພັດທະນາແບບຍືນຍົງ |
| **SEZ** | ເຂດເສດຖະກິດພິເສດ |
| **TB** | ພະຍາດວັນນະໂລກ |
| **TIP** | ການຄ້າມະນຸດ |
| **UIS** | ສະຖາບັນສະຖິຕິອົງການຢູເນສໂກ |
| **UNDP** | ອົງການສະຫະປະຊາຊາດເພື່ອການພັດທະນາ |
| **UNFPA** | ອົງການສະຫະປະຊາຊາດເພື່ອປະຊາກອນ |
| **UNHCR** | ອົງການສະຫະປະຊາຊາດເພື່ອຜູ້ອົບພະຍົບຂັ້ນນສູງ |
| **USD** | ສະກຸນເງິນໂດລາສະຫະລັດ |
| **WHO** | ອົງການອານາໄມໂລກ |

## ຄະນະຮັບຜິດຊອບຈັດຕັ້ງປະຕິບັດໂຄງການຄົ້ນຄວ້າການເຄື່ອນຍ້າຍຖິ່ນຖານ ໃນ ສປປ ລາວ

ຄະນະຮັບຜິດຊອບຈັດຕັ້ງປະຕິບັດໂຄງການການເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ ປີ 2023 .ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

**ຄະນະຊີ້ນຳລວມ ມີລາຍຊື່ດັ່ງລຸ່ມນີ້:**

- ທ່ານ ປອ ສະຖາບັນດິດ ອິນສີສຽງໃໝ່ ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ.
- ທ່ານ ນາງ ສີສົມບູນ ອຸນາວົງ, ຫົວໜ້າກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ.

**ຄະນະກອງເລຂາຄຸ້ມຄອງໂຄງການ ມີລາຍຊື່ດັ່ງລຸ່ມນີ້:**

- ທ່ານ ປອ ສິດທິຣົດ ຣາຊະພົນ ຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ, ກະຊວງແຜນການ ແລະ ການລົງທຶນ.
- ທ່ານ ນາງ ຊາລິນ ທຸລາດາຣ, ຫົວໜ້າ ຫ້ອງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ ປະຈຳ ສປປ ລາວ (IOM)

**ຄະນະກອງເລຂາດ້ານວິຊາການ ມີລາຍຊື່ດັ່ງລຸ່ມນີ້:**

- ທ່ານ ປອ ທະນົງຊາຍ ສຸກຄຳທັດ ຮອງຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ, ກະຊວງແຜນການ ແລະ ການ ລົງທຶນ
- ທ່ານ ສຸລິສັກ ພົມມະສັກ ຮອງຫົວໜ້າກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ.
- ທ່ານ ເດດວິໄລ ອໍລະບູນ, ຮອງຫົວໜ້າກົມຄຸ້ມຄອງພົນລະເມືອງ, ກະຊວງ ພາຍໃນ.
- ທ່ານ ການະມົງຄຸນ ພານຸວົງ ຮອງຫົວໜ້າກົມອົງການຈັດຕັ້ງສາກົນ, ກະຊວງ ການຕ່າງປະເທດ.
- ທ່ານ ນາງ ວັນນາລີ ອິນທະພົມ ຮອງຫົວໜ້າສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ, ສູນກາງ ສະຫະພັນແມ່ຍິງລາວ.
- ທ່ານ ວຽງຄອນ ບົວພະຈັນ ຫົວໜ້າພະແນກຄົ້ນຄ້ວານະໂຍບາຍສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ ,
  ສະຖາບັນຄົ້ນຄວ້າວິໄຈການພັດທະນາ, ກະຊວງແຜນການ ແລະ ການລົງທຶນ.
- ທ່ານ ພັທ ໄພວັນ ໄຊຍະວົງ ຫົວໜ້າພະແນກປະສານງານພາຍໃນ ແລະ ຮ່ວມມືສາກົນ, ກົມຕຳຫຼວດກວດ
  ຄົນເຂົ້າ- ອອກເມືອງ, ກະຊວງປ້ອງກັນຄວາມສະຫງົບ.
- ທ່ານ ພັທ ວັນປະດິດ ຈັນທະວົງ ຫົວໜ້າພະແນກກອງເລຂາຄະນະກຳມາທິການຕ້ານການຄ້າມະນຸດລະດັບ

ຊາດ, ກະຊວງປ້ອງກັນຄວາມສະຫງົບ.

- ທ່ານ ອຳໄພວັນ ຈັນທະວົງ ຫົວໜ້າພະແນກພົວພັນກົງສູນ, ກົມກົງສູນ, ກະຊວງການຕ່າງປະເທດ.
- ທ່ານ ສຸກສະໜອນ ຊາພູວົງ ຮອງຫົວໜ້າພະແນກຄຸ້ມຄອງໂຄງການ, ກົມແຜນການ ກະຊວງສຶກສາທິການ ແລະ ກິລາ.
- ທ່ານ ສຸກສາຄອນ ສີຫາລາດ ຮອງຫົວໜ້າພະແນກຈັດຫາງານໄປຕ່າງປະເທດ, ກົມຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ທ່ານ ວົງພະຈັນ ໄຊຍະລາດ ຮອງຫົວໜ້າພະແນກຄົ້ນຄວ້ານະໂຍບາຍສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ, ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ, ກະຊວງແຜນການ ແລະ ການລົງທຶນ.
- ທ່ານ ພຸດທະຈັນ ຕົ້ນແພງ, ຮອງຫົວໜ້າພະແນກຄົ້ນຄວ້ານະໂຍບາຍສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ, ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ, ກະຊວງແຜນການ ແລະ ການລົງທຶນ.
- ທ່ານ ສົມຊາຍ ພົງເວັນໄຊ ວິຊາການ, ພະແນກຄົ້ນຄວ້ານະໂຍບາຍສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ,ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ, ກະຊວງແຜນການ ແລະ ການລົງທຶນ.
- ທ່ານ ຄຳປະເສີດ ແກ້ວວົງສຸດທິ ວິຊາການ, ພະແນກຄົ້ນຄວ້ານະໂຍບາຍສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ, ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ, ກະຊວງແຜນການ ແລະ ການລົງທຶນ.

**ທີ່ປຶກສາຈາກອົງການຈັດຕັ້ງສາກົນ:**

(ນອກຈາກຄະນະ ITWG): ກໍ່ຍັງມີ ທະນາຄານແຫ່ງ ສ ປປ ລາວ, ແສງສະຫວ່າງ, ຫ້ອງການ ILO ປະຈຳພາກພື້ນ ແລະ ຫ້ອງການປະເທດ, ກຸ່ມທະນາຄານໂລກ.

**ຄະນະປະສານງານໂຄງການ (IOM)**

- Dr. Hélène Syed Zwick ຊ່ຽວຊານ ຫ້ອງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ ປະຈຳ ສປປ ລາວ (IOM).
- ທ່ານ ນາງ ສຸກອຳພອນ ທຳມະວົງສາ ທີ່ປຶກສາພາຍໃນ ຫ້ອງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ ປະຈຳ ສປປ ລາວ (IOM)
- ທ່ານ ທະນາກອນ ອຸສະຫວາງ ແລະ ນາງ Sarnai Enkhbaatar, ຫ້ອງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ ປະຈຳ ສປປ ລາວ (IOM).

- ທ່ານ ນາງ ສຸດາວອນ ວົງດອນໄຊ ພະນັກງານຫ້ອງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ ປະຈຳ ສປປ ລາວ (IOM).

# ອະທິບາຍຄໍາສັບ

| ຄໍາສັບ | ນິຍາມ | ແຫຼ່ງທີ່ມາ |
|---|---|---|
| ຜູ້ຂໍລີ້ໄພ | ບຸກຄົນໃດໜຶ່ງ ທີ່ຕ້ອງການການຄຸ້ມຄອງລະຫວ່າງປະເທດ | UNHCR, 2013 |
| ການພັດທະນາ | ຂະບວນການປັບປຸງຄຸນນະພາບຊີວິດຂອງກຸ່ມຄົນ ແລະ ການຂະຫຍາຍຂອບເຂດເພື່ອເປີດໂອກາດໃຫ້ແກ່ເຂົາເຈົ້າ | IOM, 2019 |
| ສະພາບແວດລ້ອມຂອງການເຄື່ອນຍ້າຍຖິ່ນຖານ | ບຸກຄົນ ຫຼື ກຸ່ມຄົນ ໂດຍສ່ວນໃຫຍ່ແມ່ນຈະມີເຫດຜົນບາງຢ່າງທີ່ກະທັນຫັນໃນສະພາບແວດລ້ອມທີ່ສົ່ງຜົນຕໍ່ກັບການດໍາລົງຊີວິດ ຫຼື ສະພາບການເປັນຢູ່ຂອງພວກເຂົາ ທີ່ຖືກບັງຄັບໃຫ້ອອກຈາກທີ່ຢູ່ອາໃສ ຫຼື ເລືອກທີ່ຈະອອກໄປຢູ່ແບບຊົ່ວຄາວ ຫຼື ຖາວອນ ແລະ ຜູ້ທີ່ມີການເຄື່ອນຍ້າຍທັງພາຍໃນ ແລະ ຕ່າງປະເທດໃນປະເທດຂອງພວກເຂົາ ຫຼື ທີ່ຢູ່ອາໃສ. | IOM, 2014 |
| ການເຄື່ອນຍ້າຍໄປສູ່ຕ່າງປະເທດ | ຂະບວນການເຄື່ອນຍ້າຍພາຍໃນແຂວງກ່ຽວກັບການຈັດຕັ້ງທີ່ຢູ່ອາໃສຊົ່ວຄາວໃໝ່ ແລະ ທີ່ຢູ່ອາໃສຖາວອນ | IOM, 2019 |
| ບຸກຄົນທີ່ຖືກເຄື່ອນຍ້າຍພາຍໃນ | ບຸກຄົນ ຫຼື ກຸ່ມຄົນທີ່ຖືກບັງຄັບທີ່ຈໍາເປັນຕ້ອງໄດ້ລົບໜີອອກຈາກບ້ານ ຫຼື ທີ່ຢູ່ອາໃສ ໂດຍສະເພາະ ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງທາງສົງຄາມ, ສະຖານະການທົ່ວໄປຂອງຄວາມຮຸນແຮງ, ການລະເມີດສິດທິມະນຸດ ຫຼື ໄພທໍາມະຊາດ ຫຼື ໄພທໍາມະຊາດທີ່ມະນຸດສ້າງຂຶ້ນ ແລະ ບຸກຄົນທີ່ຕ້ອງການເຄື່ອນຍ້າຍໄປສູ່ບ່ອນອື່ນທີ່ຍັງບໍ່ທັນໄດ້ຖືກຍອມຮັບໃນລະດັບສາກົນ. | DESA, 1998 |
| Irregular migrantການເຄື່ອນຍ້າຍຖິ່ນຖານທີ່ບໍ່ຖືກຕ້ອງຕາມກົດໝາຍ | ບຸກຄົນທີ່ຍົກຍ້າຍ ຫຼື ຍ້າຍຂ້າມລະຫວ່າງປະເທດ ແລະ ບໍ່ໄດ້ຮັບອານຸຍາດໃຫ້ເຂົ້າໄປດໍາລົງຊີວິດຕາມກົດໝາຍຂອງປະເທດນັ້ນ ແລະ ອີງຕາມຂໍ້ຕົກລົງລະຫວ່າງບັນດາປະເທດລັດຖະພາຄີ. | IOM, 2019 |
| ນັກສຶກສາຕ່າງປະເທດ | ບຸກຄົນທີ່ໄດ້ມີການຍົກຍ້າຍໄປປະຈໍາຢູ່ຕ່າງປະເທດເພື່ອຈຸດປະສົງໃນການດໍາເນີນເພື່ອໂຄງການສຶກສາ. | IOM, 2019 |
| ການເຄື່ອນຍ້າຍໃນການເຮັດວຽກ | ບຸກຄົນທີ່ຈະມີສ່ວນຮ່ວມໃນການສະໜັບສະໜູນໃນການເຮັດວຽກ ເພື່ອໃຫ້ໄດ້ຄ່າຕອບແທນໃນປະເທດ ທີ່ບໍ່ແມ່ນຄົນຂອງປະເທດນັ້ນເອງ. | United Nations, 1990 |
| ການຄິດໄລ່ການເຄື່ອນຍ້າຍຖິ່ນຖານທັງໝົດ | ຈໍານວນລວມຂອງການເຄື່ອນຍ້າຍຖິ່ນຖານໄດ້ມີການກໍານົດໃນຊ່ວງໄລຍະເວລາໃດໜຶ່ງ ນັ້ນໝາຍຄວາມວ່າ: ເອົາຈໍານວນຄົນເຄື່ອນຍ້າຍເຂົ້າໃນເມືອງ ລົບ ຈໍານວນຜູ້ເຄື່ອນຍ້າຍທັງໝົດ | DESA, 2015 |
| ການເຄື່ອນຍ້າຍຄືນໃໝ່ | ການເຄື່ອນຍ້າຍຂອງບຸກຄົນ ຫຼັງຈາກໄດ້ກັບຄືນປະເທດ ແລະ ຕ້ອງການກັບຄືນໄປບ່ອນເກົ່າ | IOM, 2019 |
| ການອົບພະຍົບ | ບຸກຄົນທີ່ມີເຫດຜົນຢ້ານກົວຕໍ່ກັບການຖືກຕັດສິນປະຫານຊີວິດ ເປັນຕົ້ນ: ເຊື້ອຊາດ, ສາດສະໜາ, ສັນຊາດ, ການເປັນສະມາຊິກຂອງກຸ່ມສັງຄົມໃດໜຶ່ງ ຫຼື ມີຄວາມຄິດເຫັນທາງດ້ານການເມືອງ ທີ່ອາໃສຢູ່ນອກປະເທດ ແລະ ບໍ່ສາມາດ ຫຼື ເຕັມໃຈ ທີ່ຈະບໍ່ໃຊ້ປະໂຫຍດຈາກການຄຸ້ມຄອງຂອງປະເທດນັ້ນ | UNHCR, 1951 and 1967 |
| ການໂອນເງິນກັບບ້ານ | ການໂອນເງິນຂອງບຸກຄົນທີ່ມີການເຄື່ອນຍ້າຍ ພາຍໃນ ແລະ ຕ່າງປະເທດແມ່ນຈະເຮັດໃຫ້ການເຄື່ອນຍ້າຍຂອງບຸກຄົນ ແລະ ຊຸມຊົນໄດ້ມີການເຊື່ອມໂຍ່ງເຂົ້າດ້ວຍກັນ. | IOM, 2019 |
| ການເຄື່ອນຍ້າຍກັບມາ | ໃນສະພາບການເຄື່ອນຍ້າຍຖິ່ນຖານສາກົນ, ການຍົກຍ້າຍຂອງຄົນທີ່ກັບຄືນປະເທດ ພາຍຫຼັງໄດ້ຍ້າຍອອກໄປດໍາລົງຊີວິດຢູ່ບ່ອນອື່ນ ແລະ ການຂ້າມລະຫວ່າງປະເທດ. | IOM, 2019 |

| | | |
|---|---|---|
| ການເຄື່ອນຍ້າຍໄປສູ່ຕົວເມືອງ ແລະ ຊົນນະບົດ | ການເຄື່ອນຍ້າຍຂອງບຸກຄົນຈາກຊົນນະບົດໄປສູ່ຕົວເມືອງ ສໍາລັບການສ້າງທີ່ຢູ່ອາໃສໃໝ່ | IOM, 2019 |
| ການເຄື່ອນຍ້າຍແຮງງານຕາມລະດູການ | ການເຄື່ອນຍ້າຍແຮງງານເພື່ອເຮັດວຽກ ຫຼື ການເຄື່ອນຍ້າຍເພື່ອການຈ້າງງານ ແມ່ນອີງໃສ່ກັບເງື່ອນໄຂຂອງລະດູການເຮັດວຽກ ແລະ ຈະມີການຈ້າງງານພຽງແຕ່ບາງສ່ວນຂອງປີ. | United Nations, 1990 |
| ການເຄື່ອນຍ້າຍທີ່ບໍ່ຖືກກົດໝາຍ | ຜູ້ເຄື່ອນຍ້າຍຖິ່ນຖານທີ່ເປັນ ຫຼື ເຄີຍຕົກເປັນເປົ້າໝາຍຂອງອາດສະຍາກໍາລັກລອບເຂົ້າເມືອງ, ບໍ່ວ່າຜູ້ເຮັດຜິດຈະຖືກລະບຸຕົວ, ຈັບຕົວ, ດໍາເນີນຄະດີ ຫຼື ຖືກຕັດສິນລົງໂທດ. | IOM, 2019 |
| ການຄ້າມະນຸດ | ການຈັດຫາ, ການຂົນສົ່ງ, ການສົ່ງຕໍ່, ການໃຫ້ທີ່ພັກອາໃສ ຫຼື ການຮັບເອົາຄົນທີ່ມີການເຄື່ອນຍ້າຍດ້ວຍວິທີການຂົ່ມຂູ່ ຫຼື ໃຊ້ກໍາລັງໃນການບີບບັງຄັບອື່ນໆ, ການລັກພາຕົວ, ການຫຼອກລວງໂດຍການໃຊ້ອໍານາດ ຫຼື ໜ້າທີ່ຕໍາແໜ່ງໃນການຮັບເງິນຈາກຜົນປະໂຫຍດ ເພື່ອຍິນຍອມໃຫ້ມີການຄວບຄຸມບຸກຄົນອື່ນໂດຍມີການຂູດຮີດ. | United Nations, 2000c |
| ການທ່ອງທ່ຽວ | ບຸກຄົນໃດໜຶ່ງທີ່ບໍ່ໄດ້ອາໃສຢູ່ພາຍໃນປະເທດ ແລະ ໄດ້ອະນຸຍາດເດີນທາງເຂົ້າປະເທດນັ້ນພຽງຊົ່ວຄາວ ເພື່ອຈຸດປະສົງໃນການພັກຜ່ອນໃນຊ່ວງວັນພັກ, ຢ້ຽມຢາມພີ່ນ້ອງ ແລະ ໝູ່ເພື່ອນ, ການໄປປິ່ນປົວຮັກສາສຸຂະພາບ, ແລະ ການໄປແລກປ່ຽນທາງສາດສະໜາ. | DESA, 1998 |
| ຜູ້ມາຢ້ຽມຢາມ | ໃນສະພາບການເຄື່ອນຍ້າຍຖິ່ນຖານ ຄໍາສັບນີ້ ແມ່ນໃຊ້ໃນບາງປະເທດ ເພື່ອກໍານົດໃຫ້ບຸກຄົນໃດໜຶ່ງທີ່ບໍ່ມີສັນຊາດ, ທີ່ໄດ້ຮັບອໍານາດຂອງປະເທດໜຶ່ງໃນການດໍາລົງຊີວິດຊົ່ວຄາວ ໂດຍບໍ່ສາມາດໃນການຊອກຫາວຽກເຮັດງານທໍາ. | IOM, 2019 |

# ແຜນທີ່ປະເທດລາວ ແລະ ສະຖິຕິທີ່ສຳຄັນ: ສຳລັບ ສ ປປ ລາວ




*ແຫຼ່ງຂ່າວ: ຂໍ້ມູນພູມສາດຂອງສະຫະປະຊາຊາດ, ແຜນທີ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ແຜນທີ່ເລກທີ 3959, ສະບັບເລກທີ 2.*
, [Map of Lao People's Democratic Republic](), Map No. 3959, Rev. 2.

| ທີ່ຕັ້ງພູມສັນຖານ | |
|---|---|
| ຊື່ ເປັນທາງການ | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| ປີ ໃນການສ້າງຕັ້ງ | 1975 |
| ເນື້ອທີ່ (ກິໂລຕາແມັດ) | 236,800 |
| ຊື່ ນະຄອນຫຼວງ | ນະຄອນຫຼວງວຽງຈັນ |
| ບັນດາແຂວງ | 17 ແຂວງ 1 ນະຄອນຫຼວງ, (ເຊິ່ງໄດ້ແບ່ງອອກເປັນ ເມືອງ ແລະ ບ້ານ) |
| ສະກຸນເງິນ | ກີບ |

| | |
|---|---|
| ພາສາຫຼັກ | ລາວ |
| ສາດສະໜາ* | 64,7% ສາດສະໜາພຸດ, 31,4% ສາດສະໜາຜີ, 1,7% ສາດສະໜາຄິສຕຽນ ແລະ 2,1% ສາດສະໜາອື່ນໆ. |
| ຂອບເຂດຊາຍແດນ | ກຳປູເຈຍ, ຈີນ, ມຽນມ້າ, ໄທ ແລະ ຫວຽດນາມ. |

**ການພັດທະນາທາງດ້ານມະນຸດ ແລະ ສັງຄົມ**

| | 2017 | 2018 | 2019 | 2020 | 2021 |
|---|---|---|---|---|---|
| ອາຍຸຍືນສະເລ່ຍ** (ປີ) | 67.2 | 67.6 | 67.9 | 68.2 | 68.1 |
| ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ ສະເລ່ຍ ອາຍຸ 15 ປີຂຶ້ນໄປ | n/a | n/a | n/a | n/a | n/a |
| GDP ຕໍ່ ຫົວຄົນ, PPP in USD thousands** | 7 257 | 7 774 | 8 219 | 8 238 | 8 674 |
| ດັດສະນີການພັດທະນາມະນຸດ (HDI)** | 0.608 | 0.609 | 0.613 | 0.61 | 0.607 |
| ການໂອນເງິນກັບບ້ານ (ຫົວໜ່ວຍ: ລ້ານໂດລາສະຫະລັດ**) | 242.7 | 239.8 | 296.5 | 232.1 | 220.8 |
| ການສົ່ງເງິນອອກ (ຫົວໜ່ວຍ: ລ້ານໂດລາສະຫະລັດ**) | 103.0 | 123.7 | 106.0 | 96.2 | 126.8 |
| ກະແສການໂອນເງິນກັບບ້ານ (ຫົວໜ່ວຍ: ລ້ານໂດລາສະຫະລັດ**) | 139.7 | 116.1 | 190.5 | 135.9 | 94 |
| ການລົງທຶນພາຍໃນ ແລະ ຕ່າງປະເທດ, ກະແສເງິນ (ຫົວໜ່ວຍ: ລ້ານໂດລາສະຫະລັດ**) | 1 693 | 1 358 | 755.5 | 967.7 | 1 079 |
| ການຊ່ວຍເຫຼືອດ້ານການພັດທະນາຕໍ່ຫົວຄົນ (ຫົວໜ່ວຍ: ໂດລາສະຫະລັດ**) | 69 | 83 | 86 | 72 | 77 |
| ການໂອນເງິນກັບບ້ານ (ອັດຕາມສ່ວນຕໍ່ GDP**) | 1.4 | 1.3 | 1.6 | 1.2 | 1.2 |

**ປະຊາກອນ ແລະ ຕະຫຼາດແຮງງານ**

| | 2000 | 2005 | 2010 | 2015 | 2020 |
|---|---|---|---|---|---|
| ລວມທັງໝົດ (ພັນຄົນ**) | 5 323 | 5 751 | 6 249 | 6 741 | 7 275 |
| ເພດຍິງ (ອັດຕາສ່ວນຕໍ່ປະຊາກອນທັງໝົດ**) | 50.2 | 50.5 | 50.4 | 49.8 | 49.8 |
| ເພດຊາຍ (ອັດຕາສ່ວນຕໍ່ປະຊາກອນທັງໝົດ**) | 49.8 | 49.5 | 49.6 | 50.2 | 50.2 |
| ໃນຕົວເມືອງ (ພັນຄົນ**) | 1 169 | 1 563 | 1 878 | 2 231 | 2 640 |
| ໃນຕົວເມືອງ (ອັດຕາສ່ວນຕໍ່ປະຊາກອນທັງໝົດ**) | 21.9 | 27.1 | 30.0 | 33.1 | 36.2 |
| ໃນຊົນນະບົດ (ພັນຄົນ**) | 4 153 | 4 188 | 4 370 | 4 509 | 4 635 |
| ໃນເຂດຊົນນະບົດ (ອັດຕາສ່ວນຕໍ່ປະຊາກອນທັງໝົດ**) | 78.1 | 72.9 | 70.0 | 66.9 | 63.8 |
| ປະຊາກອນອາຍຸ 0–14 (ອັດຕາສ່ວນຕໍ່ປະຊາກອນທັງໝົດ**) | 43 | 40 | 36 | 33 | 31 |
| ອັດຕາສ່ວນສະເລ່ຍສູງສຸດ ຂອງ ໄວອອກແຮງງານຕໍ່ປະຊາກອນທັງໝົດ** | 86 | 77 | 66 | 59 | 55 |
| ອັດຕາສ່ວນຂອງກຳລັງແຮງງານ (ປະຊາກອນອອກແຮງງານ ອາຍຸ 15–64**) | 83 | 82 | 81 | 81 | 81 |
| ການວ່າງງານ (ອັດຕາສ່ວນຂອງກຳລັງແຮງງານທັງໝົດ **) | 2.1 | 1.4 | 0.7 | 0.8 | 1 |

| | | | | | |
|---|---|---|---|---|---|
| ການວ່າງງານຂອງໄວໜຸ່ມ (ອັດຕາສ່ວນຂອງກຳລັງແຮງງານ15–24**) | 4.7 | 3.1 | 1.6 | 1.9 | 2.6 |
| ການຈັດແບ່ງໄວໜຸ່ມທີ່ບໍ່ມີການສຶກສາ, ການຈ້າງງານ ຫຼື ຝຶກອົບຮົມ, (ອັດຕາສ່ວນຂອງປະຊາກອນໄວໜຸ່ມ**) | | | 4.3 | 23.6 (2017) | |
| ການເຄື່ອນຍ້າຍລະຫວ່າງປະເທດ | | | | | |
| | **2000** | **2005** | **2010** | **2015** | **2020** |
| ການເຄື່ອນຍ້າຍເຊື້ອຊາດລະຫວ່າງປະເທດ*** | 21 948 | 20 371 | 32 955 | 45 538 | 48 731 |
| ການເຄື່ອນຍ້າຍເຊື້ອຊາດລະຫວ່າງປະເທດ (ອັດຕາສ່ວນຂອງປະຊາກອນທັງໝົດ***) | 0.4 | 0.4 | 0.5 | 0.7 | 0.7 |
| | **2002** | **2007** | **2012** | **2017** | |
| ການເຄື່ອນຍ້າຍທັງໝົດ (ຈຳນວນຜົນ***) | -148 | -110 | -112 | -73 | |

*ແຫຼ່ງຂໍ້ມູນ:* *2015 PHC (LSB, 2015); ***ຕົວຊີ້ບອກຂອງການພັດທະນາປະຊາຄົມໂລກ (ທະນາຄານໂລກ , n.d.???); ***ອົງການສະຫະປະຊາຊາດ DESA.*

*ໝາຍເຫດ: *** ຂໍ້ມູນສຳລັບປີ 2015 ເທົ່ານັ້ນ: 84.6%.*

## ບົດສັງລວມຫຍໍ້

ບົດລາຍງານການເຄື່ອນຍ້າຍຖິ່ນຖານ ໃນ ສປປ ລາວ: *ສະພາບການລາຍງານປີ 2023* ເຊິ່ງມີສ່ວນຮ່ວມຂອງ ສະມາຊິກຄະນະ ITWG ຈັດຕັ້ງປະຕິບັດໂດຍ ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ (DRI), ກະຊວງແຜນການ ແລະ ການລົງທຶນ (MPI) ແລະ ມີສ່ວນຮ່ວມໃນການສະໜັບສະໜູນທາງດ້ານວິຊາການຈາກອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ (IOM). ບົດລາຍງານສະບັບນີ້ ຖືໄດ້ວ່າແມ່ນບົດລາຍງານລະດັບຊາດ ທີ່ໄດ້ມີການລວບລວມຂໍ້ມູນກ່ຽວກັບ ຮູບແບບ, ທ່າອ່ຽງ, ຜົນກະທົບຕໍ່ຂົງເຂດພັດທະນາທີ່ສຳຄັນ, ການຄຸ້ມຄອງການເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ.

ບົດລາຍງານການເຄື່ອນຍ້າຍຖິ່ນຖານ ແມ່ນເປັນໜຶ່ງໃນຂະບວນການລິເລີ່ມທີ່ມີຈຸດປະສົງເພື່ອອຳນວຍຄວາມສະດວກໃນການກຳນົດນະໂຍບາຍ ໂດຍອີງໃສ່ຫຼັກຖານການເຄື່ອນຍ້າຍຖິ່ນຖານ ແລະ ຍັງສາມາດເປັນເຄື່ອງມືໃນການສ້າງຂີດຄວາມອາດສາມາດໃຫ້ແກ່ພາກລັດ ແລະ ບັນດາອົງການຈັດຕັ້ງສາກົນຕ່າງໆ. ການຈັດຕັ້ງປະຕິບັດນະໂຍບາຍການເຄື່ອນຍ້າຍຖິ່ນຖານ ແມ່ນບໍ່ສາມາດຈັດຕັ້ງປະຕິບັດໄດ້ ຖ້າບໍ່ມີນະໂຍບາຍອື່ນເຂົ້າມາປະກອບໃສ່.

ຖານຂໍ້ມູນທີ່ນຳໃຊ້ເຂົ້າໃນການວິເຄາະແມ່ນມາຈາກຫຼາຍແຫຼ່ງເປັນຕົ້ນ: ການສຳຫຼວດຄົວເຮືອນ ຂອງສູນສະຖິຕິແຫ່ງຊາດ ແລະ ການສຳຫຼວດຕົວຢ່າງທີ່ຢູ່ພາຍໃນແຂວງ. ບົດລາຍງານການເຄືອນຍ້າຍຖິ່ນຖານ ຍັງໄດ້ມີການລົງເກັບກຳຂໍ້ມູນເພີ່ມເຕີມທາງດ້ານປະລິມານພາກສະໜາມ ໃນປີ 2022 ປະກອບດ້ວຍຍ 3 ແຂວງ ຄື: ຈຳປາສັກ, ສະຫວັນນະເຂດ ແລະ ໄຊຍະບູລີ ໃນ ເດືອນຕຸລາ 2022.

### ທ່າອ່ຽງ ແລະ ຮູບແບບການເຄື່ອນຍ້າຍຖິ່ນຖານ

ສປປ ລາວ ແມ່ນເປັນປະເທດທີ່ມີການເຄື່ອນຍ້າຍຖິ່ນຖານອອກນອກປະເທດຫຼາຍກວ່າການເຄື່ອນຍ້າຍເຂົ້າໃນປະເທດ.ຍ້ອນມີໂອກາດການຈ້າງງານພາຍໃນທີ່ຈຳກັດ ໂດຍສະເພາະໃນເຂດຊົນນະບົດ ແລະ ຖືໄດ້ວ່າການເຄື່ອນຍ້າຍຖິ່ນຖານຂອງປະຊາກອນລາວຈະເປັນໂອກາດໃນການຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນ. ການເຄື່ອນຍ້າຍຖິ່ນຖານຂອງ ປະຊາກອນລາວໃນພູມີພາກແມ່ນ ໄດ້ເຄື່ອນຍ້າຍອອກໄປສູ່ປະເທດໄທຫຼາຍກວ່າໝູ່. ຄົນລາວສ່ວນຫຼາຍໄດ້ມີການເຄື່ອນຍ້າຍຖິ່ນຖານແມ່ນ ຕິດພັນກັບການຈ້າງງານ ແລະ ການອອກໄປເຮັດວຽກຕາມລະດູການ (ການເຮັດວຽກເປັນລະດູການແບບຊົ່ວຄາວ ຫຼື ຖາວອນ). ສ່ວນຫຼາຍແລ້ວ, ຄົນລາວທີ່ໄດ້ມີການເຄື່ອນຍ້າຍຖິ່ນຖານແບບປົກກະຕິ ແມ່ນໄດ້ນຳໃຊ້ເອກະສານເດີນທາງທີ່ຖືກຕ້ອງ ແຕ່ວ່າການເຮັດວຽກແມ່ນບໍ່ສະໝໍ່າສະເໝີໃນປະເທດທີ່ເຄືອນຍ້າຍໄປ. ໃນປີ 2020 ປະຊາກອນລາວໄດ້ມີການເຄື່ອນຍ້າຍຖິ່ນຖານ ປະມານ 1,296 ລ້ານຄົນ (ໃນນີ້ 56% ແມ່ນເພດຍິງ).

ການເຄື່ອນຍ້າຍຖິ່ນຖານເຂົ້າສູ່ ສປປ ລາວ ແມ່ນຍັງມີຈຳນວນໜ້ອຍ ແລະ ສ່ວນຫຼາຍແມ່ນເຂົ້າມາດຳເນີນທຸລະກິດແລະ ການລົງທຶນ. ໃນປີ 2020 ໄດ້ມີການເຄື່ອນຍ້າຍເຂົ້າມາ ສປປ ລາວ 48.731 ຄົນ ແລະ ແຮງງານທີ່ເຄື່ອນຍ້າຍເຂົ້າມາສ່ວນຫຼາຍແມ່ນມາຈາກປະເທດເພື່ອນບ້ານ ເປັນຕົ້ນ: ຈີນ, ມຽນມ້າ ແລະ ຫວຽດນາມ.

ການເຄື່ອນຍ້າຍຖິ່ນຖານພາຍໃນແມ່ນ ໂອກາດການຂັບເຄື່ອນທາງດ້ານການສຶກສາ ຫຼື ການຈ້າງງານ ໂດຍເຄື່ອຍ້າຍຈາກຊົນນະບົດເຂົ້າມາໃນຕົວເມືອງ. ອີງຕາມຂໍ້ມູນການສຳຫຼວດຄົວເຮືອນ (PHC) ແມ່ນຈະແຍກລະຫວ່າງ ການເຄື່ອນຍ້າຍອອກໄປ ແລະ ການເຄື່ອນຍ້າຍກັບມາຄືນ. ໃນປີ 2015 ເຫັນໄດ້ວ່າ 16,7% ໄດ້ມີການລາຍງານທີ່ຢູ່ອາໃສ່ຂອງປະຊາກອນທັງໝົດ ທີ່ໄດ້ອາໃສ່ຢູ່ບ່ອນອື່ນຫຼາຍກ່ອນບ້ານເກີດໂຕເອງ, ເຊິ່ງສາມາດເບິ່ງຄວາມແຕກຕ່າງໄດ້ຈາກການເຄື່ອນຍ້າຍໃນບັນດາແຂວງທົ່ວປະເທດ. ການເຄື່ອນຍ້າຍພາຍໃນເຫັນໄດ້ວ່າໜ້ອຍສຸດແມ່ນຢູ່ ແຂວງສາລາວັນ (7,7%), ສະຫວັນນະເຂດ (7,9%) ແລະ ຫົວພັນ (8,1%) ໂດຍສະເລ່ຍໃນລະດັບປະເທດເຫັນໄດ້ວ່າສ່ວນຫຼາຍແມ່ນເຄື່ອນຍ້າຍເຂົ້າມາ ຄອນຫຼວງວຽງຈັນ (38,1%) ແລະ ແຂວງທີ່ເຄື່ອນຍ້າຍເຂົ້າມາຫຼາຍທີ່ສຸດແມ່ນແຂວງວຽງຈັນ (27,4%). ໂດຍທົ່ວໄປແລ້ວ ຜູ້ຍິງຈະມີການເຄື່ອນຍ້າຍໃນອັດຕາສ່ວນ 14,6% ທຽບກັບຜູ້ຊາຍ ມີອັດຕາສ່ວນ17,3%. ນອກຈາກນີ້, ໃນປີ 2015 ປະມານ 7,4% (ເທົ່າກັບ 379.000 ຄົນ) ແມ່ນມີການເຄື່ອນຍ້າຍຈາກເມືອງສູ່ເມືອງ ແລະ 4% (ເທົ່າກັບ 206.000 ຄົນ) ແມ່ນມີການເຄື່ອນຍ້າຍຈາກແຂວງສູ່ແຂວງ. ໃນລະຫວ່າງປີ 2005-2015 ການເຄື່ອນຍ້າຍມາຈາກຕ່າງປະເທດມີພຽງ 1% ຂອງຜູ້ເຄື່ອນຍ້າຍຖິ່ນຖານໃນປັດຈຸບັນ. ສຳລັບໜ່ວຍງານພາກລັດທີ່ຢູ່ທ້ອງຖິ່ນ ການກວດກາຕິດຕາມການເຄື່ອນຍ້າຍພາຍໃນຍັງເປັນສິ່ງທ້າທາຍຫຼາຍ.

ກ່ອນການແຜ່ລະບາດຂອງພະຍາດໂຄວິດ-19 ການເກັບກຳຂໍ້ມູນຂອງຜູ້ເຄື່ອນຍ້າຍກັບຄືນປະເທດ ແມ່ນຍັງບໍ່ທັນຄົບຖ້ວນສົມບູນ. ດັ່ງນັ້ນ, ການສຳຫຼວດປະຊາກອນ ແລະ ຄົວເຮືອນ (PHC) ແມ່ນເກັບກຳຂໍ້ມູນໄດ້ພຽງຄົນກັບຄືນມາເປັນບຸກຄົນ ໂດຍຜ່ານສອງເອກະສານບາງສ່ວນເທົ່ານັ້ນ ເປັນຕົ້ນ: ໜັງສືຜ່ານ (Passport) ແລະ ເອກະສານທ່ອງທ່ຽວ. ເນື່ອງຈາກມັນບໍ່ໄດ້ມີຄວາມແຕກຕ່າງຂອງການກັບມາຂອງຄົນລາວ ແລະ ຄົນຕ່າງປະເທດ ທີ່ຈະເຂົ້າມາຕັ້ງຖິ່ນຖານພາຍໃນປະເທດ. ໃນປີ 2015 ໄດ້ມີການລາຍງານວ່າ ມີຜູ້ເຄື່ອນຍ້າຍຖິ່ນຖານທີ່ມາຈາກຕ່າງປະເທດເຂົ້າມາ ສປປ ລາວ 42.078 ຄົນ (2005-2015). ທ່າມກາງການແຜ່ລະບາດຂອງພະຍາດໂຄວິດ-19 ລັດຖະບານໄດ້ອອກມາສົມທົບກັບອົງການຈັດຕັ້ງສາກົນ ໃນການເກັບກຳຂໍ້ມູນກ່ຽວກັບການເຄື່ອນຍ້າຍກັບຄືນມາ ເຊິ່ງໃນປີ 2020 ຈຳນວນຕົວເລກໃນການກັບຄືນປະເທດຈາກການແຜ່ລະບາດຂອງພະຍາດໂຄວິດ-19 ມີທັງໝົດ 156.167 ຄົນ (ILO, 2022).

ໃນພາກສ່ວນການເຄື່ອນຍ້າຍຖິ່ນຖານແບບບໍ່ສະໝັກໃຈ ແມ່ນບໍ່ໄດ້ຖືກປະກອບໃສ່ໃນບົດລາຍງານສະບັບນີ້. ໂດຍການເກັບກຳຂໍ້ມູນຍັງມີຄວາມຈຳກັດ ໂດຍສະເພາະ ການເຂົ້າເຖິງຂໍ້ມູນ ແລະ ຂໍ້ມູນທີ່ມີຢູ່ຍັງມີຄວາມຈຳກັດ ຈຶ່ງພາໃຫ້ເກີດມີສິ່ງທ້າທາຍຕໍ່ກັບການປະເມີນຂໍ້ມູນທາງດ້ານຂອບເຂດ, ຂະໜາດ, ຄຸນລັກສະນະ ທີ່ຕິດພັນກັບການເຄື່ອນຍ້າຍຖິ່ນຖານແບບບໍ່ສະໝັກໃຈພາຍໃນປະເທດ ຈຶ່ງພາສ້າງສິ່ງກີດຂວາງໃນການຮັບຮູ້ຢ່າງມີປະສິດທິພາບຕໍ່ກັບປະກົດການດັ່ງກ່າວ.

## ຜົນກະທົບຂອງການເຄື່ອນຍ້າຍຖິ່ນຖານ

*ຜົນກະທົບດ້ານປະຊາກອນ:* ການປະກອບສ່ວນຂອງການເຄື່ອນຍ້າຍຖິ່ນຖານໄດ້ແບ່ງປະເພດອອກເປັນ ເພດ ແລະ ອາຍຸ ທີ່ປະກອບສ່ວນເຂົ້າຢູ່ໃນໂຄງສ້າງທາງດ້ານປະຊາກອນ ໃນປີ 2019 ສ່ວນຫຼາຍສະແດງເຖິງການເຄື່ອນຍ້າຍ

ແຮງງານທີ່ເປັນເພດຊາຍ. ອີງຕາມລະບົບການເຄື່ອນຍ້າຍຖິ່ນຖານແຫ່ງຊາດ ເຫັນໄດ້ວ່າ ແຕ່ປີ 1975 ເປັນຕົ້ນມາ ອັດຕາການເຄື່ອນຍ້າຍຖິ່ນຖານແມ່ນຍັງມີໜ້ອຍຫຼາຍໃນປີ 2015-2020 ອັດຕາການເຄື່ອນຍ້າຍຖິ່ນຖານແມ່ນຍັງຕິດລົບ -1.4%.

*ຜົນກະທົບດ້ານເສດຖະກິດມະຫາພາກ*: ປະເທດລາວ ແມ່ນປະເທດໜຶ່ງທີ່ຖືວ່າ ໄດ້ຮັບການໂອນເງິນກັບບ້ານຂອງການເຄື່ອນຍ້າຍໄປອອກແຮງງນຢູ່ຕ່າງປະເທດ ແລະ ການໂອນເງິນກັບບ້ານແມ່ນມີຄວາມສຳຄັນຫຼາຍຕໍ່ກັບການຂະຫຍາຍຕົວທາງດ້ານເສດຖະກິດ. ເຊິ່ງປະເທດລາວ ແມ່ນໜຶ່ງໃນປະເທດທີ່ມີການຂາດດຸນທາງດ້ານງົບປະມານຢ່າງຕໍ່ເນື່ອງ. ການສົ່ງເງິນກັບມາທີ່ເປັນເງິນຕາຕ່າງປະເທດແມ່ນຈະຊ່ວຍໃຫ້ດຸນການຊຳລະເງິນມີຄວາມສະຖຽນລະພາບ ແລະ ຍັງເປັນການປະກອບສ່ວນເຂົ້າສູ່ຄັງເງິນຂອງລັດຖະບານໃນການຊ່ວຍເຫຼືອເຂົ້າໃນການພັດທະນາປະເທດຊາດ. ສຳລັບການໂອນເງິນກັບບ້ານ ແມ່ນໄດ້ປະກອບສ່ວນໃນ GDP ປະມານ 2% ແລະ ໃນປີ 2021 ແມ່ນໄດ້ປະກອບສ່ວນເພີ່ມຂຶ້ນແຕ່ 1,2% ຂອງ GDP (World Bank, n.d.a). ເຖິງຢ່າງໃດກໍ່ຕາມ, ການລາຍງານຂອງທະນາຄານພັດທະນາອາຊີ (ADB) ການສົ່ງເງິນກັບບ້ານຂອງຄົນລາວມີພຽງແຕ່ 50% ໃນການໂອນເງິນກັບບ້ານຂອງຄົນລາວທີ່ໄປເຮັດວຽກຢູ່ບັນດາປະເທດລຸ່ມແມ່ນ້ຳຂອງ GMS (ADB, 2013). ອີງຕາມການປະເມີນຕົວເລກການໂອນເງິນກັບບ້ານຢ່າງເປັນທາງການແມ່ນຕ່ຳຫຼາຍ ຈຶ່ງມີຜົນກະທົບໂດຍກົງຕໍ່ກັບລະດັບເສດຖະກິດມະຫາພາກ ແລະ ການດຳລົງຊີວິດ. ນອກຈາກນັ້ນ, ບັນດາປະເທດໃນແລວທາງເສດຖະກິດທີ່ມີລາຍຮັບມູນຄ່າສູງ ຈາກພູມີພາກອາຊີຕາເວັນອອກສ່ຽງໃຕ້ ແລະ ອາຊີປາຊີຟິກ ແລະ ຈາກປະທດໄທ ສູ່ ສປປ ລາວ ໃນໄຕມາດ 4 ຂອງປີ 2021 ເຫັນໄດ້ວ່າຄ່າບໍລິການໃຊ້ຈ່າຍໃນການໂອນເງິນ ເລີ່ມຕົ້ນຈາກ 22,7 ໂດລາສະຫາລັດ ຫາ 200 ໂດລາສະຫາລັດ.

*ຕະຫຼາດແຮງງານ ແລະ ການຈ້າງງານ*: ຜົນກະທົບຂອງການເຄື່ອນຍ້າຍແຮງງານເຂົ້າໄປສູ່ຕະຫຼາດແຮງງານເຫັນໄດ້ວ່າຍັງບໍ່ທັນມີເອກະສານໃນການເກັບຂໍ້ມູນໄວ້ເປັນຢ່າງດີ ຈຶ່ງພາໃຫ້ມີຊ່ອງວ່າງດ້ານຂໍ້ມູນໃນຂົງເຂດນີ້. ເນື່ອງຈາກການເຄື່ອນຍ້າຍແຮງງານພາຍໃນປະເທດຍັງມີໜ້ອຍ (ປະມານ 0,2% ຂອງປະຊາກອນລາວໃນໄວອອກແຮງງານໃນປີ 2017 ), ເຫັນໄດ້ວ່າຜົນກະທົບດ້ານມະຫາພາກຂອງການເຄື່ອນຍ້າຍແຮງງານໃນຕະຫຼາດແຮງງານ ແລະ ການຈ້າງງານແມ່ນມີຄວາມຈຳກັດ ເຊິ່ງຮັບຮູ້ໄດ້ຫຼາຍ ໃນລະດັບຂັ້ນແຂວງ ແລະ ທ້ອງຖິ່ນ. ຜົນການລົງເກັບກຳຂໍ້ມູນໃນ ເດືອນຕຸລາ 2022 ເຫັນວ່າ ຄົນລາວທີ່ຂ້າມໄປອອກແຮງງານຢູ່ຕ່າງປະເທດແມ່ນບໍ່ໄດ້ຮັບຄວາມຍຸດຕິທຳເທົ່າທີ່ຄວນ. ຜູ້ເຂົ້າຮ່ວມກຸ່ມສົນທະນາ FGDs ໄດ້ລາຍງານສະພາບຂອງການໄປອອກແຮງງານຢູ່ຕ່າງປະເທດ ໂດຍສະເພາະ ຈີນ ແລະ ຫວຽດນາມ ແມ່ນໄດ້ໃຊ້ຕົ້ນທຶນຈຳນວນຫຼາຍກວ່າ ທຶນຂອງຄົນໃນທ້ອງຖິ່ນໃນການດຳເນີນທຸລະກິດໃນເຂດທ້ອງຖິ່ນ ແລະ ການເຮັດທຸລະກິດໃໝ່ຂອງພວກເຂົາແມ່ນບໍ່ໄດ້ຮັບໃຫ້ມີການຈ້າງງານເພີ່ມຂຶ້ນຢ່າງຫຼວງຫຼາຍ. ບາງຂົງເຂດໄດ້ລົງນາມເຊັນສັນຍາບົດບັນທຶກຄວາມເຂົ້າໃຈກັບບໍລິສັດລົງທຶນຕ່າງປະເທດຕໍ່ກັບການໂຄຕ້າແຮງງານທ້ອງຖິ່ນ ແລະ ຮັບປະກັນກັບການແຂ່ງຂັນຕະຫຼາດແຮງງານທ້ອງຖິ່ນຢ່າງເປັນທຳ.

ການເຄື່ອນຍ້າຍແຮງງານແມ່ນມີຄວາມເຄັ່ງຕຶງຫຼາຍໃນຕະຫຼາດແຮງງານ ເນື່ອງຈາກແຮງງານໃນຊົນນະບົດເປັນແຮງງານທີ່ບໍ່ມີສີມື. ນອກຈາກນີ້, ຍັງສົ່ງຜົນກະທົບຕໍ່ຄົນທີ່ຖືກປະໄວ້ທາງຫຼັງຈາກຜູ້ທີ່ໄປອອກແຮງງານ ໂດຍການໃຊ້

ຫຼາຍວິທີຂອງຄົນທີ່ບໍ່ຢູ່ໃນຄອບຄົວໃນການໄປອອກແຮງານ. ກຸ່ມສົນທະນາ ຍັງໄດ້ສະເໜີວິທີການໃນຊ່ວງໄລຍະການເກັບກຳຂໍ້ມູນເປັນຕົ້ນ: (ກ) ຜູ້ເຂົ້າຮ່ວມເພດຍິງ ໄດ້ອະທິບາຍວ່າ ພວກເຂົາໄດ້ທົດແທນຄ່າຈ້າງງານແທນການຈ້າງງານໃນຊວ່ງລະດູເກັບກ່ຽວໂດຍການໃຊ້ເງິນຂອງຄົນໃນຄອບຄອບຄົວທີ່ໄປອອກແຮງງານສົ່ງກັບມາໃຫ້. (ຂ) ຜູ້ເຂົ້າຮ່ວມຄົນອື່ນໆ ໄດ້ອະທິບາຍໃຫ້ເຫັນວ່າ ເຂົາເຈົ້າໄດ້ຊື້ເຂົ້າໂດຍໄດ້ຮັບເງິນທີ່ໂອນກັບມາຂອງຄົນໃນຄອບຄົວ ເລະ ຫຼຸດຜ່ອນການຜະລິດເຂົ້າປະຈຳປີຂອງຕົນເອງ ແລະ (ຄ) ຜູ້ເຂົ້າຮ່ວມຄົນອື່ນໆ ໄດ້ອະທິບາຍກ່ຽວກັບການໄປອອກແຮງງານຕາມລະດູການວ່າເຂົາຈະກັບມາເມື່ອເຂດນັ້ນໝົດການຜະລິດ ແລະ ເຂົາຈະມີການເຄື່ອນຍ້າຍໄປສູ່ເຂດອື່ນໆ.

*ການພັດທະນາທາງດ້ານສັງຄົມ*: ການເຄື່ອນຍ້າຍຖິ່ນຖານ ແມ່ນໄດ້ຮັບຜົນກະທົບຈາກການດຳລົງຊີວິດ ແລະ ຄວາມທຸກຍາກ ຊຶ່ງເປັນປັດໄຈຫຼັກທີ່ພາໃຫ້ມີການໂອນເງິນກັບບ້ານ. ຈາກຕົວເລກໃນປີ 2018-2019 ເຫັນໄດ້ວ່າ 15% ແມ່ນຄົນລາວໄດ້ຮັບການໂອນເງິນກັບບ້ານ ຊຶ່ງການໂອນເງິນກັບບ້ານແມ່ນມີຄວາມສຳຄັນຫຼາຍໃນການປະກອບສ່ວນນການຫຼຸດຜ່ອນຄວາມທຸກຍາກ ແລະ ຊ່ວຍປັບປຸງຊີວິດການເປັນຢູ່ຂອງຄົນພາຍໃນຄອບຄົວ. ເຫັນໄດ້ວ່າ ການໂອນເງິນກັບບ້ານ ໄດ້ຊ່ວຍໃຫ້ອັດຕາການຫຼຸດຜ່ອນຄວາມທຸກຍາກໃນຄົວເຮືອນ ຫຼຸດລົງຈາກ 13,9% ໃນປີ 2012-2013 ມາເປັນ 10,2% ໃນປີ 2018-2019.

ອີກຈຸດໜຶ່ງ, ເຫັນໄດ້ວ່າການເຄື່ອນຍ້າຍຖິ່ນຖານ ແລະ ການໂອນເງິນກັບບ້ານໄດ້ຊ່ວຍປະກອບສ່ວນໃນການປັບປຸງຊີວິດໃນຄອບຄົວ, ລວມທັງບົດບາດໃນສັງຄົມ ແລະ ຍາດຕິພີ່ນ້ອງ. ນອກນັ້ນ, ຍັງໄດ້ມີແມ່ຫຼາຍຄົນໄດ້ໄປອອກແຮງານຢູ່ຕ່າງປະເທດ ແລະ ໄດ້ຕັດສິນໃຈເອົາລູກຝາກໄວ້ກັບຜູ້ເຖົ້າໃນການເບິ່ງແຍ່ງດູແລ. ໃນຊ່ວງໄລຍະການເກັບກຳຂໍ້ມູນໄດ້ມີການສຳພາດຜູ້ເຖົ້າໃນການເບິ່ງແຍ່ງເດັກນ້ອຍ ເຊິ່ງເພິ່ນຕອບວ່າແມ່ນໜ້າທີ່ຮັບຜິດຊອບທີ່ຕ້ອງໄດ້ເຮັດ, ຕະຫຼອດຮອດການເຂົ້າໂຮງຮຽນຂອງພວກເຂົາ. ນອກຈາກນັ້ນ, ການຢູ່ຫ່າງໄກພໍ່ແມ່ທີ່ເຮັດໃຫ້ ທາງດ້ານຮ່າງກາຍ, ທາງດ້ານສັງຄົມ, ແລະ ທາງດ້ານຄວາມຮູ້ສຶກ ເຊິ່ງເຮັດໃຫ້ໄວລຸ້ນທີ່ມີການເຄື່ອນຍ້າຍຖິ່ນຖານໄດ້ມີການຫຼຸດລົງ ໃນການຄວບຄຸມທາງດ້ານສັງຄົມ.

*ທາງດ້ານສຸຂະພາບ*: ແມ່ນບັນຫາສຳຄັນສຳລັບຄົນລາວທີ່ອາໃສຢູ່ພາກພື້ນ ເນື່ອງຈາກການປ່ຽນແປງທາງດ້ານດິນຟ້າອາກາດ ແລະ ພູມີພາກ. ບັນດາປະເທດລຸ່ມແມ່ນ້ຳຂອງ GMS ເປັນປະເທດທີ່ມີຊີວະນານາພັນຫຼາກຫຼາຍ. ດັ່ງນັ້ນ, ການເພີ່ມຂຶ້ນຂອງການເຄື່ອນຍ້າຍຖິ່ນຖານພາຍໃນ ແລະ ພູມີພາກ ເປັນເງື່ອນໄຂໜຶ່ງທີ່ເປັນພາຫະໃນການນຳເອົາເຊື້ອພະຍາດຂ້າມປະເທດ. ໂດຍລວມແລ້ວ, ປະເທດລາວ ແລະ ປະເທດໃກ້ຄຽງ ເຊິ່ງລວມມີ ໄທ ແລະ ສປ ຈີນ ມີອັດຕາການແຜ່ລະບາດຂອງພະຍາດໄຂ້ເລືອດອອກ, ວັນນະໂລກ, HIV ແລະ ພະຍາດເຂດຮ້ອນ ຫຼື ພະຍາດຕິດຕໍ່ອື່ນໆຂ້ອນຂ້າງສູງ. ດັ່ງນັ້ນ, ການເຄື່ອນຍ້າຍຖິ່ນຖານ ແລະ ການເຄື່ອນຍ້າຍປະຊາກອນ ແມ່ນປະເພດທີ່ມີຄວາມສ່ຽງສູງ.

## ການຄຸ້ມຄອງການເຄື່ອນຍ້າຍຖິ່ນຖານ

*ຂອບເຂດດ້ານນະໂຍບາຍ ແລະ ກົດໝາຍລະດັບຊາດ:* ລັດຖະບານແຫ່ງ ສປປ ລາວ ໄດ້ກຳນົດຂອບເຂດທາງດ້ານນະໂຍບາຍ ແລະ ກົດໝາຍທຸກຮູບແບບ ເພື່ອໃຫ້ແທດເໝາະ ເພື່ອໃຫ້ສາມາດຄຸ້ມຄອງການເຄື່ອນຍ້າຍຖິ່ນຖານທຸກຮູບແບບ. ການຄຸ້ມຄອງນີ້ແມ່ນເນັ້ນໃສ່ການເຄື່ອນຍ້າຍແຮງງານທີ່ໄປເຮັດວຽກຢູ່ ປະເທດຍີ່ປຸ່ນ, ສ.ເກົາຫຼີ ແລະ ໄທ ເພື່ອຊຸກຍູ້ໃນການເຄື່ອນຍ້າຍຖິ່ນຖານສາກົນ ແລະ ເພື່ອສະກັດກັ້ນການເຄື່ອນຍ້າຍທີ່ຜິດກົດໝາຍ ແລະ ທັງເປັນການປົກປ້ອງສິດຜົນປະໂຫຍດຂອງບຸກຄົນທີ່ມີການເຄື່ອນຍ້າຍຖິ່ນຖານ.

*ຂອບເຂດຂອງສະຖາບັນຮ່ວມເຮັດວຽກ:* ຂອບເຂດຂອງສະຖາບັນ ແມ່ນໜ່ວຍງານຂອງພາກລັດທີ່ຮ່ວມມືກັບອົງການຈັດຕັ້ງສາກົນ ທີ່ບໍ່ຂຶ້ນກັບລັດຖະບານ ເປັນຕົ້ນ: ກະຊວງແຜນການ ແລະ ການລົງທຶນ (MPI), ສູນສະຖິຕິແຫ່ງຊາດ (LSB), ກະຊວງການຕ່າງປະເທດ (MOFA) , ກະຊວງພາຍໃນ (MOHA), ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MOLSW), ສູນກາງສະຫະພັນແມ່ຍິງລາວ (LWU), ອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ (IOM), ອົງການແຮງງານສາກົນ (ILO) ແລະ ທະນາຄານໂລກ (World Bank).

*ຂອບເຂດການຮ່ວມມືລະດັບສາກົນ ແລະ ພູມິພາກ*: ລັດຖະບານແຫ່ງ ສປປ ລາວ ໄດ້ໃຫ້ສັດຕະຍາບັນ ກັບບັນດາສົນທິສັນຍາສາກົນ ທີ່ກ່ຽວຂ້ອງກັບການເຄື່ອນຍ້າຍຖິ່ນຖານ ແລະ ຊຸກຍູ້ການຮ່ວມມືກັບສາກົນໃນດ້ານຕ່າງໆ ເປັນຕົ້ນ: ການເຄື່ອນຍ້າຍແຮງງານ, ການຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ, ອາດສະຍາກຳຂ້າມຊາດ, ການຄ້າມະນຸດ ແລະ ການເຄື່ອນຍ້າຍຖິ່ນຖານທີ່ຜິດກົດໝາຍ. ລັດຖະບານແຫ່ງ ສປປ ລາວ ໄດ້ສົມທົບກັບບັນດາປະເທດໃກ້ຄຽງທີ່ອຳນວຍຄວາມສະດວກໃນການພັດທະນາສ້າງສະພາບແວດລ້ອມ ແລະ ສົ່ງເສີມການເຄື່ອນຍ້າຍຖິ່ນຖານແບບປອດໄພ, ປົກກະຕິ ແລະ ເປັນລະບຽບຮຽບຮ້ອຍ.

## ຜົນຂອງການຄົ້ນຄວ້າ

ຜົນຂອງການຄົ້ນຄວ້າກ່ຽວກັບການເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ ແມ່ນເປັນໂອກາດໃນການກຳນົດທ່າແຮງ, ສິ່ງທ້າທາຍ ແລະ ກາລະໂອກາດ ໃຫ້ແກ່ລັດຖະບານແຫ່ງ ສປປ ລາວ ເປັນຕົ້ນ:

- ຮັບຮູ້ກ່ຽວກັບການເຊື່ອມໂຍ່ງການພັດທະນາການເຄື່ອນຍ້າຍຖິ່ນຖານ ທີ່ພາໃຫ້ມີການຮ່ວມມືລະຫວ່າງພາກລັດຖະບານ ກັບ ອົງການທີ່ບໍ່ຂຶ້ນກັບລັດຖະບານ. ເຖິງຢ່າງໃດກໍ່ຕາມ, ລັດຖະບານແມ່ນຍັງຂາດຄວາມສາມາດ, ຄວາມເປັນຊ່ຽວຊານ ແລະ ຂໍ້ຈຳກັດທາງດ້ານງົບປະມານ ເຂົ້າໃນການເຊື່ອມໂຍ່ງໃນການສ້າງຄວາມເຂົ້າໃຈກ່ຽວກັບການເຄື່ອນຍ້າຍຖິ່ນຖານ ແລະ ການພັດທະນາ ທີ່ນອກເໜືອການເຄື່ອນຍ້າຍແຮງງານ.
- ການເກັບກຳຂໍ້ມູນ ແລະ ການວິເຄາະໄດ້ມີການປັບປຸງຕະຫຼອດເວລາ ເປັນຕົ້ນ: ການສຳຫຼວດກຳລັງແຮງງານໄດ້ເປັນເອກະສານທີ່ສາມາດຢັ້ງຢືນໃນລະດັບພູມິພາກ. ນອກນັ້ນ, ຍັງຂາດຂໍ້ມູນບາງສ່ວນທີ່ຢັ້ງຢືນກ່ຽວກັບສະຖານະພາບຂອງການເຄື່ອນຍ້າຍຖິ່ນຖານ ທີ່ຈະປະກອບເຂົ້າໃສ່ໃນແຜນວາລະດຳເນີນງານໃນປີ

2030 ກ່ຽວກັບການພັດທະນາແບບຍືນຍົງ; ຍັງຂາດຂໍ້ມູນຫຼາຍຢ່າງ ແລະ ຄຸນນະພາບຂອງຂໍ້ມູນທີ່ມີຢູ່ໃນຫຼາຍຂົງເຂດ ເປັນຕົ້ນ: ການເຄື່ອນຍ້າຍແຮງງານ, ສະພາບແວດລ້ອມຂອງການເຄື່ອນຍ້າຍ, ການເຄື່ອນຍ້າຍຖິ່ນຖານຢ່າງເປັນປົກະຕິ ແລະ ການບັງຄັບແຮງງານໄປຢູ່ບ່ອນອື່ນ.

- ໜ່ວຍງານທີ່ກ່ຽວຂ້ອງຕ່າງໆຂອງລັດຖະບານ ແມ່ນຍັງໄດ້ເບິ່ງບັນຫາກ່ຽວກັບການເຄື່ອນຍ້າຍຖິ່ນຖານ ຈຶ່ງໄດ້ສ້າງວິທີການແຍກປະເພດຂອງການເຄື່ອນຍ້າຍຖິ່ນຖານ ແລະ ລວບລວມຖານຂໍ້ມູນແຕ່ລະປະເພດຂອງການເຄື່ອນຍ້າຍຖິ່ນຖານ.

**ຂໍ້ສະເໜີແນະ**

ຂໍ້ສະເໜີແນະແມ່ນຖືກສ້າງຂຶ້ນໃນພາກທີ IV ຂອງບົດລາຍງານການເຄື່ອນຍ້າຍຖິ່ນຖານ part D. ເຊິ່ງມັນໄດ້ເວົ້າເຖິງການຄຸ້ມຄອງຖານຂໍ້ມູນ, ຂອບເຂດການຄຸ້ມຄອງຂໍ້ມູນ, ການເຊື່ອມສານວຽກງານການເຄື່ອນຍ້າຍຖິ່ນຖານເຂົ້າໃສ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ລາຍລະອຽດຂໍ້ສະເໜີແນະມີດັ່ງນີ້:

- ການພັດທະນາຄວາມຮູ້ທົ່ວໄປກ່ຽວກັບການເຄື່ອນຍ້າຍຖິ່ນຖານ;
- ສ້າງເຄືອຂ່າຍໃນກອບສະຖາບັນ ໃນການເກັບກຳຂໍ້ມູນກ່ຽວກັບການເຄື່ອນຍ້າຍຖິ່ນຖານ;
- ພັດທະນາຍຸດທະສາດຂໍ້ມູນທີ່ກ່ຽວຂ້ອງກັບການເຄື່ອນຍ້າຍຖິ່ນຖານ;
- ຈັດຕັ້ງກວດກາຄືນລະບົບເກັບກຳຂໍ້ມູນການເຄື່ອນຍ້າຍຖິ່ນຖານແຫ່ງຊາດ;
- ພັດທະນາຖານຂໍ້ມູນອອນລາຍ ສຳລັບການເກັບກຳຂໍ້ມູນການເຄື່ອນຍ້າຍຖິ່ນຖານ ແລະ ມີການແບ່ງປັນຂໍ້ມູນ ເປັນຕົ້ນ: ແຜນງານຄຸ້ມຄອງ dashboards and infographics ທີ່ລວບລວມຂໍ້ມູນໃນເວບໄຊ ຂອງສູນສະຖິຕິແຫ່ງຊາດ;
- ຊຸກຍູ້ໃຫ້ມີການລິເລີ່ມໃນການຈັດຕັ້ງປະຕິບັດການເຊື່ອມໂຍງຂໍ້ມູນທີ່ກ່ຽວຂ້ອງກັບການເຄື່ອນຍ້າຍຖິ່ນຖານ;
- ສືບຕໍ່ປະຕິບັດຄຳແນະນຳຈາກນາໆປະເທດກ່ຽວກັບການເຄື່ອນຍ້າຍຖິ່ນຖານ ໂດຍສະເພາະແມ່ນວຽກງານການບໍລິການຈັດການ;
- ເພີ່ມທະວີການເກັບກຳຂໍ້ມູນ ໂດຍສະເພາະໃນຂົງເຂດເຫຼົ່ານີ້ ເປັນຕົ້ນ: ຕະຫຼາດແຮງງານ, ການບັງຄັບແຮງງານໃຫ້ໄປຢູ່ບ່ອນອື່ນ, ສະພາບແວດລ້ອມຂອງການເຄື່ອນຍ້າຍຖິ່ນຖານ, ການເຄື່ອນຍ້າຍຖິ່ນຖານແບບປົກກະຕິ, ການເຄື່ອນຍ້າຍຖິ່ນຖານທີ່ມີຜົນກະທົບທາງດ້ານສຸຂະພາບ ຫຼື ຕະຫຼາດແຮງງານ ແລະ ເພີ່ມການນຳໃຊ້ການແຍກຂໍ້ມູນຂອງ SDG ເຊິ່ງແຍກຂໍ້ມູນຕາມສະຖານະພາບຂອງການເຄື່ອນຍ້າຍຖິ່ນຖານ;
- ມາດຕະຖານຂອງວິທີການເກັບກຳຂໍ້ມູນ ແລະ ຄຳນິຍາມ;
- ລວບລວມເອົາຊຸດຂໍ້ມູນ metadata ເພື່ອອະທິບາຍຂໍ້ມູນໃນແບບມາດຕະຖານ;
- ການປະເມີນກາລະໂອກາດ ແລະ ສິ່ງທ້າທາຍໃນການນຳໃຊ້ແຫຼ່ງຂໍ້ມູນນະວັດຕະກຳ;
- ຝຶກປະຕິບັດຕາມໂຄງສ້າງສະພາບການເຄື່ອນຍ້າຍຖິ່ນຖານ;
- ສ້າງໂຄງປະກອບການປະສານງານການຄຸ້ມຄອງການເຄື່ອນຍ້າຍຖິ່ນຖານ.

- ສ້າງແຜນດໍາເນີນງານແຫ່ງຊາດກ່ຽວກັບການເຄື່ອນຍ້າຍຖິ່ນຖານ.

## ການນຳສະເໜີ ຂໍ້ສະເໜີແນະເບື້ອງຕົ້ນ

### ຄວາມເປັນມາໃນດ້ານປະຊາກອນ ແລະ ເສດຖະກິດ-ສັງຄົມຂອງ ສ ປປ ລາວ

ສປປ ລາວ ແມ່ນປະເທດທີ່ບໍ່ມີທາງອອກສູ່ທະເລ ຕັ້ງຢູ່ພາກຕາເວັນອອກສ່ຽງໃຕ້ຂອງທະວີບອາຊີ. ພາກເໜືອມີຊາຍແດນຕິດກັບ ສປ ຈີນ, ພາກຕາເວັນອອກຕິດກັບ ສສ ຫວຽດນາມ, ພາກຕາເວັນຕົກແມ່ນຕິດກັບ ລາດຊະອານາຈັກໄທ, ພາກໃຕ້ຕິດກັບ ກຳປູເຈຍ ແລະ ພາກຕາເວັນຕົກສ່ຽງເໜືອຕິດກັບ ມຽນມ້າ. ສປປ ລາວ ມີປະຊາກອນປະມານ 7,2 ລ້ານຄົນ ເປັນປະເທດທີ່ມີພູມສັນຖານເປັນລັກສະນະພູຜາປ່າດົງ ແລະ ມີແມ່ນ້ຳຂອງໄຫຼຜ່ານແຕ່ເໜືອຮອດໃຕ້ ແລະ ປະກອບມີຫຼາຍຊົນຊາດຊົນເຜົ່າ.

ສະພາບເສດຖະກິດ-ສັງຄົມ ຂອງ ສປປ ລາວ ໃນຊຸມປີຜ່ານມາ ສປປ ລາວ ໄດ້ມີການຂະຫຍາຍຕົວທາງດ້ານເສດຖະກິດຢ່າງກ້າວກະໂດດ ເຫັນໄດ້ວ່າ ການຂະຫຍາຍຕົວຂອງ GDP ສູງເຖິງ 6% ຕໍ່ປີ ຍ້ອນການຂະຫຍາຍຕົວໃນຂະແໜງບໍ່ແຮ່, ເຂື່ອນໄຟຟ້ານ້ຳຕົກ ແລະ ຂະແໜງທ່ອງທ່ຽວ (World Bank, 2021). ຜົນປະໂຫຍດຂອງການເຕີບໂຕທາງດ້ານເສດຖະກິດ ເຫັນໄດ້ວ່າຍັງບໍ່ສາມາດກະຈາຍໃນຂະແໜງການຕ່າງໆໄດ້ຢ່າງມີປະສິດທິຜາບ, ເຊິ່ງສະແດງອອກໃນອັດຕາສ່ວນຄວາມທຸກຍາກ ແລະ ຄວາມບໍ່ເທົ່າທຽມກັນ ຍັງເປັນສິ່ງທ້າທາຍທີ່ສຳຄັນຂອງ ສປປ ລາວ. ມາຮອດປີ 2018-2019 ເຫັນໄດ້ວ່າ 18,3% ແມ່ນປະຊາກອນດຳລົງຊີວິດຕ່ຳກວ່າເສັ້ນຄວາມທຸກຍາກແຫ່ງຊາດ (ທຽບກັບປີ 2012-2013 ແມ່ນ 24,6%) ແລະ ມີຄວາມແຕກຕ່າງກັນຫຼາຍທາງດ້ານລາຍຮັບ ແລະ ການເຂົ້າເຖິງການບໍລິການຂັ້ນພື້ນຖານລະຫວ່າງຕົວເມືອງ ແລະ ຊົນນະບົດ (ສູນສະຖິຕິແຫ່ງຊາດ ແລະ ທະນາຄານໂລກ , 2020).

ສປປ ລາວ ມີປະຊາກອນໄວໜຸ່ມອາຍຸສະເລ່ຍແມ່ນ 23 ປີ. ປະຊາກອນສ່ວນໃຫຍ່ແມ່ນອາໃສຢູ່ໃນເຂດຊົນນະບົດປະມານ 70% ແລະ ສປປ ລາວ ມີອັດຕາຄວາມໜາແໜ້ນຂອງປະຊາກອນຕ່ຳ ເຊິ່ງມີພຽງ 30 ກິໂລຕາແມັດ/ຄົນ (World Bank, n.d.a). ໂຄງສ້າງທາງດ້ານປະຊາກອນ ແມ່ນມີຄວາມສຳຄັນຫຼາຍໃນ ຕະຫຼາດແຮງງານ ແລະ ໂອກາດໃນການຈ້າງງານ ເນື່ອງຈາກ ສປປ ລາວ ມີໄວກຳລັງອອກແຮງງານຈຳນວນຫຼາຍໃນເຂດຊົນນະບົດ ແລະ ມີທ່າແຮງໃນການໄປອອກແຮງງານທີ່ມີຄຸນນະພາບ. ເຖິງຢ່າງໃດກໍ່ຕາມ, ລະບົບການສຶກສາ ແລະ ການຝຶກອົບຮົມຂອງ ສປປ ລາວ ຍັງມີການພັດທະນາຢ່າງສະໝ່ຳສະເໝີໃນການພັດທະນາທັກສະສີມືແຮງງານ ເຖິງວ່າຈະມີການຂາດແຄນແຮງງານໃນບາງຂະແໜງການໃດໜຶ່ງເປັນຕົ້ນ: ເຕັກໂນໂລຊີຂໍ້ມູນຂ່າວສານ, ວິສະວະກຳ ແລະ ການເບິ່ງແຍງສຸຂະພາບ. ນອກຈາກນັ້ນ, ເຖິງວ່າ ສປປ ລາວ ຈະເປັນປະເທດທີ່ມີຂະໜາດນ້ອຍ ແລະ ອັດຕາຄວາມໜາແໜ້ນຂອງປະຊາກອນຕ່ຳ ແຕ່ຍັງມີໂອກາດໃນການສ້າງວຽກເຮັດງານທຳ ໂດຍສະເພາະໃນເຂດຊົນນະບົດ. ຜົນຂອງການຄົ້ນຄວ້າດັ່ງກ່າວສາມາດເວົ້າໄດ້ວ່າ ການເຄື່ອນຍ້າຍຖິ່ນຖານຂອງໄວໜຸ່ມຈາກຕົວເມືອງໄປສູ່ຕ່າງປະເທດແມ່ນໂອກາດທີ່ດີກ່ອນ.

## ສະພາບລວມຂອງການຍ້າຍຖິ່ນຖານ

ສະພາບການເຄື່ອນຍ້າຍຖິ່ນຖານທີ່ລາຍງານຈາກຫ້ອງການ IOM ໄດ້ວິເຄາະກ່ຽວກັບຮູບແບບການເຄື່ອນຍ້າຍຖິ່ນຖານ, ແນວໂນ້ມ ແລະ ລັກສະນະສະເພາະຂອງປະເທດ ເຊິ່ງເປັນຄັ້ງທຳອິດທີ່ ສປປ ລາວ ໄດ້ສ້າງບົດລາຍງານການເຄື່ອນຍ້າຍຖິ່ນຖານ. ອີງຕາມແຫຼ່ງຂໍ້ມູນມືໜຶ່ງ (ຈາກການລົງເກັບກຳຂໍ້ມູນຕົວຈິງ) ແລະ ຂໍ້ມູນມືສອງ ເຊິ່ງລວມກັບຂໍ້ມູນການສຳຫຼວດປະຊາກອນ ແລະ ຂໍ້ມູນບໍລິຫານ ແລະ ການວິເຄາະແບບຄຸນນະພາບ. ບົດລາຍງານດັ່ງກ່າວແມ່ນໄດ້ລາຍງານສະພາບລວມຢ່າງລະອຽດກ່ຽວກັບການເຄື່ອນຍ້າຍຖິ່ນຖານ. ບົດລາຍງານການເຄື່ອນຍ້າຍຖິ່ນຖານໂດຍທົ່ວໄປແລ້ວແມ່ນຈະລາຍງານຂະໜາດ ແລະ ຂອບເຂດການເຄື່ອນຍ້າຍຖິ່ນຖານ, ລັກສະນະຂອງຜູ້ຖືກຍ້າຍທີ່ລວມມີເພດ, ອາຍຸ ແລະ ລະດັບການສຶກສາ, ເຫດຜົນທີ່ພາໃຫ້ມີການເຄື່ອນຍ້າຍຖິ່ນຖານແມ່ນປັດໄຈທາງດ້ານເສດຖະກິດ ແລະ ສະພາບແວດລ້ອມການດຳລົງຊີວິດ ແລະ ຜົນກະທົບການເຄື່ອນຍ້າຍຖິ່ນຖານທີ່ສຳຄັນໃນການພັດທະນາ. ບົດລາຍງານຍັງປະກອບດ້ວຍຂັ້ນຕອນຕ່າງໆເປັນຕົ້ນ: ກ່ອນການເດີນທາງ, ການປ່ຽນຖ່າຍ ແລະ ຕະຫຼອດຮອດຂໍ້ມູນກ່ຽວກັບສິ່ງທ້າທາຍ ແລະ ກາລະໂອກາດຂອງການເຄື່ອນຍ້າຍ ເຊິ່ງລວມມີບັນຫາໃນການປົກປ້ອງ ແລະ ການເຊື່ອມໂຍງ.

ໂດຍລວມແລ້ວ, ສະພາບການລາຍງານການເຄື່ອນຍ້າຍຖິ່ນຖານແມ່ນມີຄວາມສຳຄັນຫຼາຍຕໍ່ຜູ້ວ່າງນະໂຍບາຍ, ນັກຄົ້ນຄວ້າ ແລະ ຜູ້ຈັດຕັ້ງປະຕິບັດສາມາດເຂົ້າໃຈເຖິງການເຄື່ອນຍ້າຍຖິ່ນຖານທີ່ຊັບຊ້ອນ ແລະ ອີງໃສ່ຫຼັກຖານນະໂຍບາຍທີ່ສະໜັບສະໜູນຄວາມຕ້ອງການໃນການເຄື່ອນຍ້າຍ ແລະ ຊຸມຊົນເຂົາເຈົ້າອາໃສຢູ່.

## ວິທີວິທະຍາ ໃນການຄົ້ນຄວ້າ ແລະ ຂໍ້ຈຳກັດ

ວິທີວິທະຍາໃນການຄົ້ນຄວ້າໂດຍການໃຊ້ຂໍ້ມູນການເຄື່ອນຍ້າຍຖິ່ນຖານທີ່ປະສົມປະສານວິທີວິທະຍາການຄົ້ນຄວ້າແບບປະລິມານ ແລະ ຄຸນນະພາບ. ຂໍ້ມູນທາງດ້ານປະລິມານແມ່ນຖືກທົບທວນສັງລວມໂດຍຜ່ານຂະບວນການປະກອບສ່ວນຈາກພາກສ່ວນອີງການຈັດຕັ້ງສາກົນ, ຄະນະສະມາຊິກຈັດຕັ້ງປະຕິບັດ ITWG ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ. ເພື່ອເສີມສ້າງການຄົ້ນຄວ້າທັງນີ້ ຂໍ້ມູນທາງດ້ານຄຸນນະພາບຈຶ່ງຖືກເກັບກຳໂດຍຜ່ານການສຳພາດຂະແໜງການພາກລັດ KIIs ແລະ ກຸ່ມສົນທະນາ FGDs ໂດຍມີຈຸດປະສົງ ເພື່ອເອົາຜົນການຄົ້ນຄວ້າດ້ວຍຂໍ້ມູນເລິກເຊິ່ງຂອງຜູ້ທີ່ມີສ່ວນຮ່ວມໃນລະດັບທ້ອງຖິ່ນ ແລະ ລະດັບປະເທດ. ການລວບລວມຂໍ້ມູນທາງດ້ານຄຸນນະພາບທີ່ກ່ຽວຂ້ອງກັບການເຄື່ອນຍ້າຍຖິ່ນຖານຍັງເປັນສິ່ງທ້າທາຍຫຼາຍຢ່າງ. ກ່ອນອື່ນໝົດ, ການເຄື່ອນຍ້າຍຖິ່ນຖານແມ່ນວຽກງານໜຶ່ງທີ່ສັບສົນ ເພາະເປັນວຽກທີ່ມີການເຄື່ອນໄຫວກ່ຽວກັບການເຄື່ອນຍ້າຍຂ້າມຊາຍແດນ ແລະ ເຄື່ອນຍ້າຍພາຍໃນ ດ້ວຍເຫດຜົນຕ່າງໆ ເປັນຕົ້ນ: ການໄປອອກແຮງງານ, ໄປເພື່ອການສຶກສາ ແລະ ສ້າງຄອບຄົວ. ດັ່ງນັ້ນ , ການເກັບກຳຂໍ້ມູນການເຄື່ອນຍ້າຍຖິ່ນຖານຕ້ອງໄດ້ນຳໃຊ້ຫຼາຍແຫຼ່ງຂໍ້ມູນ, ຫຼາຍວິທີວິທະຍາໃນການຄົ້ນຄວ້າ, ການເກັບກຳຂໍ້ມູນ, ການສຳພາດ ແລະ ບັນທຶກຂໍ້ມູນ. ນອກຈາກນັ້ນ, ຂໍ້ມູນກ່ຽວກັບການເຄື່ອນຍ້າຍຖິ່ນຖານໃນປະເທດຍັງໄດ້ຖືກແບ່ງອອກເປັນຫຼາຍວິທີ, ຫຼາຍແຫຼ່ງຂໍ້ມູນ ແລະ ວິທີການແມ່ນມີຄວາມແຕກຕ່າງກັນ ຈຶ່ງພາໃຫ້ຜົນຂອງການຄົ້ນຄວ້າທີ່ອອກມາຍັງບໍ່ສອດຄ່ອງກັນ ຫຼື ເປັນຍ້ອນຊຸດຂໍ້ມູນທີ່ມີຄວາມແຕກຕ່າງກັນ. ນອກຈາກນັ້ນ, ຍັງ

ຂາດການອັບເດດຂໍ້ມູນ ແລະ ຖານຂໍ້ມູນທີ່ມີຄຸນະພາບສູງ ເຊິ່ງໄດ້ແບ່ງລັກສະນະຂອງການເຄື່ອນຍ້າຍອອກເປັນດັ່ງນີ້: ສະຖານະພາບການເຄື່ອນຍ້າຍຖິ່ນຖານ, ເພດ ແລະ ອາຍຸ. ເຖິງແມ່ນວ່າ ຂໍ້ມູນແມ່ນຈະພ້ອມໃຊ້ງານ ແຕ່ຍັງຂາດທາງດ້ານຄຸນະພາບ ແລະ ເຂດກໍລະນີສຶກສາ ເປັນຕົ້ນ: ຜົນກະທົບຂອງການເຄື່ອນຍ້າຍຖິ່ນຖານຕໍ່ກັບສະພາບແວດລ້ອມ ແລະ ການຂາດຂໍ້ມູນທາງດ້ານສຸຂະພາບ. ເພື່ອກ້າວຂ້າມສິ່ງທ້າທາຍເຫຼົ່ານີ້ ທີມງານໃນການຄົ້ນຄວ້າ ກັບຄະນະສະມາຊິກຈັດຕັ້ງປະຕິບັດ ITWG ໄດ້ມີການຊອກຫາຂໍ້ມູນຈາກບົດລາຍງານການຄົ້ນຄວ້າ ແລະ ບົດລາຍງານບັນຫາການເຄື່ອນຍ້າຍຖິ່ນຖານທັງພາຍໃນ ແລະ ອົງການຈັດຕັ້ງສາກົນ.

# ພາກທີ I. ແນວໂນ້ມຂອງການເຄື່ອນຍ້າຍຖິ່ນຖານ ແລະ ຄຸນລັກສະນະຂອງຜູ້ເຄື່ອນຍ້າຍ

ຈຸດປະສົງແມ່ນການນຳສະເໜີໃນແບບຮູບສະແດງ ແລະ ແນວໂນ້ມຕະຫຼອດຮອດຄຸນລັກສະນະຂອງຜູ້ເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ.

## 1.1. ການເຄື່ອນຍ້າຍຖິ່ນຖານ

### *1.1.1.* ການເຄື່ອນຍ້າຍເຊື້ອຊາດໄປສູ່ຕ່າງປະເທດ

ພະແນກປະຊາກອນ ຂອງກົມເສດຖະກິດ, ສັງຄົມ ແລະ ການຕ່າງປະເທດ (DESA) ໄດ້ມີການລວບລວມຂໍ້ມູນກ່ຽວກັບການເຄື່ອນຍ້າຍລະຫວ່າງປະເທດ (DESA, 2020). ສຳລັບຖານຂໍ້ມູນໃນປັດຈຸບັນແມ່ນໄດ້ແບ່ງຕາມ ອາຍຸ, ເພດ ແລະ ຖິ່ນກຳເນີດ ໂດຍເບິ່ງຕາມໄລຍະແຕ່ລະປີ ເລີ່ມແຕ່ປີ 1990, 1995, 2000, 2005, 2010, 2015 ແລະ ປີ 2020 [1]. ການຄາດຄະເນແມ່ນອີງໃສ່ຂໍ້ມູນສະຖິຕິທີ່ເປັນທາງການຂອງປະຊາກອນທີ່ເກີດຢູ່ຕ່າງປະເທດ. [2] ກໍລະນີ ສປປ ລາວ ແມ່ນຂໍ້ມູນທີ່ໄດ້ມາຈາກສຳຫຼວດປະຊາກອນ ແລະ ຄົວເຮືອນ (PHC) ເຊິ່ງການເກັບກຳຂໍ້ມູນກ່ຽວກັບຄົນຕ່າງປະເທດແມ່ນອີງໃສ່ເບິ່ງໃບອານຸຍາດພັກເຊົາ ທີ່ຢູ່ພາຍໃນປະເທດເປັນເວລາຫຼາຍກວ່າ 6 ເດືອນ (LSB, 2015).

ມາຮອດກາງປີ 2020 ໄດ້ມີຄົນທີ່ເຄື່ອນຍ້າຍຖິ່ນຖານເຂົ້າມາ ສປປ ລາວ 48.731 ຄົນ (ຮູບສະແດງ 1). ເຊິ່ງຕົວເລກດັ່ງກ່າວແມ່ນໄດ້ເພີ່ມຂຶ້ນຢ່າງໄວວາ ນັບແຕ່ປີ 1990 (ການເຄື່ອນຍ້າຍແຮງງານຂ້າມຊາດ 22.866 ຄົນ ໃນປີ 1990 ເພີ່ມຂຶ້ນ 113%). ໃນລະຫວ່າງປີ 1990 ຫາ 2005 ໄດ້ມີການເຄື່ອນຍ້າຍແຮງງານຂ້າມປະເທດປະມານ 22.000 ຄົນ ແລະ ການເຄື່ອນຍ້າຍແຮງງານຂ້າມປະເທດຄິດໄລ່ພຽງ 0,7% ຂອງປະຊາກອນລາວໃນປີ 2020, ເຫັນໄດ້ວ່າແມ່ນເພີ່ມຂຶ້ນພຽງ 0,5% ໃນປີ 1990 ແລະ ຖ້າສະເລ່ຍສົມທຽບໃນ ພູມິພາກຕາເວັນອອກສ່ຽງໃຕ້ແມ່ນ 0,8%.

ອັດຕາສ່ວນໃນກຸ່ມເພດຍິງຂອງການເຄື່ອນຍ້າຍແຮງງານຂ້າມປະເທດເຂົ້າມາ ສປປ ລາວ ແມ່ນ 35,6% ໃນປີ 2020 (48,4% ໃນປີ 1990). ຮູບແບບການເຄື່ອນຍ້າຍດັ່ງແມ່ນມີຄວາມແຕກຕ່າງຫຼາຍກັບລະດັບພູມິພາກສະເລ່ຍ 46,8% ຂອງການເຄື່ອນຍ້າຍແຮງງານຂ້າມປະເທດໂດຍສະເພາະເພດຍິງ ໃນປີ 2020 (DESA, 2020).

[1] For 2020, figures were estimated with an assumption of zero growth in the stock of migrants between 1 March and 1 July 2020. See the methodology report here.

[2] See https://un.org/development/desa/pd/content/international-migrant-stock.

ຮູບສະແດງທີ  1. ຜູ້ເຄື່ອນຍ້າຍຖິ່ນຖານລະຫວ່າງປະເທດໃນກາງປີ
(ການຄິດໄລ່ເປັນຈຳນວນ ແລະ ອັດຕາສ່ວນຂອງປະຊາກອນທັງໝົດ




*ແຫຼ່ງຂໍ້ມູນ:: ອີງໃສ່ຂໍ້ມູນການເກັບກັບກຳຈຳນວນປະຊາກອນ ແລະ ຄົວເຮືອນ (DESA, 2020).*

ໃນໄລຍະເວລາຜ່ານໄປ ຜູ້ທີ່ມີການເຄື່ອນຍ້າຍແມ່ນມີອາຍຸເພີ່ມຂຶ້ນ ປະມານ 50% ແມ່ນປະມານອາຍຸ 35,4 ປີ ຫຼື ຫຼາຍກ່ອນນັ້ນ ໃນປີ 2020, ຖ້າທຽບໃສ່ປີ 1990 ແມ່ນມີປະມານອາຍຸ 23,6 ປີ ແລະ ເບິ່ງໃນລະດັບປະເທດຕົ້ນທາງ99,5% ຂອງການເຄື່ອນຍ້າຍແຮງງານຂ້າມປະເທດເຂົ້າມາ ສປປ ລາວ ແມ່ນມີຕົ້ນທາງມາຈາກ ອາຊີຕາເວັນອອກ ແລະ ອາຊີຕາເວັນອອກສ່ຽງໃຕ້  ໂດຍມີອັດຕາສ່ວນເກືອບ 100% ໃນປີ 1990 (99.9%). ໃນປີ 2005 ການເຄື່ອນຍ້າຍແຮງງານຂ້າມປະເທດເຂົ້າມາສູ່ ສປປ ລາວ ແມ່ນຫຼຸດລົງ ໂດຍເບິ່ງຈາກປະເທດຕົ້ນທາງທີ່ເຄື່ອນຍ້າຍເຂົ້າມາ. ອີງໃສ່ຕົວເລກໃນຊ່ວງປີ 1990 ຫາ 2020 ມີ 5 ປະເທດທີ່ມີການເຄື່ອນຍ້າຍເຂົ້າມາ ສປປ ລາວ ເປັນຕົ້ນ: ສສ ຫວຽດນາມ, ສປ ຈີນ, ກຳປູເຈຍ, ລາດສະອານາຈັກ ໄທ ແລະ ມຽນມ້າ ເຊິ່ງນັບຕັ້ງແຕ່ປີ 1990 ສສ ຫວຽດນາມ ແມ່ນໜຶ່ງໃນປະເທດທີ່ມີການເຄື່ອນຍ້າຍແຮງງານຂ້າມປະເທດ ເຂົ້າມາສູ່ ສປປ ລາວ ຫຼາຍກວ່າໝູ່. (ຮູບສະແດງ 2).

### ຮູບສະແດງທີ 2. 5 ປະເທດທີ່ມີການເຄື່ອນຍ້າຍແຮງງານຂ້າມປະເທດໃນຊ່ວງປີ 1990–2020




*ແຫຼ່ງຂໍ້ມູນ:: ອີງໃສ່ຂໍ້ມູນການເກັບກັບກຳຈຳນວນປະຊາກອນ ແລະ ຄົວເຮືອນ* PHC *(DESA, 2020).*

ຖ້າເບິ່ງໃນອັດຕາສ່ວນ ເຫັນໄດ້ວ່າການເຄື່ອນຍ້າຍແຮງງານທີ່ມາຈາກ ສປ ຈີນ ແມ່ນມີການເພີ່ມຂຶ້ນຕັ້ງແຕ່ປີ 2005 ເຊິ່ງໄດ້ກວມເອົາຈຳນວນຫຼາຍຂອງການເຄື່ອນຍ້າຍແຮງງານ ສສ ຫວຽດນາມ (ຮູບສະແດງ 3). ດັ່ງນັ້ນ, ອັດຕາສ່ວນຕົວເລກຂອງການເຄື່ອນຍ້າຍແຮງງານຈາກ ສສ ຫວຽດນາມ ແມ່ນຫຼຸດລົງຈາກ 61% ໃນປີ 1990 ມາເປັນ 42% ໃນປີ 2020. ແລະ ໃນທາງກົງກັນຂ້າມ ການເຄື່ອນຍ້າຍແຮງງານຈາກ ສປ ຈີນ ແມ່ນມີການເພີ່ມຂຶ້ນ ຈາກ 18% ໃນປີ 1990 ມາເປັນ 29% ໃນປີ 2020. ທ່າອ່ຽງ ການເຄື່ອນຍ້າຍຖິ່ນຖານໃນຫຼາຍປະເທດເຂົ້າມາ ສປປ ລາວ (ເພີ່ມຂຶ້ນ 5% ໃນລະຫວ່າງປີ 1990 ຫາ 2020 ) ເຊິ່ງມີຄວາມຫຼາກຫຼາຍຂອງປະເທດຕົ້ນທາງໃນການເຄື່ອນຍ້າຍຖິ່ນຖານ ເຂົ້າມາສູ່ ສປປ ລາວ.

### ຮູບສະແດງທີ 3. ອັດຕາສ່ວນຂອງການປ່ຽນແປງການເຄື່ອນຍ້າຍຂ້າມປະເທດ ໂດຍປະເທດຕົ້ນທາງໃນລະຫວ່າງປີ 1990 ຫາ 2020 (ຫົວໜ່ວຍ %)




*ແຫຼ່ງຂໍ້ມູນ:: ອີງໃສ່ຂໍ້ມູນການເກັບກັບກຳຈຳນວນປະຊາກອນ ແລະ ຄົວເຮືອນ (PHC) (DESA, 2020).*

*ໝາຍເຫດ:: * ປະເທດຈີນ.*

ຈຳນວນຕົວເລກຂອງການເຄື່ອນຍ້າຍຂ້າມປະເທດເຂົ້າມາສູ່ ສປປ ລາວ ອາດຈະຖືກປະເມີນໄດ້ພຽງສ່ວນໃດສ່ວນໜຶ່ງເທົ່ານັ້ນ ເນື່ອງຈາກການປະສານງານ ແລະ ການສື່ສານຂອງທີມງານການສຳຫຼວດປະຊາກອນ ແລະ ຄົວເຮືອນຕໍ່ກັບການເກັບກຳຂໍ້ມູນຂອງຄົນຕ່າງປະເທດ (LSB, 2015). ນອກຈາກນັ້ນ, ຂໍ້ມູນການສຳຫຼວດປະຊາກອນ ແລະ ຄົວເຮືອນ PHC ແມ່ນບໍ່ໄດ້ມີຂໍ້ມູນອື່ນ ເປັນຕົ້ນ: ການກະຈາຍທີ່ຢູ່ອາໃສ ຫຼື ຊ່ວງໄລຍະການດຳລົງຊີວິດຂອງຄົນຕ່າງປະເທດໃນ ປະເທດນັ້ນ.

### *1.1.2.* ຂະບວນການເຄື່ອນຍ້າຍເຂົ້າເມືອງ

ຂະບວນການເຄື່ອນຍ້າຍເຂົ້າເມືອງ ແມ່ນການເກັບຂໍ້ມູນປະເພດການຂໍວີຊາ (VISA) ເຂົ້າ-ອອກ ໂດຍ ກົມກົງສູນ, ກະຊວງການຕ່າງປະເທດ ເປັນຜູ້ຄຸ້ມຄອງການເຂົ້າ-ອອກ ຂອງປະເທດ ເຊິ່ງໄດ້ມີການຈັດຕັ້ງປະຕິບັດອອກວີຊາເຂົ້າ-ອອກ ຂອງ ສປປ ລາວ ໃຫ້ແກ່ຄົນຕ່າງປະເທດ ແລະ ຄົນເຊື້ອຊາດລາວທີ່ອາໄສຢູ່ຕ່າງປະເທດ. ສຳລັບຂໍ້ມູນແມ່ນສ້າງຂຶ້ນໃນປີ 2013 ຫາ 2022 ຂອງການເຄື່ອນຍ້າຍຖິ່ນຖານ ແລະ ຄົນສັນຊາດລາວ ເຊິ່ງແບ່ງອອກດັ່ງນີ້: ເພດ (ເພດຍິງ, ເພດຊາຍ ແລະ ເດັກນ້ອຍ) ແລະ ເຫດຜົນອື່ນໆ (ການເຂົ້າມາທາງການທູດ, ການເຂົ້າມາເຮັດວຽກໃນນາມພາກລັດ, ການຢ້ຽມຢາມ, ການເຮັດທຸລະກິດ, ການທ່ອງທ່ຽວ ແລະ ການເດີນທາງຜ່ານເພື່ອໄປປະເທດອື່ນ).

ໃນລະຫວ່າງປີ 2013 ຫາ 2022 ຈຳນວນຄົນຕ່າງປະເທດທີ່ເຂົ້າມາ ສປປ ລາວ ປະມານ 1.192.083 ຄົນ ແລະ ຄົນເຊື້ອຊາດລາວທີ່ອາໄສຢູ່ຕ່າງປະເທດ ເຂົ້າມາ ສປປ ລາວ ປະມານ 452.036 ຄົນ (ຮູບສະແດງທີ 4) ແລະ ຈຳນວນເຂົ້າ-ອອກ ແມ່ນມີການຫຼຸດລົງ ໃນປີ 2020 ຫາ 2021 ເນື່ອງຈາກການແຜ່ລະບາດຂອງພະຍາດໂຄວິດ-19

**ຮູບສະແດງທີ 4. ຕົວເລກຄົນຕ່າງປະເທດ ແລະ ຄົນເຊື້ອຊາດລາວ ເຂົ້າມາ ສປປ ລາວ, ໃນປີ 2013–2022 ( ຫົວໜ່ວຍ:ລ້ານ)**




*ແຫຼ່ງຂໍ້ມູນ: ຂໍ້ມູນໄດ້ມາຈາກກະຊວງການຕ່າງປະເທດ ກ່ຽວກັບການເຄື່ອນຍ້າຍຖິ່ນຖານ*

ຂໍ້ມູນທີ່ສະແດງກ່ຽວກັບ ເພດ ແມ່ນຢູ່ໃນ ຮູບສະແດງທີ 5 ແລະ ໃນຊ່ວງຫຼາຍປີຜ່ານມາ ສະເລ່ຍແລ້ວຄົນຕ່າງປະເທດທີ່ເຄື່ອນຍ້າຍເຂົ້າມາ ສປປ ລາວ ແມ່ນເພດຊາຍ (ສະເລ່ຍແມ່ນ 70% ໃນຊ່ວງປີ 2013 ຫາ 2022 ). ໃນທາງກົງກັນຂ້າມ, ສ່ວນຫຼາຍຄົນເຊື້ອຊາດລາວທີ່ເຂົ້າມາ ສປປ ລາວ ແມ່ນເພດຍິງ (61%) ແລະ ສະເລ່ຍປະມານ 2% ເປັນເດັກນ້ອຍ ທີ່ເຂົ້າມາ (ລວມທັງຄົນຕ່າງປະເທດ ແລະ ຄົນເຊື້ອຊາດລາວ).

**ຮູບສະແດງທີ 5. ຕົວເລກຄົນຕ່າງປະເທດທີ່ເຄື່ອນຍ້າຍເຂົ້າມາ ສປປ ລາວ ທີ່ແບ່ງເປັນ ເພດຊາຍ, 2013–2022 (ຫົວໜ່ວຍ:ລ້ານ)**



*ແຫຼ່ງຂໍ້ມູນ: ຂໍ້ມູນໄດ້ມາຈາກກະຊວງການຕ່າງປະເທດ ກ່ຽວກັບການເຄື່ອນຍ້າຍຖິ່ນຖານ*

ຈຳນວນຕົວເລກຂອງຄົນຕ່າງປະເທດທີ່ໄດ້ຮັບສັນຊາດ ແມ່ນຕົວຊີ້ວັດໜຶ່ງຂອງຂະບວນການເຄື່ອນຍ້າຍຖິ່ນຖານ ແລະ ກະຊວງພາຍໃນ MOHA ໄດ້ມີການເກັບຂໍ້ມູນຂັ້ນບ້ານ ຈາກການລວບລວມເອົາຈາກປື້ມສຳມະໂນຄົວ. ຂໍ້ມູນການເຂົ້າເຖິງໃນປີ 2021 (ຮູບສະແດງ 6) ໄດ້ສະແດງເຖິງການວິເຄາະຕົວຊີ້ວັດກໍລະນີການໃຫ້ສັນຊາດ ປະມານ 85% ແມ່ນການປ່ຽນແປງຈຳນວນລວມທີ່ຮັບສັນຊາດ.

**ຮູບສະແດງທີ 6. ການຈົດທະບຽນຄອບຄົວ ແລະ ເພື່ອປ່ຽນສັນຊາດໃນປີ 2021 (ຫົວໜ່ວຍ: ເປີເຊັນ ແລະ ຈຳນວນ)**




*Source:* Data shared by MOHA for this Migration Profile.

### *1.1.3.* ການເຄື່ອນຍ້າຍຖິ່ນຖານເພື່ອການຈ້າງງານ

ຈຳນວນການເຂົ້າມາຂອງຄົນຕ່າງປະເທດ ແລະ ຄົນເຊື້ອຊາດລາວ ໃນຊ່ວງລະຫວ່າງປີ 2013 ຫາ 2022 ເຊິ່ງສະແດງໃນຮູບສະແດງທີ 7 ທີ່ໄດ້ເວົ້າເຖິງການເຄື່ອນຍ້າຍຖິ່ນຖານເພື່ອການຈ້າງງານ ເຊິ່ງບໍ່ແມ່ນເຫດຜົນຕົ້ນຕໍໃນການເຂົ້າປະເທດ. ສະເລ່ຍ 75% ແມ່ນເຂົ້າມາທ່ອງທ່ຽວ, 12% ແມ່ນການມາຢ້ຽມຢາມ ແລະ 10% ແມ່ນການເຂົ້າມາເຮັດທຸລະກິດ. ເຊິ່ງມີສອງເຫດຜົນຕົ້ນຕໍທີ່ອະທິບາຍການເຂົ້າມາຂອງຄົນເຊື້ອຊາດລາວໃນຊ່ວງໄລຍະເວລາດັ່ງກ່າວ: ການມາຢ້ຽມຢາມ 52% ແລະ ທ່ອງທ່ຽວ 45%, ແລະ ເຫດຜົນອື່ນໆປະມານ 1% ໃນການເຂົ້າມາ.

### ຮູບສະແດງທີ 7. ຈຳນວນຄົນເຊື້ອຊາດລາວ ແລະ ຄົນຕ່າງປະເທດທີ່ເຂົ້າມາ ສປປ ລາວ ເຊິ່ງແບ່ງຕາມເຫດຜົນ 2013–2020 (ຫົວໜ່ວຍ: ລ້ານຄົນ)




*ແຫຼ່ງຂໍ້ມູນ: ໄດ້ມາຈາກກະຊວງການຕ່າງປະເທດ ກ່ຽວກັບການເຄື່ອນຍ້າຍຖິ່ນຖານ*

#### *1.1.4.* ການເຄື່ນຍ້າຍຖິ່ນຖານເພື່ອການສຶກສາ

ອີງຕາມຂໍ້ມູນຈາກກະຊວງສຶກສາທິການ ແລະ ກິລາ (MOES) ເຫັນໄດ້ວ່າໃນທຸກໆປີ ມີຈຳນວນນັກສຶກສາຕ່າງປະເທດເຂົ້າມາສຶກສາໃນ ສປປ ລາວ. ສຳລັບການເກັບກຳຂໍ້ມູນ ໄດ້ຖືກແບ່ງໂດຍອີງການ UIS ເຊິ່ງຜູ້ທີ່ສະໜອງຂໍ້ມູນກ່ຽວກັບນັກສຶກສາຕ່າງປະເທດໃນຊັ້ນປະຖົມທີ່ມີການເຄື່ອນຍ້າຍຖິ່ນຖານເຂົ້າ-ອອກ (UNESCO, 2020).

ນັບແຕ່ປີ 2000 ເປັນຕົ້ນມາ, ຕົວເລກນັກສຶກສາທີ່ໄດ້ເຂົ້າມາຮຽນໃນ ສປປ ລາວ ແມ່ນຍັງຕ່ຳ ແລະ ມີຂໍ້ມູນທີ່ແຕກຕ່າງກັນຫຼາຍໃນແຕ່ລະປີ. ໃນປີ 2000 ການເຄື່ອນຍ້າຍເຂົ້າມາ ມີພຽງປະມານ 75 ຄົນ, ເຊິ່ງມີຕົວເລກສູງສຸດແມ່ນ 680 ຄົນ ໃນປີ 2009 ແລະ ຮອດປີ 2020 ຕົວເລກແມ່ນມີການຫຼຸດລົງມາ 543 ຄົນ (ຮູບສະແດງ 8) (ibid.). ອັດຕາການເຄື່ອນຍ້າຍເຂົ້າມາພາຍໃນປະເທດຂອງນັກສຶກສາຕ່າງປະເທດ ໂດຍການເອົາຂໍ້ມູນຈາກການລົງທະບຽນໃນຊັ້ນມັດທະຍົມໃນທົ່ວປະເທດ. ສຳລັບ ສປປ ລາວ ການເຄື່ອນຍ້າຍເຂົ້າມາທີ່ມີຄວາມແຕກຕ່າງກັນຫຼາຍຂອງຈຳນວນນັກສຶກສາຕ່າງປະເທດ ໂດຍມີອັດຕາສ່ວນຢູ່ລະຫວ່າງ 0,2% ຫາ 0,7% ແລະ ໃນປີ 2020 ແມ່ນ 0,6%.

ຮູບສະແດງທີ 8. ການເຄື່ອນຍ້າຍນັກສຶກສາຕ່າງປະເທດໃນຊັ້ນມັດທະຍົມ ແລະ ອັດຕາການເຄື່ອນຍ້າຍເຂົ້າ 2000 ຫາ 2019 (ຫົວໜ່ວຍ: ເປີເຊັນ)




*ແຫຼ່ງຂໍ້ມູນ: ອີງໃສ່ກະຊວງສຶກສາ ແລະ ກິລາ* (UIS, n.d.).

ໃນປີ 2020 ປະເທດຕົ້ນທາງຫຼັກທີ່ມີການເຄື່ອນຍ້າຍ ເຂົ້າມາ ສປປ ລາວ ເພື່ອການສຶກສາໃນຊັ້ນມັດທະຍົມ ແມ່ນ: ສສ ຫວຽດນາມ (ມີ 236 ຄົນ, ກວມ 50%), ສປ ຈີນ (ມີ 133 ຄົນ ກວມ 28%), ກຳປູເຈຍ, ສ ເກົາຫຼີ ແລະ ມົງໂກເລຍ (ຮູບສະແດງ 9). ຕົວເລກຂອງນັກສຶກສາ ສປ ຈີນ ແມ່ນຍັງຄົງຕົວຢູ່ແຕ່ລະໄລຍະ.

ໃນປີ 2020 ປະເທດຕົ້ນທາງຫຼັກທີ່ມີການເຄື່ອນຍ້າຍ ເຂົ້າມາ ສປປ ລາວ ເພື່ອການສຶກສາໃນຊັ້ນມັດທະຍົມ ແມ່ນ: ສສ ຫວຽດນາມ (ມີ 236 ຄົນ, ກວມ 50%), ສປ ຈີນ (ມີ 133 ຄົນ ກວມ 28%), ກຳປູເຈຍ, ສ ເກົາຫຼີ ແລະ ມົງໂກເລຍ (ຮູບສະແດງທີ 9). ຕົວເລກຂອງນັກສຶກສາ ສປ ຈີນ ແມ່ນຍັງຄົງຕົວຢູ່ແຕ່ລະໄລຍະ.

ຮູບສະແດງທີ 9. ຕົວເລກ ໃນການເຄື່ອນຍ້າຍຂອງນັກສຶກສາໃນ 5 ປະເທດ ຕັ້ງແຕ່ປີ 2009 - 2020




*ແຫຼ່ງຂໍ້ມູນ: ອີງໃສ່ກະຊວງສຶກສາ ແລະ ກິລາ* (UIS, 2020).

## 1.2. ການເຄື່ອນຍ້າຍຖິ່ນຖານອອກນອກປະເທດ

ຈາກທັກສະນະຂອງປະເທດຕົ້ນທາງສຳລັບຜູ້ເຄື່ອນຍ້າຍ ເຫັນວ່າການເຄື່ອນຍ້າຍຖິ່ນຖານແມ່ນການເຄື່ອນຍ້າຍຂອງຄົນທີ່ມີສັນຊາດ ແລະ ທີ່ຢູ່ອາໃສປົກະຕິ ເພື່ອເຄື່ອນຍ້າຍໄປຍັງປະເທດທີມີຕົ້ນທາງທີ່ມີທີ່ຢູ່ອາໃສໃໝ່ (IOM, 2019). ໃນພາກ 1.2 ແມ່ນຈະສຸມໃສ່ ຄົນລາວ ຜູ່ທີ່ຈະເຄື່ອນຍ້າຍໄປຢູ່ບ່ອນອື່ນ.

ໂດຍທົ່ວໄປແລ້ວການເຄື່ອນຍ້າຍອອກນອກປະເທດແມ່ນມີຄວາມຫຍຸ້ງຍາກຫຼາຍທີ່ຈະມາສາດກວດສອບໄດ້ ແຕ່ຂໍ້ມູນສ່ວນຫຼາຍໃນການເກັບກຳຂໍ້ມູນແມ່ນການສຳຫຼວດປະຊາກອນ ແລະ ຍັງບໍ່ທັນມີຄວາມສົມບູນ. ໃນ ສປປ ລາວ ການສຳຫຼວດ ປະຊາກອນ ແລະ ຄົວເຮືອນ ໃນການເກັບກຳຂໍ້ມູນຂອງຜູ້ທີ່ລົງທະບຽນເຄື່ອນຍ້າຍອອກທີ່ໄດ້ມີການລາຍງານຂອງພວກເຂົາເຫຼົ່ານັ້ນ. ຖ້າຄອບຄົວ ຫຼື ສະມາຊິກທີ່ມີການເຄື່ອນຍ້າຍອອກໄປໝົດ ໃນການສຳຫຼວດປະຊາກອນ ແລະ ຄົວເຮືອນ (PHC) ຈະບໍ່ໄດ້ມີການບັນທຶກຂໍ້ມູນຂອງພວກເຂົາ. ນອກຈາກນັ້ນ, ເມື່ອຂໍ້ມູນການເຄື່ອນຍ້າຍອອກ ແລະ ຈະບໍ່ມີຂໍ້ມູນວ່າເຫດຜົນໃນການເຄື່ອນຍ້າຍຖິ່ນຖານ.

### *1.2.1.* ຄົນເຊື້ອຊາດລາວ ທີ່ອາໄສຢູ່ຕ່າງປະເທດ

DESA (2020) ໄດ້ສ້າງຖານຂໍ້ມູນ ກ່ຽວກັບເຊື້ອຊາດທີ່ມີການເຄື່ອນຍ້າຍຂ້າມປະເທດໃນ ຊ່ວງໄລຍະປີ 1990 ຫາ 2020[3]. ການສ້າງຖານຂໍ້ມູນແມ່ນຈະໄດ້ປະເມີນການເຄື່ອນຍ້າຍຂ້າມປະເທດ ເຊິ່ງແບ່ງອອກເປັນ ອາຍຸ, ເພດ ແລະ ຕົ້ນກຳເນີດ. ການຄາດຄະເນແມ່ນອີງໃສ່ສະຖິຕິທີ່ເປັນທາງການຂອງຄົນທີ່ເກີດຢູ່ຕ່າງປະເທດ ຫຼື ກັບຄົນຕ່າງປະເທດ.

ມາຮອດກາງປີ 2020, ປະມານ 1,2 ລ້ານຄົນ ທີ່ຄົນລາວໄປດຳລົງຊີວິດຢູ່ຕ່າງປະເທດ (56% ແມ່ນເພດຍິງ) (ຮູບສະແດງ 10). ເຊິ່ງຂໍ້ມູນແມ່ນຈະສະແດງການເພີ້ມຂຶ້ນຢ່າງສະໝ່ຳສະເໝີໃນຊ່ວງໄລຍະປີ 1990 ຫາ 2015. ໃນປີ 1990 ໄດ້ມີຄົນລາວທີ່ໄປດຳລົງຊີວິດຢູ່ຕ່າງປະເທດ 481,859 ຄົນ (51% ແມ່ນເພດຍິງ). ອັດຕາການເຕີບໂຕແມ່ນສູງສຸດ 38% ໃນລະຫວ່າງປີ 2000 ຫາ 2005 ແລະ ການເຄື່ອນຍ້າຍອອກໄປນອກປະເທດແມ່ນເພດຍິງ. ຈາກປີ 2010 ຫາ 2015 ຕົວເລກຂອງຄົນລາວທີ່ອາໃສຢູ່ຕ່າງປະເທດແມ່ນມີການຂະຫຍາຍຕົວຊ້າລົງ (13%). ໃນລະຫວ່າງປີ 2015 ຫາ 2019 ຕົວເລກການເຄື່ອນຍ້າຍອອກຍັງຄົງຕົວ ເຊິ່ງໃນຂະນະດຽວກັນຕົວເລກຂອງເພດຊາຍແມ່ນມີການຫຼຸດລົງ (-16%) ແລະ ຕົວເລກຂອງເພດຍິງມີການເພີ້ມຂຶ້ນ (+13%).

[3] For the 2020 DESA data, figures were estimated with an assumption of zero growth in the stock migrants between 1 March and 1 July 2020. See the methodology report here.

ຮູບສະແດງທີ 10. ການຂະຫຍາຍຕົວຂອງປະຊາກອນລາວທີ່ດຳລົງຊີວິດຢູ່ຕ່າງປະເທດ ເຊິ່ງແບ່ງຕາມເພດ ແລະ ອັດຕາການເຕີບໂຕຂອງປະຊາກອນທີ່ອາໃສ່ຢູ່ຕ່າງປະເທດ ໃນປີ 1990 - 2020 (ຫົວໜ່ວຍ %)




*Source:* Author's elaboration based on DESA (2020).
*Note:* Growth rate calculated between two periods.

ໃນປີ 2020, ມີ 5 ປະເທດທີ່ມີຄົນລາວໄປດຳລົງຊີວິດຢູ່ຕ່າງປະເທດ ( ເຊິ່ງລຽງລຳດັບຈາກຫຼາຍໄປຫານ້ອຍ) ເປັນຕົ້ນ:: ໄທ (ປະມານ 70% ), ສະຫະລັດອາເມລິກາ (17%), ບັງກະລາເທດ (7%), ຝຣັ່ງ ແລະ ແຄນນາດາ. .

### *1.2.2.* ຂະບວນການເຄື່ອນຍ້າຍອອກນອກປະເທດ

❖ **ການເຄື່ອນໄຫວອົບພະຍົບ ອີງໃສ່ຂໍ້ມູນທີ່ມີຢູ່**

ຂໍ້ມູນຂະບວນການເຄື່ອນຍ້າຍອອກນອກປະເທດແມ່ນໄດ້ສ້າງຖານຂໍ້ມູນໃນຊ່ວງໄລຍະປີ 2013 ຫາ 2022 ( ຮູບສະແດງ 11). ໃນປີ 2022 ໄດ້ມີຄົນຕ່າງປະເທດ 1.13 ລ້ານຄົນ ແລະ ຄົນລາວ0.54 ຄົນ ໄດ້ມີການເຄື່ອນຍ້າຍຖິ່ນຖານອອກນອກປະເທດ. ຈຳນວນການເຄື່ອນຍ້າຍອອກນອກປະເທດໄດ້ຫຼຸດລົງໃນປີ 2017, 2020, ແລະ 2021 ເນື່ອງຈາກມີຂໍ້ຈຳກັດທາງດ້ານການເຄື່ອນຍ້າຍ ເນື່ອງຈາກໄດ້ທີການແຜ່ລະບາດຂອງພະຍາດໂຄວິດ-19.

### ຮູບສະແດງທີ 11. ຕົວເລກຂອງການເຄື່ອນຍ້າຍອອກນອກປະເທດຂອງ ຄົນຕ່າງປະເທດ ແລະ ຄົນລາວ 2013–2022 (ຫົວໜ່ວຍລ້ານຄົນ)




*Source:* Data shared by MOFA for this Migration Profile.

ການວິເຄາະໄດ້ສະແດງຈຳນວນຄົນຕ່າງປະເທດ ແລະ ຄົນລາວ ທີ່ໄດ້ເຄື່ອນຍ້າຍອອກນອກປະເທດໃນໄລຍະປີ 2013 ຫາ 2022 ເຊິ່ງແບ່ງຕາມ ເພດ (ຮູບສະແດງ 12 ) ທີ່ສະແດງຄ່າສະເລ່ຍ ໂດຍສະເພາະ ສ່ວນຫຼາຍການເຄື່ອນຍ້າຍອອກຂອງຄົນຕ່າງປະເທດທີ່ເປັນເພດຊາຍ ແລະ ການເຄື່ອນຍ້າຍອອກຂອງຄົນລາວທີ່ເປນເພດຍິງ ແລະ. ເດັກນ້ອຍທີ່ທີອັດຕາສ່ວນ 2% ຂອງດານເຄື່ອນຍ້າຍອອກນອກປະເທດໃນແຕ່ໄລຍະ.

**ຮູບສະແດງທີ 12. ຕົວເລກຂອງການເຄື່ອນຍ້າຍອອກນອກປະເທດຂອງ ຄົນຕ່າງປະເທດ ແລະ ຄົນລາວ ທີ່ແບ່ງຕາມເພດ 2013–2022 (ຫົວໜ່ວຍລ້ານຄົນ)**




*ແຫຼ່ງຂໍ້ມູນ: ໄດ້ມາຈາກກະຊວງການຕ່າງປະເທດ ກ່ຽວກັບການເຄື່ອນຍ້າຍຖິ່ນຖານ.*

❖ **ເຫດຜົນຂອງການເຄື່ອນຍ້າຍອອກ**

ຈາກຜົນການຄົ້ນຄວ້າເຫັນວ່າຈໍານວນ ການເຄື່ອນຍ້າຍອອກນອກປະເທດ ແລະ ຄົນລາວ ໃນລະຫວ່າງປີ 2013 ຫາ 2022 (ຮູບສະແດງ13) ເຊິ່ງຕົວຊີ້ວັດແມ່ນຊີ້ໃຫ້ເຫັນທີ່ມີການຍ້າຍອອກຍ້ອນການທ່ອງທ່ຽວ , ແລະ ການໄປເຮັດທຸລະກິດໃນແຕ່ລະໄລຍະ.

ຮູບສະແດງທີ  13. ຕົວເລກຂອງການເຄື່ອນຍ້າຍອອກນອກປະເທດຂອງ ຄົນຕ່າງປະເທດ ແລະ ຄົນລາວ ດ້ວຍເຫດຜົນ 2013–2022 (ຫົວໜ່ວຍລ້ານຄົນ)




*ແຫຼ່ງຂໍ້ມູນ: ໄດ້ມາຈາກກະຊວງການຕ່າງປະເທດ ກ່ຽວກັບການເຄື່ອນຍ້າຍຖິ່ນຖານ*

### ❖ ຂະບວນການເຄື່ອນຍ້າຍອອກໄປສູ່ ສະຫະພາບເອີຣົບ

ສະຖິຕິກ່ຽວກັບການສ້າງຄວາມເຂົ້າໃຈໃນການອອກໃບອານຸຍາດທີ່ຢູ່ອາໃສ່ຕໍ່ກັບຮູບແບບຂອງການເຄື່ອນຍ້າຍຖິ່ນຖານ. ເຊິ່ງໃນແຕ່ລະປີໄດ້ມີຈຳນວນຄົນລາວທີ່ມີການເຄື່ອນຍ້າຍອອກໄປສູ່ສະຫະພາບເອີຣົບ. ຫ້ອງການສະຖິຕິປະຈຳສະຫະພາບເອີຣົບ ແມ່ນໄດ້ສະໜອງຂໍ້ມູນກ່ຽວກັບຈຳນວນການອອກໃບອານຸຍາດໃຫ້ແກ່ບຸກຄົນທີ່ເຄື່ອນຍ້າຍເຂົ້າມາເປັນຄັ້ງທຳອິດ ແລະ ຄັ້ງທີ່ໜຶ່ງໄດ້ມີການອອກໃບອານຸຍາດທີ່ຢູ່ອາໃສ່ໃຫ້ບຸກຄົນ ທີ່ແບ່ງຂໍ້ມູນອອກເປັນອອກເປັນແຕ່ລະເຫດຜົນ ເປັນຕົ້ນ: ( ຂໍ້ມູນການສ້າງຄອບຄົວ ຫຼື ຂໍ້ມູນການໂຮມຄອບຄົວ, ການສຶກສາ, ແລະ ກິດຈະກຳອື່ນໆທີ່ມີຄ່າຕອບແທນ), ທີ່ມີໄລຍະເວລາ ( 3 ຫາ 5 ເດືອນ, 6 ຫາ 11 ເດືອນ ຫຼື 1 ປີ) ອີງຕາມໃບສະໝັກຄຳຮ້ອງຂອງສະຫະພາບເອີຣົບ ແລະ ຂໍ້ມູນທັງໝົດແມ່ນອີງໃສ່ຈາກຫ້ອງການບໍລິຫານໃນປະເທດ.

ຈຳນວນຕົວເລກໃບອານຸຍາດ ແລະ ເຫດຜົນທີ່ຄົນລາວເຂົ້າໄປ – ອາໃສ່ໃນສະພາບເອີຣົບທີ່ມີຕົວເລກເຂົ້າມາມີພຽງນ້ອຍດຽວ. ໃນລະຫວ່າວປີ 2013 ຫາ 2020 ມີການອອກໃບອານຸຍາດໃນຄັ້ງທຳອິດ 2,2857 ຄົນ ທີ່ໄດ້ອອກໃນສະຫະພາບເອີຣົບ (27 ປະເທດ) ເຊິ່ງໃນປີ 2019 ໄດ້ອອກໃບອານຸຍາດ (351 ໃບອານຸຍາດ. ປະເທດຝຣັ່ງແມ່ນເປັນເທດທີມີການຂໍຄຳຮ້ອງເຂົ້າໄປຫຼາຍທີ່ສຸດ ສວ່ນເຢຍລະມັນ ແລະ ຮັງກາລີ ແມ່ນອີງຕາມລຳດັບການຂໍຄໍສຮ້ອງເຂົ້າໄປແຕ່ລະປີ.

ຕາມແຕ່ລະໄລຍະ, ການອອກໃບນຸຍາດທີ່ຢູ່ອາໃສ່ຄັ້ງທຳອິດ (ສະເລ່ຍ 80% ແມ່ນໃນປີ 2013 ຫາ 2020) ແລະສຳລັບການອອກໃບອານຸຍາດໃຫ້ແກ່ຄົນລາວແມ່ນມີໄລຍະແຕ່ 1 ປີ ຫຼື ຫຼາຍກ່ອນ. ໃນໄລຍະປີ 2013 ຫາ 2020 ເຫດຜົນຕົ້ນຕໍ່ໃນການອອກໃບອານຸຍາດແມ່ນການສ້າງຄອບຄົວ ຫຼື ການໂຮມຄອບຄົວ (ຮູບສະແດງທີ 14 ) ຫຼື

ການສຶກສາ, ການຈ້າງງານ ແລະ ເຫດຜົນອື່ນໆ. ເມື່ອເວລາຜ່ານໄປ ເຫດຜົນໃນການສ້າງຄອບຄົວ ແລະ ການໂຮມຄອບຄົວແມ່ນບໍ່ມີຄວາມໂດດເດັ່ນໃນການເຄື່ອນຍ້າຍ ແລະ ເຫດຜົນໃນການຍົກຍ້າຍແມ່ນຍ້ອນການສຶກສາ ແລະ ການຈ້າງງານ. ໃນປີ 2020 ເຫດຜົນໃນການອອກໃບອານຸຍາດໃນການສ້າງຄອບຄົວແມ່ນ 41% ຂອງຈຳນວນທັງໝົດ, 31% ແມ່ນການສຶກສາ, 21% ແມ່ນການຈ້າງງານ ແລະ 7% ແມ່ນເຫດຜົນອື່ນໆ

**ຮູບສະແດງທີ 14. ເຫດຜົນຂອງສະຫະພາບເອີຣົບໃນການອອກໃບອານຸຍາດທີ່ຢູ່ໃຫ້ຄົນລາວເປັນຄັ້ງທຳອິດ, 2013–2020 (ຫົວໜ່ວຍຕົວເລກ ແລະ ເປີເຊັນ)**




*ແຫຼ່ງຂໍ້ມູນ: ລາຍລະອຽດຂອງຜູ້ຂຽນໂດຍອີງໃສ່* Eurostat (n.d.a).

### *1.2.3.* ການເຄື່ອນຍ້າຍອອກນອກປະເທດເພື່ອການຈ້າງງານ

ຂໍ້ມູນຕົວເລກຂອງຄົນລາວໃນການເຄື່ອນຍ້າຍໄປອອກແຮງງານຢູ່ຕ່າງປະເທດ ເຊິ່ງໄດ້ມີການເກັບກຳຂໍ້ມູນໂດຍກົມພັດທະນາສີມືແຮງງານ ແລະ ການຈັດຫາງານ, ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ (MOLSW). ມາຮອດປີ 2022 ຂໍ້ມູນຂອງຄົນລາວທີ່ໄປອອກແຮງງານຢູ່ຕ່າງປະເທດ ເປັນຕົ້ນ ໄທ, ເກົາຫຼີໃຕ້ ແລະ ຍີ່ປຸ່ນ ແລະ 3 ປະເທດດັ່ງກ່າວແມ່ນໄດ້ມີການເຊັນສັນຍາເພື່ອສົ່ງຄົນລາວໄປອອກແຮງງານ. ເຊິ່ງຂໍ້ມູນໃນການແມ່ນຖືກເກັບກຳ ໂດຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເຊິ່ງແຍກປະເພດອອກເປັນ ປີ, ເພດ, ເສດຖະກິດ, ປະເພດຂໍ້ຕົກລົງການຮ່ວມມືທີ່ມີການເສັນສັນຍາຮອດປີ 2022. ຂໍ້ມູນການເຄື່ອນຍ້າຍແຮງງງານຂອງຄົນລາວທີ່ໄປໄທແມ່ນເລີ່ມແຕ່ປີ 2016, ເກົາຫຼີໃຕ້ 2018, ແລະ ຍີ່ປຸ່ນ 2020. ແລະ ການລົງນາມໃນການສົ່ງອອກຂອງແຮງງານໄປປະເທດມາເລເຊຍໃນປີ 2022 ແມ່ນຍັງບໍ່ທັນມີຂໍ້ມູນ. ຈຳນວນຂໍ້ມູນຂອງຄົນລາວຜູ່ທີ່ສະໝັກໄປເຮັດວຽກຢູ່ຕ່າງປະເທດສຸດທ້າຍຈຶ່ງພາໃຫ້ມີການຈ້າງງານພາຍໃນປະເທດຫຼຸດລົງ. ສຸດທ້າຍນີ້ຄົນລາວທີ່ເຄື່ອນຍ້າຍໄປອອກແຮງງານຢູ່

ປະເທດໄທທີ່ໄດ້ຖືກຜົນກະທົບບໍ່ໄປຕາມຄວາມເໝາະສົມ ແລະ ພວກເຂົາຍັງໄດ້ຮັບການອາໄພຍະໂທດ ແລະ ຖືກບັນທຶກໄວ້ໃນຖານຂໍ້ມູນ.

(ຮູບສະແດງທີ 15) ແມ່ນໄດ້ສະແດງຈຳນວນທັງໝົດຂອງຄົນລາວທີ່ໄປອອກແຮງງານໃນແຕ່ລະປີ ຕັ້ງແຕ່ປີ 2015 ຫາ 2022 ແລະ ຂໍ້ມູນແມ່ນໄດ້ແບ່ງອອກເປັນປີ ແລະ ເພດ, ຈຳນວນຕົວເລກຂອງຄົນລາວທີ່ເຄື່ອນຍ້າຍໄປອອກແຮງງານປົກກະຕິໃນປະເທດໄທມີທັງໝົດ 340,355 ຄົນ (ແລະຄິດໄລ່ລວມເປັນ 99,7%), ຍີ່ປຸ່ນ ແລະ ເກົາຫຼີໃຕ້.

**ຮູບສະແດງທີ 15. ການເຄື່ອນຍ້າຍຂອງແຮງງານລາວຢ່າງເປັນປົກກະຕິເຊິ່ງແບ່ງເປັນເພດ ແຕ່ປີ 2016-2022 (ຫົວໜ່ວຍໃນພັນ)**




***Source:* Author, based on data shared for this Migration Profile.**

*ແຫຼ່ງຂໍ້ມູນ: ລາຍລະອຽດຂອງຜູ້ຂຽນໂດຍອີງໃສ່ຂໍ້ມູນທີ່ໄດ້ມາຈາກ ໂຄງການ ການເຄື່ອນຍ້າຍຖິ່ນຖານ*

***ໝາຍເຫດ:*** *ຕົວເລກໃນປີ 2021 ແມ່ນຂ້ອນຂ້າງຕ່ຳເມື່ອທຽບໃສ່ປີອື່ນໆ (ຜູ້ອົບພະຍົບທີ່ເປັນເພດຍິງ 76 ຄົນ ແລະ ຜູ້ຊາຍ 169 ຄົນໄດ້ຖືກລົງທະບຽນ) ເນື່ອງຈາກຂໍ້ຈຳກັດການເຄື່ອນຍ້າຍຂອງ COVID-19. ຕົວເລກດັ່ງກ່າວລວມມີຄົນງານລາວທີ່ໄດ້ຂຶ້ນທະບຽນໄປເຮັດວຽກຢູ່ຕ່າງປະເທດ, ຢູ່ໄທ (ນັບແຕ່ປີ 2016), ສ.ເກົາຫຼີ (ແຕ່ປີ 2018), ຍີ່ປຸ່ນ ແລະ ມາເລເຊຍ (ນັບແຕ່ປີ 2022).*

- **ຄວາມຕ້ອງການຂອງແຮງງານລາວ**
- ຄົນລາວຜູ້ທີ່ມີຄວາມຕ້ອງການໃນການໄປອອກແຮງງານຢູ່ຕ່າງປະເທດຈະຕ້ອງໄດ້ໄປລົງທະບຽນກັບບໍລິສັດຈັດຫາງານ. ຫຼັງຈາກລົງທະບຽນແລ້ວ ຜູ້ສະໝັກຈະຕ້ອງເຂົ້າຮ່ວມການຝຶກອົບຮົມວິຊາຊີບ, ທັກສະການພັດທະນາສີມືແຮງງານກ່ອນການເດີນທາງ. ຂໍ້ມູນການຂອງຕົວເລກຂອງຜູ້ສະໝັກໃນການຝຶກອົບຮົມເພື່ອພັດທະນາສີມືແຮງງານແມ່ນຖືກຈັດໂດຍໜ່ວຍງານຈັດຫາງານ ເຊິ່ງຖືກແບ່ງປັນໂດຍ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ທີ່ຜ່ານພື້ນທີໂຄສະນາຕ່າງໆ. ໂດຍຂໍ້ມູນແມ່ນຖືກແບ່ງເປັນ ປີ, ເພດ, ແລະ ກິດຈະກຳຕ່າງໆ.
- ແຮງງານລາວຜູ້ທີ່ບໍ່ໄດ້ລົງທະບຽນໄປອອກແຮງງານຢູ່ຕ່າງປະເທດ ແມ່ນຈະຊອກວຽກເຮັດງານທຳໃນ ສປປ ລາວ. ແຮງງານຜູ້ທີ່ຕ້ອງການຮ້ອງວ່າແມ່ນແຮງງານຕ້ອງການເຄື່ອນຍ້າຍ, (ຮູບສະແດງ 16) ແມ່ນສະແດງ

ເຖິງຕົວແລກຂອງແຮງງານລາວທີ່ລົງທະບຽນກັບບໍລິສັດຈັດຫາງານ ເຊິ່ງມີການຊອກວຽກງານທັງພາຍໃນ ແລະ ຕ່າງປະເທດ ຕະຫຼອດຮອດຜູ້ເຂົ້າຮ່ວມການຝຶກອົບຮົມວິຊາຊີບຕັ້ງແຕ່ປີ 2011 ຫາ 2016. ການວິເຄາະຍັງສະແດງຂໍ້ມູນຕົວເລກການລົງທະບຽນຂອງແຮງງານລາວ ເຊິ່ງຕົວເລກແມ່ນຍັງຄົງທີ (ປະມານ 50,000 ໃນທຸກໆປີ) ແຕ່ປີ 2011 ຫາ 2015. ການລົງນາມບົດບັນທຶກຄວາມເຂົ້າໃຈໃນການໄປອອກແຮງງານຢູປະເທດໄທແມ່ນເພີ້ມຂຶ້ນ 6 ເທົ່າຂອງຜູ້ມາລົງທະບຽນ (277,439ຄົນ). ສັດສວ່ນຂອງຜູ້ຊອກວຽກເຮັດຢູ່ຕ່າງປະເທດແມ່ນມີການປ່ຽນແປງຕະຫຼອດເວລາ ເຊິ່ງບໍ່ມີຮູບແບບທີ່ຊັດເຈນ ເທົ່າກັບ 59% ໃນປີ 2011, 13% ໃນປີ 2012, 73% ໃນປີ 2015, ແລະ 43% ໃນປີ2016.

ຮູບສະແດງທີ 16. ຕົວເລກຂອງແຮງງານລາວທີ່ໄປອອກແຮງງານຢູ່ຕ່າງປະເທດ ໂດຍແບ່ງອອກເປັນ ອາຊີບ ແລະ ການເຂົ້າຮ່ວມຝຶກອົບຮົມ.(ຫົວໜ່ວຍ ພັນ)




*ແຫຼ່ງຂໍ້ມູນ: ລາຍລະອຽດຂອງຜູ້ຂຽນໂດຍອີງໃສ່ຂໍ້ມູນທີ່ໄດ້ມາຈາກ ໂຄງການ ການເຄື່ອນຍ້າຍຖິ່ນຖານ.*

### ❖ ການເຄື່ອນຍ້າຍຂອງແຮງງານລາວອອກໄປສູ່ ປະເທດໄທ

ການເຄື່ອນຍ້າຍແຮງງານລາວ ອອກໄປປະເທດໄທ ພາຍໃຕ້ກົດໝາຍວ່າດວ້ຍການຄຸ້ມຄອງການຈ້າງງານຂອງຄົນຕ່າງປະເທດໃນປີ 2560 ( ລັດຖະບານໄທ 2017) ໃນຂະບວນການຈັດຕັ້ງປະຕິບັດຂະບວນການຮ່ວມມືສັນຍາ (MOU) ໃນ (ມາດຕາ 3.1 ໃນກົດໝາຍ). ຄົນລາວທີ່ເຂົ້າມາເຮັດວຽກໃນປະເທດໄທແມ່ນມີ 2 ຊ່ອງທາງ ເປັນຕົ້ນ: ການຮ່ວມມືສັນຍາ (MOU), ແລະ ໜັງສືຜ່ານແດນ. ການເຄື່ອນຍ້າຍແຮງງທີ່ຢູ່ນອກລະບົບສາມາດປັບລະບົບໃນສະຫານະພາບໃຫ້ເປັນປົກະຕິໂດຍຜ່ານຂະບວນການຢັ້ງຢືນສັນຊາດ (NV) ເຊິ່ງຈັດໂດຍລັດຖະບານປະເທດໄທ.

ຂໍ້ມູນແມ່ນຖືກສັງລວມໂດຍ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ MOLSW ໃນໄລຍະປີ 2016 ຫາ 2022 ລາຍລະອຽດ ຮູບສະແດງ 17. ຂໍ້ມູນຂອງການເຄື່ອນຍ້າຍແຮງງານລາວພາຍໃຕ້ MOU ໂດຍອີງໃສ່ຄວາມເ ໝາະສົມທີ່ເປັນປົກະຕິໃນປະເທດໄທ. ການເຄື່ອນຍ້າຍຂອງແຮງງານລາວພາຍໃຕ້ MOU ແມ່ນມີຈຳນວນໜ້ອຍ ດຽວຂອງການລາວທັງໝົດທີ່ໄດ້ມີການເຄື່ອນຍ້າຍ, ຕົວເລກເປັນທາງການທີ່ມີການເຄື່ອນຍ້າຍ ເຊິ່ງລາຍງານໂດຍ ລັດຖະບານ  ສປປ ລາວ ແລະ ປະເທດໄທ ທີ່ສະທ້ອນເຖິງຈຳນວນແຮງງານລາວທີ່ຢູ່ພາຍໃນປະເທດໄທ ທີ່ບໍ່ໄດ້ມີ ການບັນທຶກຂໍ້ມູນເປັນສ່ວນຫຼາຍ. ຈຳນວນການເຄື່ອນຍ້າຍແຮງງານພາຍໃຕ້ MOU ໃນຊ່ວງເວລາທີ່ແຕກຕ່າງກັນ ຈາກການເຊັນສັນຍາ MOU ໃນປີ 2016 ຫາ 2018 ຕົວເລກໄດ້ມີການເພີ້ມຂຶ້ນຢ່າງຫຼວງຫຼາຍ. ໃນປີ 2016 ການ ເຄື່ອນຍ້າຍແຮງງານລາວໄປເທດໄທ ມີເຖິງ 20,613 ຄົນ (51% ແມ່ນເພດຍິງ), ໃນປີ 2018 ໄດ້ເພີ້ມຂຶ້ນ 89,857 ຄົນ (52% ແມ່ນເພດຍິງ). ຕັ້ງແຕ່ປີ 2019 ຕົວເລກການເຄື່ອນຍ້າຍໄດ້ມີການຫຼຸດລົງ (ໃນປີ 2020 ແມ່ນບໍ່ມີຂໍ້ມູນການເຄື່ອນຍ້າຍ ເນື່ອງຈາກໄດ້ມີການແຜ່ລະບາດຂອງພະຍາດ COVID-19). ໃນປີ 2022 ການ ເຄື່ອນຍ້າຍແຮງງານພາຍໃຕ້ MOU (58% ແມ່ນເພດຍິງ). 4 ອີງຕາມໜ່ວຍງານການຄຸ້ມຄອງແຮງງານຄົນ ຕ່າງປະເທດຂອງລັດຖະບານໄທ ໃນເດືອນກຸມພາ ປີ 2022 ໄດ້ມີການເຄື່ອນຍ້າຍແຮງງານລາວ 192,047 ຄົນ ພາຍໃຕ້ການເຊັນສັນຍາ MOU(ເຄືອຂ່າຍຂອງອົງການສະຫະປະຊາຊາດກ່ຽວກັບ ການເຄື່ອນຍ້າຍຖິ່ນຖານ, 2022).

**ຮູບສະແດງທີ 17. ແຮງງານລາວທີ່ຍ້າຍໄປປະເທດໄທ, ແຕ່ລະປີ, ປະເພດ (ພາຍໃຕ້ MOU ຫຼື ນະໂຍບາຍຂອງ ລັດ) ແລະ ເພດ, 2016-2022 (ເປັນພັນໆຄົນ)**




ແຫຼ່ງຂໍ້ມູນ:: ລາຍລະອຽດຂອງຜູ້ຂຽນໂດຍອີງໃສ່ຂໍ້ມູນທີ່ໄດ້ມາຈາກ ໂຄງການ ການເຄື່ອນຍ້າຍຖິ່ນຖານ

---

4 As of 2022, there were 84,494 MOU Lao migrants in Thailand (ILO, n.d.).

ໝາຍເຫດ: ເນື່ອງຈາກວ່າມາດຕະການຫຼຸດຜ່ອນ ການແຜ່ລະບາດພະຍາດ ໂຄວິດ 19, ເພາະສະນັ້ນ ຈຶ່ງບໍ່ມີການບັນທຶກການເຄື່ອນຍ້າຍໃດໆ ໃນ ປີ 2021.

ລັດຖະບານໄທ ໄດ້ມີການປັບຂະບວນການມາດຕະຖານການເຄື່ອນຍ້າຍແຮງງານຂະໜາດໃຫຍ່ທີ່ເລີ້ມແຕ່ປີ 2016, 2017, ແລະ 2018. ໄດ້ແມ່ນຫຼາຍແຜນດຳເນີນງານໃນການຈັດຕັ້ງປະຕິບັດໃນລະຫວ່າງປີ 2020 ຫາ 2022 ເພື່ອໃຫ້ເໝາະສົມຕໍ່ການເຄື່ອນຍ້າຍໃນການແຜ່ລະບາດຂອງພະຍາດ COVID-19. ແຜນງານສ່ວນໃຫຍ່ແມ່ນສ້າງຂຶ້ນໃຫ້ແກ່ການເຄື່ອນຍ້າຍແຮງງານຈາກ ສປປ ລາວ ຕະຫຼອດຮອດ ສ ຫວຽດນາມ, ແລະ ກຳປູເຈຍ ຂອງແຮງງານທີ່ມີໃບອານຸຍາດໃກ້ໝົດອາຍຸ ແລະ ໝົດອາຍຸ, ຫຼື ຜູ້ທີ່ເຄື່ອນຍ້າຍເຂົ້າມາອອກແຮງງານທີ່ບໍ່ມີໜັງສື ຫຼື ເຂົ້າມາແບບບໍປົກະຕິ ທີ່ບໍ່ສາມາດເກັບຂໍ້ມູນທີ່ແຍກປະເພດຂໍ້ມູນກ່ຽວກັບສັນຊາດ. ແຮງງານລາວຈຳນວນຫຼາຍທີ່ໄດ້ເຄື່ອນຍ້າຍໄປອອກແຮງງານຢູປະເທດໄທ ແມ່ນເຂົ້າມາແບບບໍປົກຕິ (ການເຂົ້າມາບໍ່ຖືກຕ້ອງ).

- ❖ **ການເຄື່ອນຍ້າຍແຮງງານລາວໄປປະເທດຍີ່ປຸ່ນ**

ໃນປີ 2017 ສປປ ລາວ ແລະ ປະເທດຍີ່ປຸ່ນໄດ້ມີການລົງນາມເຊັນສັນຍາຮ່ວມກັນໃນການສົ່ງແຮງງານ(ເບິ່ງລາຍລະອຽດໃນພາກທີ່ 3.1). ກະຊວງແຮງງານ ແລະ ສະຫວັດດີການສັງຄົມ MOLSW ໄດ້ມີການເກັບກຳຂໍ້ມູນຂອງຕົວເລກທີ່ລົງທະບຽນຝຶກອົບຮົມໃຫ້ຜູ້ທີ່ເຄື່ອນຍ້າຍໄປອອກແຮງງານໃນທຸກໆປີ ຕັ້ງແຕ່ 2015. ຮູບສະແດງທີ 18 ແມ່ນສະແດງທ່າອ່ຽງ ແລະ ແນວໂນ້ມໃນໄລຍະປີ 2016 ຫາ 2022 ເຊິ່ງແຍກອອກເປັນ ປີ ແລະ ເພດ. ຕົວເລກຂອງການເພີ້ມຂຶ້ນຂອງຜູ້ຝຶກອົບຮົມໃນການໄປອອກແຮງງານ ຕັ້ງແຕ່ປີ 2016 ຈາກ 55 ຄົນ (11% ແມ່ນເພດຍິງ) ມາເປັນ 227 ໃນປີ 2022 ( 27% ແມ່ນເພດຍິງ). ຜູ້ຝຶກອົບຮົມບາງຄົນ ແມ່ນຖືກສົ່ງໄປໃນຊ່ວງການແຜ່ລະບາດຂອງພະຍາດ COVID-19 (37% ເພດຍິງ);

**ຮູບສະແດງທີ 18. ການເຄື່ອນຍ້າຍແຮງງານລາວໄປປະເທດຍີ່ປຸ່ນ ເຊິ່ງແຍກເປັນປີ ແລະ ເພດ 2016–2022**



*Source:* Author's elaboration based on data shared for this Migration Profile.

### ❖ ການເຄື່ອນຍ້າຍຂອງແຮງງານລາວ ໄປເກົາຫຼີໃຕ້

ຂໍ້ຕົກລົງລະຫວ່າງ 2 ຝ່າຍໃນການຮ່ວມມືລະຫວ່າງ ເກົາຫຼີໃຕ້ ແລະ ສປປ ລາວ (ເບິ່ງໃນພາກທີ່ 3.1). ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ມີການເກັບກຳຂໍ້ມູນຂອງແຮງງານລາວທີ່ເຄື່ອນຍ້າຍໄປປະເທດເກົາຫຼີໃຕ້ ພາຍໃຕ້ການຮ່ວມມືລະບົບສັນຍາການຈ້າງງານ (ESP). ໃນລະຫວ່າງປີ 2018 ຫາ 2022 ໄດ້ມີຄົນລາວເຄື່ອນຍ້າຍໄປອອກແຮງງານທັງໝົດ 968 ຄົນພາຍໃຕ້ໂຄງການດັ່ງກ່າວ ເຊິ່ງ 20% ແມ່ນແຮງງານເພດຍິງ (ຮູບສະແດງ 19). ໃນປີ 2022, ໄດ້ມີຄົນລາວ 552 ຄົນໄດ້ມີການເຄື່ອນຍ້າຍໄປປະເທດເກົາຫຼີໃຕ້ (29% ແມ່ນເພດຍິງ).

ຮູບສະແດງທີ 19. ການເຄື່ອນຍ້າຍຂອງແຮງງານລາວໄປ ເກົາຫຼີໃຕ້ໂດຍແບ່ງຕາມ ປີ ແລະ ເພດ ໃນລະຫວ່າງປີ 2018–2022




ແຫຼ່ງຂໍ້ມູນ*:* Author's elaboration based on data shared for this Migration Profile.

### ❖ Emigration of Lao workers to the European Union

ກະຊວງແຮງງານ ແລະ ສະຫວັດດີການວັງຄົມ MOLSW ແມ່ນບໍ່ໄດ້ເກັບຂໍ້ມູນຂອງແຮງງານລາວທີ່ເຄື່ອນຍ້າຍໄປສະຫະພາບເອີຣົບ. ເຖິງຢ່າງໃດກໍ່ຕາມ, ຫ້ອງການສະຖິຕິ ສະຫະພາບເອີຣົບໄດ້ເກັບກຳຂໍ້ມູນໃນການອານຸຍາດໃຫ້ເຮັດວຽກຕາມສັນຊາດ. ໃນຈຳນວນການອອກໃບອານຸຍາດໃຫ້ຄົນລາວໃນການໄປເຮັດວຽກຢູ່ສະຫະພາບເອີຣົບໃນລະຫວ່າງປີ 2013 ຫາ 2020 (ໜ້ອຍກວ່າ 250 ຄົນ), ແລະ ສ່ວນຫຼາຍ (95%) ແມ່ນເຫດຜົນໃນການຈ້າງງານ (ນອກເໜືອຈາກບັດສີຟ້າທີ່ອອກໂດຍ ສະຫະພາບເອີຣົບ ໃນການເຄື່ອນຍ້າຍຖິ່ນຖານ), ການມີທັກສະສູງ, ການວິເຄາະຕາມລະດູການ (ຮູບສະແດງທີ 20).

### ຮູບສະແດງທີ 20. ການອອກໃບອານຸຍາດຂອງຄົນລາວໃນສະຫະພາບເອີຣົບ ໂດຍແບ່ງປະເພດຂອງການເຮັດວຽກ ໃນປະຊາກອນ 2013 ຫາ 2020




*Source:* Author's elaboration, based on Eurostat (n.d.b).
*Note:* The European Union Blue Card refers to the authorization bearing the term European Union Blue Card entitling its holder to reside and work in the territory of a member State under the terms of Council Directive 2009/50/EC (Article 2(c)). Two countries (Denmark and Ireland) do not have the European Union Blue Card and the United Kingdom for 2012–2019.

#### *1.2.4.* ການເຄື່ອນຍ້າຍເພື່ອການສຶກສາ

ອີງຕາມການເກັບກຳຂໍ້ມູນຂອງອົງການ UNESCO (2020), ໄດ້ມີຄົນລາວທີ່ໄດ້ອອກໄປສຶກສາຢູ່ຕ່າງປະເທດໃນປີ 2000 ມີ 1.256 ຄົນ ແລະ ໃນປີ 2020 ມີ 9.202 ຄົນ (ລາຍລະອຽດຮູບສະແດງທີ 21). ອັດຕາຂອງຄົນລາວທີ່ໄປສຶກສາຢູ່ຕ່າງປະເທດແມ່ນມີການຫຼຸດລົງໃນປີ 2000 ຫາ 2004 ຈາກ 9% ມາເປັນ 3%. ໃນປີ 2014 ຫາ 2020 ເຫັນວ່າມີການເພີ່ມຂຶ້ນມາເປັນ 10%.

### ຮູບສະແດງທີ 21. ອັດຕາສ່ວນຂອງນັກສຶກສາລາວທີ່ສຶກສາຢູ່ຕ່າງປະເທດໃນປີ 2000–2020 (ຫົວໜ່ວຍ%)




*ແຫຼ່ງຂໍ້ມູນ:ອີງໃສ່ກະຊວງສຶກສາ ແລະ ກິລາ* (UIS, n.d.).

ປະເທດປາຍທາງທີ່ຄົນລາວໄປສຶກສາຕໍ່ຢູ່ຕ່າງປະເທດ ເປັນຕົ້ນ ສ ຫວຽດນາມ, ໄທ, ອົດສຕາລີ, ຍີ່ປຸ່ນ ແລະ ລາສ ອານາຈັກອັງກິ (ຮູບສະແດງທີ 22).

### ຮູບສະແດງທີ 22. ປະເທດປາຍທາງທີ່ຄົນລາວເຂົ້າໄປສຶກສາຢູ່ຕ່າງປະເທດ, 2000–2019




*ແຫຼ່ງຂໍ້ມູນ:ອີງໃສ່ກະຊວງສຶກສາ ແລະ ກິລາ* (UIS, n.d.).

## 1.3. ການເຄື່ອນຍ້າຍຖິ່ນຖານບໍ່ປົກກະຕິ

ມາຮອດປັດຈຸບັນ, ຍັງບໍ່ທັນມີການຍອມຮັບໃນທົ່ວໂລກ ວ່າດ້ວຍຄຳນິຍາມກ່ຽວກັບການເຄື່ອນຍ້າຍຖິ່ນຖານແບບບໍ່ຖືກຕ້ອງຕາມກົດໝາຍໃນລະດັບສາກົນ. IOM (2019) ອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ ໄດ້ໃຫ້ຄຳນິຍາມວ່າ ການເຄື່ອນຍ້າຍຖິ່ນຖານແບບບໍ່ຖືກຕ້ອງຕາມກົດໝາຍແມ່ນການເຄື່ອນຍ້າຍບຸກຄົນທີ່ຢູ່ນອກກົດ

ໝາຍ, ລະບຽບ ຫຼື ຂໍ້ຕົກລົງລະຫວ່າງປະເທດທີ່ມີການຄຸ້ມຄອງເຂົ້າ-ອອກ ຂອງປະເທດຕົ້ນທາງ, ທາງຜ່ານ ແລະ ປາຍທາງ. ເຊິ່ງການເຄື່ອນຍ້າຍຖິ່ນຖານແບບບໍ່ປົກກະຕິນີ້ ທີ່ມີການຄາດຄະເນທີ່ຫຍຸ້ງຍາກຫຼາຍ.

### *1.3.1.* ການເຄື່ອນຍ້າຍຖິ່ນຖານເຂົ້າ ຂອງ ສ ປປ ລາວ ແບບບໍ່ປົກກະຕິ

ຕົວຊີ້ວັດຂອງການຄເື່ອນຍ້າຍຖິ່ນຖານແບບບໍ່ຖືກຕ້ອງຕາມກົດໝາຍ ມີຄວາມຫຼາກຫຼາຍ ແລະ ແຕກຕ່າງກັນໄປແຕ່ລະປະເທດ. ສໍາລັບ ສປປ ລາວ, ກະຊວງປ້ອງກັນຄວາມສະຫງົບແມ່ນເປັນຜູ້ເກັບກໍາຂໍ້ມູນກ່ຽວກັບການລັກລອບເຂົ້າເມືອງ ໂດຍໃຊ້ລະບົບການກວດກາTD&B ເຄື່ອງມືດັ່ງກ່າວແມ່ນຖືກສ້າງຂຶ້ນມາໃນການເກັບກໍາຂໍ້ມູນແຕ່ຍັງບໍ່ສາມາດເກັບຂໍ້ມູນໄດ້ຢ່າງລະອຽດກ່ຽວກັບເອກະສານໜັງສືເດີນທາງຂອງຄົນທີ່ມີຄະດີສໍ້ໂກງ ແລະ ການປອມຕົວ ທີ່ຖືກນໍາພາໃນການກວດສອບໂດຍ ສູນສະໜັບສະໜູນດ້ານການກວດເອກະສານ (DESC) ກັບຫ້ອງການປະສານງານ IOM ປະຈໍາພາກພື້ນ ແລະ ປາຊີຟິກ. ລະບົບ TD&B ແມ່ນຈະຊ່ວຍໃຫ້ຕໍາຫຼວດກວດຄົນເຂົ້າ-ອອກເມືອງ ແລະ ດ່ານຊາຍແດນ ສາມາດກວດສອບການປອມເອກະສານໜັງສືຜ່ານແດນ ແລະ ບັດປະຈໍາໂຕຂອງບຸກຄົນທີ່ເດີນທາງໄປ-ມາ ແລະ ລະບົບຍັງສາມາດສ້າງບົດລາຍງານເຕັກນິກວິຊາການທີ່ສາມາດເກັບກໍາຂໍ້ມູນ ແລະ ກວດສອບໄດ້. ຈຸດປະສົງໃນການລິເລີ່ມແມ່ນເພື່ອໃຫ້ລັດຖະບານນໍາໃຊ້ເຂົ້າໃນການຕ້ານອາດສະຍາກໍາຂ້າມຊາດ ແລະ ການກໍການຮ້າຍຂອງກຸ່ມບຸກຄົນໃດໜຶ່ງ ໂດຍຜ່ານການສ້າງຄວາມອາດສາມາດໃຫ້ອົງກອນພາກລັດນໍາໃຊ້ກົດໝາຍເຂົ້າໃສ່ໃນໜັງສືເດີນທາງ ແລະ ຢັ້ງຢືນຕົວຕົນ.

ລະບົບການກວດສອບTD&B ແມ່ນຖືກສ້າງຂຶ້ນໃນປີ 2015 ແລະ ຖືກຕິດຕັ້ງຢູ່ 3 ຈຸດໃນປະເທດລາວເປັນຕົ້ນ: (1) ສະໜາມບິນສາກົນຫຼວງພະບາງ, (2) ດ່ານສາກົນຂົວມິດຕະພາບລາວ-ໄທ ແຫ່ງທີ່ 1, ແລະ (3) ສະໜາມບິນສາກົນວັດໄຕ. ໃນລະຫວ່າງປີ 2015 ຫາ 2021 ໄດ້ມີເອກສານທີ່ຖືກສະແກນ 1,057 ເອກະສານ. ໄດ້ມີ 135 ກໍລະນີທີ່ຖືກລາຍງານ ( 13%ຂອງສັດສ່ວນທັງໝົດ), 46 ກໍລະນີແມ່ນຄະດີການສໍ້ໂກງ, ແລະ 89 ກໍລະນີແມ່ນຄະດີປອມແປງເອກະສານ. ເຊິ່ງປະເທດທີ່ຖືກກວດສອບພົບຫຼັກແມ່ນ ສປ ຈີນ, ອິນເດຍ, ມາເລເຊຍ, ປາກິດສະຖານ, ແລະ ມາເລເຊຍ. ເມື່ອເວລາຜ່ານໄປ ການກວດການເອກະສານແມ່ນບໍ່ມີຄວາມຈະແຈ້ງ ແລະ ຄວາມແຕກຕ່າງກັນໄປ ຈາກແຕ່ລະປີ ໂດຍຄວາມພະຍາຍາມການຄຸ້ມຄອງຂອງອົງການຄຸ້ມຄອງຊາຍແດນສາກົນ (IBM) ຕໍ່ກັບການເຄື່ອນຍ້າຍຖິ່ນຖານແບບບໍ່ປົກກະຕິ.

ໃນການເຂົ້າຮ່ວມການເກັບກໍາຂໍ້ມູນຂອງບາງປະເທດໃນອາຊີ ແລະ ປາຊີຟິກ ເຊິ່ງແບ່ງເປັນຂໍ້ມູນ ເປັນເພດ ແລະ ອາຍຸ. ເຖິງຢ່າງໃດກໍ່ຕາມ, ບໍ່ແມ່ນແຕ່ກໍລະນີຂອງ ສປປ ລາວ ໃນການສ້າງບົດລາຍງານເຄື່ອນຍ້າຍຖິ່ນຖານ.

### *1.3.2. ການເຄື່ອນຍ້າຍຖິ່ນຖານແບບບໍ່ປົກກະຕິຂອງຄົນລາວ*

ການສັງລວມຂໍ້ມູນຂອງການເຄື່ອນຍ້າຍບໍ່ປົກກະຕິຂອງຄົນລາວທີ່ຍັງບໍ່ທັນໄດ້ຖືກຂຽນໃສ່ໃນບົດລາຍງານການເຄື່ອນຍ້າຍຖິ່ນຖານ  ແຕ່ວ່າບັນດາຕົວຊີວັດທີ່ບົ່ງບອກກ່ຽວກັບການເຄື່ອນຍ້າຍຖິ່ນຖານແບບບໍ່ປົກກະຕິທີ່ບໍ່ມີໜັງສືກ່ຽວກັບການເຄື່ອນຍ້າຍຖິ່ນຖານໄປປະເທດໄທ.

### ❖ ການເຄື່ອນຍ້າຍຖິ່ນຖານໄປປະເທດໄທ ແບບປົກກະຕິ

ຮູບສະແດງຕົວເລກຂອງການເຄື່ອນຍ້າຍແບບບໍ່ຖືກຕ້ອງຕາມກົດໝາຍຈາກ ສປປ ລາວ ໄປຫາ ປະເທດໄທ ແລະ ຈຳນວນຄົນລາວທີ່ມີການເຄື່ອນຍ້າຍຖິ່ນຖານໄປຫາປະເທດໄທສະພາບບໍ່ປົກກະຕິຈາກການເຄື່ອນຍ້າຍບ່ອນໜຶ່ງໄປຫາບ່ອນໜຶ່ງ. ເຖິງຢ່າງໃດກໍ່ຕາມ, ໄດ້ມີຄວາມສອດຄ່ອງທີ່ບໍ່ເປັນປົກກະຕິທີ່ເກີດຂຶ້ນເຖິງລະດັບຄວາມສຳຄັນທີ່ປະກົດຂຶ້ນ ເຊິ່ງ ການຄາດຄະເນຕົວຊີ້ວັດທີ່ສຳຄັນຂອງແຮງງານລາວໃນ ປະເທດໄທ ທີ່ບໍ່ມີ MOU.ສຳລັບປີ 2017 ການສຶກສາ (Harkins et al., 2017) ໄດ້ສະແດງວ່າ 48% ໃນການສຳຫຼວດການເຄື່ອນຍ້າຍຖິ່ນຖານຈາກ ກຳປູເຈຍ, ສປປ ລາວ, ມຽນມ້າ, ສ ຫວຽດນາມ, ໃນການຖືໜັງສືທີ່ຖືກກົດໝາຍໃນການເຮັດວຽກຂອງພວກເຂົາໃນປະເທດໄທ. ນອກຈາກນີ້, ການຈົດທະບຽນ ແລະ ການກວດສອບສັນຊາດໃນປະເທດໄທ ເຫັນວ່າຕົວເລກແຮງງານລາວແມ່ນບໍ່ມີເອກະສານດັ່ງກ່ວ. ໃນທີ່ສຸດ, ການລົງເກັບກຳຂໍ້ມູນໃນ ເດືອນຕຸລາ 2022 ການສຳພາດເກັບກຳຂໍ້ມູນ FGDs ຈາກຜູ້ເຂົ້າຮ່ວມທີ່ເຄີຍໄປອອກແຮງງານຢຸ່ປະເທດໄທ ເຫັນວ່າຄົນລາວການເຂົ້າໄປປະເທດໄປແມ່ນຖືກຕ້ອງຕາມກົດໝາຍ ແຕ່ການເຮັດວຽກພາຍໃນປະເທດຍັງບໍ່ເປັນປົກກະຕິ.[5] ເຖິງຢ່າງໃດກໍ່ຕາມ, ຜົນຂອງການຄົ້ນຄວ້າຍັງສະແດງການໃຫ້ຂໍ້ມູນທີ່ຍັງສັບສົນຂອງຜູ້ເຂົ້າຮ່ວມສຳພາດ ແລະ ຄະນະບ້ານ. ເຊິ່ງສວ່ນຫຼາຍແລ້ວ, ຜູ້ໃຫ້ຂໍ້ມູນທີ່ບໍ່ສົນໃຈໃນການແຍກຄວາມແຕກຕ່າງໃນການເຄື່ອນຍ້າຍເປັນປົກກະຕິ ແລະ ບໍ່ປົກກະຕິ, ແລະ ບໍ່ສົນໃຈວ່າດານໄປເຮັດວຽກຢູ່ປະເທດໄທທີ່ຖືກກົດໝາຍຫຼືບໍ່.

### ❖ ການເຄື່ອນຍ້າຍຖິ່ນຖານໄປປະເທດອື່ນ ແບບບໍ່ປົກກະຕິ

ການຄາດຄະເນຂອງການເຄື່ອນຍ້າຍຖິ່ນຖານແບບບໍ່ປົກກະຕິຂອງຄົນລາວໄປສູ່ຫຼາຍປະເທດທີ່ຍັງມີຄວາມຂາດແຄນ. ການສັງເກດຂອງທີມງານ ITWG ເຫັນໄດ້ວ່າການເຄື່ອນຍ້າຍຖິ່ນຖານຂອງຄົນລາວໄປອອກແຮງງານໃນປະເທດມາເລເຊຍ ຍັງແມ່ນການເຄື່ນຍ້າຍຖິ່ນຖານແບບບໍ່ປົກກະຕິ.[6]

### *1.3.3.* ການລັກລອບ ແລະ ການຄ້າມະນຸດຂ້າມຊາດ

ໃນບັນດາປະເທດລຸ່ມແມ່ນ້ຳຂອງ GMS, ເຫັນວ່າການລັກລອບ ແລະ ການຄ້າມະນຸດແມ່ນຈະຕິດພັນກັບການເຄື່ອນຍ້າຍແຮງງານ ຈາກການໃຫ້ຂໍ້ມູນຂອງ ຫ້ອງການວ່າດ້ວຍຢາເສບຕິດ ແລະ ອາດສະຍາກຳຂອງສະຫາປະຊາຊາດ (2017), ເຫັນວ່າການເຄື່ອນຍ້າຍຖິ່ນຖານທີ່ບໍ່ມີໜັງສືແມ່ນມີຄວາມສ່ຽງຕໍ່ກັບການຄ້າມະນຸດເປັນພິເສດ. ເນື່ອງຈາກມີຄວາມສັບສົນ ແລະ ຄວາມລະອຽດອ່ອນຫຼາຍໃນການກຳນົດກ່ຽວກັບຜູ້ເຄາະຮ້າຍແມ່ນມີຄວາມຫຍຸ້ງຍາກ. ບາງຫຼັກຖານຍັງໄດ້ສະແດງໃຫ້ເຫັນທີມງານໃນການຄ້າມະນຸດ ແລະ ຜູ້ທີ່ຖືກເຄາະຮ້າຍ ທັງພາຍໃນ ແລະ ຕ່າງປະເທດ, ແລະ ຄົນລາວແມ່ນຍັງຕົກເປັນເຫື່ຍອຕໍ່ກັບການຄ້າມະນຸດ. ອີງຕາມການລາຍງານຂອງກະຊວງການ

---

[5] See Annex I.

[6] An MOU shall be signed between the Lao People's Democratic Republic and Malaysia in 2023.

ຕ່າງປະເທດຂອງສະຫະລັດອາເມຣິກາ (2021), ເຫັນວ່າປະເທດທີ່ມີການຄ້າມະນຸດສ່ວນຫຼາຍແມ່ນ ສປ ຈີນ ແລະ ໄທ ເຊິ່ງຈະໜ້ອຍກ່ວາ ສ ຫວຽດນາມ ແລະ ມະເລເຊຍ.

❖ **ການລັກລອບ ແລະ ການຄ້າມະນຸດຂອງຄົນລາວທີ່ຢູ່ຕ່າງປະເທດ**

ປະຊາກອນລາວແມ່ນມີ 2 ກຸ່ມສ່ຽງຫຼັກໃນການເຄື່ອນຍ້າຍຖິ່ນຖານ (USAID, 2022):

- ໃນຊົນນະບົດແລ້ວສ່ວນໃຫຍ່ແມ່ນແຮງງານທີ່ເຮັດກະສິກຳ ແລະ ເປັນແຮງງານທີ່ບໍ່ມີສີມື ເຊິ່ງພວກເຂົາແມ່ນມີຄວາມສ່ຽງທຜົນກະທົບທາງດ້ານເສດຖະກິດ, ໄພແຫ້ງແລ້ງ ແລະ ການເຄື່ອນຍ້າຍຖິ່ນຖານແມ່ນເກີດຈາກຂໍ້ລິເລີ່ມໃນໂຄງການໜຶ່ງແລວໜຶ່ງເສັ້ນທາງ.
- ຄົນທີ່ມີລາຍຮັບປານກາງໃນຕົວເມືອງແມ່ນມີໂອກາດໃນການເຄື່ອນຍ້າຍໄປຢູ່ບ່ອນອື່ນ. ຜູ້ຄົນເຫຼົ່ານີ້ແມ່ນຍັງໄດ້ຊອກຫາໂອກາດໃນການຈ້າງງານ ແຕ່ວ່າເຂົາຍັງຂາດຂໍ້ມູນຂ່າວສານ ຫຼື ຄວາມຮູ້ກ່ຽວກັບການເຄື່ອນຍ້າຍຖິ່ນຖານທີ່ປອດໄພ ເພື່ອຫຼີກລ້ຽງຕໍ່ກັບການຄ້າ

ທັງສອງກຸ່ມນີ້ແມ່ນຢູ່ໃກ້ຊາຍແດນ ລາວ-ຈີນ ແລະ ຍັງຕ້ອງໄດ້ປະເຊີນກັບຄວາມບໍ່ເທົ່າທຽມກັນທາງເພດໃນລະດັບສູງ. ຫຼັກຖານບາງອັນຍັງສະແດງໃຫ້ເຫັນແຮງງານທີ່ຢູໃນຊົນນະບົດແມ່ນຍັງຕ້ອງການຢາກແຕ່ງງານກັບຄົນຈີນ (USAID, 2022; Alliance Anti-Traffic and ECPAT International, 2019), ໃນຂະນະຜູ້ທີ່ກຳລັງຊອກຫາວຽກເຮັດງານທຳ ຢູ່ຕ່າງປະເທດແມ່ນມີຄວາມສ່ຽງຕໍ່ກັບການຄ້າມະນຸດທາງນອກ. (United States Department of State, 2021; IOM, 2021a).

ຫຼັກຖານຍັງຊີ້ໃຫ້ເຫັນວ່າຄົນລາວທີ່ຕົກໄປເປັນເຫຍື່ອຂອງການຄ້າມະນຸດແມ່ນໄດ້ຖືກຊ່ວຍເຫຼືອຈາກນາຍໜ້າທີ່ຖືກກົດໝາຍ ແລະ ບໍ່ຖືກກົດໝາຍໂດຍການຄິດຄ່າທຳນຽມ ແລະ ໃນຂະນະທີ່ຜູ້ເຄື່ອນຍ້າຍຄົນອື່ນແມ່ນມີການເຄືອນຍ້ານຢ່າງອິດສະຫຼະ ແລະ ເປັນປົກະຕິ(United States Department of State, 2020). ດ່ານຊາຍແດນສ່ວນຫຼາຍແມ່ນຄຸ້ມຄອງກວດຄົນເຂົ້າເມືອງແມ່ນຂັ້ນແຂວງ ແລະ ຂັ້ນເມືອງ ໂດຍມີການຈັດຝຶກອົບຮົມແບບບໍ່ເປັນທາງການໜ້ອຍລົງ ແລະ ຍັງມີການດຳເນີນງານຫຼາຍຂອງບຸກຄົນທີ່ຕ້ອງການຄົນລາວໄປເປັນເຫຍື່ແຂອງການຄ້າມະນຸດໃນປະເທດເພື່ອນບ້ານ. ພໍ່ຄ້າຄົນກາງ ໃນ ສປປ ລາວ ແມ່ນມີສ່ວນຮ່ວມໃນການຄ້າມະນຸດຫຼາຍຂຶ້ນເຊັ່ນດຽວກັນ. ພວກເຂົາໄດ້ດຶງດູດຄົນຮູ້ຈັກ ແລະ ຍາດພີ່ນ້ອງ ໃນການໃຫ້ສັນຍາທີ່ບໍ່ຖືກຕ້ອງຕໍ່ກັບໂອກາດໃນການເຮັດວຽກທີ່ຖືກຕ້ອງຕາມກົດໝາຍ ຫຼື ສັນຍາໃນປະເທດເພື່ອນບ້ານ ແລະ ເຮັດໃຫ້ພວກເຂົາຕົກເປັນເຫຍື່ອຂອງການຄ້າມະນຸດທາງເພດ ແລະ ແຮງງານ. (United States Department of State, 2020).

ຈາກການເບິ່ງທາງດ້ານບົດບາດຍິງ-ຊາຍ ເຊິ່ງຫຼັກຖານຍັງສະແດງໃຫ້ເຫັນວ່າແມ່ນຍິງລາວ ຫຼື ເດັກນ້ອຍຜູ້ຍິງ ແມ່ນຖືກຂູດຮີດຫຼາຍໃນປະເທດໄທ ໂດຍການຄ້າທາງດ້ານເພດສຳພັນ ແລະ ການບັງຄັບໃນການໃຊ້ແຮງງານໃນການບໍລິການພາຍໃນບ້ານ, ໂຮງງານ ຫຼື ໃນເຂດກະສິກຳ. ການຄ້າມະນຸດແມ່ນຍັງຖືກຂູດຮີດຈາກການແຕ່ງງານໃນ ສປ

ຈີນ ໂດຍການຄ້າມະນຸດທາງເພດ ແລະ ບໍລິການຮັບໃຊ້ພາຍໃນະເທດ. ໂດຍທົ່ວໄປແລ້ວຜູ້ຊາຍລາວ ຫຼື ເດັກນ້ອຍຜູ້ຊາຍ ທີ່ຖືກເຄາະຮ້າຍຈາກການຄ້າມະນຸດ ແມ່ນຖືກບັງຄັບໃນການໄປອອກແຮງງານຢູ່ ອຸດສາຫະກໍາການປະມົງ, ກໍ່ສ້າງ, ແລະ ກະສິກໍາ. (United States Department of State, 2021).

ການຄາດຄະເນຕົວເລກຂອງຄົນລາວໃນການຖືກຄ້າມະນຸດແມ່ນມີໜ້ອຍຫຼາຍ ເຊິ່ງຂໍ້ມູນແມ່ນຖືກເກັບກໍາໂດຍກອງເລຂາຄະນະຕ້ານການຄ້າມະນຸດແຫ່ງຊາດລາວ, ກະຊວງປ້ອງກັນຄວາມສະຫງົບ(MOPS). ຕາຕະລາງທີ່ 1 ແມ່ນຖືກເກັບກໍາຂໍ້ມູນໃນລະຫວ່າງປີ 2016 ຫາ 2021, ຂໍ້ມູນຢ່າງເປັນທາງການຂອງລັດຖະບານໃນປີ 2021 ໂດຍການລາຍງານຂອງກອງເລຂາຕ້ານການຄ້າມະນຸດແຫ່ງຊາດໄດ້ມີການສອບສວນກ່ຽວກັບຄະດີຂອງການຄ້າມະນຸດໄດ້ 39 ຄະດີ ໃນປີ 2021. ໃນນັ້ນ, 25 ຄົນແມ່ນຖືກຄະດີກ່ຽວກັບການຄ້າມະນຸດ. ອົງການໄອຍະການປະຊາຊົນສູງສຸດ ໄດ້ດໍາເນີນຄະດີ 21 ຄະດີ ໃນ 25 ຄະດີ ແລະ ລົງໂທດຜູ້ຄ້າມະນຸດ 10 ຄົນ ທີ່ຕ່າງຈາກປີກ່ອນໆ ເຊິ່ງກະຊວງປ້ອງກັນຄວາມສະຫງົບບໍ່ໄດ້ມີການລົງໂທດຕາມປະເພດຂອງການຄ້າມະນຸດ. ຕົວຢ່າງ ໃນປີ 2020 ໄດ້ມີ 21 ຄະດີ ແລະ 10 ຄະດີແມ່ນການຄະດີການຄ້າມະນຸດ. ຄະດີທີ່ຖືກຕັດສິນ 21 ຄະດີແມ່ນການຄ້າມະນຸດທາງເພດ, 39 ຄະດີແມ່ນການຄ້າມະນຸກທາງດ້ານແຮງງານ, 66 ຄະດີແມ່ນການຄ້າມະນຸດໂດຍການຫຼອກຫຼວງເພື່ອການແຕ່ງງານ, ແລະ 16 ຄະດີແມ່ນການຄ້າມະນຸດໃນຮູບແບບອື່ນໆ. ທັງໝົດແມ່ນພົນລະເມືອງລາວ ແລະ ສ່ວນໃຫ່ຍແມ່ນຖືກໄປຄ້າມະນຸດຢູ່ປະເທດ ຈີນ ແລະ ໄທ.

**ຕາຕະລາງ 1 ກໍລະນີການຄ້າມະນຸດ, 2016 – 2021**

| Year | Number of incidents | Number of trafficking cases | Number of prosecutions | Number of conviction cases |
|---|---|---|---|---|
| **2016** | N/A | N/A | 11 | 6 |
| **2017** | 69 | 44 | 13 | 8 |
| **2018** | 39 | 12 | 12 | 11 |
| **2019** | 32 | 14 | 14 | 12 |
| **2020** | 21 | 10 | N/A | 5 |
| **2021** | 39 | 25 | 21 | 7 |

*ແຫຼ່ງຂໍ້ມູນ:* United States Department of State 2018, 2019, 2020, 2021 and 2022.
*Note:* N/A = not available.

ບາງອົງການຈັດຕັ້ງສາກົນ ແມ່ນໄດ້ສ້າງຖານຂໍ້ມູນທີ່ບໍ່ເປັນທາງການເຊັ່ນດຽວກັນ. ນີ້ແມ່ນກໍລະນີ ຂອງທ້າວ ແສງສະຫວັນ ໃນການຊ່ວຍເຫຼືອຜູ້ເຄາະຮ້າຍຈາກການຄ້າມະນຸດ ແລະ ເດັກນ້ອຍຜູ້ຍິງທີ່ມີຄວາມສ່ຽງໃນການຄ້າມະນຸດ ແລະ ການຂູດຮີດທາງເພດຢູ່ພາຍໃນປະເທດ ທີ່ມີການຮ່ວມມືກັບລັດຖະບານ. ອົງການຈັດຕັ້ງຫຼັກໃນການເຮັດກິດຈະກໍາແມ່ນແຂວງສະຫວັນນາເຂດ ແລະ ມີການລາຍງານທຸກໆປີຂອງຜູ້ທີ່ໄດ້ຮັບຜົນກະທົບ.

- **ການລັກລອບ ແລະ ການຄ້າມະນຸດຂອງຄົນຕ່າງປະເທດໃນ ສປປ ລາວ.**

ການຄ້າມະນຸດຂອງຄົນຕ່າງປະເທດໃນ ສປປ ລາວ ເຊິ່ງຂໍ້ມູນແມ່ນມີແນວໂນ້ມຍັງບໍ່ທັນຄົບຖ້ວນ ແລະ ຖືກອ້າງອີງຈາກຜູ້ລາຍງານ. ເຖິງຢ່າງໃດກໍ່ຕາມ,. ພວກເຂົາຍັງບໍ່ສາມາດແນະນຳໃນການຕັດສິນໃຈ ຂອງບໍລິສັດຈັດຫາງານໃນການເຂົ້າຕອບສະໜອງຊ່ວຍເຫຼືອຂອງຜູ້ອອກແຮງງານທີ່ຖືກກົດຂີ່ຂູດຮີດ ຫຼື ການເກັບຄ່າທຳນຽມຫຼາຍເກີນໄປຈຶ່ງພາໃຫ້ຜູ້ອອກແຮງງານເປັນໜີ້ສິນ. (United States Department of State, 2021).

ຫຼັກຖານແມ່ນຍັງໄດ້ສະແດງໃຫ້ເຫັນວ່າເຂດເສດຖະກິດພິເສດ ແມ່ນສູນກາງຂອງການຄ້າປະເພນີຂອງບັນດາປະເທດບ້ານໃກ້ເຮືອນຄຽງ (Crispin and Thompstone, 2011), ຕະຫຼອດຮອດການເຄື່ອນຍ້າຍແຮງງານໃນໂຄງການຂະໜາດໃຫຍ່ເປັນຕົ້ນ: ໂຄງການພື້ນຖານໂຄງລາງ, ບໍ່ແຮ່, ແລະ ກະສິກຳ. ອີງຕາມການລາຍງານຂອງການຄ້າມະນຸດຂອງ (United States Department of State, 2021) ເຫັນວ່າເຂດເສດຖະກິດພິເສດແມ່ນມີຄວາມສ່ຽງຫຼາຍໃນການຄ້າມະນຸດໂດຍສະເພາະໃນເຂດເສດຖະກິດພິເສດບໍ່ເຕັນ ແລະ ເຂດເສດຖະກິດພິເສດສາມຫຼ່ຽມຄຳ. ຕົວຢ່າງ: ແຮງງານຄົນຫວຽດນາມສ່ວນຫຼາຍແມ່ນຈະໄປເຮັດວຽກໃນແຮງງານກໍ່ສ້າງ, ກະສິກຳ, ບໍ່ແຮ່ ແລະ ການຜະລິດ, ໃນຂະນະແມ່ຍິງຄົນຫວຽດນາມ ແລະ ເດັກນ້ອຍຍິງ ແມ່ນຖືກຂູດຮີດຄ້າປະເພນີໃຫ້ກັບຜູ້ປະກອບການທຸລະກິດຕາມຊາຍແດນ ລາວ-ຫວຽດນາມ.

ນອກຈາກນີ້, ໃນປີ 2018 ໄດ້ມີການລາຍງານການຂົນສົ່ງແຮງງານຜິດກົດໝາຍຈາກ ສປ ຈີນ ແລະ ຫວຽດນາມໄປ ສປປ ລາວ ເພື່ອເຮັດວຽກໃນໂຄງການຂະໜາດໃຫຍ່ ເປັນຕົ້ນ: ໂຄ່ງລ່າວພື້ນຖານ, ບໍ່ແຮ່, ແລະ ກະສິກຳ ເຊິ່ງບາງສ່ວນແມ່ນມີຄວາມສ່ຽງໃນການຖືກຄ້າມະນຸດ (United States Department of State, 2019).

ສປປ ລາວ ແມ່ນປະເທດທາງຜ່ານສຳລັບຜູ້ເຄາະຮ້າຍຈາກ ຫວຽດນາມ, ຈີນ, ແລະ ມຽນມ້າ ທີ່ຖືກຄ້າປະເພນີ ຫຼື ຖືກບັງຄັບໃນການໃຊ້ແຮງງານຢູ່ປະເທດໄທ.

- **ຄວາມພະຍາຍາມຂອງລັດຖະບານ**

ການຈັດລຳດັບຂອງການລາຍງານການຄ້າມະນຸດຂອງກະຊວງການຕ່າງປະເທດ, ສະຫະລັດອາເມຣິກາຈາກ ອັນດັບ 3 ໃນປີ 2018 ມາເປັນ ອັນດັບ 2 ໃນປີ 2019 ແລະ ມາເປັນອັນດັບ 2 ຕັ້ງແຕ່ປີ 2022. ເຊິ່ງ 3 ປະເທດ ກຳປູເຈຍ, ໄທ, ແລະ ຫວຽດນາມ ແມ່ນຢູ່ໃນລາຍຊື່ປະເທດສັງເກດການ ແລະ ອັນດັບ 2 ແມ່ນຖືກສັງເກດການໃນປີ 2021 ແລະ ອັນດັບ 3 ແມ່ນມຽນມ້າ ແລະ ສປ ຈີນ. ການຈັດອັນດັບແມ່ນອີງຕາມຄວາມພະຍາຍາມຂອງລັດຖະບານໃນການລຶບລ້າງການຄ້າມະນຸດ, ບໍ່ແມ່ນການແກ້ໄຂການຄ້າມະນຸດພາຍໃນປະເທດ.[7]

ອີງຕາມການລາຍງານຂອງກະຊວງການຕ່າງປະເທດ, ສະຫະລັດອາເມຣິກາ, ເຫັນວ່າລັດຖະບານແຫ່ງ ສປປ ລາວ ໄດ້ສະແດງຄວາມພະຍາຍາມໃນການລວມລວມກ່ຽວກັບການຄ້າມະນຸດ ເປັນຕົ້ນ: ການປົກປ້ອງສິດຂອງແຮງງານ

[7] Under the Trafficking Victims Protection Act of 2000, Tier 3 countries are subject to potential restrictions on certain types of United States foreign aid and other United States and multilateral funds.

ລາວໄປຕ່າງປະເທດ, ລວມທັງການຊອກວຽກເຮັດງານທຳພາຍໃນປະເທດ. ລັດຖະບານ ສປປ ລາວ ແມ່ນໄດ້ມີການຮ່ວມມືກັບ ສປ ຈີນ, ໄທ, ແລະ ຫວຽດນາມ ຕາມສັນຍາ 2 ຝ່າຍທີ່ມີຢູ່ແລ້ວກ່ຽວກັບການແບ່ງປັນຂໍ້ມູນຂ່າວສານ, ການສືບສວນ ແລະ ດຳເນີນຄະດີ, ການສົ່ງຜູ້ເຄາະຮ້າຍກັບຄືນປະເທດ. ນອກຈາກນັ້ນ, ຍັງໄດ້ປັບປຸງກົດໝາຍອາຍາ ມາດຕາ 215 ຕໍ່ຜູ້ເຮັດຜິດກ່ຽວກັບການຄ້າປະເວນີ ແລະ ການຄ້າແຮງງານຜິດກົດໝາຍ.

## 1.4. ການເຄື່ອນຍ້າຍຖິ່ນຖານພາຍໃນປະເທດ

ການເຄື່ອນຍ້າຍຖິ່ນຖານຢູ່ໃນ ສປປ ລາວ ແມ່ນຖືກກວດພົບໃນຫຼາຍຮູບແບບ ແລະ ໃຊ້ຫຼັກການໃນການວັດແທກໂດຍອີງໃສ່ຂໍ້ມູນການສຳຫຼວດພົນລະເມືອງ ແລະ ປະຊາກອນ PHC ເຊິ່ງການເຄື່ອນຍ້າຍຖິ່ນຖານພາຍໃນປະເທດໄດ້ແບ່ງອອກເປັນ ສາມ ປະເພດ ດັ່ງນີ້:

- ກຸ່ມຜູ້ທີ່ຍ້າຍຖິ່ນຖານຕະຫຼອດຊີວິດ ແມ່ນກຸ່ມຜູ້ທີ່ກຳລັງອາໄສຢູ່ສະຖານທີ່ໃດໜຶ່ງເປັນປົກກະຕິໃນປັດຈຸບັນແຕ່ບໍ່ແມ່ນສະຖານທີ່ເກີດຂອງເຂົາເຈົ້າ ເຊິ່ງອາດມີການຍ້າຍທີ່ຢູ່ອາໄສ ຫຼາຍກວ່າໜຶ່ງຄັ້ງ.
- ກຸ່ມຜູ້ທີ່ຍ້າຍຖິ່ນຖານປັດຈຸບັນ ແມ່ນກຸ່ມຜູ້ທີ່ກຳລັງອາໄສຢູ່ສະຖານທີ່ ທີ່ບໍ່ແມ່ນສະຖານທີ່ເກີດຂອງຕົນເອງໃນຊ່ວງໄລຍະ 5 ປີທີ່ຜ່ານ ຫຼື ເປັນພົນລະເມືອງຢູ່ສະຖານຢູ່ນັ້ນ (ໄດ້ 10 ປີຜ່ານມາແລ້ວ).
- ກຸ່ມຜູ້ທີ່ຍ້າຍກັບຄືນຖິ່ນຖານ ແມ່ນກຸ່ມຜູ້ທີ່ອາໄສຢູ່ສະຖານທີ່ກ່ອນໜ້ານີ້ (5 ຫຼື 10 ປີ) ທີ່ບໍ່ແມ່ນສະຖານທີ່ເກີດຂອງເຂົາເຈົ້າ ແຕ່ວ່າສະຖານປັດຈຸບັນທີ່ກຳລັງອາໄສຢູ່ເປັນປົກກະຕິແມ່ນສະຖານທີ່ເກີດ ຫຼື ແມ່ນສະຖານທີ່ອາໄສຢູ່ກ່ອນໜ້ານີ້.

### *1.4.1.* ການຍົກຍ້າຍຖິ່ນຖານຕະຫຼອດຊີວິດ

ການໃຫ້ຄຳນິຍາມຂອງ ການຍ້າຍຖິ່ນຖານຕະຫລອດຊີວິດທີ່ບໍ່ໄດ້ອີງໃສ່ກອບໄລຍະເວລານັ້ນ ແມ່ນບໍ່ສາມາດນຳໃຊ້ໄດ້ກັບທ່າອ່ຽງໃນການເຄື່ອນຍ້າຍຖິ່ນຖານປັດຈຸບັນ ເຖິງແມ່ນວ່າຈະມີຂໍ້ມູນກ່ຽວກັບຈຳນວນ ແລະ ປະຫວັດຂອງຜູ້ທີ່ເຄື່ອນຍ້າຍຖິ່ນຖານຈາກບ້ານເກີດກໍ່ຕາມ. ຂໍ້ມູນໃນປີ 2015 ໄດ້ມີການລາຍງານວ່າ ຮ້ອຍລະ 17 ຂອງປະຊາກອນທັງໝົດທີ່ອາໄສຢູ່ເມືອງນັ້ນບໍ່ແມ່ນສະຖານທີ່ເກີດຂອງຕົນເອງ ເຊິ່ງສາມາດສັງເກດໄດ້ຈາກຄວາມແຕກຕ່າງຂອງປະຊາກອນທີ່ອາໄສຢູ່ແຕ່ລະແຂວງເຊັ່ນ ແຂວງສາລະວັນ (ຮ້ອຍລະ 8), ແຂວງສະຫວັນນະເຂດ (ຮ້ອຍລະ 8), ແລະ ແຂວງຫົວພັນ (ຮ້ອຍລະ 8) ເຊິ່ງປະຊາກອນໃນບັນດາແຂວງເຫຼົ່ານີ້ແມ່ນມີການເຄື່ອນຍ້າຍຖິ່ນຖານນ້ອຍກວ່າໂດຍຄ່າສະເລ່ຍໃສ່ປະຊາກອນທັງປະເທດ ໃນຂະນະທີ່ຜູ້ທີ່ອາໄສຢູ່ນະຄອນຫຼວງວຽງຈັນ (ຮ້ອຍລະ 38) ແລະ ແຂວງວຽງຈັນ (ຮ້ອຍລະ 27) ແມ່ນມີການເຄື່ອນຍ້າຍຖິ່ຍຖານຫຼາຍທີ່ສຸດ.[8]

[8] Xaysomboun province has a specific history. The high proportion (37.3%) of lifetime migrants observed in the province is most likely spurious, as districts that presently comprise this province used to be part of other provinces.

ຄວາມແຕກຕ່າງທາງເພດກໍ່ເປັນສິ່ງທີ່ສາມາດສັງເກດໄດ້ ເຊິ່ງເພດຍິງແມ່ນມີການເຄື່ອນຍ້າຍຖິ່ນຖານນ້ອຍກວ່າເພດຊາຍ (ຄິດເປັນຮ້ອຍລະ 15 ທຽບໃສ່ຮ້ອຍລະ 17 ຕາມລຳດັບ). ສຳຫລັບກຸ່ມຜູ້ສູງອາຍຸລະຫວ່າງ 55 ປີ ເຖິງ 59 ປີ ແມ່ນມີການເຄື່ອນຍ້າຍຖິ່ນຖານຈາກເມືອງເກີດຂອງຕົນເອງຫຼາຍກວ່າກຸ່ມອາຍຸອື່ນ.

ຂໍ້ມູນໃນການສຳຫຼວດປະຊາກອນ ແລະ ພົນລະເມືອງແມ່ນບໍ່ໄດ້ກວ່າເຖິງສາເຫດຂອງການເຄື່ອນຍ້າຍຖິ່ນຖານຕະຫຼອດຊີວິດ.

*1.4.2.* ການຍົກຍ້າຍຖິ່ນຖານໃນປັດຈຸບັນ

ການໃຫ້ຄຳນິຍາມຂອງການເຄື່ອນຍ້າຍຖິ່ນຖານປັດຈຸບັນແມ່ນຈະບໍ່ຄືກັນກັບການເຄື່ອນຍ້າຍຖິ່ນຖານຕະຫຼອດຊີວິດເຊິ່ງຈະໄດ້ອີງໃສ່ຕາມຊ່ວງໄລຍະເວລາ ນີ້ອາດຈະກວມເອົາໄລຍະເວລາເປັນ 10 ປີທີ່ຜ່ານມາໃນຊ່ວງການສຳຫຼວດພົນລະເມືອງ ແລະ ປະຊາກອນ PHC [9] ປີ 2015 ເຊິ່ງສາມາດແຍກໄດ້ ສອງປະເພດໃນການເຄື່ອນຍ້າຍດັ່ງນີ້:

- ການເຄື່ອນຍ້າຍຖິ່ນຖານພາຍໃນແຂວງ ໝາຍເຖິງການເຄື່ອນຍ້າຍຖິ່ນຖານຂອງປະຊາກອນທີ່ຍ້າຍອອກຈາກເມືອງໜຶ່ງໄປເມືອງອື່ນທີ່ຢູ່ໃນແຂວງດຽວກັນ;
- ການເຄື່ອນຍ້າຍຖິ່ນຖານອອກຕ່າງແຂວງ ໝາຍເຖິງການເຄື່ອນຍ້າຍຖິ່ນຖານຂອງປະຊາກອນທີ່ຍ້າຍອອກຈາກເມືອງໜຶ່ງໄປຕ່າງແຂວງ.

ຮູບແບບການເຄື່ອນຍ້າຍທີ່ຕິດພັນກັບປະເພດການເຄື່ອນຍ້າຍຖິ່ນຖານປັດຈຸບັນແມ່ນສາມາດນຳໄປປຽບທຽບກັບການເຄື່ອນຍ້າຍຕະຫຼອດຊີວິດ (ຮູບສະແດງທີ 23). ອີງຕາມຂໍ້ມູນໃນປີ 2015 ມີການລາຍງານວ່າ ປະມານຮ້ອຍລະ 7 ຫຼື ປະມານ 379,000 ຄົນ ແມ່ນຜູ້ທີ່ເຄື່ອນຍ້າຍຖິ່ນຖານຈາກເມືອງໜຶ່ງໄປອີກເມືອງໜຶ່ງ ເຊິ່ງໃນນັ້ນແມ່ນຮ້ອຍລະ 4 (ປະມານ 206,000 ຄົນ) ແມ່ນຜູ້ເຄື່ອນຍ້າຍຖິ່ນຖານຈາກແຂວງໜຶ່ງໄປອີກແຂວງໜຶ່ງ. ຈຳນວນຜູ້ເຄື່ອນຍ້າຍທີ່ມາຈາກຕ່າງປະເທດໃນລະຫວ່າງປີ 2005 ເຖິງ 2015 ແມ່ນມີຈຳນວນນ້ອຍກວ່າຮ້ອຍລະ 1 ຂອງຜູ້ເຄື່ອນຍ້າຍຖິ່ນຖານປັດຈຸບັນທັງໝົດ.

[9] Consequently, only people aged 10 or more are included.

### ຮູບສະແດງທີ 23. ຈຳນວນລວມທັງໝົດໃນປັດຈຸບັນ ແລະ ການເຄື່ອນຍ້າຍຖິ່ນຖານພາຍໃນແຂວງ ແບ່ງຕາມແຂວງ ໃນລະຫວ່າງປີ 2005 ເຖິງ 2015 (ຄິດເປັນຮ້ອຍລະ ຂອງປະຊາກອນທີ່ອາໄສຢູ່ພາຍໃນ 10 ປີ ແລະ ຫຼາຍກວ່າ)




*ແຫຼ່ງທີ່ມາ:* ຜູ້ຂຽນໄດ້ຂະຫຍາຍມາຈາກການສຳຫຼວດພົນລະເມືອງ ແລະ ປະຊາກອນ PHC ປີ 2015.

ຂໍ້ມູນໃນລະດັບຂັ້ນແຂວງໃນປີ 2015 ໄດ້ສະແດງໃຫ້ເຫັນວ່າ ຮ້ອຍລະ 15 ຂອງປະຊາກອນທີ່ອາໄສຢູ່ນະຫຼວງວຽງຈັນພາຍໃນ 10 ປີ ຫຼື ຫຼາຍກວ່າ ແມ່ນຜູ້ເຄື່ອນຍ້າຍຖິ່ນຖານປັດຈຸບັນ (105,842 ຄົນ) ໃນນັ້ນແມ່ນຜູ້ທີ່ເຄື່ອນຍ້າຍມາຈາກແຂວງອື່ນ ຄິດເປັນຮ້ອຍລະ 10 ຂອງປະຊາກອນພາຍໃນເມືອງ (71,418 ຄົນ). ໃນສັດສ່ວນຂອງຜູ້ທີ່ເຄື່ອນຍ້າຍຖິ່ນຖານມາຈາກແຂວງບໍ່ແກ້ວ ແລະ ແຂວງບໍລິຄຳໄຊ ແມ່ນຄິດເປັນຮ້ອຍລະ 9 ຂອງແຕ່ລະແຂວງ ເຊິ່ງຕົວເລກທີ່ຊັດເຈນແມ່ນ 12,962 ຄົນ ແລະ 19,525 ຄົນ ຕາມລຳດັບ. ສຳຫຼັບແຂວງສະຫວັນນະເຂດ ມີຈຳນວນຕົວເລກຂອງຜູ້ເຄື່ອນຍ້າຍຖິ່ນຖານປັດຈຸບັນຫຼາຍ (36,810) ຄິດເປັນຮ້ອຍລະ 5 ຂອງຈຳນວນປະຊາກອນພາຍໃນແຂວງ ເຊິ່ງໃນນັ້ນ (ປະມານ 2 %) ແມ່ນຖືກຜັກດັນໃຫ້ມີການເຄື່ອນຍ້າຍຖິ່ນຖານພາຍໃນແຂວງ.

ເມື່ອພິຈາລະນາເຖິງປະເພດການເຄື່ອນຍ້າຍຖິ່ນຖານປັດຈຸບັນ ເຫັນວ່າຄວາມແຕກຕ່າງລະຫວ່າງເພດແມ່ນສາມາດສັງເກດໄດ້ (ຮູບສະແດງທີ 24). ຮູບແບບການເຄື່ອນຍ້າຍຖິ່ນຖານປັດຈຸບັນໄດ້ຢັ້ງຢືນໃຫ້ເຫັນເຖິງການເຄື່ອນຍ້າຍຖິ່ນຖານຂອງເພດຍິງພາຍໃນປະເທດຄິດເປັນຮ້ອຍລະ 59 ຂອງການເຄື່ອນຍ້າຍຖິ່ນຖານທັງໝົດໃນປີ 2015 ເຊິ່ງສັດສ່ວນດັ່ງກວ່າແມ່ນໄດ້ສົມທຽບໃສ່ກັບແຕ່ລະປະເພດຂອງການຄື່ອນຍ້າຍຖິ່ນຖານ. ໃນປີ 2015 ຈຳນວນຜູ້ເຄື່ອນຍ້າຍຖິ່ນຖານທີ່ເປັນເພດຍິງກວມເຖິງຮ້ອຍລະ 60 ຂອງຜູ້ເຄື່ອນຍ້າຍພາຍໃນແຂວງ, ຮ້ອຍລະ 58 ຂອງຜູ້ເຄື່ອນຍ້າຍອອກຕ່າງແຂວງ, ແລະ ຮ້ອຍລະ 61 ຂອງຜູ້ເຄື່ອນຍ້າຍມາຈາກຕ່າງປະເທດ.

### ຮູບສະແດງທີ 24. ຜູ້ເຄື່ອນຍ້າຍຖິ່ນຖານປັດຈຸບັນໂດຍ ປະເພດ ແລະ ເພດ ໃນປີ 2015 (ເປັນຕົວເລກ ແລະ ຮ້ອຍລະ)




*ແຫຼ່ງທີ່ມາ:* ຜູ້ຂຽນໄດ້ຂະຫຍາຍມາຈາກການສໍາຫຼວດພົນລະເມືອງ ແລະ ປະຊາກອນ PHC ປີ 2015.

ເມື່ອແຍກຕາມກຸ່ມອາຍຸ (ຮູບສະແດງທີ 25) ຂໍ້ມູນໄດ້ສະແດງໃຫ້ເຫັນເຖິງຕົວເລກຂອງໄວໜຸ່ມໃນຊ່ວງອາຍຸ ລະຫວ່າງ 20 ຫາ 35 ປີ ແມ່ນກຸ່ມທີ່ມີການເຄື່ອນຍ້າຍຖິ່ນຖານຫຼາຍທີ່ສຸດໃນປີ 2015 ເຊິ່ງກຸ່ມດັ່ງກວ່າແມ່ນມີການເຄື່ອຍຍ້າຍຫຼາຍກວ່າເຄິ່ງໜຶ່ງຂອງກຸ່ມຜູ້ເຄື່ອນຍ້າຍຖິ່ນຖານປັດຈຸບັນຂອງທັງສອງເພດ (ຮ້ອຍລະ 56ແມ່ນກຸ່ມຜູ້ເຄື່ອນຍ້າຍຖິ່ນຖານເພດຍິງ ແລະ ຮ້ອຍລະ 50 ແມ່ນກຸ່ມຜູ້ເຄື່ອນຍ້າຍຖິ່ນຖານເພດຊາຍ). ກຸ່ມອາຍຸລະຫວ່າງ 20 ເຖິງ 24 ແມ່ນກຸ່ມອາຍຸທີ່ມີອັດຕາສ່ວນໃຫຍ່ທີ່ສຸດ (ຮ້ອຍລະ 26 ແລະ ຮ້ອຍລະ 24 ເປັນເພດຍິງ ແລະ ເພດຊາຍຕາມລໍາດັບ).

ຮູບສະແດງທີ 25. ຮູບປີລະມິດປະຊາກອນຂອງກຸ່ມຜູ້ເຄື່ອນຍ້າຍຖິ່ນຖານປັດຈຸບັນຕາມກຸ່ມອາຍຸໃນປີ 2015 (ຄິດເປັນ ຮ້ອຍລະ)




*ແຫຼ່ງທີ່ມາ:* ຜູ້ຂຽນໄດ້ຂະຫຍາຍມາຈາກການສຳຫຼວດພົນລະເມືອງ ແລະ ປະຊາກອນ PHC ປີ 2015.

ໂດຍລວມແລ້ວ ຈຳນວນຕົວເລກຂອງຜູ້ເຄື່ອນຍ້າຍຖິ່ນຖານໃນບາງແຂວງ ຢູ່ໃນລະຫວ່າງປີ 2005 ເຖິງ ປີ 2015 ແມ່ນເປັນທາງບວກ ໃນຂະນະທີ່ບາງແຂວງແມ່ນມີຈຳນວນຕົວເລກທີ່ເປັນທາງລົບ. ສຳຫຼັບນະຄອນຫຼວງວຽງຈັນ ແມ່ນມີຈຳນວນປະຊາກອນເພີ່ມຂຶ້ນ ຄິດເປັນຕົວເລກແມ່ນ 50,648 ຄົນ ຕາມດ້ວຍແຂວງອັດຕະປື (20,124 ຄົນ) ແລະ ແຂວງສະຫວັນນະເຂດ (4,169 ຄົນ). ແຕ່ມີ ສີ່ ແຂວງທີ່ມີຈຳນວນຕົວເລກປະຊາກອນຫຼຸດລົງໃນລະຫວ່າງປີ 2005 ເຖິງ 2015 ປະກອບມີແຂວງຫົວພັນ ( (-21,338 ຄົນ), ແຂວງລວງພະບາງ (-18,298 ຄົນ), ແຂວງຊຽງຂວາງ (-15,049), ແລະ ແຂວງຜົ້ງສາລີ (-9,668 ຄົນ).

ສາເຫດຂອງການເຄື່ອນຍ້າຍຖິ່ນຖານຈາກເມືອງໜຶ່ງໄປອີກເມືອງໜຶ່ງແມ່ນບໍ່ມີຂໍ້ມູນທີ່ຈະແຈ້ງຈາກຂໍ້ມູນການສຳຫຼວດພົນລະເມືອງ ແລະ ປະຊາກອນ PHC [10]. ຈາກການວິເຄາະຂໍ້ມູນການສຳຫຼວດພົນລະເມືອງ ແລະ ປະຊາກອນ PHC ປີ 2015 ເຫັນວ່າຮ້ອຍລະ 24 ຂອງຜູ້ຕອບແບບສອບຖາມສ່ວນໃຫຍ່ແມ່ນບໍ່ໄດ້ໃຫ້ເຫດຜົນກ່ຽວກັບການເຄື່ອນຍ້າຍຖິ່ນຖານ; ມີພຽງຮ້ອຍລະ 28 ໃຫ້ເຫດຜົນວ່າ ຍ້ອນການດຳລົງຊີວິດທາງເສດຖະກິດ ຫຼື ກ່ຽວກັບການເຮັດວຽກ ເຊັ່ນ ການຍ້າຍສະຖານທີ່ເຮັດວຽກ, ການຊອກວຽກ ຫຼື ການເຮັດທຸລະກິດ (LSB, 2015).

[10] Consequently, only people aged 10 or more are included.

ຈາກແຫຼ່ງຂໍ້ມູນອື່ນລະບຸວ່າ ຫຼາຍຄົນທີ່ເຄື່ອນຍ້າຍເຂົ້າມາໃນນະຄອນຫຼວງວຽງຈັນແມ່ນເພື່ອການສຶກສາ ຫຼື ຊອກວຽກເຮັດ (Epprecht et al., 2018). ໃນນະຄອນຫຼວງມີແຮງງານທີ່ເປັນເພດຍິງສ່ວນໃຫຍ່ແມ່ນຖືກຈ້າງດ້ວຍຄ່າແຮງທີ່ຕໍ່າໃນຂົງເຂດວຽກງານນອກລະບົບ ຫຼື ໃນອຸດສາຫະກໍາຕັດຫຍິບ ແລະ ການຜະລິດ (LSB, 2015).

ຜົນການຄົ້ນຄວ້າຈາກການລົງພາກສະໜາມໃນເດືອນຕຸລາ 2022 ສະແດງໃຫ້ເຫັນວ່າ ການຕິດຕາມການເຄື່ອນຍ້າຍຂອງຊາວບ້ານແມ່ນເປັນສິ່ງທ້າທາຍໃນທົ່ວແຂວງ.[11] ສະນັ້ນ ຕົວເລກຂອງການເຄື່ອຍຍ້າຍຖິ່ນຖານພາຍໃນທີ່ປະເມີນນັ້ນອາດຈະຕໍ່າເກີນໄປ.

*1.4.3.* ການປ່ຽນແປງທາງດ້ານສະພາບແວດລ້ອມ,ການບັງຄັບໃຫ້ໄປຢູ່ບ່ອນອື່ນພາຍໃນ ແລະ ການຕັ້ງຖິ່ນຖານໃໝ່

ຂໍ້ມູນກ່ຽວກັບການເຄື່ອນຍ້າຍຖິ່ນຖານຍ້ອນສະພາບອາກາດແມ່ນຍັງຂາດເຂີນ ແລະ ບໍ່ມີຂໍ້ມູນພຽງພໍ. ໃນຂະນະທີ່ກໍາລັງຮ່າງບົດລາຍງານ ສະພາບການເຄື່ອນຍ້າຍຖິ່ນຖານສະບັບນີ້ ຫຼັກຖານຕ່າງໆໄດ້ສະແດງໃຫ້ເຫັນເຖິງບາງທ່າອ່ຽງຂອງການເຄື່ອນຍ້າຍຖິ່ນຖານເຊັ່ນ: ທ່າອ່ຽງທໍາອິດແມ່ນການເຄື່ອນຍ້າຍຖິ່ນຖານທີ່ເກີດຈາກສະພາບແວດລ້ອມພາຍໃນເປັນສ່ວນໃຫຍ່ ເຮັດໃຫ້ເກີດການເຄື່ອນຍ້າຍພາຍໃນປະເທດ; ທ່າອ່ຽງທີ່ສອງແມ່ນການເຄື່ອນຍ້າຍໄປປະເທດປາຍທາງເຊັ່ນ ປະເທດເພື່ອນບ້ານທີ່ມີຈໍານວນເພີ່ມຂຶ້ນຢ່າງຫຼວງຫຼາຍ; ທ່າອ່ຽງທີ່ສາມແມ່ນຂະໜາດ ແລະ ຄວາມໄວຂອງການປ່ຽນແປງທາງສິ່ງແວດລ້ອມທີ່ໄດ້ເພີ່ມທະວີຂຶ້ນໃນປັດຈຸບັນ ເຮັດໃຫ້ເກີດມີການເຄື່ອນຍ້າຍຖິ່ນຖານຍ້ອນສະພາບອາກາດເພີ່ມຂຶ້ນ.

- **ໄພພິບັດ, ການປ່ຽນແປສະພາບອາກາດ, ແລະ ພາວະໂລກຮ້ອນ**

ປະເທດລາວແມ່ນຖືກຈັດຢູ່ໃນອັນດັບທີ່ຕໍ່າກວ່າ ຫ້າສິບ ທີ່ບໍ່ໄດ້ນອນຢູ່ໃນປະເທດຕົ້ນຕໍໃນການສູນເສຍຈາກໄພພິພັດທາງທໍາມະຊາດໃນຊ່ວງປີ 2000 ເຖິງ 2019 (Eckstein et al., 2021) ແຕ່ວ່າປະເທດໄທ ແລະ ປະເທດມຽນມ້າແມ່ນຢູ່ໃນປະເທດອັນດັບຕົ້ນ. ການປ່ຽນແປງທາງສະພາບອາກາດໃນບັນດາປະເທດ GMS ແມ່ນປະກອບດ້ວຍການປ່ຽນແປງທາງປະລິມານນໍ້າຝົນ ແລະ ການເພີ່ມຂຶ້ນຂອງການປ່ຽນແປງສະພາບອາກາດ ລວມເຖິງຄວາມຖີ່ ແລະ ຄວາມຮຸນແຮງຈາກເຫດການໄພພິບັດທາງທໍາມະຊາດທີ່ເກີດຂຶ້ນ. ການປ່ຽນແປງທາງປະລິມານນໍ້າຝົນລວມເຖິງການລະລາຍນໍ້າແຂງທີ່ເພີ່ມຂຶ້ນຢູ່ຕອນເທິງຂອງແມ່ນໍ້າຂອງ ຄາດວ່າຈະເຮັດປະລິມນໍ້າໄຫຼ່ຫຼາກໃນແຕ່ລະປີເພີ່ມຂຶ້ນ ແລະ ເພີ່ມຄວາມສ່ຽງຕໍ່ການເກີດໄພນໍ້າຖ້ວມ ໂດຍສະເພາະຢູ່ໃນເຂດລຸ່ມແມ່ນໍ້າຂອງ (Clement et al., 2020). ການກັກຂັງນໍ້າຢູ່ເທິງຕົ້ນນໍ້າແມ່ນສາມາດສົ່ງຜົນໃຫ້ເກີດໄພນໍ້າຖ້ວມ ແລະ ປະລິມານນໍ້າເພີ່ມຂຶ້ນຜິດປົກກະຕິ ເຊິ່ງການເພີ່ມຂຶ້ນຂອງປະລິມານນໍ້າຝົນທີ່ບໍ່ຕົກຕາມລະດູການ ແລະ ການສືບຕໍ່ສ້າງເຂື່ອນ ແມ່ນອາດຈະຊ່ວຍໃຫ້ເກີດໄພພິບັດນໍ້າຖ້ວມນ້ອຍລົງ. ຜົນກະທົບຈາກການປ່ຽນແປງສະພາບອາກາດ, ການລະລາຍຂອງນໍ້າແຂງ,

---

[11] See Annex I.

ການສ້າງ ແລະ ການລະເຫີຍ ເປັນໄລຍະຍາວອາດຈະສົ່ງຜົນໃຫ້ປະລິມານການໄຫຼຂອງແມ່ນ້ຳຂອງຫຼຸດລົງ (Raitzer et al., 2015).

ຄາດວ່າຈະມີການປະກາດກ່ຽວກັບການເພີ່ມຂຶ້ນຂອງຈຳນວນຜູ້ເຄື່ອນຍ້າຍຖິ່ນຖານຍ້ອນສະພາບທາງສິ່ງແວດລ້ອມໃນເຂດລຸ່ມແມ່ນ້ຳຂອງໃນປີ 2050 (Clement et al., 2021) ແຕ່ກໍ່ຂຶ້ນຢູ່ກັບສະຖານະການ ແລະເມື່ອສັງເກດຈາກຕົວເລກທີ່ເພີ່ມຂຶ້ນຈາກ 3.3 ລ້ານຄົນ (ຮ້ອຍລະ 1.4 ຂອງປະຊາກອນທັງໝົດ) ເຖິງ 6.3 ລ້ານຄົນ (ຮ້ອຍລະ 2.7ຂອງປະຊາກອນທັງໝົດ).

- **ໂຄງການຂະໜາດໃຫຍ່**

ໂຄງການພັດທະນາພື້ນຖານໂຄງລ່າງຂະໜາດໃຫຍ່ໃນປະເທດສ່ວນຫຼາຍເຮັດໃຫ້ເກີດມີການເຄື່ອນຍ້າຍແບບບໍ່ສະໝັກໃຈ, ໂດຍສະເພາະການຂະຫຍາຍຕົວເມືອງທີ່ຕ້ອງການສ້າງເຂື່ອນຜະລິດໄຟຟ້າ ແລະ ນ້ຳປະປາທີ່ເພີ່ມຂຶ້ນ. ນອກນີ້, ສປປ ລາວ ຍັງເປັນປະເທດທີ່ເຂົ້າຮ່ວມໂຄງການ Belt and Road Initiative (BRI) ເຊິ່ງມີໂຄງການທີ່ໄດ້ສຳເລັດ ແລະ ກຳລັງຈັດຕັ້ງປະຕິບັດຢູ່ກວ່າ 30 ໂຄງການໃນຂົງເຂດການຜະລິດໄຟຟ້ານ້ຳຕົກ, ກະສິກຳ, ບໍ່ແຮ່ ແລະ ການຂົນສົ່ງ. ຈາກການຈັດຕັ້ງປະຕິບັດໂຄງການດັ່ງກ່າວຈຶ່ງເຮັດໃຫ້ມີການເຄື່ອນຍ້າຍຖິ່ນຖານແບບບໍ່ສະໝັກໃຈເກີດຂຶ້ນກ່ອນທີ່ຈະຈັດຕັ້ງປະຕິບັດໂຄງການໂດຍລັດຖະບານ ຫຼື ອົງການຈັດຕັ້ງອື່ນໆທີ່ມີການວາງແຜນການເຄື່ອນຍ້າຍ ແລະການຊົດເຊີຍຕາມແຜນການຂອງໂຄງການ.

ຂໍ້ມູນກ່ຽວກັບການບັງຄັບໃຫ້ຍ້າຍຖິ່ນຖານແມ່ນຍັງຂາດເຂີນ ແຕ່ກໍ່ຍັງມີບາງຕົວເລກເຊັ່ນ ໃນປີ 2010 ມີກໍ່ສ້າງເຂື່ອນນ້ຳເທີນ 2 ເຮັດໃຫ້ມີຜູ້ທີ່ຈຳເປັນຕ້ອງໄດ້ເຄື່ອນຍ້າຍປະມານ 6,200 ຄົນ ທີ່ເປັນກຸ່ມຊົນເຜົ່າພື້ນເມືອງ (ອົງການສະຫະປະຊາຊາດປະຈຳ ສປປ ລາວ, 2022).

ອີກຕົວຢ່າງໜຶ່ງແມ່ນໂຄງການເສັ້ນທາງລົດໄຟລາວ-ຈີນ ເປັນໂຄງການ BRI ທີ່ສຳຄັນໃນການສ້າງເສັ້ນທາງລົດໄຟຄວາມໄວສູງ 257 ໄມລ໌, ມີ 32 ສະຖານີທີ່ເຊື່ອມຕໍ່ຈາກແຂວງຢຸນນານພາກໃຕ້ຂອງຈີນໄປຫານະຄອນຫຼວງວຽງຈັນ ແລະ ສະຖານນີສຸດທ້າຍແມ່ນຜ່ານປະເທດສິງກະໂປ. ໂຄງການດັ່ງກ່າວໄດ້ຕັດຜ່ານ 5 ແຂວງ ແລະ ລວມມີການເຊື່ອມຕໍ່ໂດຍກົງກັບ 4 ເຂດເສດຖະກິດພິເສດ (USAID, 2022). ເຊິ່ງສະຖານີ 21 ແຫ່ງທຳອິດ ແມ່ນຄາດວ່າມີການຍົກຍ້າຍ 4,400 ກວ່າຄອບຄົວ (Radio Free Asia (Lao), 2018).

## 1.5. ການຍ້າຍຖິ່ນຖານກັບຄືນ

### *1.5.1.* ການຍ້າຍຖິ່ນຖານກັບຄືນ ກ່ອນການແຜ່ລະບາດຂອງພະຍາດ ໂຄວິດ-19

ຂໍ້ມູນກ່ຽວກັບການເຄື່ອນຍ້າຍກັບຄືນຖິ່ນຖານກ່ອນການແຜ່ລະບາດຂອງພະຍາດ COVID-19 ແມ່ນຍັງບໍ່ສົມບູນ ແລະ ເນື່ອງຈາກການເຄື່ອນຍ້າຍກັບຄືນຖິ່ນຖານບໍ່ໄດ້ເປັນນະໂຍບາຍບຸລິມາສິດທຳອິດຂອງບັນດາຄູ່ຮ່ວມງານ.

ຂໍ້ມູນການສຳຫຼວດພົນລະເມືອງ ແລະ ປະຊາກອນ PHC ແມ່ນສາມາດເກັບກຳຂໍ້ມູນຈຳນວນພົນລະເມືອງລາວແລະ ຄົນຕ່າງປະເທດທີ່ກັບຄືນ ແຕ່ກໍ່ເກັບກຳຂໍ້ມູນໄດ້ພຽງບາງສ່ວນເທົ່ານັ້ນ. ເຊິ່ງສິ່ງທ້າທາຍຫຼັກຂອງການເກັບຂໍ້ມູນ ການສຳຫຼວດພົນລະເມືອງ ແລະ ປະຊາກອນ PHC ໃນປີ 2015 ແມ່ນບໍ່ໄດ້ໄຈແຍກຜູ້ທີ່ຍ້າຍເຂົ້າມາໃນປະເທດ ລາວທີ່ເປັນພົນລະເມືອງລາວ ຫຼື ເປັນຄົນຕ່າງປະເທດ.  ເຖິງຢ່າງໃດກໍ່ຕາມ ຂໍ້ມູນເຫຼົ່ານັ້ນກໍ່ສາມາດສະແດງໃຫ້ເຫັນ ເຖິງຮູບແບບຂອງການເຄື່ອນຍ້າຍກັບຄືນປະເທດ ເຊິ່ງຂໍ້ມູນໃນປີ 2015 ໄດ້ມີການລາຍງານວ່າ ມີຜູ້ເຄື່ອນຍ້າຍກັບ ຄືນຈາກຕ່າງປະເທດຈຳນວນ 42,078 ຄົນ ຢູ່ໃນລະຫວ່າງປີ 2005 ເຖິງ 2015 (ຮູບສະແດງທີ 26). ຜູ້ທີ່ເຄື່ອ ຍ້າຍສ່ວນໃຫຍ່ແມ່ນຍ້າຍມາຈາກປະເທດເພື່ອນບ້ານ ເຊິ່ງປະເທດຫຼັກແມ່ນມາຈາກປະເທດໄທ (ຮ້ອຍລະ 37; 15,497 ຄົນ), ຕາມດ້ວຍປະເທດຫວຽດນາມ (ຮ້ອຍລະ 26; 10,880 ຄົນ) ແລະ ປະເທດຈີນ (ຮ້ອຍລະ 23; 9,798 ຄົນ).

**ຮູບສະແດງທີ  26. ຜູ້ເຄື່ອນຍ້າຍຖິ່ນຖານຈາກຕ່າງປະເທດໃນລະຫວ່າງປີ 2005 ເຖິງ 2015, ຕາມປະເທດຕົ້ນທາງ ໃນປີ 2015 (ຄິດເປັນຮ້ອຍລະ ແລະ ຕົວເລກ)**




*ແຫຼ່ງທີ່ມາ:* ຜູ້ຂຽນໄດ້ຂະຫຍາຍມາຈາກການສຳຫຼວດພົນລະເມືອງ ແລະ ປະຊາກອນ PHC ປີ 2015.

### *1.5.2.* ການຍ້າຍຖິ່ນຖານກັບຄືນ ໃນຊ່ວງໄລຍະການແຜ່ລະບາດຂອງພະຍາດ ໂຄວິດ-19

ໃນຊ່ວງການແຜ່ລະບາດຂອງພະຍາດ COVID-19 ທາງລັດຖະບານໄດ້ຮັບການສະໜັບສະໜູນທາງດ້ານວິຊາການ ຈາກບັນດາອົງການຈັດຕັ້ງສາກົນໃນເກັບຂໍ້ມູນໃນເຊີງປະລິມານ ແລະ ຄຸນນະພາບຢ່າງຕໍ່ເນື່ອງກ່ຽວກັບສະພາບການ ເຄື່ອນຍ້າຍກັບຄືນຖິ່ນຖານຂອງຜູ້ເຄື່ອນຍ້າຍ ແລະ ຜົນກະທົບທາງເສດຖະກິດສັງຄົມຂອງພະຍາດ COVID-19 ຕໍ່ ກັບບຸກຄົນ ແລະ ຊຸມຊົນໂດຍຜ່ານການປະເມີນຢ່າງທັນທີ. ເຖິງຢ່າງໃດກໍ່ຕາມ ການຄາດຄະເນສະພາບການເຄື່ອນ ຍ້າຍກັບຄືນຖິ່ນຖານສຳຫຼັບປີ 2020 ແລະ 2021 ກໍ່ເປັນສິ່ງທີ່ຫຍຸ້ງຍາກ ເຊິ່ງໄດ້ມີຫຼາຍພາກສ່ວນໄດ້ເຂົ້າມາມີ

ສ່ວນຮ່ວມໃນການສະໜັບສະໜູນໃຫ້ແກ່ຜູ້ທີ່ເຄື່ອນຍ້າຍກັບຄືນຖິ່ນຖານ[12] ລວມເຖິງ ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19, ຄະນະກຳມະການຈາກຫຼາຍຂະແໜງການ ເຊິ່ງນຳພາໂດຍກະຊວງສາທາລະນະສຸກ MOH ທີ່ຮັບຜິດຊອບໃນການກວດກາຜູ້ທີ່ເຄື່ອນຍ້າຍກັບຄືນຖິ່ນຖານທີ່ເປັນສັນຊາດລາວທັງໝົດ. ການລົງທະບຽນຄົນສັນຊາດທີ່ເຂົ້າມາ[13] ແມ່ນສິ່ງທ້າທາຍໂດຍສະເພາະແມ່ນຜູ້ທີ່ບໍ່ມີເອກະສານຢູ່ໃນປະເທດປາຍທາງ ແລະ ຂ້າມຊາຍແດນ (ILO, 2022).

ເນື່ອງຈາກຂາດຄວາມສອດຄ່ອງຂອງຕົວເລກທີ່ເກັບກຳໃນລະດັບຊາດ ຈຶ່ງໄດ້ນຳໃຊ້ຂໍ້ມູນທາງສະຖິຕິທີ່ເປັນທາງການຈາກໜ່ວຍງານກວດຄົນເຂົ້າເມືອງຂອງປະເທດໄທເປັນບ່ອນອ້າງອີງ ເຊິ່ງຂໍ້ມູນທາງສະຖິຕິໄດ້ຊີ້ໃຫ້ເຫັນວ່າ ໃນຊ່ວງເດືອນພຶດສະພາ 2021 ມີຜູ້ເຄື່ອນຍ້າຍທີ່ເປັນສັນຊາດລາວປະມານ 284,180 ຄົນ ໄດ້ຂ້າມຊາຍແດນກັບຈາກປະເທດໄທເຂົ້າມາໃນ ສປປ ລາວ ແບບຖືກຕ້ອງ ເຊິ່ງຜູ້ເຄື່ອນຍ້າຍກັບຄືນຖິ່ນຖານຈາກປະເທດໄທທີ່ເປັນເພດຍິງແມ່ນກວມເອົາເປັນສ່ວນໃຫຍ່ (ສະຖາບັນທະນາຄານເພື່ອການພັດທະນາອາຊີ, OECD and ILO, 2022). ໂດຍລວມແລ້ວຕາມການລາຍງານຂອງອົງການ ILO (2022) ມີຈຳນວນຕົວເລກຂອງຜູ້ເຄື່ອນຍ້າຍກັບຄືນຖິ່ນຖານເຖິງ 156,167 ຄົນທີ່ເດີນທາງກັບຄືນປະເທດໃນປີ 2020 (ILO TRIANGLE in ASEAN) ແລະມີ 61,274 ຄົນເດີນທາງກັບໃນເດືອນມີນາ ເຖິງ ເມສາ ປີ 2021 (ພະແນກພັດທະນາຝີມືແຮງງານ ແລະ ການຈ້າງງານ, MOLSW).

## 1.6. ການເຄື່ອນຍ້າຍຖິ່ນຖານແບບບໍ່ສະໝັກໃຈ

ເນື່ອງຈາກຂໍ້ມູນທີ່ມີ ແລະ ການເຂົ້າເຖິງທີ່ຈຳກັດ, ການໄດ້ຮັບຂໍ້ມູນທີ່ຖືກຕ້ອງກ່ຽວກັບການເຄື່ອນຍ້າຍຖິ່ນຖານແບບບໍ່ສະໝັກໃຈໃນ ສປປ ລາວ ຈຶ່ງເປັນສິ່ງທ້າທາຍ. ການຂາດລະບົບການເກັບກຳຂໍ້ມູນທີ່ສົມບູນແບບຫຼືຂາດກົນໄກການລາຍງານເຮັດໃຫ້ຍາກຕໍ່ການປະເມີນຂອບເຂດ, ຂະໜາດ ແລະ ລັກສະນະຂອງການເຄື່ອນຍ້າຍຖິ່ນຖານແບບບໍ່ສະໝັກໃຈ ຈຶ່ງເຮັດໃຫ້ບໍ່ສາມາດເຂົ້າໃຈ ແລະ ແກ້ໄຂປະກົດການທີ່ຫຍຸ້ງຍາກນີ້ໄດ້ຢ່າງມີປະສິດທິຜົນ. ສະນັ້ນ, ບົດລາຍງານກ່ຽວກັບ ສະພາບການເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ ຄັ້ງຕໍ່ໄປຈະໄດ້ລວມເອົາປະເດັນດັ່ງກວ່າເຂົ້າໃນບົດລາຍງານດ້ວຍ

[12] MOFA, MOLSW, MOH, MOPS and local governments. Recruitment agencies also played a role (Asian Development Bank Institute, OECD and ILO, 2022).

[13] Registration took place only at quarantine centres.

## ພາກທີ 2: ຜົນກະທົບຂອງການເຄື່ອນຍ້າຍຖິ່ນຖານຢູ່ໃນຂົງເຂດພັດທະນາທີ່ສຳຄັນ

ໃນພາກທີ 2 ຂອງບົດລາຍງານກ່ຽວກັບ ສະພາບການເຄື່ອນຍ້າຍຖິ່ນຖານໃນ ສປປ ລາວແມ່ນໄດ້ໃຫ້ການວິເຄາະໃນເຊິງເລິກກ່ຽວກັບຄວາມກ່ຽວຂ້ອງລະຫວ່າງການເຄື່ອນຍ້າຍຖິ່ນຖານ ແລະ ການພັດທະນາເສດຖະກິດສັງຄົມຂອງ ສປປ ລາວ ທີ່ຕິດພັນກັບປະຊາກອນ ແລະ ສິ່ງແວດລ້ອມ.

### 2.1. ການເຄື່ອນຍ້າຍຖິ່ນຖານ ແລະ ການພັດທະນາປະຊາກອນພາຍໃນປະເທດ

ການເຄື່ອນຍ້າຍຖິ່ນຖານແມ່ນກຸນແຈສຳຄັນຂອງການປ່ຽນແປງທາງປະຊາກອນ ເຊິ່ງມີຜົນກະທົບການພັດທະນາປະຊາກອນພາຍໃນປະເທດໃນຫຼາຍດ້ານເຊັ່ນ ຂະໜາດຂອງປະຊາກອນ, ໂຄງຮ່າງ ແລະ ຄວາມໜາແໜ້ນຂອງປະຊາກອນ, ແລະ ການຂະຫຍາຍຕົວເມືອງ.

#### *2.1.1.* ການປ່ຽນແປງທາງປະຊາກອນ

ໃນວັນທີ 1 ກໍລະກົດ 2022, ປະຊາກອນຂອງ ສປປ ລາວ ລວມທັງໝົດມີ 7,529,475 ຄົນ (ຫຼື 7,5 ລ້ານຄົນໃນຕົວເລກມົນ) ອີງຕາມການປະເມີນຂອງ *DESA (*2020) ເຊິ່ງປະຊາກອນຂອງ ສປປ ລາວ ໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງນັບຕັ້ງແຕ່ປີ 1950 (ຮູບສະແດງທີ 27)*).*[14, 15]

ອີງຕາມຂໍ້ມູນການສຳຫຼວດພົນລະເມືອງ ແລະ ປະຊາກອນ PHC ປີ 2015, ອັດຕາການຂະຫຍາຍຕົວຂອງຈຳນວນປະຊາກອນສະເລ່ຍປະຈຳປີຢູ່ໃນຊ່ວງການສຳຫຼວດພົນລະເມືອງ ແລະ ປະຊາກອນ PHCs ເຫັນວ່າຕົວເລກຂອງປະຊາກອນແມ່ນຫຼຸດລົງຈາກຮ້ອຍລະ 2.1 ຢູ່ໃນລະຫວ່າງປີ 1995 ເຖິງ 2005 ມາເປັນຮ້ອຍລະ 1.4 ຢູ່ໃນລະຫວ່າງປີ 2005 ເຖິງ 2015. ນັບຕັ້ງແຕ່ນັ້ນມາ, ອັດຕາການຂະຫຍາຍຕົວຂອງປະຊາກອນແມ່ນໄດ້ຫຼຸດລົງຢ່າງຕໍ່ເນື່ອງຈົນເຖິງຮ້ອຍລະ 1.5 ໃນປີ 2019 ເຖິງ 2020. ຈາກສະຖານະການດັ່ງກວ່າແມ່ນມີຄວາມກ່ຽວຂ້ອງກັບການປ່ຽນແປງທາງດ້ານປະຊາກອນ ໂດຍສະເພາະການປ່ຽນແປງທາງດ້ານອັດຕາການເກີດ ແລະ ການເສຍຊີວິດຈາກອັດຕາທີ່ສູງມາເປັນອັດຕາຕໍ່າ. ນອກຈາກນັ້ນ, ເນື່ອງຈາກການຫຼຸດລົງຂອງອັດຕາການຈະເລີນພັນໃນປະເທດຈາກການເຄື່ອນຍ້າຍຖິ່ນຖານນັບຕັ້ງແຕ່ປີ 1980 ຈຶ່ງເຮັດໃຫ້ການປ່ຽນແປງທາງປະຊາກອນເພີ່ມຂຶ້ນ.

[14] The country makes a distinction between household population in reference to persons who regularly live in a particular household, including those temporarily residing abroad, and institutional population which includes residents of dormitories or boarding houses. As of 2015 PHC data, 97 per cent of the total population belonged to the household population category.

[15] The annual population growth rate has fluctuated over time due to historical factors.

### ຮູບສະແດງທີ 27. ປະຊາກອນລວມທັງໝົດ ແລະ ຄ່າສະເລ່ຍການຂະຫຍາຍຕົວປະຈຳປີ, 1950 - 2020




*ແຫຼ່ງທີ່ມາ:* ຜູ້ຂຽນໄດ້ຂະຫຍາຍມາຈາກ DESA, 2020.

*ສິ່ງສຳຄັນ:* ຈຳນວນປະຊາກອນທັງໝົດເປັນຂອງວັນທີ 1 ມັງກອນ.

### *2.1.2.* ການຂະຫຍາຍຕົວເມືອງ

ຄຳນິຍາມຂອງຄຳວ່າ "ຕົວເມືອງ" ນັ້ນແມ່ນຄຳສະເພາະສຳຫຼັບປະເທດ ເຊິ່ງໝູ່ບ້ານທີ່ສາມາດຖືກຈັດເປັນຕົວເມືອງໄດ້ຢ່າງໜ້ອຍຕ້ອງປະກອບມີ ສາມລັກສະນະອີງປະກອບຕໍ່ໄປນີ້ (LSB, 2015):

- ຕັ້ງຢູ່ໃນເທດສະບານເມືອງ ຫຼື ໃຈກາງຂອງແຂວງ.
- ຫຼາຍກວ່າຮ້ອຍລະ 70 ຂອງຫລັງຄາເຮືອນໃນໝູ່ບ້ານແມ່ນມີໄຟຟ້າໃຊ້
- ຫຼາຍກວ່າຮ້ອຍລະ 70 ຂອງຫລັງຄາເຮືອນໃນໝູ່ບ້ານແມ່ນມີນໍ້າປະປາໃຊ້
- ໝູ່ບ້ານມີທີ່ນທາງເຂົ້າອອກໄດ້ທັງສອງລະດູ
- ໝູ່ບ້ານມີຕະຫຼາດຖາວອນທີ່ເປີດໝົດມື້

ອີງໃສ່ຄຳນິຍາມນີ້ ການຂະຫຍາຍຕົວເມືອງໄດ້ກາຍເປັນປັດໃຈສຳຄັນໃນການປ່ຽນແປງທາງດ້ານປະຊາກອນພາຍໃນປະເທດ. ຈາກຂໍ້ມູນທີ່ມີຢູ່ໄດ້ສະແດງໃຫ້ເຫັນວ່າປະຊາກອນລາວທີ່ອາໄສຢູ່ຕົວເມືອງໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ ແຕ່ມີອັດຕາການຂະຫຍາຍຕົວທີ່ແຕກຕ່າງກັນໃນແຕ່ລະຊ່ວງໄລຍະເວລາ. ຮູບສະແດງທີ 28 ສະແດງໃຫ້ເຫັນວ່າຮ້ອຍລະ 7.2 ຂອງປະຊາກອນແມ່ນອາໄສຢູ່ໃນຕົວເມືອງໃນປີ 1950. ຫຼັງຈາກ ສີ່ ທົດສະວັດຜ່ານໄປໃນປີ 1950 ເຖິງ 1990 ອັດຕາສ່ວນຂອງປະຊາກອນທີ່ອາໄສຢູ່ຕົວເມືອງເພີ່ມຂຶ້ນສອງເທົ່າ ແລະ ເພີ່ມຂຶ້ນເຖິງຮ້ອຍລະ 15.4 ໃນຂະນະທີ່ການເພີ່ມຂຶ້ນສອງເທົ່ານຂອງຄັ້ງຕໍ່ມາແມ່ນເພີ່ມຂຶ້ນເຖິງຮ້ອຍລະ 33.1 ເຊິ່ງອັດຕາສ່ວນເຫຼົ່ານີ້ໃຊ້ເວລາພຽງແຕ່ 20 ປີເທົ່ານັ້ນ ຄາດຄະເນວ່າອັດຕາສ່ວນຂອງພົນລະເມືອງທີ່ອາໄສຢູ່ໃນຕົວເມືອງຂອງປະຊາກອນທັງຫມົດອາດຈະເພີ່ມຂຶ້ນເຖິງຮ້ອຍລະ 55.7 ໃນປີ 2050. ການເພີ່ມຂຶ້ນໃນລັກສະນະນີ້ເຮັດ

ໃຫ້ເຫັນເຖິງຄວາມໄວຂອງການຂະຫຍາຍຕົວເມືອງເຫັນໄດ້ຊັດເຈນໃນປີ 1990 ແລະການຂະຫຍາຍຕົວແມ່ນໄດ້ຂະຫຍາຍາຊ້າລົງຫຼັງຈາກປີ 2005 ເປັນຕົ້ນມາ.[16]

ອີງຕາມຂໍ້ມູນການສຳຫຼວດພົນລະເມືອງ ແລະ ປະຊາກອນ PHC, ອັດຕາສ່ວນຂອງປະຊາກອນໃນຕົວເມືອງເພີ່ມຂຶ້ນປະມານຮ້ອຍລະ 6 ໃນລະຫວ່າງປີ 2005 ເຖິງ 2015 ເພີ່ມຂຶ້ນຈາກຮ້ອຍລະ 27 ມາເປັນຮ້ອຍລະ 33. ປະຊາກອນທີ່ອາໄສຢູ່ໃນເຂດຊົນນະບົດແມ່ນກວມເອົາຮ້ອຍລະ 67 ຂອງຈຳນວນຂອງປະຊາກອນທັງໝົດທົ່ວປະເທດໃນປີ 2015, ໃນນັ້ນຮ້ອຍລະ 59 ແມ່ນອາໄສຢູ່ໃນເຂດຊົນນະບົດທີ່ມີເສັ້ນທາງເຂົ້າເຖິງ ແລະຮ້ອຍລະ 8 ບໍ່ມີເສັ້ນທາງ. ສຳຫຼັບອັດຕາສ່ວນຂອງປະຊາຊົນຜູ້ຖືສອງສັນຊາດຄວບກັນທີ່ອາໄສຢູ່ໃນຊົນນະບົດທີ່ມີເສັ້ນທາງເຂົ້າເຖິງແມ່ນເພີ່ມຂຶ້ນຢ່າງຫຼວງຫຼາຍຄິດເປັນຮ້ອຍລະ +24.4 ເຊິ່ງການເຄື່ອນຍ້າຍຖິ່ນຖານທັງພາຍໃນແລະອອກຕ່າງປະເທດແມ່ນປັດໄຈທີ່ສຳຄັນໃນການຂັບເຄື່ອນການປ່ຽນແປງທາງດ້ານປະຊາກອນ. ເຖິງຢ່າງໃດກໍຕາມ, ພວກເຮົາຍັງບໍ່ທັນສາມາດຮູ້ໄດ້ເຖິງຈຳນວນທີ່ແນ່ນອນນັ້ນເພີ່ມຂຶ້ນເທົ່າໃດ ເນື່ອງຈາກມີການສ້າງຖະໜົນເພີ່ມຂຶ້ນ ຫຼື ຈາກການທີ່ປະຊາຊົນເຄື່ອນຍ້າຍໄປຍັງໝູ່ບ້ານທີ່ມີຖະໜົນ.

**ຮູບສະແດງທີ 28. ປະຊາກອນທີ່ອາໄສຢູ່ຕົວເມືອງ ແລະ ຊົນນະບົດ ແລະ ຄ່າສະເລ່ຍປະຈຳປີຂອງປະຊາກອນໃນຕົວເມືອງ, ປີ 1950 ເຖິງ 2050 (ຄິດເປັນຮ້ອຍລະ ແລະ ຫົວໜ່ວຍພັນ)**




*ແຫຼ່ງທີ່ມາ.* ຜູ້ຂຽນໄດ້ຂະຫຍາຍມາຈາກ DESA, 2020.

*ສິ່ງສຳຄັນ.* ອັດຕາສ່ວນປະຈຳປີຂອງປະຊາກອນໃນໄລຍະກາງປີທີ່ອາໄສຢູ່ໃນຕົວເມືອງ. ການຄາດຄະເນເລີ່ມແຕ່ປີ 2022 ເປັນຕົ້ນໄປ. ຂໍ້ມູນເກັບກຳຈາກສຳມະໂນຄົວໃນປີ 1958, 1966, 1973, 1985, 1995, 2005 ແລະ 2015.

[16] The process whereby a defined territory experiences a gradual increase in proportion of population that live in urban areas (PHC, 2015).

*2.1.3.* ອັດຕາການຄິດໄລ່ຂອງຈຳນວນຜູ້ເຄື່ອນຍ້າຍຖິ່ນຖານ

ອັດຕາການຄິດໄລ່ຂອງຈຳນວນຜູ້ເຄື່ອນຍ້າຍຖິ່ນຖານແມ່ນອັດຕາການປ່ຽນແປງຂອງຈຳນວນຄົນເຂົ້າເມືອງລົບກັບຈຳນວນຜູ້ທີ່ເຄື່ອນຍ້າຍອອກນອກປະເທດ ລວມທັງພົນລະເມືອງລາວ ແລະ ຜູ້ທີ່ບໍ່ແມ່ນພົນລະເມືອງລາວ ເຊິ່ງສະແດງໃຫ້ເຫັນເຖິງການເຄື່ອນຍ້າຍຖິ່ນຖານທີ່ມີສ່ວນເຮັດໃຫ້ເກີດການປ່ຽນແປງທາງດ້ານປະຊາກອນໂດຍລວມ. ຮູບສະແດງທີ 29 ຊີ້ໃຫ້ເຫັນເຖິງອັດຕາການຄິດໄລ່ຂອງຈຳນວນຜູ້ເຄື່ອນຍ້າຍຖິ່ນຖານຕໍ່ປະຊາກອນ 1,000 ຄົນ ແລະອັດຕາການຄິດໄລ່ຂອງຈຳນວນຜູ້ເຄື່ອນຍ້າຍຖິ່ນຖານທີ່ຄິດເປັນຮ້ອຍລະໃນການເຄື່ອນຍ້າຍເຂົ້າມາໃນ ສປປ ລາວ ໃນໄລຍະ 5 ປີ ລະຫວ່າງປີ 1975 ເຖິງ 2020.

ອັດຕາການຄິດໄລ່ຂອງຈຳນວນຜູ້ເຄື່ອນຍ້າຍຖິ່ນຖານແມ່ນຍັງຕິດລົບຢ່າງຕໍ່ເນື່ອງ ຍ້ອນພົນລະເມືອງລາວມີການເຄື່ອນຍ້າຍອອກນອກປະເທດເປັນຈຳນວນຫຼວງຫຼາຍ. ຢ່າງໃດກໍຕາມ ກໍ່ມີອັດຕາການປ່ຽນແປງທີ່ແຕກຕ່າງກັນຢ່າງຫຼວງຫຼາຍໃນໄລຍະເວລາຜ່ານມາ. ໃນປີ 1975 ມີຄ່າເທົ່າກັບຮ້ອຍລະ -4.6 ເຊິ່ງໃນລະຫວ່າງປີ 1980 ຫາ 1985 ພົນລະເມືອງລາວທີ່ໜີໄພສົງຄາມກາງເມືອງໄດ້ກັບຄືນປະເທດເພື່ອໄປຕັ້ງຖິ່ນຖານຄືນໃໝ່ ຫຼື ສ້າງສາຍພົວພັນທາງການຄ້າ. ຈາກປີ 1980 ຫາ 1985, ອັດຕາການຄິດໄລ່ຂອງຈຳນວນຜູ້ເຄື່ອນຍ້າຍຖິ່ນຖານເພີ່ມຂຶ້ນຢ່າງໄວຈາກຮ້ອຍລະ -0.4 ເປັນຮ້ອຍລະ -6.2 ໃນປີ 1995 ເຖິງ 2000 ເຮັດໃຫ້ນັບຕັ້ງແຕ່ນັ້ນມາ ຄວາມແຕກຕ່າງລະຫວ່າງການເຄື່ອນຍ້າຍຖິ່ນຖານຂອງຄົນເຂົ້າ ແລະ ອອກເມືອງ ຫຼຸດລົງເຖິງຮ້ອຍລະ -1.4 ໃນປີ 2015 ເຖິງ 2020.

ເປັນເວລາຫຼາຍປີທີ່ ສປປ ລາວ ມີອັດຕາການຄິດໄລ່ຂອງຈຳນວນຜູ້ເຄື່ອນຍ້າຍຖິ່ນຖານຕິດລົບຫຼາຍທີ່ສຸດຂອງບັນດາກຸ່ມປະເທດອາຊຽນ (DESA, 2019). [17] ດັ່ງທີ່ໄດ້ອະທິບາຍໄວ້ກ່ອນໜ້ານີ້, ເຫດຜົນຫຼັກທີ່ເຮັດໃຫ້ອັດຕາຄົນຂອງຜູ້ເຄື່ອນຍ້າຍຖິ່ນຖານສູງແມ່ນການສະແຫວງຫາໂອກາດວຽກເຮັດງານທຳທີ່ມີຄ່າແຮງງານສູງຂຶ້ນ ແລະ ການພັດທະນາທັກສະຝີມືແຮງງານ. ນອກຈາກນີ້ ບົດບາດຂອງເຄືອຂ່າຍ (ສັງຄົມ) ແລະ ຂໍ້ມູນຕຳແໜ່ງງານແມ່ນມີສ່ວນດຶງດູດໃຫ້ແຮງງານລາວໄປເຮັດວຽກຢູ່ຕ່າງປະເທດໂດຍສະເພາະຢູ່ປະເທດໄທ.

[17] The net migration rate in Cambodia has been negative since 2000–2005 at -0.6%. It was -4.3% in 2005–2010, -2.0% in 2010–2015, and -1.9% in 2015–2020. The net migration rate in Viet Nam has been constantly negative, with a through equal to -1.9% in 2005–2010. The situation was comparable in Myanmar with a structural negative net migration rate. It reached -5.4% in 2005–2010.

ຮູບສະແດງທີ 29. ຕົວເລກ ແລະ ອັດຕາການຄິດໄລ່ຂອງຈຳນວນຜູ້ເຄື່ອນຍ້າຍຖິ່ນຖານ, 1975 ເຖິງ 2020




*ແຫຼ່ງທີ່ມາ:* ອ້າງອີງມາຈາກ DESA, 2020.

*ສິ່ງສຳຄັນ:* ບໍ່ມີຂໍ້ມູນກ່ອນປີ 1975

ສັດສ່ວນຂອງການເຄື່ອນຍ້າຍຖິ່ນຖານແຍກຕາມອາຍຸ ແລະ ເພດໃນໂຄງສ້າງປະຊາກອນລາວໃນປີ 2019 ແມ່ນໄດ້ສະແດງໄວ້ຢູ່ຮູບສະແດງທີ 30. ຜູ້ເຄື່ອນຍ້າຍຖິ່ນຖານທີ່ເກີດຢູ່ໃນຕ່າງປະເທດສ່ວນໃຫຍ່ແມ່ນຄົນຢູ່ໃນກຸ່ມອາຍຸເຮັດວຽກ (ສັງເກດຢູ່ຫົວຂໍ້ 2.3) ເຊິ່ງສັດສ່ວນຂອງຜູ້ເຄື່ອນຍ້າຍຖິ່ນຖານເພດຊາຍທີ່ຢູ່ໃນຊ່ວງອາ ຍຸລະຫວ່າງ 25 ເຖິງ59 ປີ ແມ່ນມີຫຼາຍກວ່າສອງເທົ່າຂອງປະຊາກອນເພດຊາຍທັງໝົດ ໃນຂະນະທີ່ສັດສ່ວນຂອງຜູ້ທີ່ເຄື່ອນຍ້າຍຖິ່ນຖານທີ່ມີອາຍຸຕໍ່າກວ່າ 20 ປີນັ້ນແມ່ນຕໍ່າກວ່າປະຊາກອນທັງໝົດຢ່າງຊັດເຈນ ປະມານຮ້ອຍລະ 2.5 ຂອງຜູ້ເຄື່ອນຍ້າຍຖິ່ນຖານທີ່ເປັນເພດຊາຍແມ່ນຢູ່ໃນຊ່ວງອາຍຸລະຫວ່າງ 25 ເຖິງ 39 ປີເມື່ອສົມທຽບໃສ່ປະຊາກອນທັງໝົດມີພຽງຮ້ອຍລະ 13 ຂອງປະຊາກອນເພດຊາຍ ແລະ ຜູ້ເຄື່ອນຍ້າຍຖິ່ນຖານເພດຍິງທີ່ມີອາຍຸຫຼາຍກວ່າ 25 ປີແມ່ນມີລັກສະນະຄ້າຍຄືກັບໂຄງສ້າງປະຊາກອນເພດຍິງ.

### ຮູບສະແດງທີ 30. ການແຈກກະຈາຍທາງດ້ານອາຍຸແລະເພດຂອງແຮງງານເຄື່ອນຍ້າຍສາກົນ ແລະ ຈຳນວນປະຊາກອນທັງໝົດ, 2019




*ແຫຼ່ງທີ່ມາ:* ຂໍ້ມູນກ່ຽວກັບ ສປປ ລາວ DESA (2019) .

ນອກຈາກນັ້ນ ໃນບົດລາຍງານການສຳຫຼວດພົນລະເມືອງ ແລະ ປະຊາກອນ PHC 2015 (LSB, 2015) ທີ່ອະທິບາຍໄດ້ໄວ້ວ່າ ອຳນາດການປົກຄອງແຫ່ງຊາດໄດ້ຄາດການເຖິງສະຖານະການຂອງການເຄື່ອນຍ້າຍອອກນອກປະເທດໃນຊ່ວງໄລຍະກາງອາດຈະເພີ່ມຂຶ້ນ ນີ້ກໍ່ເນື່ອງມາຈາກຄວາມອິດສະຫຼະຂອງສະມາຊິກໃນຄອບຄົວທີ່ອະນຸຍາດໃຫ້ເພດຍິງສາມາດຊອກຫາວຽກເຮັດໄດ້ໃນປະເທດອື່ນໆ ຫຼື ສາມາດແຕ່ງງານກັບຄົນຕ່າງປະເທດ ແລະ ສາມາດຕິດຕາມໄປຢູ່ກັບສາມີຂອງເຂົາເຈົ້າໄດ້ ເຮັດໃຫ້ມີຜົນກະທົບຕໍ່ອັດຕາສ່ວນທາງດ້ານເພດໃນປະເທດເຊິ່ງອາດຈະເຮັດໃຫ້ອັດຕາສ່ວນຂອງເພດຊາຍຫຼາຍຂຶ້ນ.

## 2.2.ການເຄື່ອນຍ້າຍຖິ່ນຖານ ແລະ ການພັດທະນາເສດຖະກິດ

ການພັດທະນາເສດຖະກິດຫຼືເອີ້ນວ່າການຂະຫຍາຍຕົວທາງດ້ານເສດຖະກິດ ຫມາຍເຖິງການສ້າງຄວາມຮັ່ງມີທີ່ຜົນປະໂຫຍດ ແລະ ຄວາມກ້າວຫນ້າໃຫ້ແກ່ສັງຄົມ. ພາກທີ 2.2 ແມ່ນໄດ້ສະເໜີກ່ຽວກັບທ່າອ່ຽງທາງເສດຖະກິດຂອງ ສປປ ລາວ ຈົນເຖິງປີ 2027 ແລະ ປະເມີນບົດບາດຂອງການເຄື່ອນຍ້າຍຖິ່ນຖານຜ່ານການໂອນເງິນກັບຄືນບ້ານໃນເສດຖະກິດມະຫາພາກແຫ່ງຊາດ.

### *2.2.1. ທ່າອ່ຽງທາງເສດຖະກິດມະຫາພາກ*

ທ່າອ່ຽງທາງເສດຖະກິດໄດ້ໃຫ້ລະອຽດໃນການຄາດຄະເນກ່ຽວກັບບັນດາຕົວຊີ້ວັດຫຼັກໆຂອງເສດຖະກິດມະຫາພາກຂອງ ສປປ ລາວ ໃນຊ່ວງປີທີ່ຜ່ານມາ ແລະ ໄດ້ລວມເອົາອັດຕາການເຕີບໂຕຂອງ GDP ເຊິ່ງໝາຍເຖິງອັດຕາການເຕີບໂຕຂອງ GDP ຕໍ່ຫົວຄົນ ແລະ ຕົວເລກປັດຈຸບັນທີ່ຄິດເປັນສ່ວນຮ້ອຍຂອງ GDP ໃນຊ່ວງປີ 2017-2027.

ຮູບສະແດງທີ 31 ໄດ້ສະແດງໃຫ້ເຫັນເຖິງອັດຕາການເຕີບໂຕທາງດ້ານ GDP ຂອງ ສປປ ລາວ ໃນຊ່ວງໄລຍະປີ 2017 - 2024 (ຄ່າຕົວຈິງ ແລະ ການຄາດຄະເນ) ເຊິ່ງຜົນການສຳຫຼວດສະແດງໃຫ້ເຫັນວ່າ ຫຼັງຈາກການເຕີບໂຕທາງເສດຖະກິດຢ່າງວ່ອງໄວໃນລະຫວ່າງປີ 2017 ເຖິງ 2019 ອັດຕາການເຕີບໂຕໄດ້ຫຼຸດລົງໃນປີ 2020 (ຮ້ອຍລະ 3.3) ເນື່ອງຈາກແຜ່ລະບາດຂອງພະຍາດ COVID-19 ແລະ ເສດຖະກິດຂອງ ສປປ ລາວ ໄດ້ກັບມາເຕີບໂຕອີກຄັ້ງໃນປີ 2021 (ຮ້ອຍລະ 3.5). ທາງດ້ານ IMF ໄດ້ຄາດການວ່າສຳຫຼັບປີ 2022, 2023, ແລະ 2024 ອັດຕາການເຕີບໂຕຈະເພີ່ມຂຶ້ນເປັນຮ້ອຍລະ 3.2, 3.5, ແລະ 3.8 ຕາມລຳດັບ.

**ຮູບສະແດງທີ 31. ການເຕີບໂຕທາງດ້ານ GDP, 2017-2024 (ຄິດເປັນຮ້ອຍລະ)**




*ແຫຼ່ງທີ່ມາ:* ຂໍ້ມູນທີ່ ເປັນທາງການ.

*ສິ່ງສຳຄັນ:* ປີ* = ການຄາດຄະເນໃນປີ 2022-2024 ອີງຕາມການຄາດຄະເນເສດຖະກິດພາກພື້ນຂອງ IMF: ອາຊີແລະປາຊີຟິກ (IMF, n.d.).

ຕົວຊີ້ວັດເສດຖະກິດມະຫາພາກ ຕົວທີ່ສອງແມ່ນອັດຕາການເຕີບໂຕຂອງ GDP ຕໍ່ຫົວຄົນ ເຊິ່ງອັດຕາຂອງ GPD ຕໍ່ຫົວຄົນແມ່ນຫົວໜ່ວຍວັດແທກການເຕີບໂຕທາງດ້ານເສດຖະກິດຂອງປະເທດຕໍ່ຫົວຄົນ ແລະ ອັດຕາການປ່ຽນແປງຂອງ GDP ທີ່ແທ້ຈິງຕໍ່ຫົວຄົນລະຫວ່າງສອງປີຕິດຕໍ່ກັນ. ໃນລະຫວ່າງປີ 2017 ຫາ 2019, GDP ຕໍ່ຫົວຄົນໄດ້ເພີ່ມຂຶ້ນ ໃນຂະນະທີ່ກຳລັງມີການແຜ່ລະບາດຂອງພະຍາດ COVID-19 (2020 ແລະ 2021) ແມ່ນໄດ້ຫຼຸດລົງຕາມການຄາດຄະເນຢ່າງເປັນທາງການ (ຮູບສະແດງທີ 32), ເລີ່ມຕັ້ງແຕ່ປີ 2022, GPD ຕໍ່ຫົວຄົນແມ່ນຄາດວ່າຈະສືບຕໍ່ຂະຫຍາຍຕົວຊ້າລົງເລື້ອຍໆຕາມການຄາດຄະເນຂອງ IMF.

ຮູບສະແດງທີ 32. ການເຕີບໂຕຂອງ GDP ຕໍ່ຫົວຄົນໃນ ສປປ ລາວ, ປະເທດອາຊຽນ ແລະ ອາຊີ, 2017-2024 (ຄິດເປັນຮ້ອຍລະ)




*ແຫຼ່ງທີ່ມາ:* ຂໍ້ມູນທີ່ ເປັນທາງການ.

*ສິ່ງສຳຄັນ: :* ປີ* = ການຄາດຄະເນໃນປີ 2022 ແລະ 2021ອີງຕາມສະຖິຕິທາງການ. ປີ* = ການຄາດຄະເນໃນປີ 2022 - 2024 ອີງຕາມການຄາດຄະເນເສດຖະກິດພາກພື້ນຂອງ IMF: ອາຊີແລະປາຊີຟິກ (IMF, n.d.).

.

ຕົວຊີ້ວັດເສດຖະກິດມະຫາພາກ ຕົວທີ່ສາມແມ່ນບັນຊີກະແສລາຍວັນ ເຊິ່ງບັນຊີກະແສລາຍວັນແມ່ນສະແດງເຖິງການນຳເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການບໍລິການຂອງປະເທດ ນັ້ນໝາຍເຖິງການຈ່າຍເງິນໃຫ້ແກ່ນັກລົງທຶນຕ່າງປະເທດ ແລະ ການໂອນເງິນເຊັ່ນ: ການຊ່ວຍເຫຼືອຈາກຕ່າງປະເທດ. ສະຖານະການຂອງ ສປປ ລາວໃນໄລຍະປີ 2017 ຫາ 2027 ແມ່ນກົງກັນຂ້າມກັບທ່າອ່ຽງຂອງບັນດາປະເທດ ອາຊຽນ ແລະ ອາຊີ (ຮູບສະແດງທີ 33) ເຊິ່ງ ສປປ ລາວ ມີການຂາດດຸນບັນຊີກະແສລາຍວັນຢ່າງຕໍ່ເນື່ອງຕະຫຼອດໄລຍະໃນປີ 2018 (ຮ້ອຍລະ -13 ຂອງ GDP) ສະພາບການດັ່ງກ່າວແມ່ນສາມາດເຫັນໄດ້ຈາກບັນດາປັດໄຈທີ່ກ່ຽວຂ້ອງ ລວມທັງຄວາມຕ້ອງການພາຍໃນຂອງຈຳນວນສິນຄ້າອຸປະໂພກບໍລິໂພກຈາກຕ່າງປະເທດທີ່ສູງເຊັ່ນ ລົດຍົນ ແລະ ຄວາມຕ້ອງການພາຍນອກກໍ່ນ້ອຍລົງຈາກຄູ່ຮ່ວມມືປະເທດການຄ້າຕົ້ນຕໍ (ຈີນ, ໄທ ແລະ ຫວຽດນາມ) ແລະ ລວມເຖິງສະພາບດິນຟ້າອາກາດທີ່ບໍ່ເອື້ອອຳນວຍ.

### ຮູບສະແດງທີ 33. ບັນຊີກະແສລາຍວັນຂອງ ສປປ ລາວ ປະເທດອາຊຽນ ແລະ ອາຊີ, 2017-2024 (ຄິດເປັນ ຮ້ອຍລະຂອງ GDP)




*ແຫຼ່ງທີ່ມາ:* ຜູ້ຂຽນຂະຫຍາຍມາຈາກການຄາດຄະເນເສດຖະກິດພາກພື້ນຂອງ IMF: ອາຊີແລະປາຊີຟິກ (IMF, n.d.).

*ສິ່ງສຳຄັນ: :* ການຄາດຄະແນໃນປີ 2022-2027

ການຂາດດຸນບັນຊີກະແສລາຍສາມາດເປັນບັນຫາຕໍ່ຄວາມຍືນຍົງ ນັ້ນໝາຍເຖິງການຂາດຄວາມສາມາດດ້ານການເງິນ ເຊິ່ງການໂອນເງິນແມ່ນໜຶ່ງໃນບັນດາແຫຼ່ງເງິນທຶນທີ່ໄຫຼເຂົ້າປະເທດເຊັ່ນ: ການລົງທຶນໂດຍກົງຈາກຕ່າງປະເທດ (FDI), ການຊ່ວຍເຫຼືອດ້ານການພັດທະນາຢ່າງເປັນທາງການ (ODA) ແລະ ການລົງທຶນຫຼັກຊັບທີ່ສາມາດສະໜັບສະໜູນບັນຊີລາຍຈ່າຍຂອງຊາດ.

### *2.2.2.* ການສົ່ງເງິນກັບບ້ານ

- ❖ **ຈຳນວນເງິນຂອງຜູ້ໄດ້ຮັບຈາກການໂອນເງິນກັບບ້ານ**

ດັ່ງທີ່ຮັບຮູ້ໃນ Global Compact for Safe, Orderly and Regular Migration (ສະຫະປະຊາຊາດ, 2018) ແລະ ວາລະ 2030 ສຳລັບການພັດທະນາແບບຍືນຍົງ (ອົງການສະຫະປະຊາຊາດ, 2015a), ການໂອນເງິນກັບບ້ານສາມາດສົ່ງເສີມການເຕີບໂຕແບບລວມສູນ ແລະ ການພັດທະນາແບບຍືນຍົງ ເຊິ່ງເປັນແຫຼ່ງການແລກປ່ຽນເງິນຕາຕ່າງປະເທດ, ສາມາດຮັກສາຄວາມດຸ່ນດ່ຽງຂອງລາຍຈ່າຍ, ການຊ່ວຍເຫຼືອດ້ານການພັດທະນາຢ່າງເປັນທາງການ, ແລະ ການຈັດສັນແຫຼ່ງທຶນໃຫ້ກັບການລົງທຶນທີ່ມີປະສິດທິພາບຫຼາຍຂຶ້ນ ແລະ ການບໍລິການອື່ນໆທາງດ້ານການເງິນ (IOM, 2021b).

ທະນາຄານແຫ່ງ ສປປ ລາວ ໄດ້ເກັບກຳຂໍ້ມູນກ່ຽວກັບການສົ່ງເງິນກັບບ້ານ ເຊິ່ງຢູ່ໃນຊ່ວງພັດທະນາບົດລາຍງານສະພາບການເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ ສະບັບນີ້ແມ່ນມີສອງແຫຼ່ງຂໍ້ມູນທີ່ສາມາດເກັບກຳໄດ້ຄື: ຄ່າແຮງງານຂອງພະນັກງານ ແລະ ການໂອນເງິນຂອງສ່ວນບຸກຄົນ ເຖິງຢ່າງໃດກໍ່ຕາມຂໍ້ມູນທາງດ້ານການໂອນເງິນຂອງຄົວ

ເຮືອນໃນຕ່າງປະເທດແມ່ນຍັງບໍ່ທັນມີເທື່ອ.[18] ພະນັກງານຂອງທະນາໂລກໄດ້ປະເມີນການສົ່ງເງິນກັບບ້ານຂອງສ່ວນບຸກຄົນໂດຍອີງໃສ່ຂໍ້ມູນການຈ່າຍເງິນຂອງ IMF.

ຕາມລະບົບການເຄື່ອນຍ້າຍຖິ່ນຖານ, ສປປ ລາວ ແມ່ນຜູ້ໄດ້ຮັບຈາກການສົ່ງເງິນກັບບ້ານແບບສຸດທິ. ຮູບສະແດງທີ 34 ໄດ້ສະແດງໃຫ້ເຫັນເຖິງວິວັດທະນາການຂອງການໄຫຼ່ເຂົ້າຂອງການໂອນເງິນກັບບ້ານ, ການໄຫຼອອກຂອງການໂອນເງິກັບບ້ານ ແລະ ການໂອນເງິນກັບບ້ານແບບສຸດທິຈາກປີ 2007 ຫາ 2020. ເຊິ່ງນັບຕັ້ງແຕ່ປີ 2007 ຄວາມແຕກຕ່າງລະຫວ່າງການໄຫຼອອກ ແລະ ໄຫຼເຂົ້າຂອງການໂອນເງິນກັບບ້ານແມ່ນເພີ່ມຂຶ້ນຢ່າງຕໍ່ເນື່ອງ ນີ້ສາມາດຢືນຢັນໄດ້ວ່າ ສປປ ລາວ ແມ່ນເປັນປະເທດທີ່ສົ່ງອອກແຮງງານສາກົນ ແຕ່ຄວາມແຕກຕ່າງທີ່ຫຼາຍທີ່ສຸດແມ່ນຈໍານວນເງິນປະມານ 190 ລ້ານ USD ຢູ່ໃນປີ 2019 ທີ່ຫຼຸດລົງຢ່າງໃຫຍ່ຫຼວງມາເປັນປະມານ 135 ລ້ານ USD ໃນປີ 2020 (ທະນາຄານໂລກ, n.d.).

ການໄຫຼ່ເຂົ້າຂອງການໂອນເງິນກັບບ້ານໄດ້ເພີ່ມຂຶ້ນຢ່າງຕໍ່ນື່ອງນັບຕັ້ງແຕ່ປີ 2007 ເຊິ່ງຫຼັງຈາກການເພີ່ມຂຶ້ນເລັກນ້ອຍໃນຊ່ວງໄລຍະ ປີ 2007 ເຖິງ 2010 ກໍ່ໄດ້ມີການເພີ່ມຂຶ້ນຢ່າງວ່ອງໄວໃນລະຫວ່າງປີ 2010 ເຖິງ 2012 (ຈາກ 48 ລ້ານ USD  ເກືອບເຖິງ 200 ລ້ານ USD) ເຊິ່ງອະທິບາຍການເພີ່ມຂຶ້ນໄດ້ໂດຍຈາກການເຄື່ອນຍ້າຍຖິ່ນຖານເຂົ້າໄປປະເທດໄທຕາມການລົງນາມຂອງ MOU ລະຫວ່າງສອງປະເທດ ເຊິ່ງຍອດເງິນການໄຫຼເຂົ້າຂອງການໂອນເງິນກັບບ້ານສູງເຖິງປະມານ 300 ລ້ານ USD ໃນປີ 2019 ກ່ອນທີ່ຈະຫຼຸດລົງເປັນປະມານ 232.2 ລ້ານ USD ໃນຊ່ວງການແຜ່ລະບາດຂອງພະຍາດ COVID-19.

ການໄຫຼອອກຂອງການໂອນເງິນກັບບ້ານໄດ້ເພີ່ມຂຶ້ນຢ່າງຊ້າໆຈາກປີ  2007 ຫາ 2010 ແລະ ຂະຫຍາຍຕົວຢ່າງໄວໃນລະຫວ່າງປີ 2010 ຫາ 2011 ຫຼັງຈາກນັ້ນໃນລະຫວ່າງປີ 2011 ຫາ 2016 ຕົວເລກກໍ່ມີການຫຼຸດລົງເປັນໄລຍະຍາວ ແລະໄດ້ກັບມາເພີ່ມຂຶ້ນໃນໄລຍະສອງປີ (2017 ແລະ 2018) ແລະສືບຕໍ່ຫຼຸດລົງຢ່າງຊ້າໆຈາກປີ 2018 ຈົນເຖິງປີສຸດທ້າຍ. ຕາມຂໍ້ມູນໃນປີ 2020 ສປປ ລາວໄດ້ມີການສົ່ງເງິນອອກໄປຕ່າງປະເທດເຖິງ 96.2 ລ້ານ USD.

[18] For the Migration Profile, data compiled by the World Bank (World Development Indicators) (World Bank, n.d.???) were used.

### ຮູບສະແດງທີ 34. ວິວັດທະນາການຂອງການກະແສເງິນໄຫຼເຂົ້າ, ໄຫຼອອກ ແລະ ການສົ່ງເງິນກັບບ້ານແບບສຸດທິ, 2007 - 2020




*ແຫຼ່ງທີ່ມາ:* ຜູ້ຂຽນຂະຫຍາຍມາຈາກຕົວຊີ້ວັດການພັດທະນາໂລກ (ທະນາຄານໂລກ, n.d.b).

### ❖ ການສົ່ງເງິນກັບບ້ານເຂົ້າໃນປະເທດ

ການສົ່ງເງິນກັບບ້ານຂອງແຮງງານລາວແມ່ນແຫຼ່ງລາຍຮັບທີ່ສຳຄັນພາຍໃນປະເທດ ເຖິງຢ່າງໃດກໍ່ຕາມ ການສົ່ງເງິນກັບບ້ານແມ່ນເປັນພຽງເລັກນ້ອຍຂອງລາຍຮັບ GDP ແຫ່ງຊາດເມື່ອສົມທຽບກັບປະເທດອື່ນໆ.[19] ຮູບສະແດງທີ 35 ສະແດງໃຫ້ເຫັນເຖິງວິວັດທະນາການຂອງການສົ່ງເງິນກັບບ້ານປະກອບເຂົ້າໃສ່ລາຍຮັບ GDP ຕາມຊ່ວງໄລຍະເວລາ (2005 ເຖິງ 2020). ໃນປີ 2005 ການສົ່ງເງິນກັບບ້ານຄິດເປັນຮ້ອຍ 0.03 ຂອງລາຍຮັບ GDP ແລະ ອັດຕາສ່ວນໄດ້ມີການເພີ່ມຂຶ້ນເລັກນ້ອຍເປັນຮ້ອຍລະ 2 ໃນປີ 2012. ຫຼັງຈາກນັ້ນອັດຕາສ່ວນຕໍ່ GDP ແມ່ນມີການຂຶ້ນລົງຢູ່ລະຫວ່າງຮ້ອຍລະ 1.2 ໃນປີ 2016 ມາເປັນຮ້ອຍລະ 1.6 ໃນປີ 2019 ເນື່ອງຈາກມີການເຄື່ອນຍ້າຍກັບຄືນປະເທດຂອງແຮງງານລາວໃນຊ່ວງໄລຍະການແຜ່ລະບາດຂອງພະຍາດ COVID-19 ສະນັ້ນໃນຊ່ວງປີ 2020 ການສົ່ງເງິນກັບປະເທດຈຶ່ງຫຼຸດລົງເມື່ອຄິດເປັນອັດຕາສ່ວນເຂົ້າໃສ່ GDP (ຮ້ອຍລະ 1.2)

ເຖິງແມ່ນວ່າຈະມີຈຳນວນແຮງງານລາວເຮັດວຽກຢູ່ຕ່າງປະເທດຫຼາຍ ແຕ່ປະເທດກໍ່ຍັງບໍ່ໄດ້ຮັບຜົນປະໂຫຍດຈາກການສົ່ງເງິນກັບບ້ານເທົ່າທີ່ຄວນ.

---

[19] As of 2020, Viet Nam (5%); Cambodia (4.9%); Myanmar (2.9%); and Thailand (1.7%). Data available at https://data.worldbank.org/indicator/BX.TRF.PWKR.DT.GD.ZS?most_recent_value_desc=true.

**ຮູບສະແດງທີ 35. ການສົ່ງເງິນກັບບ້ານຂອງສ່ວນບຸກຄົນທີ່ໄດ້ຮັບ (ຄິດເປັນຮ້ອຍລະ ຂອງ GDP )**




*ແຫຼ່ງທີ່ມາ:* ຜູ້ຂຽນຂະຫຍາຍມາຈາກຕົວຊີ້ວັດການພັດທະນາໂລກ (World Bank, n.d.b).

ອີງຕາມຕາຕະລາງການຕິດຕາມການສົ່ງເງິນກັບບ້ານທັງສອງຝ່າຍຈາກຂໍ້ມູນຂອງທະນາຄານໂລກ,[20] ເທດໄທເປັນປະເທດທຳອິດທີ່ ສປປ ລາວ ໄດ້ຮັບເງິນຈາກການເງິນສົ່ງກັບບ້ານໃນປີ 2017 (ດ້ວຍມູນຄ່າ 84.2 ລ້ານ USD) (ທະນາຄານໂລກ, 2017) ຕາມດ້ວຍ ສະຫະລັດ (24.2 ລ້ານ USD); ບັງກະລາເທດ (6,7 ລ້ານ USD); ຝຣັ່ງ (4.9 ລ້ານ USD); ການາດາ (1.9 ລ້ານ USD); ແລະອິດສະຕາລີ (1.4 ລ້ານ USD) ດັ່ງໃນຮູບສະແດງທີ 36.

[20] Estimating bilateral remittances is more problematic than estimating the total volume of remittances received by a single country.

### ຮູບສະແດງທີ 36. ບັນດາປະເທດອັນດັບຕົ້ນທີ່ແຮງງານສົ່ງເງິນກັບບ້ານ, 2017 (ສະກຸນເງິນ USD ລ້ານ)




*ແຫຼ່ງທີ່ມາ:* ຜູ້ຂຽນຂະຫຍາຍມາຈາກທະນາຄານໂລກ World Bank. ຂໍ້ມູນກ່ຽວກັບການເຄື່ອນຍ້າຍຖິ່ນຖານ ແລະ ການສົ່ງເງິນກັບບ້ານ: ຕາຕະລາງການຕິດຕາມການສົ່ງເງິນກັບບ້ານທັງສອງຝ່າຍຈາກຂໍ້ມູນຂອງທະນາຄານໂລກ (ສະບັບທີ່ ເດືອນເມສາ 2016) ມີຢູ່ທີ່ www.worldbank.org/en/topic/migrationremittancesdiasporaissues/brief/migration-remittances-data.

ປະເທດໄທເປັນປະເທດຕົ້ນທາງຫຼັກຂອງການໂອນເງິນຂາເຂົ້າທີ່ມີໂຄງສ້າງ ຕົວເລກດັ່ງກວ່າອາດຈະປະເມີນຄ່າຫນ້ອຍເກີນໄປເນື່ອງຈາກບໍ່ໄດ້ລວບລວມເອົາຂໍ້ມູນຈາກຜູ້ປະກອບການໂອນເງິນເຊັ່ນ Western Union ແລະ MoneyGram ແລະຊ່ອງທາງສ່ວນຕົວທີ່ບໍ່ເປັນທາງການ (DRI ແລະ IOM, 2022; IOM, 2016).[21, 22] ຈາກການສຶກສາຂອງອົງການ IOM ຄັ້ງລ່າສຸດ (2021c) ຄາດຄະເນວ່າຕົວເລກການສົ່ງເງິນກັບບ້ານຈາກປະເທດໄທ ທີ່ສົ່ງໄປ ສປປ ລາວ ລວມທັງໝົດມີປະມານ 332.5 ລ້ານ USD ໃນປີ 2019 (ຕົວເລກທາງການແມ່ນ 199.5 ລ້ານ USD).

ການສົ່ງເງິນກັບບ້ານຜ່ານການໂອນເງິນແມ່ນຕ້ອງໄດ້ເສຍຄ່າທຳນຽມ ເມື່ອເປັນແນວນັ້ນ ຜູ້ສົ່ງເງິນຕ້ອງຈ່າຍຄ່າບໍລິການ ເຊິ່ງຄ່າໃຊ້ຈ່າຍຂອງທຸລະກຳການສົ່ງເງິນແມ່ນລວມມີຄ່າທຳນຽມທີ່ເກັບຈາກຕົວແທນທີ່ສົ່ງ ແລະ ຈາກຄ່າທຳນຽມປົກກະຕິທີ່ຜູ້ສົ່ງຕ້ອງຈ່າຍ, ແລະລວມເຖິງຄ່າທຳນຽມຈາກການແລກປ່ຽນສະກຸນເງິນທ້ອງຖິ່ນໄປເປັນສະກຸນເງິນອື່ນ ເຊິ່ງຜູ້ປະກອບການຂະຫນາດນ້ອຍບາງລາຍໄດ້ຄິດໄລ່ຄ່າທຳນຽມຈາກການສົ່ງເງິນກັບບ້ານ.

[21] The World Bank relies on credits to the balance of payments data file of the IMF as reported by central banks. Most central banks use remittance data reported by commercial banks and leave outflows through money transfer operators and informal personal channels.

[22] The field visit conducted in October 2022 confirmed the use of informal channels to remit. See Annex I.

ໜຶ່ງໃນໂອນເງິນທີ່ມີຄ່າໃຊ້ຈ່າຍສູງທີ່ສຸດໃນບັນດາປະເທດພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ ແມ່ນປະເທດໄທ ທີ່ສົ່ງເງິນກັບບ້ານໄປຍັງ ສປປ ລາວ. ໂດຍສະເລ່ຍແລ້ວມີຄ່າໃຊ້ຈ່າຍຮ້ອຍລະ 11.35 ຂອງຈຳນວນເງິນທີ່ສົ່ງກັບບ້ານ (ທະນາຄານໂລກ, n.d.). ເຊິ່ງສ່ວນຕ່າງແມ່ນ ຫາກວ່າຕ້ອງສົ່ງເງິນກັບບ້ານ 200 USD ນັ້ນຄ່າໃຊ້ຈ່າຍທັງໝົດແມ່ນ 22.71 USD (ໄຕມາດທີ່ສີ່ຂອງປີ 2021).[23]

❖ **ການສົ່ງເງິນກັບບ້ານອອກນອກປະເທດ**

ເນື່ອງຈາກຈຳນວນຜູ້ຍົກຍ້າຍຖິ່ນຖານເຂົ້າມາໃນປະເທດຂ້ອນຂ້າງຕ່ຳເມື່ອທຽບໃສ່ກັບແຮງງານລາວເຄື່ອນຍ້າຍໄປຕ່າງປະເທດ ສະນັ້ນການສົ່ງເງິນກັບບ້ານອອກນອກປະເທດແມ່ນຢູ່ໃນລະດັບປານກາງ, ບໍ່ເກີນຮ້ອຍລະ 0.86 ຂອງ GDP ລາວ. ໃນປີ 2017 ການສົ່ງເງິນອອກຈາກ ສປປ ລາວໄປປະເທດຫວຽດນາມແມ່ນຫຼາຍກວ່າໝູ່ (40,9 ລ້ານ USD); ຕາມດ້ວຍປະເທດຈີນ (17.1 ລ້ານ USD); ແລະປະເທດໄທ (9.7 ລ້ານ USD) (ຮູບສະແດງທີ 37).

ຮູບສະແດງທີ 37. 3 ປະເທດອັນດັບຕົ້ນທີ່ຮັບເງິນຈາກການໂອນເງິນກັບບ້ານ, 2017 (ສະກຸນເງິນ USD ລ້ານ)




*ແຫຼ່ງທີ່ມາ:* ຜູ້ຂຽນຂະຫຍາຍມາຈາກທະນາຄານໂລກ World Bank. ຂໍ້ມູນກ່ຽວກັບການເຄື່ອນຍ້າຍຖິ່ນຖານ ແລະ ການສົ່ງເງິນກັບບ້ານ: ຕາຕະລາງການຕິດຕາມການສົ່ງເງິນກັບບ້ານທັງສອງຝ່າຍຈາກຂໍ້ມູນຂອງທະນາຄານໂລກ (ສະບັບທີ່ ເດືອນເມສາ 2016) ມີຢູ່ທີ່ www.worldbank.org/en/topic/migrationremittancesdiasporaissues/brief/migration-remittances-data.

### *2.2.3.* ການສົ່ງເສີມການເຄື່ອນຍ້າຍກັບຄືນຖິ່ນຖານ ແລະ ການອົບພະຍົບກັບຄືນ.

ໃນຂະນະທີ່ກຳລັງຄົ້ນຄວ້າບົດລາຍງານສະບັບນີ້ ເຫັນວ່າຍັງບໍ່ທັນມີນະໂຍບາຍ ຫຼື ໂຄງການທີ່ໄດ້ຮັບການສະໜັບສະໜູນ ຫຼື ຊຸກຍູ້ຈາກຜູ້ວາງນະໂຍບາຍ ແລະ ການສົ່ງເສີມໃຫ້ພົນລະເມືອງລາວທີ່ອາໄສຢູ່ຕ່າງປະເທດເຂົ້າມາລົງທຶນໃນປະເທດຕົນເອງ. ສຳຫຼັບ ສປປ ລາວ ແມ່ນຍັງບໍ່ທັນຮອງຮັບເລື່ອງການຖືສອງສັນຊາດ ແຕ່ຄົນລາວທີ່ຖືສັນຊາດອື່ນອາດຈະເຂົ້າມາລົງທຶນ ແລະ ອາໄສຢູ່ໃນ ສປປ ລາວ.

## 2.3.ການເຄື່ອນຍ້າຍຖິ່ນຖານ, ການຈ້າງງານ ແລະ ຕະຫຼາດແຮງງານ

[23] The SDG Goal 10.C aims to reduce to less than 3 per cent the cost of remittance transfers and eliminate remittance corridors with costs higher than 5 per cent (United Nations, 2015a).

ຜົນກະທົບຂອງການເຄື່ອນຍ້າຍຖິ່ນຖານເຂົ້າ/ອອກເມືອງ ຕໍ່ກັບຕະຫຼາດແຮງງານ ແລະ ການຈ້າງງານແມ່ນມີຄວາມຊັບຊ້ອນ ແລະ ຂຶ້ນກັບຫຼາຍປັດໃຈ ເຊັ່ນ: ການໃຫ້ຄຳນິຍາມແກ່ຜູ້ເຄື່ອນຍ້າຍຖິ່ນຖານ, ບໍ່ວ່າຈະເປັນຄົນຕ່າງປະເທດ ຫຼື ຄົນທີ່ເກີດຢູ່ຕ່າງປະເທດ, ປະຫວັດ ແລະ ທັກສະຂອງຜູ້ເຄື່ອນຍ້າຍ, ອັດຕາສ່ວນຂອງການເຂົ້າເມືອງ ແລະ ສະພາບທາງເສດຖະກິດ.

ບົດວັນນະກຳ[24] ທີ່ດຶງດູດຄວາມສົນໃຈໃນເລື່ອງຜົນກະທົບຂອງການເຄື່ອນຍ້າຍຖິ່ນຖານອອກນອກ ແລະ ເຂົ້າໃນປະເທດຕໍ່ກັບຕະຫຼາດແຮງງານລາວແມ່ນການຂາດແຄນທາງດ້ານຂໍ້ມູນ ເຊິ່ງເລື່ອງນີ້ໄດ້ຢັ້ງຢືນໂດຍຜູ້ທີ່ໃຫ້ຂໍ້ມູນທີ່ສຳຄັນ ແລະໄດ້ອະທິບາຍວ່າ ຍັງມີຊ່ອງຫວ່າງທາງດ້ານຄວາມຮູ້ ແລະ ການຄົ້ນຄວ້າທີ່ສຳຄັນໃນຂົງເຂດວຽກງານນີ້.

*2.3.1.* ຜົນກະທົບຂອງການເຄື່ອນຍ້າຍຖິ່ນຖານເຂົ້າໃນປະເທດຕໍ່ກັບຕະຫຼາດແຮງງານລາວ

- **ການສະໜອງແຮງງານ ແລະ ການຈ້າງງານໃນ ສປປ ລາວ**

ເນື່ອງຈາກການເຄື່ອນຍ້າຍຖິ່ນຖານເຂົ້າມາໃນ ສປປ ລາວ ມີຂະໜາດນ້ອຍ ສະນັ້ນຈຶ່ງຄາດວ່າຜົນກະທົບໃນລະດັບມະຫາພາກຈາກການເຄື່ອນຍ້າຍເຂົ້າມາໃນປະເທດຕໍ່ກັບຕະຫຼາດແຮງງານ ແລະ ການຈ້າງງານໃນ ສປປ ລາວ ຈຶ່ງບໍ່ມີຫຼາຍ. ເຖິງຢ່າງໃດກໍ່ຕາມ ຜົນກະທົບໃນລະດັບເຂດແຄວ້ນ ແລະ ທ້ອງຖິ່ນແມ່ນມີຄວາມສຳຄັນທີ່ອາດຈະເກີດຂຶ້ນໄດ້.

ແຫຼ່ງຂໍ້ມູນຫຼັກກ່ຽວກັບຕະຫຼາດແຮງງານ ແລະ ການຈ້າງງານແມ່ນມາຈາກຂໍ້ມູນການສຳຫຼວດພົນລະເມືອງ ແລະ ປະຊາກອນ PHC 2015 (LSB, 2015) ແລະ ການສຳຫລວດກຳລັງແຮງງານ LFS ໃນປີ 2010 ແລະ 2017 (LSB, 2018) ເຊິ່ງຂໍ້ມູນສາມາດແຍກອອກຕາມ ເພດ, ອາຍຸ, ລະດັບການສຶກສາ ແລະ ສະຖານທີ່ ແຕ່ບໍ່ສາມາດແຍກຕາມສະຖານະພາບການເຄື່ອນຍ້າຍຖິ່ນຖານໄດ້ຢ່າງເປັນລະບົບ. ດັ່ງນັ້ນ, ຂໍ້ມູນການເຄື່ອນຍ້າຍແຮງງານແມ່ນບໍ່ຄົບຖ້ວນ ແລະ ການແຍກຂໍ້ມູນທີ່ມີຢູ່ແລ້ວຕາມສະຖານະພາບການເຄື່ອນຍ້າຍຖິ່ນຖານຈຶ່ງຖືວ່າມີຄວາມຈຳເປັນ.

### *ປະຊາກອນໃນກຸ່ມອາຍຸເຮັດວຽກ*

ອີງຕາມຂໍ້ມູນການສຳຫຼວດກຳລັງແຮງງານ LFS ໃນປີ 2017, ປະຊາກອນທັງໝົດໃນປີ 2017 (6.9 ລ້ານຄົນ) ໃນນັ້ນມີ 4.8 ລ້ານຄົນແມ່ນຜູ້ທີ່ອາຍຸ 15 ປີ ແລະ ຫຼາຍກວ່າ ເຊິ່ງກວມເອົາຮ້ອຍລະ 69 ຂອງຈຳນວນປະຊາກອນລາວທັງໝົດ ເຊິ່ງອັດຕາສ່ວນໃນການເພິ່ງພາອາໃສ່ແມ່ນຄິດເປັນຮ້ອຍລະ 56 ທີ່ມີຄວາມແຕກຕ່າງກັນລະຫວ່າງຕົວເມືອງ ແລະ ຊົນນະບົດ (ຮ້ອຍລະ 62 ທຽບກັບຮ້ອຍລະ 43 ຕາມລຳດັບ). ປະຊາກອນໃນກຸ່ມອາຍຸເຮັດວຽກແມ່ນ

---

[24] Empirical evidence is difficult to obtain due to methodological challenges, especially the difficulty in establishing the causality between migration and wages, and migration and unemployment.

ກວມເອົາຮ້ອຍລະ 75 ຂອງປະຊາກອນໃນຕົວເມືອງທັງໝົດ ແລະ ຮ້ອຍລະ 66 ແມ່ນປະຊາກອນໃນເຂດຊົນນະບົດ. ຈຳນວນປະຊາກອນເພດຍິງແມ່ນມີປະມານຮ້ອຍລະ 50 ຂອງປະຊາກອນໃນກຸ່ມອາຍຸເຮັດວຽກ.

ຂໍ້ມູນທີ່ແຍກຕາມສະຖານະພາບການເຄື່ອນຍ້າຍຖິ່ນຖານແມ່ນມີຢູ່ໃນຂໍ້ມູນການສຳຫຼວດພົນລະເມືອງ ແລະປະຊາກອນ PHC 2015 ແລະ ການສຳຫຼວດກຳລັງແຮງງານ LFS ປີ 2017 ເຊິ່ງຂໍ້ມູນການສຳຫຼວດພົນລະເມືອງ ແລະ ປະຊາກອນ PHC 2015 ແມ່ນອີງຕາມສັນຊາດ ສ່ວນຂໍ້ມູນການສຳຫລວດກຳລັງແຮງງານ LFS ໃນປີ 2017 ແມ່ນອີງຕາມສັນຊາດ ແລະປະເທດທີ່ເກີດ. ໃນປີ 2015 ປະຊາກອນໃນກຸ່ມອາຍຸເຮັດວຽກຂອງແຮງງານເຄື່ອນຍ້າຍກວມເອົາຮ້ອຍລະ 0.9 ຂອງປະຊາກອນລາວໃນກຸ່ມອາຍຸເຮັດວຽກທັງໝົດ (ຮູບສະແດງທີ 38) ເຊິ່ງອັດຕາສ່ວນນີ້ຫຼຸດລົງເປັນຮ້ອຍລະ 0,2 ໃນປີ 2017 ໂດຍອີງຕາມມາດຖານການເປັນພົນລະເມືອງ ແລະ ຮ້ອຍລະ 0,3 ອີງຕາມປະເທດທີ່ເກີດ.

**ຮູບສະແດງທີ 38. ປະຊາກອນກຸ່ມໃນກຸ່ມອາຍຸເຮັດວຽກຂອງແຮງງານເຄື່ອນຍ້າຍສາກົນແຍກຕາມເພດ, 2015 ເຖິງ 2017**




*ແຫຼ່ງທີ່ມາ:* 2015 PHC and 2017 LFS.

ຂໍ້ມູນການສຳຫຼວດກຳລັງແຮງງານ LFS ໃນປີ 2017 ກ່ຽວກັບປະຊາກອນລາວໃນກຸ່ມອາຍຸເຮັດວຽກຍັງສາມາດແຍກຕາມລະດັບການສຶກສາ ແລະ ສະຖານະພາບການເຄື່ອນຍ້າຍຖິ່ນຖານ (ຮູບສະແດງທີ 39) ໂດຍນຳໃຊ້ຂໍ້ມູນຈາກການສຳຫຼວດກຳລັງແຮງງານ LFS ໃນປີ 2017. ການວິເຄາະສະແດງໃຫ້ເຫັນວ່າ ປະຊາກອນເພດຍິງໃນກຸ່ມອາຍຸເຮັດວຽກແມ່ນມີເງື່ອນໄຂສະເລ່ຍໜ້ອຍກວ່າປະຊາກອນລາວເພດຍິງ. ແຮງງານເຄື່ອນຍ້າຍທີ່ເປັນເພດຍິງສ່ວນ

ໃຫຍ່ (ຮ້ອຍລະ 86) ມີລະດັບການສຶກສາຂັ້ນພື້ນຖານ ຫຼື ໜ້ອຍກວ່າ ເມື່ອທຽບກັບຮ້ອຍລະ 79 ປະຊາກອນເພດຍິງ. ສຳຫຼັບຜູ້ຊາຍຕ່າງປະເທດແມ່ນມີເງື່ອນໄຂໂດຍສະເລ່ຍຫຼາຍກວ່າປະຊາກອນເພດຊາຍໃນປະເທດ.

**ຮູບສະແດງທີ 39. ປະຊາກອນໃນກຸ່ມອາຍຸເຮັດວຽກແບ່ງຕາມເພດ, ລະດັບການສຶກສາ, ແລະ ສະຖານະພາບການເຄື່ອນຍ້າຍຖິ່ນຖານ, 2017**




*ແຫຼ່ງທີ່ມາ:* 2017 LFS.

ຕາມຂໍ້ມູນປະເທດຕົ້ນທາງສະແດງໃຫ້ເຫັນວ່າ ການເຄື່ອນຍ້າຍເຂົ້າມາໃນ ສປປ ລາວ ສ່ວນຫຼາຍແມ່ນມາຈາກພາກພື້ນໂດຍສ່ວນໃຫຍ່ແມ່ນປະເທດອາຊຽນ. ໃນຈຳນວນປະຊາກອນແຮງງານໃນກຸ່ມອາຍຸເຮັດວຽກທີ່ເປັນຄົນຕ່າງປະເທດໃນປີ 2005 ສ່ວນໃຫຍ່ແມ່ນສັນຊາດຫວຽດນາມ (ຮ້ອຍລະ 65) (ຮູບສະແດງທີ 40). ອັດຕາສ່ວນດັ່ງກ່າວໄດ້ຫຼຸດລົງເປັນຮ້ອຍລະ 41 ໃນປີ 2015 ໃນທາງກົງກັນຂ້າມອັດຕາສ່ວນຂອງສັນຊາດຈີນໃນທົ່ວປະເທດໄດ້ເພີ່ມຂຶ້ນຈາກຮ້ອຍລະ 13 ໃນປີ 2005 ເປັນຮ້ອຍລະ 31 ໃນປີ 2015.

### ຮູບສະແດງທີ 40. ປະຊາກອນໃນກຸ່ມອາຍຸເຮັດວຽກທີ່ເປັນຕ່າງປະເທດ, ປີ 2005 ແລະ 2015.




*ແຫຼ່ງທີ່ມາ:* 2005 and 2015 PHC.

ຂໍ້ມູນແຍກຕາມສັນຊາດ ແລະ ເພດທີ່ມີສະເພາະໃນປີ 2015 (ຮູບສະແດງທີ 41) ໄດ້ສະແດງໃຫ້ເຫັນເຖິງສັດສ່ວນທາງດ້ານເພດ. ຕົວຢ່າງ, ຮ້ອຍລະ 81 ຂອງປະຊາກອນໄທໃນກຸ່ມອາຍຸເຮັດວຽກຢູ່ໃນປະເທດແມ່ນເພດຊາຍ ເຊິ່ງປະເທດທີ່ມີອັດຕາສ່ວນທີ່ໜ້ອຍກວ່າແມ່ນປະເທດຈີນ (ຮ້ອຍລະ 72) ແລະ ປະເທດຕົ້ນທາງອື່ນໆ (ຮ້ອຍລະ69) ແລະ ມີຄວາມດຸ່ນດ່ຽງທາງດ້ານເພດຂອງຄົນກຳປູເຈຍ (ຮ້ອຍລະ 53 ເພດຊາຍ) ແລະ ຄົນມຽນມາ (ຮ້ອຍລະ 54 ເພດຊາຍ).

### ຮູບສະແດງທີ 41. ປະຊາກອນໃນກຸ່ມອາຍຸເຮັດວຽກຕາມສັນຊາດ ແລະ ເພດ, 2015




*ແຫຼ່ງທີ່ມາ:* 2015 PHC.

***Unemployed labour force***

ອີງຕາມຂໍ້ມູນແຫ່ງຊາດ, ອັດຕາຄົນຫວ່າງງານໃນທົ່ວປະເທດແມ່ນຢູ່ໃນລະດັບຕ່ຳໃນດ້ານໂຄງສ້າງ ແຕ່ພັດສູງຂຶ້ນ.[25] ອັດຕາການຫວ່າງງານບັນລຸເຖິງຮ້ອຍລະ 3.3 ໃນປີ 2017 ຫຼັງຈາກການຫຼຸດລົງໃນຊ່ວງ 25 ປີທີ່ຜ່ານມາໃນລະຫວ່າງປີ 1995 ຫາ 2010 (ຮູບສະແດງທີ 36). ການຫວ່າງງານຂອງແຮງງານໃນ ສປປ ລາວ ທີ່ແບ່ງຕາມ

[25] Indicator not disaggregated by migratory status.

ສັນຊາດ, ເພດ ແລະ ອາຍຸ ແມ່ນໄດ້ໃຊ້ຂໍ້ມູນຈາກການສໍາຫຼວດພົນລະເມືອງ ແລະ ປະຊາກອນ PHC ປີ 2015 (ຮູບສະແດງ 42) ເຊິ່ງໃນປີ 2017 ຄົນຕ່າງປະເທດໃນກຸ່ມອາຍຸເຮັດວຽກໃນ ສປປ ລາວ ມີ 431 ຄົນທີ່ຫວ່າງງານ (ຮ້ອຍລະ 54) ເຊິ່ງມີຈໍານວນໄວໜຸ່ມທີ່ເປັນຄົນຕ່າງປະເທດທີ່ຫວ່າງງານ (15-24) ແມ່ນມີຈໍານວນ 97 ຄົນໃນປີ 2017 (47 % ຊາຍ).

**ຮູບສະແດງທີ 42. ການຫວ່າງການຂອງແຮງງານເຄື່ອນຍ້າຍຕາມເພດ ແລະ ອາຍຸ, 2015**




*ແຫຼ່ງທີ່ມາ:* 2015 PHC data.

*ສິ່ງສໍາຄັນ: ອີງຕາມສັນຊາດ.*

### *ກໍາລັງແຮງງານທີ່ຖືກຈ້າງງານ*

ການປ່ຽນແປງໃນການຈ້າງງານແມ່ນຖືກນໍາໃຊ້ໂດຍທົ່ວໄປເພື່ອເປັນຕົວຊີ້ວັດຂອງການພັດທະນາເສດຖະກິດໂດຍມີການຕັ້ງສົມມຸດຕິຖານວ່າ ການຈັດສັນວຽກເຮັດງານໃນຂະແໜງກະສິກໍາ ແລະ ຂະແໜງຕົ້ນຕໍອື່ນໆທີ່ປ່ຽນແຮງງານໄປເປັນຂະແໜງອຸດສາຫະກໍາ ແລະ ການບໍລິການ. ໃນຈໍານວນແຮງງານທີ່ຖືກຈ້າງງານ (1,8 ລ້ານຄົນໃນປີ 2017, ໃນນັ້ນຮ້ອຍລະ 52 ເປັນເພດຊາຍ), ຂະແໜງກະສິກໍາຍັງຄົງເປັນຜູ້ຈ້າງຄົນອັນດັບໜຶ່ງໃນທົ່ວປະເທດ (ຮ້ອຍລະ 61.4 ຂອງການຈ້າງງານທັງໝົດໃນປີ 2019) ແຕ່ການປະກອບສ່ວນມີພຽງຮ້ອຍລະ 16 ຂອງ GDP ເຊິ່ງສະທ້ອນໃຫ້ເຫັນເຖິງສະມັດຕະພາບແຮງງານທີ່ຕໍ່າໃນຂະແໜງນີ້. ເມື່ອເວລາຜ່ານໄປ, ອັດຕາສ່ວນການຈ້າງງານໃນຂະແຫນງການດັ່ງກວ່າໄດ້ຫຼຸດລົງຢ່າງຕໍ່ເນື່ອງ (ຮ້ອຍລະ 86.8 ໃນປີ 1991) ແລະ ສະທ້ອນໃຫ້ເຫັນເຖິງການປ່ຽນການຈ້າງງານໄປສູ່ຂະແໜງອຸດສາຫະກໍາ ແລະ ສ່ວນໃຫຍ່ແມ່ນການບໍລິການ. ໃນປີ 2019, ອັດຕາສ່ວນການຈ້າງງານໃນຂະແຫນງການບໍລິການແມ່ນຮ້ອຍລະ 25.6 (ຮ້ອຍລະ 10.4 ໃນປີ 1991) ແລະ ຮ້ອຍລະ 12.9 ໃນຂະແຫນງອຸດສາຫະກໍາ (ຮ້ອຍລະ 2.8 ໃນປີ 1991)

ການແຈກຢາຍແຮງງານເຄື່ອນຍ້າຍຕາມຂະແໜງການແມ່ນມີຂໍ້ມູນຢູ່ໃນການສໍາຫລວດເສດຖະກິດ ໃນປີ 2006 ແລະ ຂໍ້ມູນການສໍາຫຼວດກໍາລັງແຮງງານ LFS ໃນປີ 2017 ເຊິ່ງຊຸດຂໍ້ມູນໃນປີ 2006 ແມ່ນໃຫ້ຂໍ້ມູນກ່ຽວກັບຈໍາ

ນວນຜູ້ເຄື່ອນຍ້າຍຕາມຂະແໜງການ ແຕ່ບໍ່ແຍກຕາມເພດ ແຕ່ຂໍ້ມູນການສໍາຫຼວດກໍາລັງແຮງງານ LFS ໃນປີ 2017 ແມ່ນໄດ້ສະໜອງຂໍ້ມູນທີ່ແຍກຕາມເພດ, ກິດຈະກໍາທາງເສດຖະກິດ ແລະ ສັນຊາດ, ພ້ອມກັບແຍກຕາມສະຖານທີ່ເກີດ (ຮູບສະແດງທີ 43). ມີຄົນຕ່າງປະເທດເພດຍິງທີ່ເຮັດວຽກໃນກະສິກໍາ (ຮ້ອຍລະ 73) ຫຼາຍກວ່າພົນລະເມືອງລາວ (ຮ້ອຍລະ 54%). ນອກຈາກນັ້ນ, ແຮງງານເຄື່ອນຍ້າຍເພດຊາຍສ່ວນຫຼາຍແມ່ນເຮັດວຽກໃນຂະແໜງອຸດສາຫະກໍາ (ຮ້ອຍລະ 28 ທຽບກັບຮ້ອຍລະ 11 ຂອງແຮງງານລາວ) ແລະ ຂະແໜງບໍລິການ (ຮ້ອຍລະ 49 ທຽບກັບຮ້ອຍລະ 27 ຂອງແຮງງານລາວ).

**ຮູບສະແດງທີ 43. ການແຈກຢາຍຂອງການຈ້າງງານຕາມຂະແໜງການ, ເພດ, ແລະສະຖານະພາບການເຄື່ອນຍ້າຍຖິ່ນຖານ, 2017 (ໃນຮ້ອຍລະ)**




*ແຫຼ່ງທີ່ມາ:* 2017 LFS.

ຂໍ້ມູນກ່ຽວກັບການຈ້າງງານແຍກຕາມເພດ, ສະຖານະການເຄື່ອນຍ້າຍຖິ່ນຖານ, ແລະ ລະດັບທັກສະແມ່ນມີຢູ່ໃນປີ 2017 (ຮູບສະແດງທີ 44) ທັງປະຊາກອນລາວ ແລະ ແຮງງານເຄື່ອນຍ້າຍສ່ວນໃຫຍ່ມີທັກສະໃນລະດັບປານກາງ (ຮ້ອຍລະ 80 ແລະຮ້ອຍລະ 65 ຕາມລໍາດັບ). ນອກຈາກນັ້ນ ອັດຕາສ່ວນຂອງແຮງງານເຄື່ອນຍ້າຍທີ່ມີລະດັບທັກສະສູງແມ່ນມີອັດຕາສ່ວນສູງກວ່າແຮງງານລາວໃນປະເທດທັງເພດຍິງ ແລະ ຊາຍ.

ຮູບສະແດງທີ 44. ການຈ້າງງານຕາມເພດ, ລະດັບທັກສະ, ແລະສະຖານະການເຄື່ອນຍ້າຍຖິ່ນຖານ (2017)




*ແຫຼ່ງທີ່ມາ:* 2017 LFS.

ຂໍ້ມູນກ່ຽວກັບການຈ້າງງານແຍກຕາມເພດ, ອາຊີບ, ແລະ ສະຖານະການເຄື່ອນຍ້າຍຖິ່ນຖານແມ່ນມີຢູ່ໃນປີ 2005 ແລະ 2015 ເຊິ່ງຂໍ້ມູນໄດ້ສະແດງໃຫ້ເຫັນວ່າແຮງງານເຄື່ອນຍ້າຍແມ່ນປະກອບອາຊີບອິດສະຫຼະຫຼາຍກວ່າແຮງງານລາວໃນປະເທດໂດຍບໍ່ມີຄວາມແຕກຕ່າງທາງເພດທີ່ຊັດເຈນ (ຮູບສະແດງທີ 45).

**ຮູບສະແດງທີ 45. ການຈ້າງງານຕາມເພດ, ອາຊີບ, ແລະສະຖານະການເຄື່ອນຍ້າຍຖິ່ນຖານ, 2005 ແລະ 2015 (ຄິດເປັນຮ້ອຍລະ)**




*ແຫຼ່ງທີ່ມາ:* 2005 PHC and 2015 PHC.

ຂໍ້ມູນການສຳຫຼວດກຳລັງແຮງງານ LFS ໃນປີ 2017 ໄດ້ສະໜອງຂໍ້ມູນກ່ຽວກັບລາຍໄດ້ສະເລ່ຍຕໍ່ເດືອນໃນສະກຸນເງິນທ້ອງຖິ່ນຂອງພະນັກງານແຍກຕາມເພດ ແລະສະຖານທີ່ເກີດ ຫຼືສັນຊາດ (ຮູບສະແດງທີ 46). ຜົນການຄົ້ນຄວ້າສະແດງໃຫ້ເຫັນວ່າ ຜູ້ທີ່ເຄື່ອນຍ້າຍຖິ່ນຖານບໍ່ວ່າຈະມີເງື່ອນໄຂອັນໃດກໍຕາມແມ່ນມີລາຍຮັບໜ້ອຍກວ່າຄົນທີ່ບໍ່ແມ່ນຜູ້ເຄື່ອນຍ້າຍຖິ່ນຖານ.

**ຮູບສະແດງທີ 46. ລາຍໄດ້ສະເລ່ຍຕໍ່ເດືອນຂອງພະນັກງານຕາມເພດ ແລະ ສະຖານະການເຄື່ອນຍ້າຍຖິ່ນຖານ, 2017 (ສະກຸນເງິນທ້ອງຖິ່ນ)**




*ແຫຼ່ງທີ່ມາ:* LSB, 2018.

*ສິ່ງສຳຄັນ:* 1,000,000 ລາວກີບເທົ່າກັບ 64 USD.

### ❖ ຜົນກະທົບໃນລະດັບຈຸລະພາກຂອງແຮງງານເຄື່ອນຍ້າຍເຂົ້າໃນປະເທດຕໍ່ກັບຕະຫຼາດແຮງງານລາວ

ຂໍ້ມູນກ່ຽວກັບຜົນກະທົບຂອງແຮງງານເຄື່ອນຍ້າຍເຂົ້າມາໃນປະເທດຕໍ່ກັບຕະຫຼາດແຮງງານລາວແມ່ນຍັງບໍ່ມີຂໍ້ມູນຫຼາຍ ເຊິ່ງຂໍ້ມູນໃນເຊີງຄຸນນະພາບທີ່ເກັບກຳໃນລະຫວ່າງການລົງພາກສະຫນາມໃນເດືອນຕຸລາ 2022[26] ທີ່ຜ່ານມານັ້ນສາມາດໃຊ້ຕົວຊີ້ວັດໄດ້ບາງຕົວ ແຕ່ຕ້ອງນຳໃຊ້ຢ່າງລະມັດລະວັງເນື່ອງຈາກຂໍ້ຈຳກັດຂອງວິທີການຂອງຂະໜາດຕົວຢ່າງ ແລະ ສະຖານທີ່ໃນການເກັບກຳຂໍ້ມູນ. ຜູ້ເຂົ້າຮ່ວມຫຼາຍໆຄົນໃນກຸ່ມສົນທະນາ FGDs ຖືວ່າຢູ່ໃນພື້ນທີ່ທີ່ມີຜູ້ເຄື່ອນຍ້າຍຖິ່ນຖານສາກົນເຊິ່ງເຮັດໃຫ້ມີຜົນກະທົບຕໍ່ວຽກງານຂອງເຂົາເຈົ້າ ເຊິ່ງຜູ້ເຂົ້າຮ່ວມໄດ້ເວົ້າເຖິງການແຂ່ງຂັນທີ່ບໍ່ຍຸຕິທຳ, ຍ້ອນວ່າຜູ້ເຄື່ອນຍ້າຍຖິ່ນຖານສາກົນແມ່ນສາມາດເປີດທຸລະກິດຂະໜາດນ້ອຍຂອງຕົນເອງ ແລະ ຈ້າງສະມາຊິກໃນຄອບຄົວ ຫຼື ພີ່ນ້ອງຮ່ວມຊາດຂອງຕົນເອງແທນທີ່ຈະຈ້າງແຮງງານທີ່ເປັນສັນຊາດລາວ. ນອກຈາກນັ້ນ, ຄົນຕ່າງປະເທດໄດ້ຮັບຜົນປະໂຫຍດຫຼາຍກວ່າເນື່ອງຈາກມີທຶນຫຼາຍກວ່າ.

ເພື່ອປ້ອງກັນການແຂ່ງຂັນທີ່ບໍ່ຍຸດຕິທຳໃນຕະຫຼາດແຮງງານທ້ອງຖິ່ນ, ບາງເມືອງໄດ້ເຊັນສັນຍາ (ບົດບັນທຶກຄວາມເຂົ້າໃຈ) ກັບບັນດາບໍລິສັດຕ່າງປະເທດ. ສະນັ້ນ, ຈຶ່ງໄດ້ມີການລົງນາມຂໍ້ຕົກລົງລະຫວ່າງເມືອງປາກລາຍ ກັບບໍລິສັດ

---

[26] See Annex I.

ຈີນ ເພື່ອແກ້ໄຂຈຳນວນແຮງງານພາຍໃນ ແລະ ເພີ່ມການຈ້າງງານຄົນທ້ອງຖິ່ນ. ແນວຄວາມຄິດຂອງຜູ້ເຂົ້າຮ່ວມກຸ່ມສົນທະນາ FGD ຢູ່ໃນເມືອງແມ່ນເປັນໄປທາງບວກ ເນື່ອງຈາກຜູ້ເຂົ້າຮ່ວມເຫັນວ່າການເຄື່ອນຍ້າຍເຂົ້າເມືອງຂອງແຮງງານ ແລະ ການລົງທຶນແມ່ນເປັນໂອກາດໃນການຊອກຫາວຽກເຮັດງານທຳ ແລະ ພັດທະນາທັກສະດ້ານວິຊາການ

*2.3.2.* ຜົນກະທົບຂອງການເຄື່ອນຍ້າຍຖິ່ນຖານອອກນອກແລະພາຍໃນປະເທດຕໍ່ກັບຕະຫຼາດແຮງງານລາວ

ຂໍ້ມູນທາງດ້ານຜົນກະທົບຂອງການເຄື່ອນຍ້າຍຖິ່ນຖານອອກນອກແລະພາຍໃນປະເທດຕໍ່ກັບຕະຫຼາດແຮງງານລາວແມ່ນຍັງບໍ່ທັນມີຫຼາຍ ແລະ ຫຼັກຖານສ່ວນໃຫຍ່ແມ່ນອີງໃສ່ການສຶກສາຄົ້ນຄ້ວາທີ່ມີຢູ່ເລັກນ້ອຍ (Lao Upland Rural Advisory Service, 2015) ແລະ ອີງຕາມຂໍ້ມູນທີ່ໄດ້ບັນທຶກໄວ້.

ຫຼັກຖານທີ່ສະແດງໃຫ້ເຫັນວ່າການຂາດເຂີນທາງດ້ານສີມືແຮງງານ ແລະ ແຮງງານ (ຊົນນະບົດ) ແມ່ນເກີດມາຈາກ 3 ປັດໄຈທີ່ຕິດພັນກັນ ແລະ ສອງຄ້ອງກັນຄື: ການເຄື່ອນຍ້າຍຖິ່ນຖານໄປປະເທດເພື່ອນບ້ານ, ອັດຕາເງິນເຟີ້ສູງ ແລະ ທັກສະທີ່ບໍ່ສອດຄ່ອງ. ຄວາມຕ້ອງການຕະຫຼາດແຮງງານທີ່ມີທັກສະຕໍ່າໃນຂະແໜງການສະເພາະຂອງປະເທດເພື່ອນບ້ານແມ່ນມີຄວາມສຳຄັນຫຼາຍໃນຊ່ວງຊຸມປີທີ່ຜ່ານມາ ແລະ ສະຖານະການໃນປະເທດໄທແມ່ນມີອັດຕາແຮງງານທີ່ຫຼຸດລົງຈາກປີ 2022 ເປັນຕົ້ນມາ ເຊິ່ງໄດ້ເລັ່ງໃຫ້ຄວາມຕ້ອງການທາງດ້ານແຮງງານເຄື່ອນຍ້າຍທີ່ມີທັກສະຕໍ່າ ແລະ ປານກາງມີການເຄື່ອນຍ້າຍເພີ່ມຂຶ້ນ. ດັ່ງນັ້ນ, ການເຄື່ອນຍ້າຍຂອງແຮງງານລາວແມ່ນເຮັດໃຫ້ເກີດບັນຫາການເຄື່ອນຍ້າຍຖິ່ນຖານຊົ່ວຄາວ ສົ່ງຜົນໃຫ້ເກີດຄວາມເຄັ່ງຕຶງໃນຕະຫຼາດແຮງງານທ້ອງຖິ່ນ.

ການສຶກສາດ້ານການບໍລິການທີ່ປຶກສາຊົນນະບົດໃນເຂດພູດອຍຂອງລາວ (2015) ໄດ້ສຳພາດຊຸມຊົນໃນ 8 ໝູ່ບ້ານໂດຍຜ່ານການເກັບກຳຂໍ້ມູນແບບກຸ່ມສົນທະນາ FGDs. ຜົນການຄົ້ນຄ້ວາສະແດງໃຫ້ເຫັນວ່າ, ພໍ່ແມ່ປະຊາຊົນໃນທຸກໝູ່ບ້ານແມ່ນບໍ່ຕ້ອງການໃຫ້ລູກຫຼານສືບຕໍ່ເຮັດໄຮ່ເຮັດນາ, ແລະ ຕ້ອງການໃຫ້ລູກຕົນເອງໄດ້ຮັບການສຶກສາ ແລະ ມີວຽກເຮັດງານທຳ ໂດຍສະເພາະແມ່ນເຮັດວຽກກັບລັດຖະບານ ຫຼື ເຄື່ອນຍ້າຍອອກໄປເຮັດວຽກຢູ່ນອກ ແລະ ສົ່ງເງິນກັບບ້ານ ເຊິ່ງຄວາມຕ້ອງການທີ່ຈະມີຊີວິດທີ່ດີຂຶ້ນເຮັດໃຫ້ເຂົາເຈົ້າສະແຫວງຫາວຽກເຮັດງານທຳທີ່ມີຄ່າຈ້າງແທນທີ່ຈະເປັນແຮງງານທີ່ບໍ່ໄດ້ຮັບຄ່າຈ້າງໃນການເຮັດກະສິກຳຂອງຄອບຄົວ.

ການລົງເກັບກຳຂໍ້ມູນພາກສະໜາມໃນປີ 2022 ໄດ້ຢັ້ງຢືນຜົນການຄົ້ນຄ້ວານີ້ວ່າ[27] ຜູ້ເຂົ້າຮ່ວມໃນການເກັບຂໍ້ມູນທີ່ເປັນກຸ່ມສົນທະນາ FGDs ໄດ້ອະທິບາຍເຖິງການເຄື່ອນຍ້າຍຖິ່ນຖານຂອງສະມາຊິກຄົນໃນຄອບຄົວມີຜົນກະທົບຕໍ່ບົດບາດຂອງຄົນທີ່ຢູ່ເບື້ອງຫຼັງລວມທັງພໍ່ແມ່ ແລະ ຄູ່ສົມລົດຕໍ່ກັບຕະຫຼາດແຮງງານ. ຜູ້ເຂົ້າຮ່ວມທີ່ເປັນເພດຍິງໄດ້ອະທິບາຍວ່າ ເຂົາເຈົ້າໄດ້ຮັບຄ່າຈ້າງຈາກວຽກທີ່ບໍ່ມີຄ່າຈ້າງ ແລະ ຈ້າງຄົນງານໄປເຮັດວຽກໃນຊ່ວງລະດູເກັບກ່ຽວໂດຍໃຊ້ເງິນຂອງແຮງງານເຄື່ອນຍ້າຍທີ່ສົ່ງຄືນບ້ານ ແລະ ຜູ້ຕອບແບບສອບຖາມບາງຄົນລາຍງານວ່າ ຜູ້ເຄື່ອນຍ້າຍ

---

[27] See Annex I.

ຖິ່ນຖານມັກຈະເຄື່ອນຍ້າຍໄປເຮັດວຽກຕາມລະດູການ ແລະ ກັບຄືນມາເມື່ອມີຄວາມຈຳເປັນທີ່ຕ້ອງເຮັດວຽກໃນການເກັບກ່ຽວຢູ່ບ້ານຂອງຕົນ.

## 2.4. ການເຄື່ອນຍ້າຍຖິ່ນຖານ ແລະ ການພັດທະນາສັງຄົມ

ການພັດທະນາສັງຄົມ[28] ແມ່ນການປ່ຽນແປງຕະຫຼອດເວລາຂອງສະພາບການດຳລົງຊີວິດຂອງບຸກຄົນຢູ່ໃນສັງຄົມ ແລະ ໃນຄວາມສຳພັນທີ່ບຸກຄົນເຫຼົ່ານີ້ຮັກສາໄວ້ເຊິ່ງກັນແລະກັນ ແລະ ກຸ່ມອື່ນໆລວມທັງສະຖາບັນ ໂດຍກວມເອົາດ້ານຕ່າງໆເຊັ່ນ: ການສຶກສາ, ສຸຂະພາບ ແລະການຈ້າງງານ ເຊິ່ງສາມາດຮັບຮູ້ໄດ້ໂດຍລະດັບຄວາມທຸກຍາກ, ການກີດກັ້ນ, ການແບ່ງແຍກ, ແລະ ກຸ່ມຜູ້ດ້ອຍໂອກາດທີ່ຕ້ອງການຄວາມຊ່ວຍເຫຼືອຫຼາຍທີ່ສຸດ ເຊິ່ງການເຄື່ອນຍ້າຍຖິ່ນຖານ ແລະ ການໂອນເງິນກັບບ້ານສາມາດປັບປຸງ ຫຼື ເຮັດໃຫ້ຊີວິດການເປັນຢູ່ ແລະ ຄວາມສຳພັນດັ່ງກ່າວຮ້າຍແຮງຂຶ້ນ.

ໃນບົດວັນນະກຳກ່ຽວກັບການໂອນເງິນກັບບ້ານແມ່ນມີ ສອງ ປະເພດໄດ້ແກ່ ການໂອນເງິນກັບບ້ານທາງເສດຖະກິດ ແລະ ທາງສັງຄົມ. ການສົ່ງເງິນກັບບ້ານທາງເສດຖະກິດແມ່ນເງິນທັງໝົດ ແລະ ສິນຄ້າທີ່ຜູ້ເຄື່ອນຍ້າຍສົ່ງຈາກປາຍທາງມາປະເທດຕົ້ນທາງ (Gubert, 2007). ການສົ່ງເງິນກັບບ້ານທາງສັງຄົມ ຫຼື ເອີ້ນວ່າການໂອນເງິນກັບບ້ານທາງສັງຄົມ ແມ່ນແນວຄວາມຄິດ ໃນການສົ່ງເງິນກັບບ້ານ ແລະ ຄວາມຮູ້ໃນການສົ່ງເງິນກັບບ້ານຕາມການເຄື່ອນຍ້າຍຖິ່ນຖານໄປແຕ່ລະສະຖານທີ່ (Levitt, 2001 ແລະ 1998).

### *2.4.1.* ການເຄື່ອນຍ້າຍຖິ່ນຖານ, ການສົ່ງເງິນກັບບ້ານທາງເສດຖະກິດ, ສະພາບການດຳລົງຊີວິດ ແລະ ຄວາມທຸກຍາກ

ໃນປີ 2021 ສປປ ລາວ ເປັນປະເທດທີ່ມີລາຍຮັບປານກາງໃນລະດັບຕ່ຳ ດ້ວຍອັດຕາ GNI ຕໍ່ຫົວຄົນແມ່ນ 2,520 ໂດລາ (ທະນາຄານໂລກ, n.d.a). ໃນຊ່ວງ 20 ປີທີ່ຜ່ານມາອັດຕາ GNI ຕໍ່ຫົວຄົນເພີ່ມຂຶ້ນຈາກ 310 ໂດລາໃນປີ 2001 ເປັນ 2,520 ໂດລາໃນປີ 2021 (ຮູບສະແດງທີ 47). ອັດຕາການເຕີບໂຕຂອງ GNI ຕໍ່ຫົວຄົນໄດ້ຫຼຸດລົງຈາກລະດັບຕ່ຳສຸດຮ້ອຍລະ 2,7 ໃນລະຫວ່າງປີ 2003 ຫາ 2004 ແລະ ເພີ່ມຂຶ້ນສູງສຸດເປັນຮ້ອຍລະ 8,2 ຈາກປີ 2007 ຫາ 2008. ໃນຈຳນວນ 189 ປະເທດທີ່ຈັດອັນດັບໃນດັດຊະນີການພັດທະນາມະນຸດໃນປີ 2021, ສປປ ລາວ

[28] Social development is now known as social sustainability and inclusion by the World Bank (see https://worldbank.org/en/topic/socialsustainability/overview#1),

ແມ່ນຢູ່ໃນອັນດັບ 135 ດ້ວຍມູນຄ່າ 0.607 (UNDP, 2022)[29] ແລະ ດັດຊະນີທຶນມະນຸດແມ່ນ 0.46 (ທະນາຄານໂລກ, 2020a World Bank, 2020a).[30]

### ຮູບສະແດງທີ 47. ລວມຍອດລາຍຮັບແຫ່ງຊາດຕໍ່ຫົວຄົນ (ເປັນ USD ໃນປັດຈຸບັນ) ແລະ ການຂະຫຍາຍຕົວຂອງລາຍຮັບແຫ່ງຊາດລວມຕໍ່ຫົວຄົນ, 2001-2021 (ໃນຮ້ອຍລະ)




*ແຫຼ່ງທີ່ມາ:* ຜູ້ຂຽນຂະຫຍາຍມາຈາກຕົວຊີ້ວັດການພັດທະນາໂລກ, ທະນາຄານໂລກໃຊ້ LECS.

*ສິ່ງສຳຄັນ: ຂໍ້ມູນກ່ຽວກັບການເຕີບໂຕຂອງ* GNI ຕໍ່ຫົວຄົນແມ່ນບໍ່ມີໃນປີ 2017 ເປັນຕົ້ນມາ.

ມີຄວາມຄືບໜ້າທີ່ສຳຄັນໃນການຫລຸດຜ່ອນຄວາມທຸກຍາກໃນປະເທດ ເຊິ່ງແຫຼ່ງທີ່ມາຫຼັກຂອງສະຖິຕິຄວາມທຸກຍາກທີ່ເປັນທາງການແມ່ນ LECS. ທາງສູນສະຖິຕິແຫ່ງຊາດ LSB ໄດ້ຈັດຕັ້ງປະຕິບັດ LECS ໃນໄລຍະຫ້າປີຕັ້ງແຕ່ 1992/93 ແລະຄັ້ງລ່າສຸດໄດ້ຖືກຈັດຕັ້ງປະຕິບັດໃນ 2018/19.

ຜົນກະທົບຂອງການເຄື່ອນຍ້າຍຖິ່ນຖານຕໍ່ກັບຄວາມທຸກຍາກສ່ວນໃຫຍ່ແມ່ນທາງອ້ອມ ໂດຍວັດແທກຈາກການໂອນເງິນກັບບ້ານທາງເສດຖະກິດ. ຈາກການນຳໃຊ້ຂໍ້ມູນ 2011/12 ແລະ 2018/19 LECS, ທາງສູນສະຖິຕິແຫ່ງຊາດ LSB ແລະ ທະນາຄານໂລກ (2020) ໄດ້ວິເຄາະເຫັນ ຜົນກະທົບຂອງການເຄື່ອນຍ້າຍຖິ່ນຖານຕໍ່ກັບການຫຼຸດຜ່ອນຄວາມທຸກຍາກ. ຜົນໄດ້ຮັບສະແດງໃຫ້ເຫັນວ່າເກືອບຮ້ອຍລະ 15 (ໜຶ່ງໃນເຈັດ) ຂອງຄົວເຮືອນລາວແມ່ນໄດ້ຮັບເງິນຈາກການສົ່ງເງິນກັບບ້ານ ເຊິ່ງອັດຕາສ່ວນໄດ້ເພີ່ມຂຶ້ນເກືອບສອງເທົ່າໃນຮອບສິບປີ. ການສົ່ງເງິນ

[29] For information, Thailand was No. 79, Viet Nam was No. 117, Cambodia was No. 144, and Myanmar was No. 147.

[30] The Human Capital Index calculates the contributions of health and education to worker productivity. The final index score ranges from 0 to 1 and measures the productivity as a future worker of child born today relative to the benchmark of full health and complete education. For information, as of 2020, the Human Capital Index of Thailand was 0.6, Viet Nam was 0.7, Cambodia was 0.5, and Myanmar was 0.5 (see https://databank.worldbank.org/source/human-capital-index).

ກັບບ້ານຖືວ່າເປັນການທົດແທນການຈ້າງງານທີ່ບໍ່ໄດ້ຮັບຄ່າຈ້າງໃນຂະແໜງກະສິກຳ ໂດຍສະເພາະແມ່ນຢູ່ໃນເຂດຊົນນະບົດ.

ນອກຈາກນັ້ນ, ການສຶກສາຂອງທະນາຄານໂລກ (2020) ໄດ້ຊີ້ໃຫ້ເຫັນວ່າ ຄົວເຮືອນທີ່ຮັບເງິນຈາກການໂອນເງິນກັບບ້ານແມ່ນມີອັດຕາຄວາມທຸກຍາກຕ່ຳກວ່າຄອບຄົວທີ່ບໍ່ມີການສົ່ງເງິນກັບບ້ານ, ແລະ ອັດຕາສ່ວນຂອງປະຊາກອນມີການເພີ່ມຂຶ້ນ. ອັດຕາຄວາມທຸກຍາກຂອງຄອບຄົວທີ່ໄດ້ຮັບເງິນທີ່ສົ່ງກັບບ້ານໄດ້ຫຼຸດລົງຈາກຮ້ອຍ 13.9 ໃນປີ 2012/13 ມາເປັນຮ້ອຍ 10.2 ໃນປີ 2018/19. ການຄາດຄະເນນີ້ແມ່ນໃຊ້ເຕັກນິກການຈັບຄູ່[31] ໃຫ້ຄະແນນທ່າອ່ຽງເຊິ່ງສະແດງໃຫ້ເຫັນວ່າຄວາມທຸກຍາກຈະເພີ່ມຂຶ້ນຮ້ອຍລະ 2.2 ຖ້າບໍ່ມີການສົ່ງເງິນຄືນກັບບ້ານ ແລະ ຜົນການສຶກສາຄັ້ງລ່າສຸດໄດ້ຢືນຢັນເຖິງອິດທິພົນທາງບວກທີ່ສຳຄັນຂອງການເຄື່ອນຍ້າຍຖິ່ນຖານ ແລະ ການສົ່ງເງິນຄືນຕໍ່ຊີວິດການເປັນຢູ່ ເຊິ່ງກົງກັນຂ້າມກັບບົດບາດທີ່ຈຳກັດຂອງການໂອນເງິນກັບບ້ານທາງສັງຄົມ.

### *2.4.2.* ການເຄື່ອນຍ້າຍຖິ່ນຖານ, ການໂອນເງິນກັບບ້ານທາງສັງຄົມ, ການເຮັດວຽກຮ່ວມກັນຂອງສັງຄົມ ແລະມາດຕະຖານທາງເພດ

ໃນອະດີດຈົນເຖິງປີ 1975 ການເຄື່ອນຍ້າຍ ແລະ ການເຄື່ອນຍ້າຍຖິ່ນຖານສ່ວນໃຫຍ່ແມ່ນເພດຊາຍທີ່ມີການເຄື່ອນຍ້າຍໃນປະເທດຫຼາຍ ເຊິ່ງເພດຊາຍມີອຳນາດຫຼາຍກວ່າເພດຍິງ ນີ້ຫມາຍຄວາມວ່າສາມີເປັນຫົວໜ້າຄອບຄົວ, ແລະມີພາລະບົດບາດໃນການຊອກຫາອາຫານ ແລະ ເຮັດວຽກຢູ່ນອກບ້ານເປັນສ່ວນໃຫຍ່. ສ່ວນຜູ້ເປັນເມຍຕ້ອງຢູ່ເຮືອນເພື່ອເບິ່ງແຍງດູແລລູກ ແລະ ເຮັດອາຫານ ເຊິ່ງເພດຍິງຈະສາມາດເຄື່ອນຍ້າຍໄດ້ກໍ່ເມື່ອຕ້ອງໄປຕະຫຼາດ ຫຼື ແລກປ່ຽນສິນຄ້າ ຈຶ່ງສາມາດເດີນທາງໄປຕະຫຼາດທ້ອງຖິ່ນໃນເມືອງ ຫຼື ແຂວງ (Pavie, 1995).

ນັບແຕ່ປີ 1975 ເປັນຕົ້ນມາ ໄດ້ມີການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ຜ່ານການດຳເນີນງານໂຄງການ the childcare collectivization programme ເພື່ອສະໜອງໂຮງຮຽນອະນຸບານ ແລະ ການລາພັກສຳຫຼັບເກີດລູກຂອງແຮງງານເພດຍິງໂດຍຍັງໄດ້ຮັບຄ່າຈ້າງ, ພ້ອມທັງການຈັດຕັ້ງປະຕິບັດ NEM[32] ໃນປີ 1986 ເປັນຕົ້ນມາ ເຊິ່ງໄດ້ເປີດໂອກາດໃໝ່ໃຫ້ແກ່ເພດຍິງ (ຊົນນະບົດ) ແລະ ນຳໄປສູ່ການເຄື່ອນຍ້າຍຖິ່ນຖານຂອງເພດຍິງ (Hancart Petitet ແລະ Phetchanpheng, 2022). ການຫັນເປັນອຸດສາຫະກຳພາຍໃນປະເທດທີ່ບໍ່ແມ່ນການເຮັດວຽກໃນຂະແໜງກະສິກຳໄດ້ນຳໄປສູ່ການປ່ຽນແປງຕ່າງໆໃນການເຮັດກິດຈະກຳທາງເສດຖະກິດຂອງຄົນພາຍໃນຄອບຄົວ.

---

[31] The technique compares the welfare of households that benefited from remittances to a similar household that did not.

[32] Economic reforms in the Lao People's Democratic Republic started in 1986 when NEM was adopted and steps were taken towards a market-oriented economy. Under NEM, the Government promoted development of the private sectors, deregulating price and production controls (see https://openjicareport.jica.go.jp/pdf/11623592_02.pdf).

ດັ່ງນັ້ນ, ໄວໜຸ່ມເພດຍິງຈຶ່ງເລີ່ມເຄື່ອນຍ້າຍມາຢູ່ນະຄອນຫຼວງວຽງຈັນ ຫຼື ຕົວເມືອງຕ່າງໆ ເພື່ອໄປຮຽນຕໍ່ ຫຼື ເຮັດວຽກໃນໂຮງງານ.

ນອກຈາກນີ້, ການສົ່ງເງິນກັບບ້ານຂອງເພດຍິງສາມາດເຮັດໃຫ້ເກີດມີການປ່ຽນແປງມາດຕະຖານບົດບາດຍິງ-ຊາຍແບບດັ້ງເດີມ ລວມເຖິງການປ່ຽນແປງທາງດ້ານກຸ່ມອາຍຸ ແລະໂຄງສ້າງຄອບຄົວ. ຜົນການຄົ້ນຄວ້າຂອງ Hancart Petitet ແລະ Phetchanpheng (ibid.) ໄດ້ຢືນຢັນຜົນວິໄຈຂອງ Lyttleton ແລະ Vorabuth (2011) ທີ່ວ່າລູກສາວຜູ້ທີ່ເຄື່ອນຍ້າຍຖິ່ນຖານໄດ້ຖືກເບິ່ງວ່າເປັນຜູ້ສະໜັບສະໜູນເສດຖະກິດໃນຄອບຄົວຫຼາຍກວ່າລູກຊາຍ. ສິ່ງດັ່ງກ່າວໄດ້ເຮັດໃຫ້ລູກສາວມີຖານະທາງສັງຄົມເພີ່ມຂຶ້ນ ລວມເຖິງລູກສາວທີ່ຢູ່ໃນຄອບຄົວຂອງຄົນຊົນເຜົ່າ.

ໃນຂະນະດຽວກັນ ການຢູ່ຫ່າງໄກຈາກພໍ່ແມ່ທັງທາງດ້ານຮ່າງກາຍ, ສັງຄົມ ແລະ ທາງດ້ານຈິດໃຈເຮັດໃຫ້ຜູ້ເຄື່ອນຍ້າຍຖິ່ນຖານຖືກຄວບຄຸມທາງສັງຄົມໜ້ອຍລົງ ເຊິ່ງຈາກການທີ່ເຂົາເຈົ້າຕ້ອງປຶກສາຫາລື ແລະ ຮັບຟັງຜູ້ອາວຸໂສໜ້ອຍລົງເຮັດໃຫ້ເຂົາເຈົ້າມີໂອກາດຫຼາຍຂຶ້ນທີ່ຈະທົດລອງສິ່ງໃໝ່ໆໃນການເບິ່ງແຍ່ງຕົວເອງ ແລະ ລວມເຖິງເລື່ອງເພດສຶກສາ, ແຕ່ສິ່ງນີ້ກໍ່ເຮັດໃຫ້ເຂົາເຈົ້າຕ້ອງປະເຊີນກັບສະຖານະການທີ່ມີຄວາມສ່ຽງສູງ (Hancart Petitet ແລະ Phetchanpheng, 2022).

ຕົວຢ່າງອີກອັນໜຶ່ງກ່ຽວກັບຜົນກະທົບຂອງການເຄື່ອນຍ້າຍແຮງງານຕໍ່ການພັດທະນາສັງຄົມແມ່ນກ່ຽວຂ້ອງກັບການຕັດສິນໃຈຂອງພໍ່ແມ່ທີ່ຈະປ່ອຍໃຫ້ລູກຢູ່ກັບປູ່ຍ່າພໍ່ຕູ້ແມ່ຕູ້ ເຊິ່ງການຕັດສິນໃຈໃນລັກສະນະນີ້ແມ່ນຖືວ່າເປັນເລື່ອງປົກກະຕິຫຼາຍໃນກຸ່ມຜູ້ທີ່ໃຫ້ຂໍ້ມູນໃນລະຫວ່າງຖືກສຳພາດໃນການລົງເກັບກຳຂໍ້ມູນພາກສະໜາມໃນເດືອນຕຸລາ 2022.[33] ການສຶກສາຂອງອົງການ IOM ທີ່ຜ່ານມາ (2016) ກ່ຽວກັບແຮງງານລາວທີ່ເຄື່ອນຍ້າຍໄປປະເທດໄທແມ່ນໄດ້ເຫັນເຖິງບັນຫາດັ່ງກວ່າເຊັ່ນກັນ ຄູ່ຜົວເມຍທີ່ແຕ່ງງານແລ້ວສ່ວນໃຫຍ່ໄດ້ຍ້າຍໄປຢູ່ນຳກັນ (ຮ້ອຍລະ 82.9) ໃນຈຳນວນຄູ່ແຕ່ງງານທີ່ມີລູກຕ່ຳກວ່າ 15 ປີ (ຮ້ອຍລະ 72.7) ຫຼາຍກວ່າເຄິ່ງໜຶ່ງ (ຮ້ອຍລະ 58.2) ແມ່ນປ່ອຍລູກໃຫ້ຢູ່ໃນ ສປປ ລາວ, ໃນຂະນະທີ່ຮ້ອຍລະ 34 ແມ່ນເອົາລູກໄປນຳ (ibid.).

ຜົນການຄົ້ນຄວ້ານີ້ຊີ້ໃຫ້ເຫັນວ່າການເຄື່ອນຍ້າຍຖິ່ນຖານມີສ່ວນໃນການປັບໂຄງສ້າງຂອງຄອບຄົວ, ລວມທັງບົດບາດທາງສັງຄົມຂອງແມ່. ແມ່ຕູ້ສ່ວນໃຫຍ່ທີ່ຖືກສຳພາດໃນເວລາເກັບກຳຂໍ້ມູນໄດ້ອະທິບາຍວ່າ ການເບິ່ງແຍງລູກຫຼານນັ້ນຫມາຍເຖິງຄວາມຮັບຜິດຊອບຕ່າງໆ ແລະ ສ່ວນຫຼາຍແມ່ນຄວາມຮັບຜິດຊອບກ່ຽວກັບການສຶກສາຂອງເດັກນ້ອຍ.

### *2.4.3.* ການເຊື່ອມໂຍງທາງສັງຄົມຂອງຜູ້ເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ

ການເຊື່ອມໂຍງທາງສັງຄົມໂດຍທົ່ວໄປແມ່ນວັດແທກຈາກຈຳນວນການແຕ່ງງານລະຫວ່າງເຊື້ອຊາດ ແລະ ການມີປະຕິສຳພັນກັບຊຸມຊົນໃນປະເທດເຈົ້າພາບ. ໃນ ສປປ ລາວ ບໍ່ຄ່ອຍມີໃຜຮູ້ກ່ຽວກັບການລວມຕົວກັນທາງສັງຄົມ

[33] See Annex I.

ຂອງຜູ້ເຄື່ອນຍ້າຍຖິ່ນຖານ ເຊິ່ງຂໍ້ມູນຫຼັກຈາກການເກັບກຳຂໍ້ມູນພາກສະໜາມໃນປີ 2022 ໄດ້ອະທິບາຍວ່າການແຕ່ງງານແມ່ນມັກຈະບໍ່ມີເອກະສານ[34] ແລະ ການແຕ່ງງານລະຫວ່າງເຊື້ອຊາດດັ່ງກ່າວກໍ່ມີອິດທິພົນຕໍ່ຄອບຄົວຄົນລາວ ແລະ ລະບຽບການຕ່າງໆຂອງຄູ່ຜົວເມຍ, ເດັກນ້ອຍ ແລະ ຜູ້ສູງອາຍຸ.

MOHA ໄດ້ເກັບກຳຂໍ້ມູນການແຕ່ງງານທີ່ຈົດທະບຽນ ແລະ ສາມາດແບ່ງອອກເປັນ 4 ປະເພດຄື: ຄົນລາວ/ຄົນລາວ; ຄົນລາວ/ຄົນຕ່າງປະເທດ; ຄົນລາວ/ຄົນຕ່າງດ້າວ; ແລະຄົນລາວ/ຄົນບໍ່ມີລັດ. ຂໍ້ມູນສຳລັບປີ 2021 ແມ່ນມີຢູ່ໃນບົດລາຍງານ ສະພາບການຍ້າຍຖິ່ນຖານໃນ ສປປ ລາວ. ໃນປີ 2021 ມີຈຳນວນ 8,097 ໄດ້ຈົດທະບຽນແຕ່ງງານ 180 ຄົນທີ່ເປັນຄົນສັນຊາດລາວແຕ່ງກັບຄົນຕ່າງປະເທດ (ຮ້ອຍລະ 2.2 ຂອງການແຕ່ງງານທີ່ຈົດທະບຽນທັງໝົດ).

*2.4.4.* ສະພາບການດຳລົງຊີວິດ ແລະ ການເຮັດວຽກຂອງແຮງງານລາວໃນປະເທດໄທ.

❖ **ກອບກົດໝາຍແຮງງານເຄື່ອນຍ້າຍ ແລະ ການປົກປ້ອງແຮງງານໃນເທດໄທ**

ກົດໝາຍວ່າດ້ວຍການຄຸ້ມຄອງແຮງງານເຄື່ອນຍ້າຍຢູ່ໄທມີ 2 ສະບັບຄື: (ກ) ລັດຖະບັນຍັດກ່ຽວກັບການຄຸ້ມຄອງການຈ້າງງານຂອງຄົນຕ່າງປະເທດ B.E. 2560 (ລັດຖະບານໄທ ປີ 2017); ແລະ (ຂ) ກົດໝາຍວ່າດ້ວຍການປົກປ້ອງແຮງງານ B.E. 2541 (ລັດຖະບານໄທ, 1998). ນອກຈາກນີ້, ຍັງມີຂອບການຄຸ້ມຄອງແຮງງານຂອງປະເທດໄທ ລວມທັງກົດໝາຍວ່າດ້ວຍການປົກປ້ອງແຮງງານຂອງໄທ ສະບັບ B.E. 2541 (ລັດຖະບານໄທ, ປີ2019) ແລະ ກົດໝາຍວ່າດ້ວຍຄວາມປອດໄພ, ສຸຂະພາບ ແລະ ສະພາບແວດລ້ອມຂອງສະຖານທີ່ເຮັດວຽກ B.E. 2554 (ລັດຖະບານໄທ, 2011).[35]

ນອກຈາກນີ້, ກົມຈັດຫາງານຂອງກະຊວງແຮງງານຂອງປະເທດໄທ ໄດ້ສ້າງຕັ້ງສູນຊ່ວຍເຫຼືອແຮງງານເຄື່ອນຍ້າຍຖິ່ນຖານໃນປີ 2016 ເປັນຕົ້ນມາ ເຊິ່ງສ້າງຂື້ນໃນ ສິບ ແຂວງ ແລະ ມີຈຸດປະສົງເພື່ອເພີ່ມທະວີການເຂົ້າເຖິງຄວາມຍຸຕິທຳຂອງແຮງງານເຄື່ອນຍ້າຍ (ILO, 2020a). ອີງຕາມຂໍ້ມູນຂອງຄະນະສະເພາະເຮັດວຽກການເຄື່ອນຍ້າຍຖິ່ນຖານຂອງອົງການສະຫະປະຊາຊາດຢູ່ປະເທດໄທ (2019) ເຫັນວ່າໜຶ່ງໃນຊ່ອງຫວ່າງທີ່ຄວນໄດ້ຮັບການແກ້ໄຂຢູ່ໃນປະເທດໄທແມ່ນກ່ຽວກັບການຊ່ວຍເຫຼືອ ແລະ ຄ່າຊົດເຊີຍສຳຫຼັບການລ່ວງລະເມີດສິດທິແຮງງານຂອງນາຍຈ້າງ.

❖ **ບັນຫາດ້ານອາຊີບ ແລະຄວາມປອດໄພ**

[34] See Annex I.

[35] Social protection is covered by the Social Security Act B.E. 2533 (Government of Thailand, 1990), Workmen's Compensation Act B.E. 2537 (Government of Thailand, 2007), and Royal Decree on the Establishment of Employees under the Social Security Act B.E. 2533 (Royal Thai Government, 2002).

ການສຳຜັດກັບສານເຄມີທີ່ເປັນພິດໃນການເຮັດວຽກຢູ່ຂະແໜງກະສິກຳໃນປະເທດໄທແມ່ນເປັນບັນຫາທີ່ນ່າເປັນຫ່ວງ ເຊິ່ງປະເທດໄທເປັນປະເທດທີ່ມີການນຳໃຊ້ຢາປາບສັດຕູພືດສູງສຸດເປັນອັນດັບສີ່ຂອງໂລກ, ແລະ ຫຼັກຖານສະແດງໃຫ້ເຫັນຄືການນຳໃຊ້ອຸປະກອນປ້ອງກັນໂດຍທົ່ວໄປແມ່ນຍັງບໍ່ພຽງພໍ (Kaewoonchoo et al., 2015). ບັນຫາດັ່ງກ່າວຍັງສົ່ງຜົນກະທົບຕໍ່ສະມາຊິກຂອງຄົນໃນຄອບຄົວ (ILO, 2021) ເຊິ່ງພະຍາດຕົ້ນຕໍ ແລະ ເງື່ອນໄຂທາງການແພດທີ່ຕິດພັນກັບການໃຊ້ຢາປາບສັດຕູພືດແມ່ນປະກອບມີພະຍາດມາຣາເລຍ, ເຈັບກະເພາະອາຫານ, ຄວາມດັນເລືອດສູງ ແລະ ເປັນຫວັດ/ໄຂ້ຫວັດໃຫຍ່ (Jain et al., 2018).

❖ **ການລ່ວງລະເມີດສິດທິແຮງງານເຄື່ອນຍ້າຍ: ເງື່ອນໄຂການເຮັດວຽກ ແລະ ການຈ້າງງານ**

ການລ່ວງລະເມີດສິດທິຂອງແຮງງານເຄື່ອນຍ້າຍໃນປະເທດໄທແມ່ນໄດ້ຖືກບັນທຶກໄວ້ໃນພາກການຈ້າງງານທັງໝົດ ເຊິ່ງການລ່ວງລະເມີດສິດທິມັກຈະເລີ່ມກ່ອນທີ່ແຮງງານເຄື່ອນຍ້າຍຈະໄປຮອດຈຸດໝາຍປາຍທາງຂອງເຂົາເຈົ້າ ແລະ ເກີດຂຶ້ນຢ່າງຕໍ່ເນື່ອງໃນປະເທດ ເນື່ອງຈາກຂໍ້ຈຳກັດໃນການປົກປ້ອງແຮງງານເຄື່ອນຍ້າຍ ຫຼື ບໍ່ມີການບັງຄັບໃຊ້ ແລະ ບໍ່ມີຄວາມສະເໝີພາບທາງດ້ານໂຄງສ້າງ (ILO, 2021; Hennebry, 2014).

ການສຶກສາລ່າສຸດຂອງອົງການ ILO ໃນປີ 2018 ໄດ້ແນ່ໃສ່ສະພາບການເຮັດວຽກ ແລະ ການຈ້າງງານໃນຂະແໜງກະສິກຳໃນປະເທດໄທຂອງແຮງງານເຄື່ອນຍ້າຍ ລວມທັງແຮງງານເຄື່ອນຍ້າຍສັນຊາດລາວ (ILO, 2021). ຈາກການສຳຫຼວດແຮງງານເຄື່ອນຍ້າຍທີ່ມີເອກະສານ ແລະ ບໍ່ມີເອກະສານໃນຈຳນວນ 528 ຄົນ ເຫັນວ່າຈຳນວນ 134 ຄົນແມ່ນມາຈາກ ສປປ ລາວ ເປັນແຮງງານເຄື່ອນຍ້າຍສັນຊາດລາວທັງໝົດທີ່ເຮັດວຽກຢູ່ແຂວງເລີຍ ສ່ວນຫຼາຍແມ່ນເຮັດວຽກຢູ່ສວນອ້ອຍ ຄິດເປັນຮ້ອຍລະ 80.6 ທີ່ຖືກບັນທຶກວ່າມີເອກະສານຄົບຖ້ວນ. ໃນດ້ານສັນຍາການຈ້າງງານກ່ອນການເຄື່ອນຍ້າຍຖິ່ນຖານແມ່ນມີຮ້ອຍລະ 20.9 ຂອງແຮງງານລາວທີ່ມີສັນຍາເປັນລາຍລັກອັກສອນ. ອັດຕາສ່ວນດັ່ງກ່າວແມ່ນມີຄວາມສຳຄັນ ແລະ ສາມາດອະທິບາຍໄດ້ວ່າ ແຮງງານເຄື່ອນຍ້າຍລາວຜ່ານໄດ້ຜ່ານການຈ້າງງານໂດຍຜ່ານຂະບວນການ MOU ເຊິ່ງກຳນົດວ່າແຮງງານທີ່ມີ MOU ທັງໝົດຈະຕ້ອງໄດ້ເຊັນສັນຍາເປັນລາຍລັກອັກສອນ ກ່ອນທີ່ຈະເດີນທາງອອກຈາກປະເທດ (ລັດຖະບານແຫ່ງ ສປປ ລາວ ແລະ ລັດຖະບານໄທ, ປີ 2016).

ຜົນການສຶກສາຂອງອົງການ ILO (2021) ທີ່ສະໜັບສະໜູນການວິເຄາະທີ່ດຳເນີນໃນປີ 2019 ໂດຍຄະນະປະຕິບັດງານກ່ຽວກັບການເຄື່ອນຍ້າຍຖິ່ນຖານຂອງອົງການສະຫະປະຊາຊາດປະເທດໄທ (2019) ໄດ້ລາຍງານລ່າສຸດວ່າ ຂະແໜງການດັ່ງກ່າວມີລັກສະນະທີ່ບໍ່ເປັນທາງການໃນລະດັບສູງ, ຄ່າແຮງງານຕໍ່າ, ຊີວິດການເປັນຢູ່ ແລະ ການເຮັດວຽກທີ່ບໍ່ປອດໄພ, ແລະ ບັນຫາການໃຊ້ແຮງງານເດັກຍັງເປັນບັນຫາທີ່ຄົງຄ້າງຢູ່.

❖ **ການລ່ວງລະເມີດສິດທິແຮງງານເຄື່ອນຍ້າຍ: ຄ່າບໍລິການຈັດຫາງານ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ**

ການລ່ວງລະເມີດສິດທິຂອງແຮງງານເຄື່ອນຍ້າຍທີ່ລວມເຖິງການເກັບຄ່າທຳນຽມທີ່ເກີນຄວາມເປັນຈິງໃນການຈັດຫາງານ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງຢ່າງເປັນລະບົບ (ILO, 2020b) ເຮັດໃຫ້ແຮງງານເຄື່ອນຍ້າຍຕ້ອງໄດ້ຈ່າຍຄ່າທຳນຽມໃຫ້ກັບນາຍໜ້າ, ການຂົນສົ່ງຂ້າມຊາຍແດນ ແລະ ເຈົ້າໜ້າທີ່ຊາຍແດນທັງສອງຝັ່ງ (ILO, 2021).

ການສຶກສາຂອງອົງການ ILO ປີ 2020 ທີ່ຈັດຕັ້ງປະຕິບັດຢູ່ໃນປະເທດໄທ ໄດ້ອະທິບາຍເຖິງການເກັບຄ່າທຳນຽມການຮັບສະໝັກ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງທີ່ຕ້ອງຈ່າຍໂດຍແຮງງານເຄື່ອນຍ້າຍທີ່ມີທັກສະຕໍ່າ ແລະ ເຮັດວຽກຢູ່ໃນປະເທດໄທ (ILO, 2020b). ໃນປີ 2018 ໄດ້ມີການສຳພາດແຮງງານເຄື່ອນຍ້າຍຈຳນວນ 1,200 ຄົນ ເປັນແຮງງານເຄື່ອນຍ້າຍຈາກ ສປປ ລາວ (302 ຄົນ), ມຽນມາ (518) ແລະ ກຳປູເຈຍ (380) ໃນນັ້ນແມ່ນໄດ້ເກັບກຳຂໍ້ມູນກ່ຽວກັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຈັດຫາງານ ແລະ ຄ່າທຳນຽມສຳລັບແຮງງານເຄື່ອນຍ້າຍແບບປົກກະຕິ ແລະ ບໍ່ປົກກະຕິກ່ອນອອກເດີນທາງ, ໃນລະຫວ່າງການຂົນສົ່ງ ແລະ ເມື່ອມາຮອດປະເທດໄທ. ຜົນການສຶກສາດັ່ງກ່າວສະແດງໃຫ້ເຫັນວ່າ, ແຮງງານເຄື່ອນຍ້າຍຈາກລາວຕ້ອງໄດ້ຈ່າຍເງິນສຳຫຼັບຄ່າຕ່າງໆໂດຍສະເລ່ຍ 503 USD ເຊິ່ງກວມເອົາປະມານ 2,3 ເທົ່າຂອງຄ່າແຮງງານຕໍ່ເດືອນ (ILO, 2020b) ແລະ ການສຶກສາໄດ້ສະຫຼຸບວ່າຄ່າໃຊ້ຈ່າຍເຫຼົ່ານີ້ສາມາດຫຼຸດລົງໄດ້ຖ້າມີລະບຽບການຄຸ້ມຄອງ, ການບັງຄັບໃຊ້ ແລະ ມີການເຜີຍແຜ່ຂໍ້ມູນຢ່າງມີປະສິດທິພາບ.

ເພື່ອທີ່ຈະຕ້ອງຈ່າຍຄ່າທຳນຽມທີ່ກ່ຽວຂ້ອງກັບການຈັດຫາງານ, ແຮງງານເຄື່ອນຍ້າຍສ່ວນໃຫຍ່ແມ່ນໄດ້ຂາຍຊັບສິນຂອງຄອບຄົວ, ກູ້ຢືມເງິນໃນອັດຕາທີ່ສູງຈາກຜູ້ໃຫ້ກູ້ ຫຼື ເປັນໜີ້ກັບນາຍຈ້າງ ເຊິ່ງມີບາງຄົນເລືອກຊ່ອງທາງທີ່ບໍ່ປົກກະຕິທີ່ຄິດວ່າເປັນທາງເລືອກທີ່ມີລາຄາຖືກກວ່າ ແລະ ໃນຂະນະທີ່ບາງຄົນຢູ່ເກີນໄລຍະເວລາວີຊາທີ່ກຳນົດໄວ້ດັ່ງນັ້ນຈຶ່ງເຮັດໃຫ້ເຂົາເຈົ້າກາຍເປັນຜູ້ເຄື່ອນຍ້າຍຖິ່ນຖານແບບບໍ່ປົກກະຕິ ເຊິ່ງທັງສອງເສັ້ນທາງນີ້ໄດ້ເພີ່ມຄວາມສ່ຽງໃນການຖືກຂູດຮີດຂຶ້ນຕື່ມອີກ, ລວມທັງການບັງຄັບໃຊ້ແຮງງານ ຫຼື ການຄ້າມະນຸດ.

ການລົງເກັບກຳຂໍ້ມູນຢູ່ພາກສະໜາມໃນເດືອນຕຸລາ 2022 ໄດ້ເປີດໂອກາດໃຫ້ຜູ້ເຂົ້າຮ່ວມສົນທະນາກ່ຽວກັບຂະບວນການ MOU ແລະ ຄ່າທຳນຽມທີ່ກ່ຽວຂ້ອງ ເຊິ່ງຜູ້ເຂົ້າຮ່ວມຫຼາຍຄົນໄດ້ອະທິບາຍວ່າ ອັດຕາດອກເບ້ຍສູງຫຼາຍ ເຮັດໃຫ້ພວກເຂົາມີຫນີ້ສິນ ແລະ ເຮັດໃຫ້ເຂົາເຈົ້າຕ້ອງໃຊ້ຊ່ອງທາງອື່ນເພື່ອຫາເງິນທຶນໃນການເຄື່ອນຍ້າຍຖິ່ນຖານ.

- **ສະພາບການເຮັດວຽກ: ປຽບທຽບລະຫວ່າງແຮງງານເຄື່ອຍຍ້າຍແບບປົກກະຕິ ແລະ ປົກກະຕິ**

ການສຶກສາໃນປີ 2018 ທີ່ຈັດຕັ້ງຮ່ວມກັນໂດຍອົງການ ILO ແລະ UNDP ມີຈຸດປະສົງເພື່ອປຽບທຽບປະສົບການຂອງແຮງງານເຄື່ອນຍ້າຍລາວທັງແບບປົກກະຕິ ແລະ ບໍ່ປົກກະຕິ ທີ່ເຮັດວຽກໃນປະເທດໄທ ໂດຍຕັ້ງສົມມຸດຖານວ່າຂັ້ນຕອນການເຄື່ອນຍ້າຍຂອງແຮງງານທີ່ເປັນທາງການແມ່ນມີປະໂຫຍດຕໍ່ແຮງງານເຄື່ອນຍ້າຍ ລວມທັງການຫຼຸດຜ່ອນຄວາມສ່ຽງຕໍ່ການລ່ວງລະເມີດ ແລະ ການຂູດຮີດ (ILO ແລະ UNDP, 2018). ການສຶກສາໄດ້ອີງໃສ່ຂໍ້ມູນການສຳຫຼວດ 2 ສະບັບຄື: (ກ) ໃນປີ 2015 ຂໍ້ມູນທີ່ເກັບກຳຈາກແຮງງານເຄື່ອນຍ້າຍສັນຊາດລາວທີ່ກັບຄືນ

ປະເທດຈາກ ແຂວງຫຼວງພະບາງ ແລະ ຈຳປາສັກ ທີ່ໄດ້ລົງທະບຽນກັບບໍລິສັດຈັດຫາງານເພື່ອນໄປເຮັດວຽກຢູ່ປະເທດໄທຕາມ MOU ລະຫວ່າງສອງປະເທດ; ແລະ (ຂ) ໃນປີ 2013, ຂໍ້ມູນທີ່ເກັບກຳຈາກແຮງງານເຄື່ອນຍ້າຍລາວທີ່ບໍ່ຖືກຕ້ອງຕາມກົດໝາຍ ສ່ວນຫຼາຍແມ່ນມາຈາກແຂວງຈຳປາສັກ ແລະ ສາລະວັນ, ທີ່ຖືກສົ່ງກັບຈາກປະເທດໄທຜ່ານດ່ານສາກົນວັງເຕົ່າ-ຊ່ອງເມັກ. ຜົນການສຶກສາສະແດງເຫັນວ່າ ການເຄື່ອນຍ້າຍແຮງງານແບບຖືກຕ້ອງຕາມກົດໝາຍໄດ້ຮັບຜົນປະໂຫຍດຫຼາຍກວ່າການເຄື່ອນຍ້າຍແບບບໍ່ຖືກຕ້ອງຕາມກົດໝາຍ, ແລະ ລວມທັງແຮງງານເຄື່ອນຍ້າຍທັງສອງຮູບແບບນີ້ແມ່ນຖືກລ່ວງລະເມີດສິດທິຂອງແຮງງານເຄື່ອນຍ້າຍທີ່ແຕກຕ່າງກັນ ໃນນັ້ນການເກັບຮັກສາເອກະສານສະແດງຕົວຕົນເປັນຕົວຊີ້ບອກທີ່ສຳຄັນວ່າແຮງງານທີ່ຖືກບັງຄັບ ແລະ ຖືກຄ້າມະນຸດ.

ໃນຂັ້ນຕອນການຈັດຫາງານ, ຜົນການສຶກສາໄດ້ສະແດງໃຫ້ເຫັນວ່າຮ້ອຍລະ 41 ຂອງແຮງງານເຄື່ອນຍ້າຍປົກກະຕິຕ້ອງຈ່າຍເງິນໂດຍກົງໃຫ້ກັບບໍລິສັດຈັດຫາງານ ແລະ ລວມທັງຄ່າໃຊ້ຈ່າຍຕ່າງໆເຊັ່ນ: ໜັງສືຜ່ານແດນ, ວີຊ່າ ແລະ/ຫຼືໃບອະນຸຍາດເຮັດວຽກ, ຊຸດຝຶກອົບຮົມກ່ອນອອກເດີນທາງ ແລະ ຄ່າຂົນສົ່ງໄປຈຸດໝາຍປາຍທາງ. ນອກຈາກນັ້ນ ແຮງງານເຄື່ອນຍ້າຍປົກກະຕິສ່ວນໃຫຍ່ (ຮ້ອຍລະ 89) ຖືກລາຍງານວ່າໄດ້ເຊັນສັນຍາການຈ້າງງານກັບບໍລິສັດຈັດຫາງານ ໃນຈຳນວນນີ້ມີພຽງແຕ່ຮ້ອຍລະ 40 ເທົ່ານັ້ນທີ່ຖືກສຳເນົາໄວ້, ແລະ ບໍ່ມີໃຜໄດ້ເຊັນສັນຍາກັບນາຍຈ້າງຂອງເມື່ອເດີນທາງມາຮອດປະເທດໄທ ເຊິ່ງຄວາມເປັນຈິງແລ້ວສິ່ງນີ້ແມ່ນຜິດກັບລະບຽບການແຫ່ງຊາດຂອງປະເທດໄທ ຫຼື MOU ທັງສອງປະເທດ.

## 2.5. ການເຄື່ອນຍ້າຍຖິ່ນຖານ ແລະ ສຸຂະພາບ

ການວິເຄາະຜົນກະທົບຂອງການເຄື່ອນຍ້າຍຖິ່ນຖານຕໍ່ສຸຂະພາບສາມາດຊີ້ໃຫ້ເຫັນຄວາມບໍ່ສະເໝີພາບທາງສັງຄົມໃນລະບົບຕ່າງໆ. ການເຄື່ອນຍ້າຍຖິ່ນຖານໄດ້ຖືກຮັບຮູ້ຫຼາຍຂຶ້ນວ່າເປັນຕົວກຳນົດຂອງສຸຂະພາບ (Davies et al., 2009) ແຕ່ຄວາມສຳພັນຂອງທັງສອງລະຫວ່າງການເຄື່ອນຍ້າຍຖິ່ນຖານ ແລະ ສຸຂະພາບຍັງບໍ່ທັນມີຄວາມເຂົ້າໃຈດີດັ່ງນັ້ນຈຶ່ງນຳໄປສູ່ການຂາດນະໂຍບາຍ ແລະ ແນວທາງການຈັດຕັ້ງປະຕິບັດ.

### *2.5.1ປະຊາກອນເຄື່ອນຍ້າຍຖິ່ນຖານ ແລະ ການເຄື່ອນຍ້າຍຖິ່ນຖານ ແລະ ສຸຂະພາບ: ບັນຫາໃນລະດັບພາກພື້ນ*

ເນື່ອງຈາກສະພາບດິນຟ້າອາກາດ ແລະ ພູມສັນຖານ ບັນດາປະເທດ GMS ຈຶ່ງຖືວ່າເປັນເຂດທາງຊີວະພາບເຂດໜຶ່ງເຊິ່ງກຳນົດໂດຍລັກສະນະຂອງສະພາບແວດລ້ອມທາງທຳມະຊາດທີ່ຫຼາຍກວ່າສິ່ງທີ່ມະນຸດສ້າງຂຶ້ນ. ບັນດາປະເທດ GMS ຖືວ່າເປັນເຂດທີ່ມີພະຍາດຕິດຕໍ່ເຂດຮ້ອນຫຼາຍຊະນິດ ແລະ ຖືກປ່ອຍປະລະເລີຍ ມີທັງພະຍາດມາຣາເລຍທີ່ດື້ຕໍ່ຢາປົວພວກແມ່ກາຝາກ artemisinin, ພະຍາດໃບໄມ້ໃນເລືອດ schistosomiasis ແລະພະຍາດຕິດຕໍ່ທາງເພດສຳພັນ ເຊິ່ງສົ່ງຜົນກະທົບຕໍ່ບັນດາປະເທດ GMS.

ນອກຈາກນັ້ນ, ການເພີ່ມທະວີການເຊື່ອມໂຍງ ແລະ ການແລກປ່ຽນທາງດ້ານເສດຖະກິດໃນພາກພື້ນໄດ້ເອື້ອອໍານວຍໃຫ້ແກ່ການເຄື່ອນຍ້າຍຖິ່ນຖານພາຍໃນພາກພື້ນ ແລະ ພາຍໃນປະເທດ ຂອງປະຊາກອນ ແລະ ສິ່ງຜົນໃຫ້ມີການເຄື່ອນຍ້າຍຖິ່ນຖານອອກນອກ, ເຄື່ອນຍ້າຍພາຍໃນ ແລະເຄື່ອນຍ້າຍເຂົ້າໃນ ສປປ ລາວ.[36] ສະຖານະການດັ່ງກ່າວຍັງໄດ້ເຮັດໃຫ້ກັບບັນດາພະຍາດ ແລະ ພາຫະນໍາເຊື້ອຕ່າງໆສາມາດແຜ່ກະຈາຍໄປທົ່ວ ເຊິ່ງເປັນສິ່ງທ້າທາຍທາງດ້ານສຸຂະພາບແກ່ຜູ້ຄົນທີ່ມາຈາກຫຼາກຫຼາຍເຊື້ອຊາດທີ່ມີການພົວພັນກັນຢ່າງໃກ້ຊິດໂດຍສະເພາະທາງດ້ານວັດທະນະທໍາ, ປະຫວັດສາດ, ແລະ ພາສາ ເຮັດໃຫ້ເປັນເປັນເລື່ອງປົກກະຕິທີ່ມີການແຜ່ກະຈາຍຂອງພະຍາດໃນບັນດາປະເທດ GMS. ດັ່ງນັ້ນ ພະຍາດເຫຼົ່ານີ້ສາມາດແກ້ໄຂໄດ້ໂດຍການປະສານງານໃນລະດັບພາກພື້ນ ແລະລະບົບສາທາລະນະສຸກຂອງລາວຕ້ອງສາມາດແກ້ໄຂສິ່ງທ້າທາຍດ້ານສຸຂະພາບຂ້າມຊາຍແດນ (WHO, 2017).

### *2.5.2.* ການເຄື່ອຍຍ້າຍຖິ່ນຖານ ແລະ ສຸຂະພາບຂອງຜູ້ເຄື່ອນຍ້າຍຖິ່ນຖານໃນ ສປປ ລາວ

ສປປ ລາວ ແມ່ນໄດ້ມີການປັບປຸງບັນຫາທາງດ້ານສຸຂະພາບໂດຍລວມ

**ມາລາເຣຍ**

ຜົນກະທົບຂອງພະຍາດມາຮາເລຍ[37] ໃນປະເທດໄດ້ຫຼຸດລົງຢ່າງຫຼວງຫຼາຍນັບຕັ້ງແຕ່ປີ 2000 ໃນປີ 2020 ອັດຕາການເກີດພະຍາດມາຮາເລຍຕໍ່ປະຊາກອນ 1,000 ຄົນມີຄວາມສ່ຽງແມ່ນເທົ່າກັບ 1.5 ຄົນເມື່ອທຽບກັບ 32.4 ຄົນໃນປີ 2000 (WHO, n.d.). ພະຍາດມາຮາເລຍເປັນພະຍາດທີ່ລະບາດໃນປະເທດສ່ວນໃຫຍ່ ແຕ່ກໍລະນີທີ່ມີການລາຍງານສ່ວນໃຫຍ່ (ປະມານຮ້ອຍລະ 97) ໂດຍທົ່ວໄປແລ້ວແມ່ນເກີດຂຶ້ນໃນເຂດເນີນພູ ແລະປ່າດົງໃນແຂວງທາງພາກໃຕ້ (WHO, 2017).

ໃນຊ່ວງສອງທົດສະວັດທີ່ຜົນກະທົບຂອງພະຍາດມາຮາເລຍໄດ້ຫຼຸດລົງ ແຕ່ກໍ່ຍັງມີການແຜ່ລະບາດເກີດຂຶ້ນ. ນັບແຕ່ປີ 2011 ຮອດປີ 2014 ໄດ້ການແຜ່ລະບາດຂອງພະຍາດມາຮາເລຍຄັ້ງໃຫຍ່ໃນທົ່ວປະເທດໂດຍສະເພາະບັນດາແຂວງທາງພາກໃຕ້ເຮັດໃຫ້ອັດຕາການເກີດພະຍາດມາຮາເລຍ ແລະການເສຍຊີວິດເພີ່ມຂຶ້ນຢ່າງໄວ ເຊິ່ງມີການບັນທຶກຈໍານວນກໍລະນີຜູ້ປ່ວຍພະຍາດມາຮາເລຍຫຼາຍກວ່າ 50,000 ຄົນໃນປີ 2014 ພຽງປີດຽວ. ອໍານາດການປົກຄອງລະບຸວ່າ ການລະບາດຂອງພະຍາດດັ່ງກ່າວແມ່ນມາຈາກການປ່ຽນແປງຂອງການເຄື່ອນຍ້າຍຖິ່ນຖານຂອງປະຊາກອນ ອັນເນື່ອງມາຈາກກິດຈະກໍາທາງເສດຖະກິດເພີ່ມຂຶ້ນ ລວມທັງການຕັດໄມ້ທໍາລາຍປ່າທີ່ບໍ່ມີການຄວບ

---

[36] *Mobile and migrant populations* are defined as any workers or their family members who migrate for economic or labour-related reasons within the Lao People's Democratic Republic or across borders with neighbouring countries. Mobile workers are present in an area for less than six months, while migrant populations are present for more than six months and less than one year. People beyond one year are considered residents.

[37] Malaria is a serious and sometimes fatal disease caused by a parasite that commonly infects a certain type of mosquito that feeds on humans.

ຄຸມ, ບໍ່ມີໂຄງການພັດທະນາຂະໜາດໃຫຍ່, ສະພາບດິນຟ້າອາກາດ ແລະ ການຕ້ານຢາເສບຕິດ (ສປປ ລາວ, MOH, 2016).

ໂດຍທົ່ວໄປແລ້ວປະຊາກອນເຄື່ອນຍ້າຍຖິ່ນຖານ ແລະ ຜູ້ອົບພະຍົບແມ່ນມີຄວາມສ່ຽງສູງຕໍ່ການຕິດເຊື້ອພະຍາດມາຣາເລຍ ເນື່ອງຈາກການແຜ່ລະບາດແມ່ນຢູ່ໃນເຂດຫ່າງໄກສອກຫຼີກ ຫຼືປ່າໄມ້, ເຊິ່ງປະຊາຊົນເຂດນີ້ແມ່ນຂາດການເຂົ້າເຖິງການບໍລິການທາງດ້ານສາທາລະນະສຸກທີ່ມີຄຸນນະພາບ, ມີສິ່ງທ້າທາຍໃນການຊອກຫາເຊື້ອພະຍາດ ແລະ ມີກໍລະນີການຄ້າມະນຸດເກີດຂຶ້ນ ນອກຈາກນີ້ຍັງຂາດຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບພະຍາດດັ່ງກ່າວ. ດັ່ງນັ້ນສິ່ງກີດຂວາງ ແລະ ອຸປະສັກຕໍ່ການເຂົ້າເຖິງການບໍລິການຮັກສາສຸຂະພາບຂັ້ນພື້ນຖານເຫຼົ່ານີ້ແມ່ນເຮັດໃຫ້ມີຄວາມກັນວົງຕໍ່ກັບການໃຫ້ບໍລິການໃນການປິ່ນປົວ ແລະ ການປ້ອງກັນພະຍາດມາຣາເລຍ. ຕົວຢ່າງ, ການປະເມີນການລະບາດຂອງປີ 2011 ຢູ່ແຂວງອັດຕະປື ພົບວ່າແຮງງານເຄື່ອນຍ້າຍກວມເອົາຮ້ອຍ 70 ຂອງກໍລະນີຕິດຜູ້ຕິດເຊື້ອມາຣາເລຍ (Hewitt et al., 2013).

ຜູ້ໃຫ້ບໍລິການດ້ານສຸຂະພາບຂອງລັດ ແລະ ເອກະຊົນແມ່ນບໍ່ສາມາດໃຫ້ບໍລິການ ແລະ ໃຫ້ຂໍ້ມູນທີ່ເໝາະສົມກ່ຽວກັບພະຍາດມາຣາເລຍແກ່ຜູ້ເຄື່ອນຍ້າຍທັງໝົດໂດຍສະເພາະບຸກຄົນທີ່ມາຈາກປະເທດອື່ນ ຫຼື ແຮງງານທີ່ບໍ່ໄດ້ລົງທະບຽນ ຫຼື ບຸກຄົນທີ່ເຄື່ອນຍ້າຍອອກໄປໄກຈາກບ້ານຂອງເຂົາເຈົ້າພາຍໃນປະເທດທີ່ມີການເຂົ້າເຖິງສະຖານທີ່ການຮັກສາສຸຂະພາບທີ່ມີຄວາມຫຍຸ້ງຍາກ. (WHO, 2015a).

ໃນລະດັບຊາດ ແລະ ພາກພື້ນໄດ້ມີການພະຍາຍາມຄວບຄຸມ ແລະ ກຳຈັດພະຍາດມາຣາເລຍ. ທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ລົງນາມ ແລະປະກາດໃນການລົບລ້າງພະຍາດມາຣາເລຍພາຍໃນປີ 2030 ແລະ ວາງແຜນຍຸດທະສາດແຫ່ງຊາດ ເພື່ອຄວບຄຸມ ແລະ ກຳຈັດພະຍາດມາຣາເລຍ ຊຶ່ງປະກອບມີ 2 ໄລຍະຄື: ໄລຍະ 2016 - 2020 ແລະ 2021 - 2030 ຂອງຍຸດທະສາດ 15 ປີ ເພື່ອລົບລ້າງພະຍາດມາຣາເລຍໃນທົ່ວປະເທດ (ສປປ ລາວ, MOH, 2016). ຍຸດທະສາດດັ່ງກ່າວໄດ້ຖືກພັດທະນາຂຶ້ນໂດຍອີງໃສ່ ຍຸດທະສາດຂອງອົງການອະນາໄມໂລກໃນການລົບລ້າງພະຍາດມາຣາເລຍໃນເຂດອະນຸພາກພື້ນແມ່ນ້ຳຂອງ (2015-2030) (WHO, 2015b) ແລະ ສອດຄ່ອງກັບຫຼັກການຂອງຍຸດທະສາດດ້ານເຕັກນິກຂອງອົງການອະນາໄມໂລກສາກົນ WHO Global Technical Strategy for Malaria 2016-2030 (WHO, 2021). ໃນລະດັບ GMS, ໂຄງການກຳຈັດພະຍາດມາຣາເລຍໃນພາກພື້ນແມ່ນ້ຳຂອງແມ່ນເລີ່ມຈັດຕັ້ງປະຕິບັດໃນປີ 2017 ເຊິ່ງໄດ້ລິເລີ່ມສະໜັບສະໜູນການລົບລ້າງພະຍາດມາຣາເລຍໃນທົ່ວ 6 ປະເທດ GMS. ໂຄງການດັ່ງກ່າວໄດ້ນຳພາການປະສານງານໃນບັນດາປະເທດທີ່ສອດຄ່ອງກັບຍຸດທະສາດຂອງອົງການອະນາໄມໂລກໃນການລົບລ້າງພະຍາດມາຣາເລຍໃນເຂດອະນຸພາກພື້ນແມ່ນ້ຳຂອງ GMS (2015-2030) (ibid.).

## ວັນນະໂລກ

ຜົນກະທົບຂອງພະຍາດວັນນະໂລກ[38] ໃນ ສປປ ລາວ ໄດ້ຫຼຸດລົງໃນລະດັບປານກາງນັບຕັ້ງແຕ່ປີ 2000 ເຊິ່ງອັດຕາການເກີດພະຍາດວັນນະໂລກຕໍ່ປະຊາກອນ 100,000 ຄົນແມ່ນ 149 ຄົນໃນປີ 2020 ເມື່ອທຽບໃສ່ປີ 2000[39] ແມ່ນມີ 330 ຄົນ. ວັນນະໂລກເປັນພະຍາດທີ່ມັກເກີດໃນກຸ່ມຄົນທຸກຍາກ ແລະ ກຸ່ມຄົນທີ່ມີການສຶກສາໜ້ອຍ ເຊິ່ງປັດໄຈການດຳລົງຊີວິດ ແລະ ສະພາບການເຮັດວຽກທີ່ລຳບາກແມ່ນເປັນສິ່ງສຳຄັນທີ່ເຮັດໃຫ້ເກີດພະຍາດວັນນະໂລກ. ການເຄື່ອນຍ້າຍຖິ່ນຖານ ແລະ ຜູ້ເຄື່ອນຍ້າຍແມ່ນມີຄວາມສ່ຽງສູງທີ່ພາໃຫ້ເກີດພະຍາດວັນນະໂລກ. ການສຳຫຼວດກ່ຽວກັບການແຜ່ລະບາດຂອງພະຍາດວັນນະໂລກຄັ້ງທຳອິດແມ່ນໃນປີ 2010/2011 ເຊິ່ງຂໍ້ມູນທີ່ຖືກເກັບກຳແມ່ນບໍ່ໄດ້ແຍກອອກເປັນກຸ່ມຕາມສັນຊາດ ຫຼື ສະຖານະພາບຂອງການເຄື່ອນຍ້າຍຖິ່ນຖານ.

ເຖິງແມ່ນວ່າການແຜ່ລະບາດຂອງພະຍາດວັນນະໂລກຢູ່ໃນປະເທດຈະຖືກຈັດຢູ່ໃນບັນດາປະເທດທີ່ບໍ່ມີການແຜ່ນລະບາດສູງ ແຕ່ປະເທດເພື່ອນບ້ານ ເຊັ່ນປະເທດຈີນ ແລະ ປະເທດໄທແມ່ນຖືກຈັດເປັນປະເທດທີ່ມີການແຜ່ລະບາດຫຼາຍເປັນອັນດັບທີ 20 ໂດຍຜ່ານການປະເມີນຕົວເລກຜູ້ຕິດເຊື້ອ. ດັ່ງນັ້ນ, ລັດຖະບານຈຶ່ງໄດ້ຜັນຂະຫຍາຍແຜນຍຸດທະສາດການຕ້ານວັນນະໂລກແຫ່ງຊາດ 2017-2022 (ສປປ ລາວ, ກະຊວງສາທາລະນະສຸກ MOH, 2017) ທີ່ສອດຄ່ອງກັບຈຸດປະສົງຂອງຍຸດທະສາດການຢຸດຕິວັນນະໂລກ (ອົງການອະນາໄມໂລກ WHO, 2015c) ເຊິ່ງຈຸດປະສົງຂອງຍຸດທະສາດັ່ງກວ່າແມ່ນເພື່ອຊ່ວຍຫຼຸດຜ່ອນການເກີດພະຍາດວັນນະໂລກໃນບັນດາປະເທດຕ່າງໆຄິດເປັນຮ້ອຍລະ 80, ເຊິ່ງການເສຍຊີວິດຈາກພະຍາດວັນນະໂລກຮ້ອຍລະ 90 ແລະ ເພື່ອລົບລ້າງຄ່າໃຊ້ຈ່າຍທີ່ເກີດຂຶ້ນທີ່ສົ່ງຜົນຕໍ່ຄອບຄົວທີ່ເປັນພະຍາດວັນນະໂລກ ພາຍໃນປີ 2030.

## HIV/AIDS

ອັດຕາການແຜ່ເຊື້ອ HIV[40] ໂດຍລວມຂອງປະຊາກອນລາວແມ່ນຍັງຕ່ຳຢູ່ ໃນປີ 2020 ອັດຕາການແຜ່ເຊື້ອ HIV ໃນຜູ້ໃຫຍ່ (ອາຍຸ 15-49 ປີ) ຕໍ່ປະຊາກອນທີ່ບໍ່ຕິດເຊື້ອ 1,000 ຄົນແມ່ນຮ້ອຍລະ 0.13 ແລະຊ່ອງທາງການຕິດຕໍ່ເຊື້ອຕົ້ນຕໍແມ່ນຜ່ານການມີເພດສຳພັນ ໂດຍສະເພາະການຮ່ວມເພດຂອງເພດກົງກັນຂ້າມ.

ການເຄື່ອນຍ້າຍຖິ່ນຖານ ແລະ ການອົບພະຍົບແມ່ນມີບົດບາດສຳຄັນໃນການທີ່ຂະສ່ຽງຕໍ່ການຕິດເຊື້ອພະຍາດ HIV/AIDS ຂອງປະເທດ. ການເພີ່ມຂຶ້ນຂອງການເຄື່ອນຍ້າຍແຮງງານ ແລະການເຄື່ອນຍ້າຍແຮງງານຂ້າມຊາຍແດນໄປປະເທດເພື່ອນບ້ານທີ່ເປັນປະເທດມີອັດຕາການແຜ່ລະບາດເຊື້ອສູງໃນປະຊາກອນແມ່ນປັດໃຈທີ່ເຮັດໃຫ້

---

[38] TB is a bacterial infection spread through inhaling tiny droplets from the coughs or sneezes of an infected person.

[39] Incidence of TB is the estimated number of new and relapse TB cases arising in a given year, expressed as the rate per 100,000 population. All forms of TB are included, including cases in people living with HIV.

[40] HIV is a virus that attacks the body's immune system. If HIV is not treated, it can lead to AIDS.

ເກີດການປ່ຽນແປງວິຖີຊີວິດ ແລະ ພຶດຕິກຳທາງເພດ ເຊິ່ງເຮັດໃຫ້ເຂົາເຈົ້າມີຄວາມສ່ຽງຕໍ່ການຕິດເຊື້ອ HIV (WHO, 2010).

ເຖິງແມ່ນວ່າຂໍ້ມູນຈະມີຈຳກັດ ແຕ່ຫຼັກຖານຈາກ UNAIDS (2016) ຊີ້ໃຫ້ເຫັນວ່າກໍລະນີຜູ້ຕິດເຊື້ອແມ່ນມີຫຼາຍຢູ່ໃນກຸ່ມສະເພາະທີ່ຮັກເພດດຽວກັນ:

- ປະຊາກອນເຄື່ອນຍ້າຍ ແລະ ແຮງງານເຄື່ອນຍ້າຍໂດຍສະເພາະຜູ້ເຄື່ອນຍ້າຍໄວໜຸ່ມເພດຍິງ ແລະ ແຮງງານເຄື່ອນຍ້າຍສາກົນ: ສາເຫດທີ່ເຮັດໃຫ້ອັດຕາການຕິດເຊື້ອ HIV ໃນໄວໜຸ່ມເພດຍິງຫຼາຍກວ່າເພດຊາຍເຊິ່ງການຕິດເຊື້ອຂອງເພດຍິງແມ່ນມາຈາກຄູ່ສົມລົດທີ່ເປັນຜູ້ເຄື່ອນຍ້າຍເພດຊາຍທີ່ຕິດເຊື້ອ HIV, ແລະມີພຶດຕິກຳທີ່ສ່ຽງສູງ, ລວມທັງການໃຫ້ບໍລິການທາງເພດ. ນອກຈາກນັ້ນ ແຮງງານເຄື່ອນຍ້າຍສາກົນໂດຍສະເພາະຈາກປະເທດຈີນ ແລະ ຫວຽດນາມ ທີ່ມີພຶດຕິກຳທາງເພດສ່ຽງ ເຮັດໃຫ້ແມ່ຍິງລາວມີຄວາມສ່ຽງຕໍ່ການຕິດເຊື້ອ HIV.
- ຜູ້ຂາຍບໍລິການທາງເພດ, ໃນເບື້ອງຕົ້ນຈະເປັນເພດຍິງ ແລະ ຫາກໍ່ມີເພດຊາຍ ທີ່ມີເພດສຳພັນກັບຜູ້ຊາຍ ແລະ ແຮງງານງານເຄື່ອນຍ້າຍ, ແລະ ຄົນຂ້າມເພດ.
- ຜູ້ໃຊ້ຢາເສບຕິດ ໂດຍສະເພາະຜູ້ໃຊ້ເຂັມສັກຢາ ແລະ ອາໄສຢູ່ບັນດາແຂວງທີ່ມີຊາຍແດນຕິດກັບປະເທດຈີນ, ມຽນມາ ແລະ ຫວຽດນາມ.

ຄວາມພະຍາຍາມເພື່ອຕ້ານພະຍາດ HIV/AIDS ແມ່ນມີຢູ່ແຜນຍຸດທະສາດແຫ່ງຊາດ HIV ແລະ AIDS ໄລຍະ 10 ປີ (2021-2030) ແລະແຜນປະຕິບັດງານ (2021- 2025) ເພື່ອການປ້ອງກັນ ແລະ ຄວບຄຸມພະຍາດ HIV/AIDS ແລະ STI (ລັດຖະບານແຫ່ງ ສປປ ລາວ; 2021a?) ໂດຍມີຈຸດປະສົງບັນລຸເປົ້າໝາຍ[41] 95-95-95 ຂອງອົງການ UNAIDS ໂລກ ໂດຍປີ 2025 ແລະ ຢຸດຕິການແຜ່ລະບາດຂອງເຊື້ອ HIV ໃນປີ 2030 (UNAIDS, 2014).

*2.5.3.* ສຸຂະພາບຂອງແຮງງານລາວທີ່ອາໄສຢູ່ຕ່າງປະເທດ

[41] Launched by UNAIDS (2014), the programme targets 95-95-95 for treatment by 2025, which means 95 per cent of people living with HIV knowing their HIV status, 95 per cent of people who know their status on treatment, and 95 per of people on treatment with suppressed viral loads.

## ແຮງງານເຄື່ອນຍ້າຍໃນປະເທດໄທ

ປະເທດໄທຖືວ່າເປັນພື້ນທີ່ສ່ຽງສູງທີ່ມີອັດຕາການແຜ່ລະບາດຂອງເຊື້ອພະຍາດ HIV ແລະ ພະຍາດຕິດຕໍ່ອື່ນໆ ເຊິ່ງໃນປີ 2020 ໄດ້ມີການລາຍງານວ່າຢູ່ໃນປະເທດມີຜູ້ຕິດເຊື້ອ HIV ປະມານ 500,000 ຄົນ ແລະ ມີຜູ້ເສຍຊີວິດຍ້ອນ AIDS ປະມານ 12,000 ຄົນ (WHO, n.d.).

ປະເທດໄທມີຄວາມກ້າວໜ້າຢ່າງຫຼາຍໃນການເຂົ້າເຖິງສຸຂະພາບຂອງແຮງງານເຄື່ອນຍ້າຍ ແລະການຄຸ້ມຄອງເພື່ອເຂົ້າເຖິງຫຼັກປະກັນສຸຂະພາບທົ່ວໄປ ເຊິ່ງທາງລັດຖະບານໄດ້ຄຳນຶງເຖິງກຸ່ມແຮງງານເຄື່ອນຍ້າຍທີ່ດ້ອຍໂອກາດເຊິ່ງມັກຈະຂາດເຂີນປັດໄຈທາງເສດຖະກິດ ຫຼືຕາໜ່າງຄວາມປອດໄພທາງສັງຄົມເພື່ອການເຂົ້າເຖິງການບໍລິການດ້ານສາທາລະນະສຸກໃຫ້ພຽງພໍ ແລະກະຊວງສາທາລະນະສຸກຂອງປະເທດໄທໄດ້ສົ່ງເສີມນະໂຍບາຍໃຫ້ແຮງງານເຄື່ອນຍ້າຍທຸກຄົນເພື່ອແກ້ໄຂຄວາມສ່ຽງດ້ານສຸຂະພາບທີ່ກ່ຽວຂ້ອງກັບການເຄື່ອນຍ້າຍຖິ່ນຖານ. ບົດບັນທຶກຄວາມເຂົ້າໃຈ MOU ໄດ້ລົງນາມໃນປີ 2019 ຮ່ວມກັບອົງການ IOM ເພື່ອເພີ່ມການເຂົ້າເຖິງການດູແລສຸຂະພາບໃນບັນດາຜູ້ເຄື່ອນຍ້າຍ ແລະຊຸມຊົນທີ່ມີຄວາມສ່ຽງ.

ມີ ສອງ ລະບົບຮ່ວມກັນເພື່ອຈັດການການເຄື່ອນຍ້າຍຖິ່ນຖານ:

- ການບໍລິການແບບປະຕູດຽວ (OSS) ເຊິ່ງລວມເຖິງການເກັບກຳຂໍ້ມູນສ່ວນບຸກຄົນ ແລະການກວດສຸຂະພາບຂອງຜູ້ເຄື່ອນຍ້າຍຖິ່ນຖານແບບບໍ່ປົກກະຕິ, ການອອກໃບອະນຸຍາດທີ່ຢູ່ອາໄສ ແລະຮ່ວມມືກັບກະຊວງແຮງງາ ໃນການອອກໃບອະນຸຍາດເຮັດວຽກ;
- ບົດບັນທຶກຄວາມເຂົ້າໃຈ MOU ທີ່ລົງນາມທັງສອງຝ່າຍຮ່ວມກັບບັນດາປະເທດເພື່ອນບ້ານ, ລວມທັງ ສປປ ລາວ.

ການບໍລິການແບບປະຕູດຽວ ແລະ ແຮງງານເຄື່ອນຍ້າຍຕາມ MOU ຈຳເປັນຕ້ອງໄດ້ຜ່ານການປະເມີນສຸຂະພາບເຄື່ອນຍ້າຍຖິ່ນຖານເພື່ອກວດຫາພະຍາດຕິດຕໍ່ຮ້າຍແຮງກ່ອນທີ່ຈະອອກໃບອະນຸຍາດເຮັດວຽກ.

ມີ ສອງ ກົນໄກຢູ່ໃນປເທດໄທກ່ຽວກັບການປົກປ້ອງທາງດ້ານການເງິນຂອງປະກັນໄພສຸຂະພາບຄົນເຄື່ອນຍ້າຍຖິ່ນຖານ ໃນປີ 2022:

- ໂຄງການປະກັນສັງຄົມ (SSS) ກວມເອົາແຮງງານເຄື່ອນຍ້າຍໃນຂະແໜງການຕ່າງໆທີ່ເປັນທາງການ. ສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍວ່າດ້ວຍປະກັນສັງຄົມປີ 2013 (ສະພາແຫ່ງຊາດຂອງ ສປປ ລາວ, 2013a) ແລະ ກົດໝາຍວ່າດ້ວຍເງິນອຸດໜູນແຮງງານ 1994 (ລັດຖະບານໄທ, 2007). ໂຄງການປະກັນສັງຄົມ SSS ແມ່ນໃຫ້ສະຫວັດດີການເຊັ່ນດຽວກັນກັບແຮງງານໄທ.

- HICS ແມ່ນໂຄງການປະກັນສຸຂະພາບສາທາລະນະຂອງແຮງງານເຄື່ອນຍ້າຍສະເພາະ ລວມທັງແຮງງານທີ່ບໍ່ມີເອກະສານ[42] ເຊິ່ງຈັດຕັ້ງໂດຍກະຊວງສາທາລະນະສຸກ ສະນັ້ນແຮງງານເຄື່ອນຍ້າຍ ແລະ ຜູ້ທີ່ມີສິດໄດ້ຮັບສະຫວັດດີການຈາກ SSS ແຕ່ບໍ່ໄດ້ຮັບສະຫວັດດີການດັ່ງກ່າວໜ້ອຍກວ່າສາມເດືອນແມ່ນຕ້ອງໄດ້ເຂົ້າໂຄງການນີ້ ເຊິ່ງແມ່ນເປັນພາກບັງຄັບສໍາລັບແຮງງານເຄື່ອນຍ້າຍທີ່ບໍ່ໄດ້ຢູ່ພາຍໃຕ້ປະກັນໄພສຸຂະພາບຂອງໂຄງການປະກັນສັງຄົມ SSS.

ນອກຈາກນີ້, ລັດຖະບານໄທໄດ້ອອກນະໂຍບາຍທີ່ແນໃສ່ແກ້ໄຂສຸຂະພາບຂອງຜູ້ເຄື່ອນຍ້າຍຖິ່ນຖານເຊັ່ນ: ແຜນແມ່ບົດແຫ່ງຊາດເພື່ອປ້ອງກັນ HIV/AIDS, ການດູແລ ແລະຊ່ວຍເຫຼືອຜູ້ເຄື່ອນຍ້າຍຖິ່ນຖານ ແລະ ປະຊາກອນເຄື່ອຍ້າຍ (2007 - 2011).

ຫຼັກຖານຕ່າງໆໄດ້ສະແດງໃຫ້ເຫັນວ່າ HICS ໄດ້ປັບປຸງການເຂົ້າໃນການບໍລິການຂອງແຮງງານເຄື່ອນຍ້າຍ ແລະຫຼຸດຜ່ອນການຈ່າຍເງິນທີ່ຕ້ອງຈ່າຍເອງ (Suphanchaimat, 2016). ເຖິງຢ່າງໃດກໍ່ຕາມ, ເຖິງວ່າຈະມີນະໂຍບາຍ ແລະມີແນວທາງການປະຕິບັດທີ່ດີທີ່ຈະສະໜັບສະໜູນແຮງງານເຄື່ອນຍ້າຍທັງໝົດ ແຕ່ອຸປະສັກໃນການເຂົ້າເຖິງການບໍລິການດ້ານສຸຂະພາບຂອງແຮງງານເຄື່ອນຍ້າຍທີ່ບໍ່ມີເອກະສານຢູ່ໃນປະເທດໄທຍັງຄົງມີຢູ່ (ອີງການ IOM, 2011; Chamchan and Apipornchaisakul, 2012) ເຊິ່ງປະກອບດ້ວຍຂໍ້ຈໍາກັດທາງດ້ານກົດໝາຍ, ຄ່າທໍານຽມປະຈໍາປີທີ່ສູງສໍາລັບການກວດສຸຂະພາບ ແລະການປະກັນໄພ, ການຂາດການຮັບຮູ້ກ່ຽວກັບໂຄງການປະໄພ, ຂໍ້ຈໍາກັດຂອງຄວາມແຕກຕ່າງທາງດ້ານພາສາ, ຄວາມຢ້ານກົວຕໍ່ການຖືກຈັບກຸມ, ການກັກຂັງ ຫຼືການຖືກເນລະເທດ , ແລະໂຮງໝໍບາງແຫ່ງບໍ່ເຕັມໃຈແລະປະຕິບັດຕາມນະໂຍບາຍ. ນອກຈາກນີ້ ວັນໝົດອາຍຸຂອງປະກັນໄພສຸຂະພາບສໍາລັບແຮງງານເຄື່ອນຍ້າຍ ເຮັດໃຫ້ບາງຄົນສ່ຽງຕໍ່ການດໍາລົງຊີວິດໂດຍບໍ່ມີການປະກັນໄພຖ້າຫາກບໍ່ຊື້ HICS (ຄືນໃໝ່). ສຸດທ້າຍນີ້ ຍັງມີການຈໍາແນກ ແລະ ການຂູດຮີດໂດຍອໍານາດການປົກອື່ນໆເຊັ່ນ: ຕໍາຫຼວດ ແລະເຈົ້າໜ້າທີ່ກວດຄົນເຂົ້າເມືອງທີ່ເປັນອຸປະສັກອື່ນໆທີ່ເຮັດໃຫ້ແຮງງານເຄື່ອນຍ້າຍບໍ່ສະແຫວງຫາການດູແລສຸຂະພາບ ແລະນໍາໄປສູ່ການປິ່ນປົວດ້ວຍຕົນເອງ ຫຼືການນໍາໃຊ້ຄລີນິກເອກະຊົນ ເປັນຈໍານວນຫຼວງຫຼາຍ (Harrigan et al., 2017; Naing et al., 2012).

### 2.5.4. ການສົ່ງເງິນກັບບ້ານ ແລະສຸຂະພາບຂອງສະມາຊິກຄອບຄົວທີ່ຢູ່ເບື່ອງຫຼັງ

ໃນຂະນະທີ່ການສຶກສາ, ມີພຽງຄົນດຽວເທົ່ານັ້ນທີ່ໄດ້ປະເມີນຜົນກະທົບຂອງການສົ່ງເງິນກັບບ້ານຕໍ່ກັບສຸຂະພາບຂອງສະມາຊິກຄອບຄົວທີ່ຢູ່ເບື້ອງຫລັງໃນພາກພື້ນ (ILO, 2007). ການສຶກສາດັ່ງກ່າວໄດ້ດໍາເນີນໄປໃນບັນດາແຮງງານເຄື່ອນຍ້າຍຈາກປະເທດກໍາປູເຈຍ, ສປປ ລາວ ແລະມຽນມາ ທີ່ອາໄສຢູ່ໃນປະເທດໄທ ໃນຊ່ວງທີ່ສໍາຫຼວດ. ຜົນ

[42] In practice, it is rare that hospitals allow undocumented workers or their dependants to buy the health insurance (ILO, 2021).

ການສຶກສາໄດ້ສະແດງ ຫຼັງຈາກແຮງງານຫັກຄ່າໃຊ້ຈ່າຍປະຈຳວັນແລ້ວ ເງິນທີ່ສົ່ງກັບບ້ານສ່ວນຫຼາຍແມ່ນເພື່ອດູແລສຸຂະພາບ (Jampaklay and Kittisuksathit, 2009). ນອກຈາກນັ້ນ ແຮງງານເຄື່ອນຍ້າຍເພດຍິງທີ່ອາໄສຢູ່ຕ່າງປະເທດມັກຈະເຂົ້າໃຈ, ມີທັກສະ ແລະມີແນວຄວາມຄິດ ຫຼື ທັດສະນະຄະຕິໃໝ່ໆ ທີ່ຈະສົ່ງເງິນກັບບ້ານເພື່ອປັບປຸງສຸຂະພາບຂອງສະມາຊິກຂອງຄອບຄົວໃນປະເທດຂອງເຂົາເຈົ້າ UNFPA, 2006).[43]

[43] The field visit of October 2022 did not cover these dimensions.

## ພາກທີ 3: ການປົກຄອງການເຄື່ອນຍ້າຍຖິ່ນຖານ

ພາກທີ 3 ໄດ້ກ່າວເຖິງຂອບບັນທັດຖານກົດໝາຍ, ບັນດາກົດໝາຍ ແລະ ລະບຽບການຕ່າງໆ, ນະໂຍບາຍ ແລະ ຮີດຄອງປະເພນີ ຕະຫຼອດເຖິງໂຄງສ້າງການຈັດຕັ້ງ ແລະ ຂະບວນການທີ່ກ່ຽວຂ້ອງກັບການກຳນົດຮູບແບບ ແລະ ລະບຽບການຂອງ ສປປ ລາວ ທີ່ຕິດພັນກັບການເຄື່ອນຍ້າຍຖິ່ນຖານໃນທຸກຮູບແບບ ເພື່ອແກ້ໄຂການເຂົ້າເຖິງ ສິດທິ ແລະ ໜ້າທີ ແລະ ການສົ່ງເສີມການຮ່ວມມືກັບສາກົນ. ດັ່ງນັ້ນ, ການປົກຄອງການເຄື່ອນຍ້າຍຖິ່ນຖານຈຶ່ງມີ ຂອບເຂດຕິດພັນໃນລະດັບຊາດ ແລະ ສາກົນ ເຊິ່ງປະກອບດ້ວຍລັດ, ຜູ້ເຄື່ອນຍ້າຍຖິ່ນຖານ, ພົນລະເມືອງ, ອົງ ການຈັດຕັ້ງສາກົນ, ພາກເອກະຊົນ, ສະຫະພັນ ແລະ ສະຖາບັນການສຶກສາ.

### 3.1.ກອບນະໂຍບາຍ

*3.1.1.* ກອບນະໂຍບາຍແຫ່ງຊາດ

- **ຍຸດທະສາດໃນການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ 2016 – 2025 ແລະ ວິໄສທັດຮອດ ປີ 2030**

ຍຸດທະສາດໃນການພັດທະນາເສດຖະກິດ-ສັງຄົມໄລຍະ 10 ປີ 2016-2025 ແລະ ວິໄສທັດ ຮອດປີ 2030 (ສປປ ລາວ, ກະຊວງແຜນການແລະການລົງທຶນ, 2016) ໄດ້ກຳນົດເປົ້າໝາຍການພັດທະນາເສດຖະກິດ-ສັງຄົມ ໃນບັນດາວຽກງານຈຸດສຸມປິ່ນອ້ອມທີ່ພົວພັນກັບຫຼາຍຂະແໜງການຈົນເຖິງປີ 2030 ເຊິ່ງທິດທາງ, ເປົ້າໝາຍ ແລະ ຍຸດທະສາດບູລິມະສິດແຫ່ງຊາດຈົນຮອດປີ 2025 ໄດ້ວາງອອກເປັນຂໍ້ມູນພື້ນຖານຂອງແຜນການພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ 8 ແລະ 9 NSEDP ລວມທັງແຜນການຈັດຕັ້ງປະຕິບັດ ແລະ ຍຸດທະສາດ ໃນການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນ (ລັດຖະບານແຫ່ງ ສປປ ລາວ, 2021b ແລະ 2016).

ຍຸດທະສາດດັ່ງກ່າວແມ່ນໄດ້ແນ່ໃສ່ການເຄື່ອນຍ້າຍຖິ່ນຖານຢ່າງຊັດເຈນ ຢູ່ພາຍໃຕ້ພາກທີ III ຫົວຂໍ້ວ່າດ້ວຍ "ນະ ໂຍບາຍ, ກົນໄກ ແລະມາດຕະການໃນການຈັດຕັ້ງປະຕິບັດ" ເຊິ່ງຈຸດປະສົງແມ່ນເພື່ອສ້າງບັນດານະໂຍບາຍຕ່າງໆ ເພື່ອສະໜັບສະໜູນນະໂຍບາຍແຮງງານເຄື່ອນຍ້າຍເພື່ອການພັດທະນາ. ຍິ່ງໄປກວ່ານັ້ນ ບັນດາຍຸດທະສາດແມ່ນເພື່ອ ຜົນປະໂຫຍດຂອງພົນລະເມືອງລາວທັງໝົດ ລວມເຖິງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ອົບພະຍົບ.

- **ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ 9 ປີ 2021–2025**

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ NSEDP ແມ່ນແຜນການໄລຍະ 5 ປີທີ່ສ້າງຂຶ້ນເພື່ອເປັນແນວທາງໃນ ການກຳນົດແຜນພັດທະນາແຫ່ງຊາດ (ລັດຖະບານແຫ່ງ ສປປ ລາວ, 2021b) ເຊິ່ງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ 9 NSEDP ປີ 2021-2025 ໄດ້ແນ່ໃສ່ວຽກງານທີ່ຕິດພັນກັບຜູ້ເຄື່ອນຍ້າຍຖິ່ນຖານ

ແລະ ການເຄື່ອນຍ້າຍຖິ່ນຖານ ເຊິ່ງສຸມໃສ່ແຮງງານເຄື່ອນຍ້າຍໂດຍສະເພາະແມ່ນກຸ່ມໄວໜຸ່ມທີ່ຢູ່ທັງໃນຕົວເມືອງ ແລະ ຊົນນະບົດ ແລະ ການເຄື່ອນຍ້າຍໄປຕ່າງປະເທດແບບຜິດປົກກະຕິເຊິ່ງຕິດພັນກັບການບໍລິຫານຊາຍແດນ ເຊິ່ງໄດ້ອ້າງອີງເຖິງວຽກງານດັ່ງກວ່າໄວ້ດັ່ງນີ້:

- ອີງຕາມ ຜົນໄດ້ຮັບຂອງ ການຈັດຕັ້ງປະຕິບັດຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ່ 8 (2016 - 2020):
    - ເປົ້າໝາຍທີ 1 ກ່ຽວກັບ ເສດຖະກິດແຫ່ງຊາດເຕີບໂຕຢ່າງມີຄຸນນະພາບ, ສົມດຸນ ແລະຍືນຍົງ, ຜົນໄດ້ຮັບທີ 5 ຫົວຂໍ້ "ສ້າງຄວາມເຂັ້ມແຂງໃຫ້ກັບກຳລັງແຮງງານທັງພາກລັດ/ເອກະຊົນ" ໃຫ້ຮັບຮູ້ກ່ຽວກັບສະຖານະການທ້າທາຍຂອງແຮງງານເຄື່ອນຍ້າຍລາວທີ່ກັບຄືນບ້ານ ໃນຊ່ວງການແຜ່ລະບາດຂອງພະຍາດໂຄວິດ-19.
    - ເປົ້າໝາຍທີ 4 ກ່ຽວກັບ ຈັດບຸລິມະສິດຜົນໄດ້ຮັບກ່ຽວກັບບັນຫາທີ່ຕິດພັນ, ຜົນໄດ້ຮັບທີ 3 ຫົວຂໍ້ "ສົ່ງເສີມ ແລະ ພັດທະນາແມ່ຍິງ ເດັກນ້ອຍ ແລະ ໄວໜຸ່ມ" ເຊິ່ງໄດ້ລະບຸວ່າແຮງງານເຄື່ອນຍ້າຍໄວໜຸ່ມເພດຍິງຕ້ອງໄດ້ເອົາໃຈໃສ່ເປັນພິເສດ.
- ອີງຕາມ ການພັດທະນາເສດຖະກິດສັງຄົມ, ກອງປະຊຸມ NSEDP ຄັ້ງທີ 9 ທີ່ຍົກໃຫ້ເຫັນຜົນກະທົບທາງບວກຂອງແຮງງານເຄື່ອນຍ້າຍໄວຫນຸ່ມທີ່ປະກອບສ່ວນເຂົ້າໃນການພັດທະນາເພື່ອຊຸກຍູ້ການຂະຫຍາຍຕົວທາງດ້ານເສດຖະກິດຢ່າງວ່ອງໄວ.
- ພາຍໃຕ້ ຈຸດໝາຍລວມ, ເປົ້າໝາຍ, ແລະ ຜົນໄດ້ຮັບ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ່ 9:
    - ອີງໃສ່ ເປົ້າໝາຍທີ 2 ກ່ຽວກັບ ຊັບພະຍາກອນມະນຸດມີຄຸນນະພາບທີ່ດີຂຶ້ນ, ຜົນໄດ້ຮັບທີ 3 ຫົວຂໍ້ "ປັບປຸງຄຸນນະພາບ ແລະ ຍົກລະດັບສີມືແຮງງານ ແລະ ເພີ່ມໂອກາດໃນການສ້າງລາຍໄດ້ ແລະ ການເຂົ້າເຖິງວຽກງານໃນຫຼາຍສາຂາວິຊາຊີບ ທີ່ສອດຄ່ອງກັບຄວາມຕ້ອງການຂອງການພັດທະນາເສດຖະກິດສັງຄົມ" ໜຶ່ງໃນກິດຈະກຳບຸລິມະສິດແມ່ນການຂະຫຍາຍຕາຫນ່າງການໃຫ້ບໍລິການທາງດ້ານການຈ້າງງານເພື່ອສະໜອງການບໍລິການ ແລະ ວຽກງານທີ່ມີຄຸນນະພາບເພື່ອເພີ່ມຄຸນນະພາບຂອງແຮງງານ ແລະ ການສ້າງລາຍໄດ້, ຮັບຮູ້ເຖິງສິ່ງທ້າທາຍໃນປັດຈຸບັນລວມທັງແຮງງານເຄື່ອຍຍ້າຍຈາກຊົນນະບົດເຂົ້າມາໃນຕົວເມືອງ ແລະ ການເຄື່ອນຍ້າຍໄປເຮັດວຽກໄປຕ່າງປະເທດແບບຜິດປົກກະຕິ.
    - ອີງໃສ່ ເປົ້າໝາຍທີ 6 ກ່ຽວກັບ ການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ, ຜົນໄດ້ຮັບທີ 3 ຫົວຂໍ້ "ຮັບປະກັນຄວາມໝັ້ນຄົງທາງການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບ, ຄວາມສາມັກຄີ, ປະຊາທິປະໄຕ, ຄວາມຍຸດຕິທຳ ແລະ ຄວາມສີວິໄລພາຍໃນສັງຄົມ" ໜຶ່ງໃນກິດຈະກຳບຸລິມະສິດແມ່ນ ການປັບປຸງການບໍລິຫານຈັດການການຂ້າມຊາຍແດນ, ຮັບປະກັນບັນດາ

ມາດຕະການ ການເຄື່ອນຍ້າຍຖິ່ນຖານຢ່າງເປັນລະບົບ, ການຕໍ່ຕ້ານອາດຊະຍາກຳຂ້າມຊາດ, ເພີ່ມຂີດຄວາມສາມາດຂອງເຈົ້າໜ້າທີ່ດ່ານຊາຍແດນ.

- ໃນເບື້ອງ ມາດຕະການການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ່ 9 NSEDP, ຜົນໄດ້ຮັບທີ 5 ຫົວຂໍ້ "ການສ້າງພື້ນຖານໂຄງລ່າງທີ່ຍືດຢຸ່ນເພື່ອຍົກລະດັບການເຊື່ອມຕໍ່ ແລະ ການເຊື່ອມໂຍງໃນທຸກລະດັບ" ໝາຍເຖິງການເຊື່ອມຈອດການວາງແຜນຜັງເມືອງ ເຂົ້າໃນການພັດທະນາຕົວເມືອງ ແລະ ໄລຍະຕົ້ນຂອງການຂະຫຍາຍຕົວເມືອງ ແລະ ຮັບປະກັນການສ້າງພື້ນທີ່ທີ່ຢູ່ອາໄສໃນຕົວເມືອງທີ່ທັນສະໄໝ (ລວມທັງທີ່ຢູ່ອາໄສທີ່ປອດໄພ ແລະ ສາມາດເຂົ້າເຖິງໄດ້) ເພື່ອຫຼຸດຜ່ອນຄວາມແອອັດໃນຕົວເມືອງທີ່ເກີດຈາກການຍົກຍ້າຍຈາກຊົນນະບົດໄປສູ່ຕົວເມືອງ.

❖ **ແຜນດຳເນີນງານແຫ່ງຊາດໃນການຟື້ນຟູຫຼັງການແຜ່ລະບາດພະຍາດ COVID-19**

ນຳພາໂດຍ ກະຊວງແຜນການ ແລະ ການລົງທຶນ MPI ໂດຍໄດ້ຮັບການສະໜັບສະໜູນຈາກຄະນະຮັບຜິດຊອບຫຼາຍພາກສ່ວນ ເຊິ່ງແຜນການດຳເນີນງານໄດ້ກຳນົດບຸລິມະສິດ ແລະ ສ້າງບົດແນະນຳພາກປະຕິບັດຕົວຈິງໃນໄລຍະປີ 2021 - 2025 (ສປປ ລາວ, MPI, 2021). ເອກະສານອ້າງອີງຫຼາຍສະບັບກ່ຽວກັບແຮງງານເຄື່ອນຍ້າຍ ໂດຍສະເພາະແຮງງານເຄື່ອນຍ້າຍ ແລະ ການຄຸ້ມຄອງການເຄື່ອນຍ້າຍແມ່ນມີຢູ່ໃນເອກະສານ, ໂດຍສະເພາະຢູ່ພາຍໃຕ້ຫົວຂໍ້ 3 ວ່າດ້ວຍການເຕີບໂຕທີ່ເປັນມິດຕໍ່ສິ່ງແວດລ້ອມ, ຄວາມຢືດຢຸ່ນ ແລະ ການຄຸ້ມຄອງຄວາມສ່ຽງທີ່ກ່ຽວຂ້ອງກັບຜົນກະທົບຕໍ່ສິ່ງແວດລ້ອມ, ສຸຂະພາບ ແລະ ເສດຖະກິດ ທີ່ອາດຈະເກີດຂຶ້ນ. ການເຊື່ອມຕໍ່ລະຫວ່າງຜູ້ຍ້າຍຖິ່ນຖານກັບຄືນປະເທດ ແລະ ການພັດທະນາແມ່ນເຮັດໄດ້ຢ່າງຊັດເຈນ. ການເຄື່ອຍ້າຍກັບຄືນປະເທດລາວຢ່າງຫລວງຫລາຍແບບບໍ່ຄາດຄິດຂອງຜູ້ຄື່ອນຍ້າຍຈາກຕ່າງປະເທດເຮັດໃຫ້ເກີດເສຍຜົນປະໂຫຍດຂອງການສົ່ງເງິນຄືນກັບບ້ານ, ອັດຕາຄວາມທຸກຍາກເພີ່ມຂຶ້ນ, ຄວາມບໍ່ສະເໝີພາບ ແລະ ອັດຕາການຫວ່າງງານ, ຄວາມສ່ຽງຂອງການຂູດຮີດເພີ່ມຂຶ້ນ, ການຄ້າມະນຸດ ແລະການເຄື່ອນຍ້າຍຖິ່ນຖານແບບບໍ່ປົກກະຕິ, ແລະ ການເພີ່ມຂຶ້ນຂອງພະຍາດ ແລະການຖືກເອົາປຽບ. ເຊິ່ງແຜນດຳເນີນການດັ່ງກ່າວຍັງກ່າວເຖິງການຂາດນະໂຍບາຍການຄຸມຄອງການເຄື່ອນຍ້າຍຖິ່ນຖານທີ່ຄົບຖ້ວນ ແລະ ຂອບການເຊື່ອມໂຍງ ແລະ ລວມເຖິງການຂາດການຮັບຮູ້ເຖິງຂໍ້ມູນທີ່ມີຄຸນນະພາບສູງກ່ຽວກັບຜູ້ເຄື່ອນຍ້າຍ.

ພາຍໃຕ້ຫົວຂໍ້ 3 ແລະ ຕິດພັນກັບ 6 ບຸລິມະສິດ, ແຮງງານເຄື່ອນຍ້າຍແມ່ນກຸ່ມເປົ້າໝາຍຫຼັກຂອງການຈັດຕັ້ງປະຕິບັດ ແລະ ມີຂໍ້ສະເໜີແນະທີ່ໄດ້ກ່າວເຖິງສອງສາມຂໍ້ເຊັ່ນ:

- ເສີມສ້າງລະບົບການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ເພື່ອຫຼຸດຜ່ອນການເຄື່ອນຍ້າຍແຮງງານທີ່ບໍ່ເປັນລະບຽບ ລວມທັງສ້າງ/ປັບປຸງ MOU ຮ່ວມກັບປະເທດທີ່ຮັບແຮງງານ ເຊັ່ນ: ປະເທດໄທ ແລະ ມາເລເຊຍ;

- ປັບປຸງການເຂົ້າເຖິງເສັ້ນທາງການເຄື່ອນຍ້າຍແບບປົກກະຕິ ແລະ ປອດໄພ ໂດຍການເຄື່ອນຍ້າຍເຂົ້າ-ອອກເມືອງ ແລະ ຂັ້ນຕອນການພັກເຊົາທີ່ເປັນມິດຢູ່ໃນ ສປປ ລາວ ແລະ ປະເທດປາຍທາງ;
- ເສີມສ້າງລະບົບການເກັບກຳຂໍ້ມູນການເຄື່ອນຍ້າຍ ເພື່ອຮັບປະກັນການເກັບກຳຂໍ້ມູນຢ່າງຕໍ່ເນື່ອງ, ປັບປຸງຂີດຄວາມສາມາດໃນການວິເຄາະ ແລະ ການຄາດຄະເນຂອງລັດຖະບານ ແລະ ຄູ່ຮ່ວມງານອື່ນໆເພື່ອຟື້ນຟູຫຼັງການແຜ່ລະບາດ COVID-19. ເຊິ່ງຂອບເຂດຂອງການເກັບກຳຂໍ້ມູນ ແລະ ການວິເຄາະຂໍ້ມູນແມ່ນລວມເອົາຜົນກະທົບຂອງພະຍາດລະບາດຕໍ່ກັບການປົກປ້ອງ ແລະ ການຊ່ວຍເຫຼືອຜູ້ເຄື່ອນຍ້າຍ, ການສ້າງແຜນການຮັບມືກັບການໄຫຼເຂົ້າ-ອອກຂອງແຮງງານ ແລະຜົນກະທົບຂອງ COVID-19 ຕໍ່ກັບວຽກງານທີ່ເໝາະສົມ.

❖ **ນະໂຍບາຍໃນການພັດທະນາ ແລະ ປະຊາກອນແຫ່ງຊາດ 2019-2030.**

ນະໂຍບາຍໃນການພັດທະນາ ແລະ ປະຊາກອນແຫ່ງຊາດແມ່ນເພື່ອແກ້ໄຂເລື່ອງຄວາມດຸ່ນດ່ຽງຂອງຈຳນວນປະຊາກອນ ແລະ ການພັດທະນາ ເຊິ່ງແຜນດຳເນີນງານແມ່ນອີງໃສ່ການເຄື່ອນຍ້າຍຖິ່ນຖານທັງພາຍໃນ ແລະ ອອກຕ່າງປະເທດຢ່າງກວ້າງຂວາງ. ໃນບັນດາ 9 ເປົ້າໝາຍທີ່ຮັບໃຊ້ ວິໄສທັດ, ເປົ້າໝາຍທີ 5 ແມ່ນແນໃສ່ການສ້າງຜົນປະໂຫຍດສູງສຸດ ແລະ ຫຼຸດຜ່ອນຜົນກະທົບທາງລົບຕໍ່ການຍົກຍ້າຍຖິ່ນຖານໃນຊົນນະບົດ ແລະ ການເຄື່ອນຍ້າຍລະຫວ່າງປະເທດ (ສປປ ລາວ, MPI ແລະ UNFPA, 2020).

ນະໂຍບາຍດັ່ງກ່າວໄດ້ແນໃສ່ເຖິງຜົນກະທົບຂອງການເຄື່ອນຍ້າຍຖິ່ນຖານຕໍ່ການປ່ຽນແປງທາງດ້ານປະຊາກອນ, ການຂະຫຍາຍຕົວເມືອງ, ຄວາມແອອັດໃນຕົວເມືອງ ແລະ ການຂາດປະຊາກອນໃນເຂດຊົນນະບົດ. ດັ່ງນັ້ນ, ການສ້າງຂີດຄວາມສາມາດໃຫ້ແກ່ສະຖາບັນຈຶ່ງເປັນບຸລິມະສິດທີ່ສຳຄັນ ໂດຍຜ່ານການດຳເນີນງານຈາກຫຼາຍຂະແໜງການຮັບຜິດຊອບ ເພື່ອຮັບປະກັນວ່າບັນດາບັນຫາທີ່ກ່ຽວຂ້ອງກັບການເຄື່ອນຍ້າຍຖິ່ນຖານ ແລະ ການຂະຫຍາຍຕົວເມືອງຖືກແກ້ໄຂໃນແຜນພັດທະນາ ແລະ ຍຸດທະສາດ.

❖ **ແຜນຈັດຕັ້ງປະຕິບັດແຫ່ງຊາດໃນການສົ່ງເສີມຄວາມເທົ່າທຽມທາງດ້ານບົດບາດຍິງ-ຊາຍ ແລະ ການສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ 2021-2025**

ໃນວັນທີ 16 ທັນວາ 2021, ແຜນການແຫ່ງຊາດ 4 ສະບັບ ໄດ້ເລີ່ມການຈັດຕັ້ງປະຕິບັດຢ່າງເປັນທາງການ ໂດຍໄດ້ຮັບການສະໜັບສະໜູນຈາກອົງການ UNFPA ແລະ ອົງການ UNICEF ເຊິ່ງໄດ້ຮັບເງິນທຶນສະໜັບສະໜູນຈາກອົງການຮ່ວມມືສາກົນ ສ.ເກົາຫຼີ ຄື: ແຜນປະຕິບັດງານແຫ່ງຊາດ 5 ປີ ຄັ້ງທີ 4 ກ່ຽວກັບຄວາມສະເໝີພາບບົດບາດຍິງ-ຊາຍ (2021-2025) (ລັດຖະບານແຫ່ງ ສປປ ລາວ, 2021c); ແຜນປະຕິບັດແຫ່ງຊາດຄັ້ງທີ 2 ກ່ຽວກັບການປົກປັກຮັກສາ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ (2021-2025); ແຜນປະຕິບັດງານແຫ່ງຊາດຄັ້ງທີ 3 ກ່ຽວກັບແມ່ ແລະ ເດັກ (2021-2025); ແລະ ແຜນພັດທະນາແມ່ຍິງແຫ່ງຊາດ

(2021-2025) ເຊິ່ງແຜນການດຳເນີນຕ່າງໆເຫຼົ່ານີ້ ບໍ່ໄດ້ອ້າງເຖິງຜູ້ເຄື່ອນຍ້າຍຖິ່ນຖານ ແລະ ປະຊາກອນເຄື່ອນຍ້າຍຢ່າງຊັດເຈນ.

❖ **ແຜນພັດທະນາຂະແໜງການສຶກສາແລະກິລາ 2021 - 2025**

ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021 – 2025 ໄດ້ກຳນົດ 4 ເປົ້າໝາຍນະໂຍບາຍທີ່ເປັນບຸລິມະສິດ (ສປປ ລາວ, ກະຊວງສຶກສາ ແລະ ກິລາ MOES, 2020) ເຊິ່ງໃນບັນດາເປົ້າໝາຍບາງເປົ້າໝາຍແມ່ນກ່ຽວຂ້ອງກັບການເຄື່ອນຍ້າຍຂອງປະຊາກອນ ແລະ ການເຄື່ອນຍ້າຍຖິ່ນຖານ:

- ສົ່ງເສີມການສອນພາສາຕ່າງປະເທດໃນທຸກລະດັບການສຶກສາ (ລະດັບປະຖົມສຶກສາ, ມັດທະຍົມສຶກສາ) ເຊິ່ງນັ້ນອາດໝາຍເຖິງການເຄື່ອນຍ້າຍເຂົ້າປະເທດຂອງອາຈານສອນທີ່ເປັນຄົນຕ່າງປະເທດ;
- ພັດທະນາຂອບເຂດວຽກງານບຸລິມະສິດທຶນການສຶກສາໃຫ້ແກ່ນັກສຶກສາໄປຮຽນຕໍ່ຢູ່ຕ່າງປະເທດໃຫ້ສອດຄ່ອງກັບການພັດທະນາເສດຖະກິດສັງຄົມຂອງປະເທດ;
- ເປົ້າໝາຍລະດັບປານກາງ ເປົ້າໝາຍ 7 ດ້ານຄຸນນະພາບຂອງອາຈານສອນໃນສະຖາບັນການສຶກສາຊັ້ນສູງ ລວມມີບັນດາການສຸມໃສ່ການຍົກລະດັບຄູສອນ ແລະ ແລກປ່ຽນບົດຮຽນດ້ານວິຊາການກັບມະຫາວິທະຍາໄລຕ່າງປະເທດ;
- ເປົ້າໝາຍລະດັບປານກາງ ເປົ້າໝາຍ 10 ກ່ຽວກັບທຶນການສຶກສາຈາກພາຍນອກແມ່ນສຸມໃສ່ການເຄື່ອນຍ້າຍຂອງນັກສຶກສາຢ່າງກວ້າງຂວາງ. ກິດຈະກຳຫຼັກທີ່ສຳຄັນປະກອບມີດັ່ງຕໍ່ໄປນີ້:
    - ຈັດກອງປະຊຸມເພື່ອພັດທະນານິຕິກຳກ່ຽວກັບການບໍລິຫານຄຸ້ມຄອງນັກສຶກສາລາວ ແລະ ສະໜອງທຶນການສຶກສາໃຫ້ແກ່ນັກສຶກສາລາວ ໄປຮຽນຕໍ່ຢູ່ຕ່າງປະເທດ ແລະ ນັກສຶກສາຕ່າງປະເທດທີ່ໄປສຶກສາຢູ່ໃນປະເທດ ແລະ ເຜີຍແຜ່ນິຕິກຳດັ່ງກ່າວ;
    - ຈັດກອງປະຊຸມເພື່ອພິຈາລະນາ ແລະ ປຶກສາຫາລືກ່ຽວກັບການສະໜອງທຶນໃຫ້ແກ່ນັກສຶກສາໄປຮຽນຕໍ່ຕ່າງປະເທດໃນຂົງເຂດວິທະຍາສາດ ແລະ ເຕັກໂນໂລຊີ.
- ເປົ້າໝາຍລະດັບປານກາງ ເປົ້າໝາຍ 11 ກ່ຽວກັບການສົ່ງເສີມການຄົ້ນຄວ້າວິທະຍາສາດ ລວມທັງການພັດທະນາຖານຂໍ້ມູນ ເພື່ອເກັບກຳຂໍ້ມູນນັກສຶກສາລາວທີ່ຮຽນຢູ່ຕ່າງປະເທດ ແລະ ນັກສຶກສາຕ່າງປະເທດທີ່ຮຽນຢູ່ ສປປ ລາວ.

❖ **ຂອບດຳເນີນງານໃນການປະຕິຮູບວຽກງານສາທາລະນະສຸກ 2013-2025**

ຂອບດຳເນີນງານໃນການປະຕິຮູບໄດ້ໃຫ້ບຸລິມະສິດໃນການພັດທະນາຂີດຄວາມສາມາດຂອງພະນັກງານສາທາລະນະສຸກໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ແລະ ແນໃສ່ການຄຸ້ມຄອງສຸຂະພາບຂອງປະຊາຊົນທັງໝົດ.

ເຖິງຢ່າງໃດກໍ່ຕາມ, ຍັງບໍ່ມີການອ້າງອີງກ່ຽວກັບຂອດການດໍາເນີນງານຢ່າງຈະແຈ້ງ (ສປປ ລາວ, ກະຊວງສາທາລະນະສຸກ MOH, 2013).

❖ **ຍຸດທະສາດແຫ່ງຊາດກ່ຽວກັບການຫຼຸດຜ່ອນຄວາມສ່ຽງໄພພິບັດ 2021-2030**

ຍຸດທະສາດແຫ່ງຊາດໃນການຫຼຸດຜ່ອນຄວາມສ່ຽງໄພພິບັດມີເປົ້າໝາຍເພື່ອສ້າງຄວາມເຂັ້ມແຂງໃນການຄຸ້ມຄອງໄພພິບັດເພື່ອປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຈາກໄພພິບັດ ແລະກຽມພ້ອມຮັບມືກັບເຫດສຸກເສີນທາງໄພພິບັດ ແລະ ການຟື້ນຟູຫຼັງເກີດໄພພິບັດລວມທັງການໂຄງຮ່າງ. ຈຸດປະສົງຂອງຍຸດທະສາດແຫ່ງຊາດສໍາຫຼັບປີ 2030 ແມ່ນປະກອບດ້ວຍວິໄສທັດ ແລະ ເປົ້າໝາຍ ເຊິ່ງປະກອບມີ 7 ຍຸດທະສາດສໍາຄັນ ແລະ 12 ເປົ້າໝາຍ (ທ່ານນາຍົກລັດຖະມົນຕີ, 2021). ອ້າງອີງເຖິງປະຊາກອນທີ່ຖືກຍົກຍ້າຍທີ່ພົບໄດ້ຍາກໃນແຜນຍຸດທະສາດ:

- ປະຊາກອນທີ່ຖືກຍົກຍ້າຍແມ່ນສ່ວນຫນຶ່ງຂອງກິດຈະກໍາທີ່ກ່ຽວຂ້ອງກັບການພັດທະນາມາດຕະຖານການຈັດຕັ້ງປະຕິບັດ ໃນການປະສານງານແລະການກຽມພ້ອມ, ການເຕືອນໄພລ່ວງຫນ້າ, ການຕອບສະຫນອງເຫດການສຸກເສີນ ແລະ ການຟື້ນຕົວໄວຕາມກົດຫມາຍ DM ແລະພາຍໃຕ້ຍຸດທະສາດທີ່ຫນຶ່ງ.[44]
- ຢູ່ພາຍໃຕ້ການສຸມໃສ່ການຕໍ່ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງໃນຊ່ວງການເກີດໄພພິບັດສະນັ້ນເພື່ອປ້ອງກັນ ແລະ ຕອບສະໜອງຕໍ່ການໃຊ້ຄວາມຮຸນແຮງທາງເພດ ແລະ ບົດບາດຍິງຊາຍໃນຊ່ວງເກີດໄພພິບັດ ຈຶ່ງອີງໃສ່ການສ້າງຍຸດທະສາດເພື່ອຊຸມຊົນທີ່ຖືກຍົກຍ້າຍ ຫຼື ຜູ້ໄດ້ຮັບຜົນກະທົບ.

❖ **ຂອບການຮ່ວມມືການພັດທະນາແບບຍືນຍົງຂອງສະຫະປະຊາຊາດ**

ຂອບການຮ່ວມມືລະຫວ່າງ ອົງການສະຫະປະຊາຊາດ ແລະ ສປປ ລາວ ແມ່ນໄດ້ກໍານົດ ແລະ ສະທ້ອນເຖິງການປະກອບສ່ວນຂອງລະບົບການພັດທະນາແບບຍືນຍົງໃນທົ່ວປະເທດ ແລະ ທິດທາງການຈັດຕັ້ງປະຕິບັດໂຄງການ ທັງໝົດ.

### 3.1.2. ກອບກົດໝາຍແຫ່ງຊາດ

❖ **ລັດຖະທໍາມະນູນປີ 1991**

ຕາມມາດຕາ 34 ຂອງລັດຖະທໍາມະນູນແຫ່ງ ສປປ ລາວ ປີ 1991 ສະບັບປັບປຸງເຖິງປີ 2003 (ລັດຖະບານແຫ່ງ ສປປ ລາວ, 2003), ພົນລະເມືອງລາວແມ່ນບຸກຄົນທີ່ຖືສັນຊາດລາວ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ. ຄຽງຄູ່ກັນ

[44] Strategy 1 is titled "Develop and strengthen the disaster prevention system, disaster risk reduction, disaster preparedness and response" and objective 1 aims to disseminate and implement the DM Law and establish a DRR system at the central and local levels, coordinate disaster management, and regional and international cooperation.

ນັ້ນ, ມາດຕາ 50 (ສະບັບປັບປຸງ) ຍັງໄດ້ລະບຸວ່າ: "ຄົນຕ່າງປະເທດທີ່ໄດ້ປະກອບສ່ວນອັນດີຕໍ່ປະເທດຊາດ ແລະ ມີຈຸດຢືນໃນການປະກອບສ່ວນອັນສຳຄັນເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ ມີສິດໄດ້ຮັບການເປັນສັນຊາດຂອງ ສປປ ລາວ" (ລັດຖະບານແຫ່ງ ສປປ ລາວ, , 2015).

❖ **ກົດໝາຍວ່າດ້ວຍ ສັນຊາດລາວ**

ກົດໝາຍວ່າດ້ວຍ ສັນຊາດລາວໄດ້ຖືກຮັບຮອງໃນປີ 17 ພຶດສະພາ 2004 ເຊິ່ງ"ກຳນົດບັນດາຫຼັກການ ແລະ ລະບຽບການຕ່າງໆ ກ່ຽວກັບການໄດ້, ການເສຍສັນຊາດ ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ການກວດກາພົນລະເມືອງມີປະສິດທິພາບໂດຍອີງໃສ່ບັນດາຂໍ້ກຳນົດ ແລະ ກົດໝາຍທີ່ກຳນົດໄວ້" (ມາດຕາ 1) (ລັດຖະບານແຫ່ງ ສປປ ລາວ, 2004).ພື້ນຖານຂອງການໄດ້ສັນຊາດ ແມ່ນຈະໄດ້ມາຈາກ ການເກີດ, ການຮັບເຂົ້າສັນຊາດລາວ, ການໄດ້ສັນຊາດລາວຄືນ ແລະ ພື້ນຖານອື່ນໆ ທີ່ໄດ້ກຳນົດໄວ້ໃນ(ມາດຕາທີ 11 ແລະ 14). ສ ປປ ລາວ ບໍ່ອະນຸຍາດໃຫ້ພົນລະເມືອງລາວ ມີຫຼາຍສັນຊາດຄວບກັນ (ມາດຕາ 3). ຄົນຕ່າງປະເທດ ແມ່ນ " ຄົນທີ່ມີສັນຊາດອື່ນ ເຊິ່ງເຂົ້າມາ ສ ປປ ລາວ ຊົ່ວຄາວ ຫຼື ຍາວນານເພື່ອປະຕິບັດໜ້າທີ່ໃດໜຶ່ງ, ເມື່ອໝົດກຳນົດແລ້ວ ກໍ່ກັບຄືນປະເທດຂອງຕົນ"(ມາດຕາ 7). ສຳລັບເງື່ອນໄຂການໄດ້ສັນຊາດຂອງຄົນຕ່າງປະເທດ ແມ່ນຕ້ອງໄດ້ອາໄສຢູ່ໃນ ສ ປປ ລາວ ໂດຍຖືກຕ້ອງຕາມກົດໝາຍ ແລະ ຕໍ່ເນື່ອງຢ່າງໜ້ອຍ 10 ປີຂຶ້ນໄປ.

❖ **ກົດໝາຍວ່າດ້ວຍ ການເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສ ປປ ລາວ.**

ກົດໝາຍ ເລກທີ 079/ປປທ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສ ປປ ລາວ (ມາດຕາ 1) ( ສປປ ລາວ, ປກສ, 2015). ເຊິ່ງປະກອບດ້ວຍ 10 ພາກ ແລະ ລວມມີ 66 ມາດຕາ).

- *ການເຂົ້າ-ອອກ ຈາກ ສ ປປ ລາວ*

ບັນດາຂໍ້ກຳນົດ ໃນການເຂົ້າ-ອອກ ສ ປປ ລາວ ນັ້ນ ແມ່ນອີງໃສ່ເງື່ອນໄຂຂອງສັນຊາດ. ພົນລະເມືອງລາວຄວນມີວີຊ້າ[45] ແຈ້ງເຂົ້າປະເທດທີ່ຈະໄປນັ້ນ, ໃຊ້ໜັງສືຜ່ານແດນ ຫຼື ໃບຜ່ານແດນ ເມື່ອເດີນທາງເຂົ້າ-ອອກ ສ ປປ ລາວ ກັບປະເທດທີ່ມີຊາຍແດນຕິດຈອດກັນ ຕາມສັນຍາສອງຝ່າຍ ລະຫວ່າງ ສ ປປລາວ ກັບ ປະເທດດັ່ງກ່າວ. ໃຊ້ໜັງສືຜ່ານແດນເຂົ້າ-ອອກ ສ ປປລາວ ແລະ ແຈ້ງ ເຂົ້າ-ອອກ ຕໍ່ເຈົ້າໜ້າທີ່ຕຳຫຼວດ ກວດຄົນເຂົ້າ-ອອກເມືອງ ປະຈຳດ່ານ, ແລະ ມີເອກະສານຢັ້ງຢືນຢ່າງເປັນທາງການ ຈາກອົງການທີ່ກ່ຽວຂ້ອງ ມາແຈ້ງຕໍ່ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານ ສຳລັບຜູ້ໃຊ້ໜັງສືຜ່ານແດນການທູດ ແລະ ທາງລັດຖະການ ( ມາດຕາ10) (ibid).

[45] ວີຊ້າ ໝາຍເຖິງ ການອະນຸມັດໃນການເຂົ້າ-ອອກນອກປະເທດ

ສຳລັບການເຂົ້າ-ອອກ ສ ປປ ລາວ ຂອງຄົນຕ່າງປະເທດ ແລະ ຄົນທີ່ບໍ່ມີສັນຊາດ ໃຫ້ປະຕິບັດຕາມສັນຍາລະຫວ່າງສອງຝ່າຍ ແລະ ປະຕິບັດຕາມຂັ້ນຕອນໃນການຂໍວີຊ່າກ່ອນເຂົ້າມາໃນປະເທດ ແລະ ແຈ້ງເຂົ້າ-ອອກ ຕໍ່ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກ ເມືອງ ປະຈຳດ່ານ.[46]

- *ບັນດາຂໍ້ກຳນົດກ່ຽວກັບວີຊ່າ.*

ສຳລັບວີຊ່າເຂົ້າ-ອອກ ສ ປປ ລາວ ທີ່ໄດ້ກຳນົດໄວ້ໃນມາດຕາ 19 ແລະ ມາດຕາ 20 ແມ່ນມີຢູ່ 13 ປະເພດ ເຊິ່ງໄດ້ລະບຸລາຍລະອຽດໃນຕາຕະລາງທີ 2 (ibid.).

**ຕາຕະລາງ 2. ປະເພດ ແລະ ການອອກວີຊ່າເຂົ້າ-ອອກ ສ ປປ ລາວ.**

| ຊື່ | ປະເພດ ວີຊ່າ | ອອກໃຫ້ |
|---|---|---|
| D-A1 | ວີຊ່າການທູດ | ວີຊ່າການທູດ ອອກໃຫ້ນັກການທູດ ແຕ່ຊັ້ນອານຸເລຂາຂຶ້ນໄປ, ລັດຖະກອນກົງສູນ, ຜູ້ຕາງໜ້າ ແລະ ຮອງຜູ້ຕາງໜ້າ ຂອງອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນອື່ນ ພ້ອມດ້ວຍສະມາຊິກຄອບຄົວ ທີ່ຖືກແຕ່ງຕັ້ງໃຫ້ມາປະຕິບັດໜ້າທີ່ ທັງໄລຍະສັ້ນ ແລະ ໄລຍະຍາວ ຢູ່ ສ ປປ ລາວ ໂດຍມີໜັງສືສະເໜີຈາກອົງການທີ່ກ່ຽວຂ້ອງ. |
| S-A2 | ວີຊ່າລັດຖະການ | ພະນັກງານບໍລິຫານ-ເຕັກນິກ ປະຈຳສະຖານ ເອກອັກຄະລັດຖະທູດ, ສະຖານກົງສູນໃຫຍ່ ແລະ ສະຖານກົງສູນ ພ້ອມດ້ວຍສະມາຊິກຄອບຄົວ. |
| C-B1 | ວີຊ່າອັດຖະຍາໄສ | ພະນັກງານຫ້ອງການຮ່ວມມື ໃນຂອບການພົວພັນສອງຝ່າຍ, ພະນັກງານອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນອື່ນ ປະຈຳຫ້ອງການສຳນັກງານຜູ້ຕາງໜ້າຂອງອົງການຈັດຕັ້ງດັ່ງກ່າວ ຢູ່ ສ ປປ ລາວ, |
| T-B3 | ວີຊ່າທ່ອງທ່ຽວ | ຄົນຕ່າງປະເທດ ແລະ ບໍ່ມີສັນຊາດ ທີ່ມີຈຸດປະສົງ ເຂົ້າມາທ່ອງທ່ຽວຢູ່ ສ ປປ ລາວ. |

46 ພົນລະເມືອງຈາກ 9 ປະເທດ (ປະເທດບູໄນ, ກຳປູເຈຍ, ອິນໂດເນເຊຍ, ມາເລເຊຍ, ພະມ້າ, ຟີລິບປິນ, ສິງກະໂປ, ປະເທດໄທ ແລະ ປະເທດຫວຽດນາມ) ສາມາດເດີນທາງໄປ ສ ປປ ລາວ ໂດຍບໍ່ຈຳເປັນຕ້ອງໃຊ້ວີຊ່າ ສຳລັບພັກເຊົາໃນໄລຍະເວລາ 30 ມື້ລົງມາ.

| | | |
|---|---|---|
| NI-B3 | ວີຊ່າໄລຍະສັ້ນ | ນັກວິຊາການຕ່າງປະເທດ ແລະ ຄົນຕ່າງປະເທດ ຜູ້ທີ່ໄດ້ຮັບອະນຸມັດ ໃຫ້ເຂົ້າມາປະຊຸມ , ຝຶກອົບຮົມ ຫຼື ມາທັດສະນະສຶກສາຊົ່ວຄາວ ຢູ່ ສ ປປລາວ. |
| I-B3 | ວີຊ່າໄລຍະຍາວ | ຄົນຕ່າງປະເທດ ແລະ ຄົນທີ່ບໍ່ມີສັນຊາດ ຜູ້ທີ່ມີຄຸນງາມຄວາມດີຕໍ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ລວມທັງຜູ້ທີ່ມີຜົນປະໂຫຍດຕໍ່ ສ ປປ ລາວ ເຊິ່ງມີຈຸດປະສົງເດີນທາງມາພັກເຊົາຍາວນານຢູ່ ສ ປປ ລາວ. |
| P-B3 | ວີຊ່າຖາວອນ | ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ໄດ້ຮັບອະນຸຍາດໃຫ້ມາດຳລົງຊີວິດ ຢູ່ ສ ປປ ລາວ ຢ່າງຖາວອນ. |
| E-B2 | ວີຊ່າຊ່ຽວຊານ | ບັນດາຊ່ຽວຊານ ແລະ ພະນັກງານອົງການຈັດຕັ້ງສາກົນ ເຂົ້າມາເຄື່ອນໄຫວວຽກງານຢູ່ ສ ປປ ລາວ, ຊ່ຽວຊານ ແລະ ນັກວິຊາການ ທີ່ມາຕາມສັນຍາຈ້າງ ຫຼື ສັນຍາຮັບເໝົາກິດຈະການຈາກພາກລັດ, ເອກະຊົນ ຫຼື ອົງການຈັດຕັ້ງສາກົນອື່ນ ພ້ອມດ້ວຍສະມາຊິກຄອບຄົວ. |
| TR-B3 | ວີຊ່າຜ່ານ | ຄົນຕ່າງປະເທດ ແລະ ຄົນທີ່ບໍ່ມີສັນຊາດ ທີ່ມີຈຸດປະສົງເດີນທາງຜ່ານ ສ ປປ ລາວ ເພື່ອເດີນທາງໄປປະເທດອື່ນ. |
| NI-B2 or I-B2 | ວີຊ່າທຸລະກິດ | ນັກທຸລະກິດຕ່າງປະເທດ ພ້ອມດ້ວຍສະມາຊິກຄອບຄົວທີ່ມາລົງທຶນ ຫຼື ມາເກັບຂໍ້ມູນທາງດ້ານທຸລະກິດ ຢູ່ ສ ປປ ລາວ. |
| ST-B2 | ວີຊ່ານັກສຶກສາ | ນັກສຶກສາ ທີ່ເຂົ້າມາສຶກສາ, ຄົ້ນຄວ້າ, ເກັບຂໍ້ມູນ ຫຼື ມາຝຶກຫັດທາງດ້ານວິຊາການໃດໜຶ່ງ ຢູ່ ສ ປປ ລາວ. |
| M-B2 | ວີຊ່ານັກຂ່າວ | ນັກຂ່າວຕ່າງປະເທດ ທີ່ເຂົ້າມາເຄື່ອນໄຫວເກັບກຳຂ່າວ ຢູ່ ສ ປປ ລາວ. |
| LA-B2 | ວີຊ່າແຮງງານ | ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ມາອອກແຮງງານຢູ່ ສ ປປ ລາວ ພ້ອມດ້ວຍສະມາຊິກຄອບຄົວ. |

ແຫຼ່ງຂໍ້ມູນ: ມາດຕາ 19, ສ ປປ ລາວ, ປປທ, 2015

ນອກຈາກນີ້ກໍ່ຍັງມີວີຊ່າເຂົ້າ-ອອກ ສ ປປ ລາວ ຫຼາຍເທື່ອ ເຊິ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

- *ການພັກເຊົາໃນ ສ ປປ ລາວ.*

ໄລຍະເວລາຂອງການອະນຸຍາດໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ພັກເຊົາຢູ່ ສ ປປ ລາວ ນັ້ນ ແມ່ນຂຶ້ນກັບແຕ່ລະປະເພດຂອງວີຊ່າຫຼື ສັນຍາລະຫວ່າງສອງຝ່າຍ ຫຼື ການຕົກລົງຂອງລັດຖະບານ. ສຳລັບການຕໍ່ເວລາພັກເຊົານັ້ນ , ແມ່ນຕ້ອງໄດ້ສະເໜີຂໍຕໍ່ໄລຍະເວລາພັກເຊົາ ນຳເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກທີ່ກ່ຽວຂ້ອງ ກ່ອນໝົດກຳນົດ. ການລົງທະບຽນພັກເຊົາແມ່ນຈຳເປັນຕ້ອງໄດ້ແຈ້ງຕໍ່ເຈົ້າໜ້າທີ່ຄຸ້ມຄອງຄົນຕ່າງປະເທດ ຜູ່ທີ່ເຊັນ ແລະ ຈໍ້າກາເອກະສານເດີນທາງໃຫ້ໃນທຸກໆເວລາ 90 ວັນ.

ສຳລັບເຈົ້າໜ້າທີ່ຄຸ້ມຄອງຄົນຕ່າງປະເທດ ແມ່ນເປັນຜູ່ຮັບຜິດຊອບການລົງທະບຽນ ແລະ ອອກບັດພັກເຊົາໃນໄລຍະເວລາ 1 – 5 ປີ ໃຫ້ແກ່ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ຈະພັກເຊົາຢູ່ໃນປະເທດ ແລະ ໃຫ້ແກ່ຜູ່ທີ່ອາໄສ ແລະ ແຕ່ງງານກັບພົນລະເມືອງລາວຢ່າງຖືກຕ້ອງຕາມກົດໝາຍ.

❖ **ແຮງງານເຄື່ອນຍ້າຍທີ່ຖືກຕ້ອງຕາມກົດໝາຍ**

- *ກົດໝາຍແຮງງານ ( ສະບັບປັບປຸງ)*

ກົດໝາຍແຮງງານ , ສະບັບເລກທີ 043/ສພຊ, ໄດ້ຖືຮັບຮອງ ໃນວັນທີ 24 ເດືອນທັນວາ 2013 ເຊິ່ງໄດ້ກຳນົດ “ ບັນດາຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ການພັດທະນາສີມືແຮງງານ, ການຈັດຫາງານ, ການເຄື່ອນຍ້າຍແຮງງານ, ການປົກປ້ອງແຮງງານ ເພື່ອຍົກສູງຄຸນນະພາບ, ຜະລິດຕະພາບ ຂອງງານໃນສັງຄົມ” ( ມາດຕາ 1) ( ສ ປປ ລາວ, ສະພາແຫ່ງຊາດ, 2013).

ຜູ່ໃຊ້ແຮງງານ ທີ່ມີຄວາມຕ້ອງການຈ້າງຜູ່ອອກແຮງງານທີ່ເປັນແຮງງານເຄື່ອນຍ້າຍ ເຂົ້າເຮັດວຽກໃນທຸລະກິດຂອງຕົນນັ້ນ ແມ່ນຕ້ອງໄດ້ຂໍໂກຕ້າ ສຳລັບຈຳນວນຜູ່ອອກແຮງງານເສຍກ່ອນ. ເຊິ່ງການຄົ້ນຄ້ວາ ແລະ ອະນຸມັດໂກຕ້ານຳເຂົ້າ, ລົງທະບຽນ ແລະ ອອກໃບອະນຸຍາດເຮັດວຽກໃຫ້ແກ່ບັນດາແຮງງານຕ່າງປະເທດ ກໍ່ແມ່ນໜຶ່ງໃນບັນດາສິດ ແລະ ໜ້າທີ່ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ( ສ ປປ ລາວ, ປກສ, 2015) ແລະ ພ້ອມກັນນັ້ນກໍ່ຍັງເປັນຜູ່ກຳນົດໄລຍະເວລາໃນການນຳເຂົ້າ ແລະ ນຳໃຊ້ແຮງງານຕ່າງປະເທດອີກດ້ວຍ(ibid.).

ຈຳນວນແຮງງານເຄື່ອນຍ້າຍ ທີ່ເຮັດວຽກຢູ່ໃນທຸລະກິດແມ່ນບໍ່ອະນຸຍາດໃຫ້ເກີນ 10 ສ່ວນຮ້ອຍຂອງຈຳນວນພະນັກງານທັງໝົດໃນຫົວໜ່ວຍແຮງງານສຳລັບວຽກທີ່ມີທັກສະຕ່ຳ ແລະ ປານກາງ, ເປັນຕົ້ນແມ່ນ ອາຊີບທີ່ອາໄສການເຮັດດ້ວຍມື, ຫຼື ອາຊີບທີ່ຕ້ອງໃຊ້ແຮງທາງດ້ານຮ່າງກາຍ ແລະ 20 ສ່ວນຮ້ອຍຂອງວຽກງານດ້ານເຕັກນິກ-ວິຊາຊີບ ຫຼື ອາຊີບທີ່ຕ້ອງການທັກສະໃນການເຮັດວຽກຂັ້ນສູງ ເປັນຕົ້ນແມ່ນມີຄວາມຊຳນານທາງດ້ານສະຕິປັນຍາໃນ

ການເຮັດວຽກ (ມາດຕາ 25) (ສ ປປ ລາວ, ສະພາແຫ່ງຊາດ, 2013b). ພ້ອມກັນນັ້ນ, ກົດໝາຍຍັງອະນຸຍາດໃຫ້ມີແຮງງານເຄື່ອນຍ້າຍ ເກີນອັດຕາສ່ວນໃນກໍລະນີຈຳເປັນເທົ່ານັ້ນ, ແຕ່ຕ້ອງໄດ້ຮັບການຊີ້ແຈງ ແລະ ອະນຸມັດຈາກລັດຖະບານ. ຄັດຄ້ານການອະນຸມັດຈາກລັດຖະບານ. ໃນບົດຄວາມດຽວກັນໄດ້ກຳນົດວ່າຄົນງານຕ່າງປະເທດມີພັນທະໃນການໂອນຄວາມຊ່ຽວຊານໃຫ້ຄົນງານລາວ. ແລະ ໃນມາດຕາດຽວກັນນັ້ນ, ກໍ່ຍັງໄດ້ລະບຸອີກວ່າ, ແຮງງານຕ່າງປະເທດແມ່ນມີພັນທະ-ໜ້າທີ່ໃນການໂອນຖ່າຍຄວາມຮູ້-ຄວາມຊຳນານໃຫ້ແກ່ແຮງງານທີ່ເປັນຄົນລາວອີກດ້ວຍ.

- *ດຳລັດວ່າດ້ວຍ ການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ*

*ສຳລັບ ດຳລັດວ່າດ້ວຍ ການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ( ເລກທີ. 245/ລບ) ( ລັດຖະບານແຫ່ງ ສ ປປ ລາວ, 2020) ແມ່ນປັບປຸງແທນ ດຳລັດ ວ່າດ້ວຍ ການສົ່ງຜູ້ອອກແຮງງານລາວ ໄປເຮັດວຽກຢູ່ຕ່າງປະເທດ ( ເລກທີ. 68/ນຍ) ( ສ ປປ ລາວ, 2002). ແມ່ນຖືໄດ້ວ່າ ທັງສອງດຳລັດນີ້ແມ່ນສອດຄ່ອງກັບ ກົດໝາຍແຮງງານ ປີ 2013 ( ສ ປປ ລາວ, ສະພາແຫ່ງຊາດ, ປີ 2013 b). ເຊິ່ງສຳລັບດຳລັດ ເລກທີ ເລກທີ. 245/ລບ ກໍ່ປະກອບດ້ວຍ 34 ມາດຕາ. ແລະ ໃນນັ້ນກໍ່ໄດ້ກຳນົດ " ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມ, ແລະ ກວດກາ ວຽກງານຈັດສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ" (ມາດຕາ 1) ( ລັດຖະບານແຫ່ງ ສ ປປ ລາວ, 2020)*

ນອກຈາກນັ້ນ, ດຳລັດ*ເລກທີ. 245/ລບ ກໍ່ຍັງໄດ້ລະບຸ ປະເພດອາຊີບທີ່ບໍ່ອະນຸຍາດໃຫ້ສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ (ມາດຕາ 19)* (ibid.) ເຊິ່ງມີດັ່ງນີ້:

- ອາຊີບທີ່ຂັດກັບ ຮີດຄອງປະເພນີ, ວັດທະນະທຳ ແລະ ກົດໝາຍຂອງ ສ ປປ ລາວ ເປັນຕົ້ນແມ່ນ ການເປັນໂສເພນີ, ເປັນນາຍໜ້າຄ້າມະນຸດ, ເປັນນາຍໜ້າຄ້າໂສເພນີ, ຂາຍອາວຸດ, ບໍລິການອາບອົບນວດທີ່ມີລັກສະນະບໍລິການທາງເພດ, ການຂາຍອຸປະກອນລາມົກ, ວຽກສະແດງອານາຈານ, ລາມົກ ຫຼື ຖ່າຍຮູບເປືອຍ;
- ອາຊີບທີ່ເປັນອັນຕະລາຍຕໍ່ສຸຂະພາບ ແລະ ຊີວິດຂອງຜູ້ອອກແຮງງານ ເປັນຕົ້ນການສຳຜັດ ຫຼື ຜະລິດສານເຄມີ ແລະ ວັດຖຸລະເບີດ, ວຽກກ່ຽວກັບເຄື່ອງຈັກທີ່ມີສຽງດັງເກີນມາດຕະຖານ, ການຫາປາໃນທະເລທີ່ນຳໃຊ້ເຮືອຂະໜາດນ້ອຍ ເພື່ອຈັບປາ, ວຽກທີ່ມີຄວາມສ່ຽງເກີດພະຍາດຕິດແປດ ແລະ ວຽກງານຈັດສັດຮ້າຍ ຫຼື ສັດຕ້ອງຫ້າມ.

ເພາະສະນັ້ນ, ດຳລັດ*ເລກທີ. 245/ລບ* ຈຶ່ງກຳນົດປະເພດອາຊີບ ທີ່ບໍ່ອະນຸຍາດໃຫ້ສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ, [47] ເຊິ່ງອາດຈະເຮັດໃຫ້ເກີດຄວາມສ່ຽງຕໍ່ກັບແຮງງານບາງຄົນທີ່ຕ້ອງການໄປເຮັດວຽກຢູ່ຕ່າງປະເທດ

[47] ແຮງງານເຄື່ອນຍ້າຍທີ່ເປັນແມ່ຍິງລາວໄປເຮັດວຽກຢູ່ຕ່າງປະເທດ, ໂດຍສະເພາະໃນປະເທດໄທ ແມ່ນເກີດຂຶ້ນໃນຊ່ອງທາງທີ່ບໍ່ເປັນທາງການ. ດຳລັດ 245 ຄວນມີການປັບປຸງແປງທາງດ້ານກົດໝາຍ.

ຜ່ານຊ່ອງທາງທີ່ບໍ່ເປັນທາງການ ແລະ ເຮັດໃຫ້ເຂົາເຈົ້າມີຄວາມສ່ຽງຕໍ່ກັບພວກລັກລອບຄ້າມະນຸດ ເພີ່ມຂຶ້ນ ໃນໄລຍະທີ່ຜ່ານມາ.

- ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງວິສາຫະກິດ ບໍລິການຈັດຫາງານ

ຂໍ້ຕົກລົງ ເລກທີ 1050/ຣສສ ແມ່ນປ່ຽນແທນຂໍ້ຕົກລົງເລກທີ. 043 ເຊິ່ງປະກອບດ້ວຍ 53 ມາດຕາ (ສ ປປ ລາວ , ຣສສ, 2022). ໃນນັ້ນໄດ້*ກຳນົດ " ຫຼັກການ, ລະບຽບການ ແລະ ມາດຕະການການສ້າງຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງກ່ຽວກັບວິສາຫະກິດ ບໍລິການຈັດຫາງານ ເພື່ອຮັບປະກັນຄວາມສະເໝີພາບ, ຄວາມເປັນເອກະພາບ ແລະ ໃຫ້ເກີດປະສິດທິຜົນໃນທົ່ວປະເທດຕາມລະບຽບກົດໝາຍ* (ມາດຕາ1) (ibid.). ວິສາຫະກິດ ບໍລິການຈັດຫາງານ ໝາຍເຖິງຫົວໜ່ວຍບໍລິການຈັດຫາງານທີ່ບຸກຄົນ ຫຼື ນິຕິບຸກຄົນ ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດບໍລິການຈັດຫາງານຖືກຕ້ອງ ຕາມລະບຽບກົດໝາຍ ຈາກອົງການລັດທີ່ຄຸ້ມຄອງຈັດຫາງານ (ມາດຕາ 2 .ຂໍ້ 1) (ibid.).

ການບໍລິການ ຈັດຫາງານ ແມ່ນຈະແບ່ງອອກເປັນສອງປະເພດລຸ່ມນີ້:

- ການບໍລິການຈັດຫາງານ ພາຍໃນປະເທດ, ໝາຍເຖິງການໃຫ້ຄຳປຶກສາ ແລະ ແນະນຳກ່ຽວກັບຂໍ້ມູນການຈ້າງງານ ແລະ ນິຕິກຳ ພ້ອມທັງສ້າງເງື່ອນໄຂສະດວກໃຫ້ແກ່ຜູ້ອອກແຮງງານໃນການຊອກວຽກເຮັດງານທຳ ແລະ ສ້າງເງື່ອນໄຂສະດວກໃຫ້ແກ່ນາຍຈ້າງໃນການຮັບສະໝັກຄົນງານພາຍໃນປະເທດ ໂດຍນຳໃຊ້ເຄືອຂ່າຍການບໍລິການຈັດຫາງານຂອງລັດ ແລະ ການບໍລິການຈັດຫາງານຂອງເອກະຊົນ;
- ການບໍລິການຈັດຫາງານ ຕ່າງປະເທດ, ໝາຍເຖິງ*ການຈັດສົ່ງແຮງງານລາວໄປເຮັດວຽກ, ໄປຝຶກອົບຮົມ ແລະ ຝຶກອົບຮົມວິຊາຊີບ ຢູ່ຕ່າງປະເທດ. ເພື່ອແນໃສ່ ໃຫ້ຜູ້ອອກແຮງງານທີ່ເປັນຄົນລາວໄດ້ຮຽນຮູ້, ໄດ້ນຳໃຊ້ຄວາມຮູ້ທີ່ໄດ້ຮຽນມາ, ເພື່ອປັບປຸງທັກສະຄວາມສາມາດໃນການເຮັດວຽກ, ເພື່ອພັດທະນາທັກສະຂອງຕົນ, ແລະ ເພື່ອພັດທະນາທັກສະການເຮັດວຽກທາງດ້ານອຸດສາຫະກຳຢູ່ບັນດາປະເທດທີ່ ສ ປປ ລາວ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈກ່ຽວກັບການຈ້າງງານ.*

### ❖ ກົດໝາຍ ວ່າດ້ວຍທະບຽນຄອບຄົວ

ກົດໝາຍດັ່ງກ່າວນີ້ ໄດ້ຖືກຮັບຮອງໃນວັນທີ 30 ເດືອນ ທັນວາ 1991, ( ເລກທີ. 03/ສປສ) ມີໜ້າທີ່ວາງລະບຽບການ ກ່ຽວກັບການຈົດທະບຽນສຳມະໂນຄົວ, ການເກີດ, ການຫາຍສາບສູນ, ການເສຍຊີວິດ, ການແຕ່ງດອງ, ການຢ່າຮ້າງ, ການເອົາເດັກມາເປັນລູກລ້ຽງ, ການຮັບຮູ້ຄວາມເປັນພໍ່, ການປ່ຽນຊື່ ແລະ ນາມສະກຸນ, ການໂຍກຍ້າຍລວມທັງການປຸກ ຫຼື ການມ້າງເຮືອນ ເພື່ອອຳນວຍຄວາມສະດວກໃຫ້ແກ່ອົງການລັດ ໃນການຄຸ້ມຄອງພົນລະເມືອງ ແລະ ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ( ມາດຕາ 1) (ສ ປປ ລາວ, 1992). ສຳລັບຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ຢູ່ ສ ປປ ລາວ ກໍ່ໃຫ້ປະຕິບັດຕາມກົດໝາຍສະບັບນີ້.

- ❖ **ກົດໝາຍອາຍາ**

ໃນກົດໝາຍອາຍາ ( ສ ປປ ລາວ, ປີ 2017) ແມ່ນໄດ້ກຳນົດກ່ຽວກັບການເຄື່ອນຍ້າຍຖິ່ນຖານຢູ່ 2 ມາດຕາ, ເຊັ່ນວ່າ: ມາດຕາ 128 – ແນໃສ່ການຂົນຂວາຍສິ່ງຄົນອອກ ຫຼື ການເອົາຄົນເຂົ້າປະເທດຢ່າງຜິດກົດໝາຍ; ແລະ ມາດຕາ 215 -ແນໃສ່ ການຄ້າມະນຸດ. ເຊິ່ງໂດຍລວມແລ້ວທັງສອງມາດຕາດັ່ງກ່າວນີ້ ແມ່ນກຳນົດບັນດາຫຼັກການກ່ຽວກັບອາດຊະຍາກຳ ແລະ ການກະທຳຜິດ.

- ❖ **ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ**

ກົດໝາຍສະບັບນີ້ " ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາວຽກງານຕ້ານການຄ້າມະນຸດ" (ມາດຕາ 1) ( ສ ປປ ລາວ, ສະພາແຫ່ງຊາດ, 2015) ແລະ ພ້ອມທັງເກືອດຫ້າມທຸກການເຄື່ອນໄຫວ ທີ່ກ່ຽວກັບການຄ້າມະນຸດໃນທຸກຮູບແບບ. ໃນມາດຕາ 38 ໄດ້ມີການກຳນົດຕົວຜູ້ຖືກເຄາະຮ້າຍຢູ່ 3 ປະເພດ: (1) ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ຢູ່ ສ ປປ ລາວ ແລະ ຖືກເຄາະຮ້າຍ ຢູ່ ສ ປປ ລາວ, (2) ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ຢູ່ ສ ປປ ລາວ ແລະ ຖືກເຄາະຮ້າຍ ຢູ່ຕ່າງປະເທດ, (3) ຄົນຕ່າງດ້າວ ແຕ່ມາຖືກເຄາະຮ້າຍ ຢູ່ ສ ປປ ລາວ .

- ❖ **ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ**

ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບໄດ້ກຳນົດແຜນການຈັດສັນການຕັ້ງຖິ່ນຖານ-ພູມລຳເນົາ ແລະການຈັດສັນອາຊີບທີ່ລັດຖະບານວາງໄວ້. ເຊິ່ງມາດຕາ 11 ໄດ້ກຳນົດການຈັດສັນພູມລຳເນົາຢູ່ 2 ປະເພດຄື: ການຈັດສັນສະເພາະ ແມ່ນການກຳນົດເຂດທີ່ຢູ່ອາໄສ ແລະ ບ່ອນທຳມາຫາກິນ ໃຫ້ແກ່ປະຊາຊົນ ທີ່ຖືກຜົນກະທົບຈາກໂຄງການພັດທະນາ, ແລະ ການຈັດສັນທົ່ວໄປ ແມ່ນການກຳນົດເຂດທີ່ຢູ່ອາໄສ ແລະ ບ່ອນທຳມາຫາກິນ ໃຫ້ແກ່ປະຊາຊົນ ທີ່ຢູ່ໃນເຂດທຸລະກັນດານ ແລະ ຂາດເງື່ອນໄຂການພັດທະນາ. ມາດຕາ 14 ແມ່ນໄດ້ກຳນົດເຂດທີ່ມີຄວາມສ່ຽງສູງໃນການດຳລົງຊີວິດ ເຊິ່ງເປັນເຂດທີ່ມີໄພພິບັດທາງທຳມະຊາດເກີດຂຶ້ນເລື້ອຍໆ, ແຕ່ກໍ່ບໍ່ໄດ້ກຳນົດແນວທາງການຍົກຍ້າຍສຸກເສີນ.

ເຂດທີ່ຈະໄດ້ຮັບການຈັດສັນພູມລຳເນົານັ້ນ ແມ່ນເຂດທີ່ທຸລະກັນດານ ຍາກທີ່ຈະເຂົ້າເຖິງ ແລະ ບໍ່ມີເງື່ອນໄຂໃນການພັດທະນາ, ເປັນຂົງເຂດທີ່ມີຄວາມສ່ຽງໃນການດຳລົງຊີວິດ, ເປັນເຂດທີ່ມີລັກສະນະພິເສດ ແລະ ເປັນເຂດທີ່ໄດ້ຮັບຜົນກະທົບ ຈາກໂຄງການພັດທະນາ. ສຳລັບການຈັດສັນພູມລຳເນົານັ້ນ ແມ່ນມີຫຼາຍຂັ້ນຕອນ ເຊັ່ນວ່າ, ການສົມ

ທຽບຄວາມເສຍຫາຍທີ່ເກີດຂຶ້ນຈາກການຈັດສັນພູມລຳເນົາ, ການດຳເນີນການຫຍັບຍ້າຍ ຫຼື ຍົກຍ້າຍ ຈັດສັນພູມລຳເນົາ, ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນໃນໄລຍະຂ້າມຜ່ານ. .[48]

❖ **ກົດໝາຍ ວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ**

ກົດໝາຍ ວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ ສະບັບ ເລກທີ. 55/ສພຊ ແມ່ນຖືກຮັບຮອງໃນວັນທີ 22 ທັນວາ 2014 ( ສ ປປ ລາວ, ສະພາແຫ່ງຊາດ, 2014a).[49] ມາດຕາ 1 ໄດ້ກຳນົດ " ບັນດາຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການເຄື່ອນໄຫວ, ຄຸ້ມຄອງ, ຕິດຕາມ-ກວດກາ ແລະ ທຸລະກຳ ເງິນຕາຕ່າງປະເທດ ເພື່ອໃຫ້ມີປະສິດທິພາບ, ຖືກຕ້ອງ, ແນໃສ່ຍົກສູງຄຸນຄ່າ ແລະ ສະຖຽນລະພາບ ຂອງເງິນແຫ່ງຊາດ, ສົ່ງເສີມການຈໍລະຈອນສິນຄ້າ-ເງິນຕາ ພາຍໃນປະເທດ, ເປີດກ້ວາງການພົວພັນຮ່ວມມືເສດຖະກິດກັບຕ່າງປະເທດ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ (ibid.).

ສຳລັບເງື່ອນໄຂການໂອນເງິນຕາຕ່າງປະເທດ ຫຼື ການນຳເງິນຕາເປັນເງິນສົດ ເຂົ້າ-ອອກ ສ ປປ ລາວນັ້ນ ແມ່ນບໍ່ໄດ້ມີການລະບຸແຕ່ຢ່າງໃດ, ແຕ່ວ່າໃນມາດຕາ 13 ໄດ້ລະບຸໄວ້ວ່າ " ຜູ້ມີ ແລະ ບໍ່ມີພູມລຳເນົາ ຢູ່ ສ ປປ ລາວ ສາມາດໂອນເງິນຕາຕ່າງປະເທດເຂົ້າ ສ ປປ ລາວ ໂດຍບໍ່ຈຳກັດຈຳນວນ" (ibid.).

❖ **ມາດຕະການທາງກົດໝາຍຕໍ່ກັບຜູ້ຂໍລີ້ໄພ ແລະ ຜູ້ອົບພະຍົບ.**

ມາຮອດປັດຈຸບັນນີ້, ເຫັນວ່າ ສ ປປ ລາວ ຍັງບໍ່ທັນໄດ້ໃຫ້ສັດຕະຍາບັນ ຕໍ່ກັບ ສົນທິສັນຍາ ວ່າດ້ວຍສະຖານະພາບຂອງຜູ້ອົບພະຍົບ (UNHCR, 1951), ພ້ອມກັນນັ້ນ ກໍ່ຍັງບໍ່ທັນໄດ້ມີກົດໝາຍໃດທີ່ກຳນົດກ່ຽວກັບ ຄວາມຕ້ອງການຢາກປົກປ້ອງຜູ້ອົບພະຍົບໃນລະດັບສາກົນ ຫຼື ກ່ຽວກັບ ການປົກປ້ອງຜູ້ອົບພະຍົບແຕ່ຢ່າງໃດ. ເພາະສະນັ້ນ , ບັນຫາກ່ຽວກັບຜູ້ອົບພະຍົບຈຶ່ງຕົກຢູ່ໃນກົດໝາຍ ວ່າດ້ວຍ ການເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສ ປປ ລາວ. ເຊິ່ງໝາຍຄວາມວ່າ ຖ້າຫາກບຸກຄົນໃດທີ່ລັກລອບເຂົ້າເມືອງຢ່າງຜິດກົດໝາຍ ຫຼື ດຳລົງຊີວິດຢູ່ ສ ປປ ລາວ ເກີນໄລຍະເວລາຂອງວີຊ່າ, ແມ່ນອາດຈະມີຄວາມສ່ຽງຕໍ່ການຈັບກຸມຢ່າງກະທັນຫັນ, ການກັກຂັງ ແລະ/ຫຼື ເນລະເທດ ໂດຍບໍ່ໄດ້ຄຳນຶງເຖິງສະຖານະພາບຂອງຜູ້ອົບພະຍົບ ໂດຍອ້າງອີງໃສ່ດຳລັດ ວ່າດ້ວຍການລົງໂທດ ແລະ ນຳໃຊ້ມາດຕະການຕໍ່ກັບຜູ້ລະເມີດຕໍ່ກົດໝາຍ ແລະ ລະບຽບການກ່ຽວກັບ ການເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສ ປປ ລາວ ( ລັດຖະບານແຫ່ງ ສ ປປ ລາວ, 2021d). ນອກນັ້ນ, ຍັງເຫັນວ່າອົງການ UNHCR ຍັງບໍ່ທັນມີຫ້ອງການຕັ້ງຢູ່ ໃນ ສ ປປ ລາວ, ເຊິ່ງເຮັດໃຫ້ເກີດສິ່ງທ້າທາຍໃນການຕິດຕາມ-ກວດກາສະພາບການປ້ອງ

[48] ຕາມມາດຕາ 3, ການຍົກຍ້າຍໝາຍເຖິງການຈັດສັນຄວາມເປັນລະບຽບຮຽບຮ້ອຍ ແລະ ຈັດສັນທີ່ຢູ່ອາໄສໃຫ້ເໝາະສົມກັບຄົນໃນບ້ານ ຫຼື ທີ່ຕັ້ງເດີມ. ການຍົກຍ້າຍໝາຍເຖິງການປ່ຽນພື້ນທີ່ທີ່ຢູ່ອາໄສເບື້ອງຕົ້ນຂອງຄອບຄົວ ແລະ ບ້ານໄປເປັນບ່ອນຢູ່ອາໄສໃໝ່.

[49] ທະນາຄານແຫ່ງ ສ ປປ ລາວ ໄດ້ອອກຂໍ້ຕົກລົງສະບັບເລກທີ 449/ທຫລ, ລົງວັນທີ 14 ມິຖຸນາ 2022 ເພື່ອຄຸ້ມຄອງການບໍລິການແລກປ່ຽນເງິນຕາຂອງທະນາຄານການຄ້າ ແລະ ຫ້ອງການແລກປ່ຽນເງິນຕາ ໃນປະເທດ.

ກັນໃນລະດັບຊາດ , ການເຂົ້າມາມີສ່ວນຮ່ວມຂອງເຈົ້າໜ້າທີ່, ຫຼື ການເຂົ້າຮ່ວມໃນຂະບວນການຫາວິທີແກ້ໄຂ ເພື່ອຫຼຸດຜ່ອນຈຳນວນຄົນທີ່ອອກນອກປະເທດ. ນອກຈາກນັ້ນ, ສາຍພົວພັນລະຫວ່າງສອງຝ່າຍ ລະຫວ່າງ ສ ປປ ລາວ ແລະ ບັນດາປະເທດເພື່ອນບ້ານ ຍັງສາມາດຍົກລະດັບພັນທະທາງດ້ານສາກົນໄດ້ອີກດ້ວຍ.

❖ **ກົດໝາຍວ່າດ້ວຍ ການປິ່ນປົວ**

ກົດໝາຍວ່າດ້ວຍ ການປິ່ນປົວ ແມ່ນຖືກຮັບຮອງໃນປີ 2014 ( ສ ປປ ລາວ, ສະພາແຫ່ງຊາດ, 2014b) ເຊິ່ງກຳນົດບັນດາຫຼັກການ, ລະບຽບການ ແລະ ມາດຕະການຕ່າງໆ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການກວດກາວຽກງານປິ່ນປົວ" ໃຫ້ແກ່ທຸກຄົນ ລວມທັງຜູ້ອົບພະຍົບທີ່ອາໄສຢູ່ໃນ ສ ປປ ລາວ ໂດຍບໍ່ມີການຈຳແນກໃນການເຂົ້າເຖິງການບໍລິການທາງດ້ານສຸຂະພາບ. (ມາດຕາ 1)(ibid.).

❖ **ກົດໝາຍວ່າດ້ວຍ ການປະກັນສັງຄົມ**

ກົດໝາຍສະບັບນີ້ ໄດ້ກຳນົດ ບັນດາຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການກວດກາວຽກງານປະກັນສັງຄົມ. ແຕ່ກໍ່ບໍ່ໄດ້ກ່າວເຖິງຜູ້ອົບພະຍົບ ແລະ ການເຄື່ອນຍ້າຍຖິ່ນຖານຂອງປະຊາກອນແຕ່ຢ່າງໃດ.

## 3.2. ໂຄງຮ່າງການຈັດຕັ້ງສະຖາບັນ

### *3.2.1.* ບັນດາອົງການຈັດຕັ້ງພາກລັດທີ່ປະຕິບັດໜ້າທີ່ວຽກງານກ່ຽວກັບການເຄື່ອນຍ້າຍຖິ່ນຖານ.

❖ **ກະຊວງແຜນການ ແລະ ການລົງທຶນ**

ກະຊວງແຜນການ ແລະ ການລົງທຶນ ແມ່ນມີໜ້າທີ່ຮັບຜິດຊອບເພື່ອສົ່ງເສີມທາງດ້ານການປັບປຸງທາງດ້ານທຸລະກິດ ແລະ ສະພາບແວດລ້ອມຂອງການລົງທຶນ ເພື່ອດຶງດູດການລົງທຶນທີ່ມີຄຸນນະພາບ, ຄຸ້ມຄອງການລົງທຶນຢ່າງມີປະສິດທິພາບ, ລະດົມ ແລະ ຄຸ້ມຄອງການນຳໃຊ້ທຶນການຊ່ວຍເຫຼືອເພື່ອພັດທະນາ ຢ່າງເປັນທາງການທັງສອງຝ່າຍ ແລະ ຫຼາຍຝ່າຍ, ຄົ້ນຄ້ວາ ແລະ ປັບປຸງບັນດາມາດຕະການທາງດ້ານການພັດທະນາ ແລະ ທາງດ້ານເສດຖະກິດ, ພ້ອມທັງໃຫ້ບໍລິການທາງດ້ານຂໍ້ມູນ. ໂດຍຜ່ານກົມສະຖາບັນ ຄົ້ນຄວ້າ-ວິໄຈ ຂໍ້ມູນຂ່າວສານ ແລະ ການຝຶກອົບຮົມ, ທີ່ໄດ້ເຮັດບົດຄົ້ນຄວ້າກ່ຽວກັບການເຄື່ອນຍ້າຍຖິ່ນຖານ.

❖ **ສູນສະຖິຕິແຫ່ງຊາດ**

ສູນສະຖິຕິແຫ່ງຊາດ ມີພາລະບົດບາດເປັນເສນາທິການໃຫ້ແກ່ກະຊວງແຜນການ ແລະ ການລົງທຶນ ໃນການປະສານສົມທົບທຸກວຽກງານທີ່ກ່ຽວຂ້ອງກັບຂໍ້ມູນສະຖິຕິທາງການໃນລະດັບຊາດ ກັບບັນດາອົງການຈັດຕັ້ງສະຖິຕິທີ່ເປັນລະບົບສາຍຕັ້ງ ແລະ ສາຍຂວາງ, ໃນລະດັບສູນກາງ ແລະ ລະດັບທ້ອງຖິ່ນ.

ເປັນເສນາທິການໃນການເກັບກຳຂໍ້ມູນຈາກການລາຍງານບໍລິຫານ, ສ້າງຮ່າງນະໂຍບາຍ ແລະ ຂໍ້ກຳນົດກ່ຽວກັບສະຖິຕິຢ່າງເປັນທາງການ, ເປັນຕົ້ນແມ່ນການສ້າງຕັ້ງຖານຂໍ້ມູນສະຖິຕິທາງການ ທີ່ລະບຸໄວ້ໃນກົດໝາຍ ວ່າດ້ວຍສະຖິຕິ 2017 ( ສ ປປ ລາວ, ສະພາແຫ່ງຊາດ, 2017). ພ້ອມນັ້ນ, ກໍ່ຍັງເກັບກຳ ແລະ ວິໄຈຂໍ້ມູນກ່ຽວກັບການເຄື່ອນຍ້າຍຖິ່ນຖານທີ່ໄດ້ມາຈາກຫຼາຍໆພາກສ່ວນ ເຊັ່ນວ່າ: ການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ (PHC) ແລະ ການສຳຫຼວດຕົວຢ່າງທາງດ້ານກຳລັງແຮງງານ (LFS).

❖ **ກະຊວງການຕ່າງປະເທດ**

ກະຊວງການຕ່າງປະເທດ ແມ່ນປະກອບດ້ວຍ 17 ກົມ, ລວມທັງກົມກົງສຸນ ແລະ ກົມພົວພັນຄົນເຊື້ອຊາດລາວ ຢູ່ຕ່າງປະເທດ. ສິດ ແລະໜ້າທີ່ຂອງ ກະຊວງການຕ່າງປະເທດ ຕໍ່ກັບການເຄື່ອນຍ້າຍຖິ່ນຖານ ແມ່ນໄດ້ຖືກລະບຸສະເພາະໃນມາດຕາ 61 ຂອງກົດໝາຍວ່າດ້ວຍ ການເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສ ປປ ລາວ, 2014 ດັ່ງຕໍ່ໄປນີ້:

- ອອກ, ລົບລ້າງ ຫຼື ຖອນໜັງສືຜ່ານແດນທາງການທູດ, ໜັງສືຜ່ານແດນລັດຖະການ, ໜັງສືຜ່ານແດນທຳມະດາ ແລະ ເອກະສານເດີນທາງອື່ນທີ່ໃຊ້ແທນ ຂອງພົນລະເມືອງລາວ;
- ອອກ ຫຼື ລົບລ້າງວີຊ້າແຈ້ງອອກ ໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ໄດ້ເຮັດໜັງສືຜ່ານແດນເສຍຫາຍ, ຖືກລັກ ຫຼື ບໍ່ສົມບູນ ພາຍຫຼັງໄດ້ຮັບເຫຼັ້ມໃໝ່,
- ອອກ ຫຼື ລົບລ້າງວີຊ້າເຂົ້າ-ອອກຫຼາຍເທື່ອສຳລັບຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;
- ຄົ້ນຄວ້າ, ມີຄຳເຫັນ ກ່ຽວກັບການຂໍອະນຸຍາດແຕ່ງດອງ ລະຫວ່າງພົນລະເມືອງລາວ ກັບຄົນຕ່າງປະເທດ ແລະ ຄົນທີ່ບໍ່ມີສັນຊາດ,
- ດັດແກ້ ຫຼື ລົບລ້າງວີຊ້າເຂົ້າ-ອອກທຸກປະເພດ ທີ່ສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່, ສະຖານກົງສຸນແຫ່ງ ສ ປປ ລາວ ປະຈຳຢູ່ຕ່າງປະເທດ ແລະ ໜ່ວຍງານວີຊ້າກັບດ່ານສາກົນໃນຂອບເຂດທົ່ວປະເທດໄດ້ອອກໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ.

❖ **ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ສິດ ແລະ ໜ້າທີ່ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ຖືກກຳນົດໄວ້ໃນກົດໝາຍຕ່າງຫາກ. ຕົວຢ່າງ , ກົດໝາຍ ວ່າດ້ວຍ ການເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສ ປປ ລາວ, ມາດຕາ 62 ແມ່ນໄດ້ກຳນົດສິດ ແລະ ໜ້າທີ່ຂອງກະຊວງດັ່ງກ່າວຢູ່ 10 ຂໍ້ລວມທັງ:

- ຊີ້ນຳໂດຍກົງຕໍ່ກັບວຽກງານຄຸ້ມຄອງ, ກວດກາ ແລະ ຂຶ້ນບັນຊີຜູ້ອອກແຮງງານຕ່າງປະເທດ ທີ່ມາອອກແຮງງານຢູ່ ສ ປປ ລາວ
- ຄົ້ນຄວ້າ ແລະ ອະນຸມັດໂກຕ້ານຳເຂົ້າ, ຊີ້ນຳການຂຶ້ນທະບຽນ ແລະ ການອອກບັດອະນຸຍາດເຮັດວຽກ ໃຫ້ຜູ້ອອກແຮງງານຕ່າງປະເທດ,
- ຄຸ້ມຄອງຜູ້ອອກແຮງງານລາວ ທີ່ເຮັດວຽກຢູ່ຕ່າງປະເທດ ຜູ້ອອກແຮງງານຕ່າງປະເທດ ທີ່ເຮັດວຽກຢູ່ ສ ປປ ລາວ ໂດຍມີການປະສານສົມທົບກັບຂະແໜງການອື່ນ ທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ.

- **ກະຊວງປ້ອງກັນຄວາມສະຫງົບ**

ໃນກົດໝາຍ ວ່າດ້ວຍ ການເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສ ປປ ລາວ, ມາດຕາ 60 (ກະຊວງປ້ອງກັນຄວາມສະຫງົບ, ສ ປປ ລາວ, 2015) ແມ່ນໄດ້ກຳນົດສິດ ແລະ ໜ້າທີ່ຂອງກະຊວງດັ່ງກ່າວຢູ່ 13 ຂໍ້ລວມທັງ:

- ຄົ້ນຄວ້າ, ສ້າງ, ໂຄສະນາ ແລະ ເຜີຍແຜ່ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍວ່າດ້ວຍ ການເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສ ປປ ລາວ;
- -ຊີ້ນຳການຂຶ້ນບັນຊີ, ຄຸ້ມຄອງສະຖິຕິ, ຕິດຕາມ, ກວດກາ, ແລະ ແກ້ໄຂການເຄື່ອນໄຫວຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;
- ຊີ້ນຳ-ນຳພາ, ມີຄຳເຫັນ, ຄຸ້ມຄອງ, ຕິດຕາມ ແລະ ກວດກາ ຕຳຫຼວດກວດຄົນເຂົ້າ-ອອກເມືອງ ທີ່ກ່ຽວຂອງກັບວຽກງານຄຸ້ມຄອງການເຄື່ອນຍ້າຍຖິ່ນຖານ ໃນຂອບເຂດທົ່ວປະເທດ;
- ຄົ້ນຄວ້າ, ມີຄຳເຫັນຕໍ່ກັບການຂໍອະນຸຍາດແຕ່ງດອງ ລະຫວ່າງພົນລະເມືອງລາວ ກັບຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

ນອກຈາກນັ້ນ, ກະຊວງປ້ອງກັນຄວາມສະຫງົບ ຍັງເຮັດໜ້າທີ່ເປັນຜູ່ປະສານກ່ຽວກັບ ວຽກງານຕ້ານການຄ້າມະນຸດອີກດ້ວຍ. ເຊິ່ງເປັນໜ້າທີ່ຂອງ ກົມຕ້ານການຄ້າມະນຸດ, ຄະນະສະເພາະກິດ ທາງດ້ານການຕ້ານ ການຄ້າມະນຸດ ໃນການປະສານສົມທົບ ແລະ ການເຄື່ອນໄຫວວຽກງານຮ່ວມກັບ ບັນດາຂະແໜງການກ່ຽວຂ້ອງ ໃນລະດັບສູນກາງຈົນເຖິງລະດັບທ້ອງຖິ່ນ.

- **ທະນາຄານ ແຫ່ງ ສ ປປ ລາວ**

ທະນາຄານ ແຫ່ງ ສ ປປ ລາວ ແມ່ນຄຸ້ມຄອງບັນຫາກ່ຽວກັບເງິນຕາ, ອອກລະບຽບການ ແລະ ໃຫ້ຄຳແນະນຳ ທາງດ້ານການທະນາຄານ, ອອກນະໂຍບາຍທາງດ້ານການເງິນ ແລະ ຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດ ເປັນຕົ້ນແມ່ນວຽກງານທາງດ້ານ ເກັບກຳຂໍ້ມູນກ່ຽວກັບການໂອນເງິນໄປຕ່າງປະເທດ.

- **ກະຊວງພາຍໃນ**

ກົມຄຸ້ມຄອງພົນລະເມືອງ ຂອງກະຊວງພາຍໃນ ແມ່ນມີໜ້າທີ່ຮັບຜິດຊອບ ວິເຄາະ ແລະ ຮັບປະກັນຂໍ້ມູນກ່ຽວກັບການເກີດ, ການແຕ່ງງານ, ການຢ່າຮ້າງ, ການເສຍຊີວິດ, ການຂໍປ່ຽນຊື່ ແລະ ນາມສະກຸນ, ການຂໍຍົກຍ້າຍ ແລະ ການຂໍປ່ຽນສັນຊາດ. ສ່ວນຂໍ້ມູນທີ່ເກັບກຳນັ້ນກໍ່ສາມາດອ້າງອີງໃສ່ ຂໍ້ມູນການແຕ່ງດອງ ຫຼື ການຢ່າຮ້າງ ລະຫວ່າງພົນລະເມືອງລາວ ກັບຄົນຕ່າງປະເທດ ແລະ ຂໍ້ມູນການແຕ່ງດອງ ຫຼື ການຢ່າຮ້າງພາຍໃນປະເທດໄດ້ ເຊິ່ງກະຊວງປ້ອງກັນຄວາມສະຫງົບ ມີໜ້າທີ່ຮັບຜິດຊອບສະໜອງຂໍ້ມູນ ແລະ ສິ່ງຕົວເລກລວມ ໃຫ້ແກ່ກົມຄຸ້ມຄອງພົນລະເມືອງ.

- **ກະຊວງສຶກສາ ແລະ ກິລາ**

ກະຊວງສຶກສາ ແລະ ກິລາ ແມ່ນມີໜ້າທີ່ເກັບກຳຂໍ້ມູນ-ຂ່າວສານກ່ຽວກັບນັກສຶກສາຄົນຕ່າງປະເທດ ແລະ ນັກສຶກສາທີ່ໄປຮຽນຕໍ່ຢູ່ຕ່າງປະເທດ.

- **ກະຊວງສາທາລະນະສຸກ**

ກະຊວງສາທາລະນະສຸກ ມີສິດ ແລະ ໜ້າທີ່ສ້າງນະໂຍບາຍທາງດ້ານສຸຂະພາບ ແລະ ຊີ້ນຳທິດທາງ ດ້ານຍຸດທະສາດໃຫ້ແກ່ບັນດາຜູ້ສະໜອງການບໍລິການທາງດ້ານສຸຂະພາບໃຫ້ແກ່ປະຊາຊົນ, ລວມທັງປະຊາກອນທີ່ເຄື່ອນຍ້າຍຖິ່ນຖານ ແລະ ຜູ້ອົບພະຍົບ.

- **ກະຊວງ ໂຍທາທິການ ແລະ ຂົນສົ່ງ**

ກະຊວງ ໂຍທາທິການ ແລະ ຂົນສົ່ງ ແມ່ນມີໜ້າທີ່ຕົ້ນຕໍຮັບຜິດຊອບໃນການຂະຫຍາຍ ແລະ ບຳລຸງສ້າງພື້ນຖານໂຄງລ່າງດ້ານການຂົນສົ່ງໃນປະເທດ.

*3.2.2.* ບັນດາຂະແໜງການພາຍນອກ ທີ່ເຮັດວຽກກ່ຽວກັບ ການເຄື່ອນຍ້າຍຖິ່ນຖານ

- **ອົງການຈັດຕັ້ງສາກົນ ເພື່ອການເຄື່ອນຍ້າຍຖິ່ນຖານ**

ສ ປປ ລາວ ແມ່ນເປັນປະເທດທີ 171 ທີ່ໄດ້ລົງນາມເຂົ້າຮ່ວມເປັນສະມາຊິກ ຂອງອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ (IOM) ໃນ ເດືອນມິຖຸນາ 2018. ອົງການ IOM ໄດ້ເປີດຫ້ອງການຢູ່ນະຄອນຫຼວງວຽງຈັນໃນປີ 2002 ໂດຍໄດ້ຮັບການສະໜັບສະໜູນດ້ານວິຊາການຈາກຫ້ອງການພາກພື້ນອາຊີ ແລະ ປາຊີຟິກ ຂອງ IOM ທີ່ປະຈຳຢູ່ບາງກອກ. ອົງການດັ່ງກ່າວໄດ້ເຮັດວຽກຢ່າງໃກ້ຊິດກັບລັດຖະບານ ແຫ່ງ ສ ປປ ລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ, ລວມທັງ ກະຊວງການຕ່າງປະເທດ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງແຜນການ ແລະ ການລົງທຶນ, ກະຊວງພາຍໃນ ແລະ ສູນກາງສະຫະພັນແມ່ຍິງລາວ.

ໃນເດືອນກຸມພາ 2022, IOM ໄດ້ເປີດໂຕຍຸດທະສາດຂອງປະເທດ ສົກປີ 2022-2026, ເຊິ່ງເປັນກອບຍຸດທະສາດທຳອິດພາຍໃຕ້ຂໍ້ຕົກລົງການຮ່ວມມືທີ່ໄດ້ລົງນາມລະຫວ່າງອົງການ ແລະ ລັດຖະບານໃນເດືອນກັນຍາ 2021 ທີ່ຜ່ານມາ. (ອົງການ IOM ແລະ ລັດຖະບານ ສ ປປ ລາວ 2022,).

- **ອົງການແຮງງານສາກົນ**

ສ ປປ ລາວ ໄດ້ລົງນາມເຂົ້າຮ່ວມເປັນສະມາຊິກ ຂອງອົງການແຮງງານສາກົນ (ILO) ໃນ ເດືອນມັງກອນ1964. ທີ່ໄດ້ເຮັດວຽກເປັນຄູ່ຮ່ວມງານຫຼັກ ກັບອົງການຈັດຕັ້ງ 3 ຝ່າຍ ເປັນຕົ້ນແມ່ນ: ຕົວແທນລັດຖະບານ ເຊິ່ງແມ່ນກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຕົວແທນຜູ້ອອກແຮງງານໄດ້ແກ່ ສະຫະພັນ ກຳມະບານລາວ ແລະ ຕົວແທນ

ຜູ້ໃຊ້ແຮງງານ ໄດ້ແກ່ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ໃນການກຳກົດບັນດານະໂຍບາຍ ແລະ ແຜນງານຮ່ວມກັນ.

ໃນວັນທີ 16 ມິຖຸນາ 2022, ໄດ້ມີການຈັດພິທີເປີດແຜນງງານການຮ່ວມມືເພື່ອສົ່ງເສີມວຽກທີ່ມີຄຸນຄ່າ ແລະ ເປັນທຳ ໃນ ສ ປປ ລາວ ( ລະຫວ່າງ ອົງການແຮງງານສາກົນ ແລະ ສ ປປ ລາວ). ເຊິ່ງແຜນງານດັ່ງກ່າວນັ້ນ ແມ່ນແນໃສ່ເພື່ອເປັນເຄື່ອງມືແນະນຳໃນການຮ່ວມມືລະຫວ່າງ ສ ປປ ລາວ ແລະ ອົງການແຮງງານສາກົນ ສຳລັບໄລຍະ 2022–2025 ພ້ອມກັບສຸມໃສ່ຫຼາຍໆຂົງເຂດວຽກງານ, ລວມທັງການສ້າງລະບົບການປົກປ້ອງທາງສັງຄົມຢ່າງຮອບດ້ານ, ປົກປ້ອງສິດທິຂອງແຮງງານເຄື່ອນຍ້າຍ, ສົ່ງເສີມການຈ້າງງານຂອງແມ່ຍິງ ແລະ ຜູ່ຊາຍໃນເຂດຊົນນະບົດ ແລະ ພ້ອມທັງຊ່ວຍພັດທະນາທັກສະຂອງເຂົາເຈົ້າ.

ສຸດທ້າຍ, ອົງການແຮງງານສາກົນ ເປັນອົງການປະສານງານຫຼັກທີ່ສຳຄັນ ໃຫ້ແກ່ອົງການສະຫະປະຊາຊາດທາງດ້ານສະຖິຕິແຮງງານ ແລະ ເປັນຜູ້ຄຸ້ມຄອງ 14 ຕົວຊີ້ວັດ ຂອງວຽກງານ ສົ່ງເສີມວຽກທີ່ມີຄຸນຄ່າ ແລະ ເປັນທຳ ໃນວາລະ 2030 ສຳລັບການພັດທະນາເພື່ອຄວາມຍືນຍົງ, ລວມທັງຕົວຊີ້ວັດ ຂອງວຽກງານການເຄື່ອນຍ້າຍແຮງງານພາຍໃຕ້ເປົ້າໝາຍ 8.8 ແລະ 10.7. (ອົງການສະຫະປະຊາຊາດ, 2015).

- **ທະນາຄານໂລກ**

ກຸ່ມທະນາຄານໂລກ ໄດ້ລົງນາມ ກອບການຮ່ວມມືລະຫວ່າງປະເທດ ຮ່ວມກັນກັບ ສ ປປ ລາວ ເພື່ອສະໜັບສະໜູນແຜນພັດທະນາເສດຖະກິດ-ສັງຄົມ. ເປັນຕົ້ນແມ່ນ, ກອບການຮ່ວມມື ສົກປີ (2017–2021) ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານ ຄັ້ງທີ 8, ສົກປີ 2016–2020) ແລະ ກອບການຮ່ວມມື ໃນປັດຈຸບັນ ສົກປີ (2022–2026) ເພື່ອສະໜັບສະໜູນ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານ ຄັ້ງທີ 9.

### *3.2.3.*ບັນດາອົງການຈັດຕັ້ງມະຫາຊົນຂອງລາວ

- **ສູນກາງ ສະຫະພັນແມ່ຍິງລາວ**

ສູນກາງສະຫະພັນແມ່ຍິງລາວ ແມ່ນເປັນອົງການຈັດຕັ້ງມະຫາຊົນຫຼັກ ທີ່ມີສ່ວນຮ່ວມໃນວຽກງານການພັດທະນາເສດຖະກິດສັງຄົມໃນລະດັບຊຸມຊົນ ທີ່ເຮັດວຽກຮ່ວມກັບບັນດາໂຄງການ ເພື່ອແນໃສ່ການຫຼຸດຜ່ອນຄວາມທຸກຍາກ ແລະ ເພີ່ມທະວີຄວາມຮູ້ ແລະ ທັກສະຂອງແມ່ຍິງ, ລວມທັງແຮງງານເຄື່ອນຍ້າຍ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

❖ **ສູນກາງແນວລາວສ້າງຊາດ**

ສູນກາງແນວລາວສ້າງຊາດ ມີພາລະບົດບາດໃນການເສີມຂະຫຍາຍຄວາມເປັນເອກະພາບ ແລະ ຄວາມເປັນເອກະພາບຂອງປວງຊົນລາວທັງຊາດ, ລວມທັງຄົນລາວຢູ່ຕ່າງປະເທດ, ໂຄສະນາ, ສຶກສາ, ປຸກລະດົມ ແລະ ເສີມຂະຫຍາຍສິດຂອງປະຊາຊົນບັນດາເຜົ່າ ໃນການປະຕິບັດແນວທາງ, ທິດທາງ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນການເສດຖະກິດສັງຄົມແຫ່ງຊາດ. ນອກນີ້ຍັງມີໜ້າທີ່ໃນການປະສານງານກັບອົງການຈັດຕັ້ງມະຫາຊົນ ແລະ ກຸ່ມການເມືອງສັງຄົມອື່ນໆ ແລະ ວຽກງານສາສະໜາ.

❖ **ສະຫະພັນກຳມະບານລາວ**

ສະຫະພັນກຳມະບານລາວແມ່ນອົງການກຳມະກອນແຫ່ງຊາດພຽງຜູ້ດຽວ ແລະ ເຊື່ອມໂຍງເຂົ້າກັບພັກປະຊາຊົນປະຕິວັດລາວໂດຍກົງ. ບົດບາດຂອງສະຫະພັນກຳມະບານລາວ ແມ່ນເປັນຕົວແທນສິດທິ ແລະ ຜົນປະໂຫຍດຂອງຜູ່ອອກແຮງງານ ລວມທັງສຶກສາກ່ຽວກັບສະຖານະພາບການຍ້າຍຖິ່ນຖານຂອງເຂົາເຈົ້າ ອີກດ້ວຍ.

❖ **ສູນກາງຊາວໜຸ່ມລາວ**

ສູນກາງຊາວໜຸ່ມລາວ ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1955 ມີບົດບາດໃນການຄຸ້ມຄອງການປຸກລະດົມຊາວໜຸ່ມປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ, ມີໜ້າທີ່ສຶກສາອົບຮົມ, ປູກຈິດສຳນຶກ ແລະ ຄວາມເຂົ້າໃຈ, ຊຸກຍູ້ຄວາມເປັນອັນໜຶ່ງອັນດຽວ ແລະ ຄວາມສາມັກຄີໃນບັນດາຊາວໜຸ່ມບັນດາເຜົ່າໃນທົ່ວປະເທດ, ລິເລີ່ມວຽກງານທາງດ້ານ ຂໍ້ມູນຂ່າວສານ, ສື່ມວນຊົນ, ບັນເທີງ, ສິລະປະແລະດົນຕີ.

### *3.2.4.* ອົງການຈັດຕັ້ງທາງສັງຄົມ

ອົງການຈັດຕັ້ງທາງສັງຄົມ ແມ່ນຍັງບໍ່ທັນຮູ້ຈັກດີໃນ ສ ປປ ລາວ. ໃນເມື່ອກ່ອນ, ແມ່ນມີພຽງແຕ່ 3 ອົງການຈັດຕັ້ງສາກົນ ທີ່ໄດ້ຮັບອະນຸຍາດໃຫ້ປະຕິບັດໜ້າທີ່ໃນ ສ ປປ ລາວ, ເປັນຕົ້ນແມ່ນ ອົງການຊ່ວຍເຫຼືອຈາກເພື່ອຊາວອາເມລິກາ (*American Friends Service Committee*), ອົງການມິດຕະພາບ ເມັນໂນໄນ ( *the Mennonite Central Committee*) ແລະ ອົງການ *Save the Children* ປະເທດອັງກິດ. ດ້ວຍສິດທິຂອງສະມາຄົມ (ມາດຕາ 44) ໃນລັດຖະທຳມະນູນ ແຫ່ງ ສ ປປ ລາວ ປີ 1991 ພ້ອມກັບສະບັບປັບປຸງ ຮອດປີ 2003 (ລັດຖະບານ ແຫ່ງ ສ ປປ ລາວ, ປີ 2003), ອົງການຈັດຕັ້ງທາງສັງຄົມໄດ້ຂະຫຍາຍອອກ ແລະ ປະຈຸບັນນີ້ ມີຫຼາຍອົງການຈັດຕັ້ງ ທີ່ປະຕິບັດໜ້າທີ່ຕິດພັນກັບວຽກງານການເຄື່ອນທີ່ຂອງປະຊາກອນ ແລະ ຜູ່ເຄື່ອນຍ້າຍຖິ່ນຖານ.

### *3.2.5.* ສະຖາບັນຄົ້ນຄວ້າ ແລະ ມະຫາວິທະຍາໄລ

ມາຮອດປະຈຸບັນ, ຍັງບໍ່ທັນມີສະຖາບັນຄົ້ນຄ້ວາແຫ່ງຊາດທີ່ເປັນເອກະລາດ ທີ່ຄົ້ນຄວ້າທາງດ້ານວິຊາການກ່ຽວກັບການເຄື່ອນຍ້າຍຖິ່ນຖານໃນ ສ ປປ ລາວ.

## 3.3. ກອບແຜນວຽກໃນລະດັບພາກພື້ນ ແລະ ລະດັບສາກົນ

### *3.3.1.* ກອບແຜນວຽກໃນລະດັບພາກພື້ນ

- **ສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້** (ASEAN)

ສຳລັບກອບແຜນວຽກໃນລະດັບພາກພື້ນ, ສ ປປ ລາວ ພ້ອມທັງ 9 ປະເທດ ( ບຣູໄນ, ກຳປູເຈຍ, ອິນໂດ, ມາເລເຊຍ, ມຽນມາ, ຟີລິບປິນ, ສິງກະໂປ, ປະເທດໄທ ແລະ ປະເທດຫວຽດນາມ) ໄດ້ລົງນາມເຂົ້າຮ່ວມເປັນສະມາຊິກ ຂອງ *ASEAN* ໃນວັນທີ 23 ເດືອນກໍລະກົດ 1997 *(ASEAN, n.d.).50*

ສະມາຄົມດັ່ງກ່າວ ໄດ້ສ້າງຕັ້ງຂຶ້ນເພື່ອຈັດຕັ້ງປະຕິບັດ ຖະແຫຼງການອາຊຽນວ່າດ້ວຍ ການປົກປ້ອງ ແລະ ສົ່ງເສີມສິດທິຂອງແຮງງານເຄື່ອນຍ້າຍ. ໃນກອງປະຊຸມຄັ້ງທີ 1 ເດືອນກັນຍາ 2008, ໄດ້ມີການກຳນົດການຮ່ວມມືກັນໃນ 4 ຂົງເຂດດັ່ງນີ້:

- ສ້າງກອບການປົກປ້ອງ ແລະ ປົກປ້ອງສິດທິຂອງແຮງງານເຄື່ອນຍ້າຍ ເພື່ອຕ້ານການຂູດຮີດ ແລະ ຂົ່ມເຫັງ;
- ເພີ່ມທະວີການປົກປ້ອງ ແລະ ສົ່ງເສີມທາງດ້ານສິດທິຂອງແຮງງານເຄື່ອນຍ້າຍ ໂດຍ ໂດຍຍົກລະດັບການຄຸ້ມຄອງທາງດ້ານການເຄື່ອນຍ້າຍແຮງງານໃນບັນດາປະເທດອາຊຽນ;
- ການຮ່ວມມືພາກພື້ນເພື່ອຕ້ານການຄ້າມະນຸດໃນອາຊຽນ;
- ການພັດທະນານິຕິກຳຂອງAອາຊຽນ ວ່າາດ້ວຍ ການປົກປ້ອງ ແລະ ສົ່ງເສີມສິດທິແຮງງານເຄື່ອນຍ້າຍ.

ກົດບັດອາຊຽນ *2007* ຍັງລະບຸວ່າ: ບັນດາປະເທດສະມາຊິກອາຊຽນຈະ "ອຳນວຍຄວາມສະດວກໃນການແບ່ງປັນຂໍ້ມູນກ່ຽວກັບແຮງງານເຄື່ອນຍ້າຍ, ເພື່ອແນໃສ່ເພີ່ມທະວີນະໂຍບາຍ ແລະ ແຜນງານກ່ຽວກັບແຮງ

[50] ສົນທິສັນຍວ່າດ້ວຍ ສຳພັນທະວະໄມຕີ ແລະ ການຮ່ວມມືໃນອາຊີຕາເວັນອອກສ່ຽງໃຕ້ (TAC) of 1976.

ງານເຄື່ອນຍ້າຍ ທັງໃນປະເທດທີ່ສົ່ງອອກແຮງງານ ແລະ ຮັບເອົາແຮງງານ" *(ມາດຕາ 18) (ອາຊຽນ, 2007)*.

ນອກນີ້, ມະຕິຂອງອາຊຽນກ່ຽວກັບການປົກປັກຮັກສາ ແລະ ສົ່ງເສີມສິດທິຂອງແຮງງານເຄື່ອນຍ້າຍ ຍັງໄດ້ກຳນົດວ່າ: ບັນດາປະເທດສະມາຊິກອາຊຽນຈະ "ອຳນວຍຄວາມສະດວກໃນການແບ່ງປັນຂໍ້ມູນຂ່າວສານໂດຍຜ່ານການພັດທະນາ ຫຼື ເສີມຂະຫຍາຍລະບົບຖານຂໍ້ມູນ ແລະ ຂໍ້ມູນຂ່າວສານຂອງຕົນກ່ຽວກັບບັນຫາທີ່ກ່ຽວຂ້ອງກັບແຮງງານເຄື່ອນຍ້າຍ, ເພື່ອແນໃສ່ການຍົກລະດັບທາງດ້ານນະໂຍບາຍ ແລະ ແຜນງານກ່ຽວກັບແຮງງານເຄື່ອນຍ້າຍ ທັງໃນປະເທດທີ່ສົ່ງອອກແຮງງານ ແລະ ຮັບເອົາແຮງງານ " *(ມາດຕາ 53) (ອາຊຽນ, 2017).*

ນອກຈາກນັ້ນ, ເວທີປາໄສປຶກສາຫາລືຂອງອາຊຽນ ວ່າດ້ວຍແຮງງານເຄື່ອນຍ້າຍກໍ່ເປັນເວທີເປີດກວ້າງເພື່ອທົບທວນ, ປຶກສາຫາລື ແລະ ແລກປ່ຽນບັນດາການຈັດຕັ້ງປະຕິບັດ ແລະ ແນວຄວາມຄິດທີ່ດີທີ່ສຸດລະຫວ່າງລັດຖະບານ, ຜູ້ອອກແຮງງານ ແລະ ບັນດາອົງກອນນາຍຈ້າງ ພ້ອມທັງບັນດາອົງການຈັດຕັ້ງທາງສັງຄົມ ທີ່ພວມປະເຊີນກັບບັນຫາທີ່ກ່ຽວຂ້ອງກັບບວຽກງານ ທາງດ້ານແຮງງານເຄື່ອນຍ້າຍຢູ່ອາຊີຕາ ເວັນອອກສ່ຽງໃຕ້. ເວທີປາໄສປຶກສາຫາລືດັ່ງກ່າວໄດ້ດຳເນີນເປັນສາມຝ່າຍໂດຍມີການເຂົ້າຮ່ວມຂອງອົງການຈັດຕັ້ງທາງສັງຄົມ, *ILO, IOM, UN-Women* ແລະ ກອງເລຂາອາຊຽນ ໃນແຕ່ລະປີ.

- **ໂຄງການຮ່ວມມືສາມຝ່າຍ ໃນອາຊຽນ**

ໂຄງການຮ່ວມມືສາມຝ່າຍໃນອາຊຽນ ແມ່ນໄດ້ເປີດໂຕໃນປີ 2011, ແມ່ນສ່ວນໜຶ່ງຂອງຄວາມພະຍາຍາມທົ່ວໂລກຂອງອົງການ *ILO* ເພື່ອສ້າງຜົນປະໂຫຍດສູງສຸດ ແລະ ຫຼຸດຜ່ອນຄວາມສ່ຽງຂອງການເຄື່ອນຍ້າຍແຮງງານສຳລັບພາກສ່ວນທີ່ກ່ຽວຂ້ອງ. ໂຄງການດັ່ງກ່າວໄດ້ໃຫ້ການຊ່ວຍເຫລືອດ້ານວິຊາການ ໂດຍມີເປົ້າໝາຍລວມ ເພື່ອແນໃສ່ເພີ່ມທະວີການປະກອບສ່ວນຂອງການເຄື່ອນຍ້າຍແຮງງານໃຫ້ມີການເຕີບໂຕຢ່າງສະເໝີພາບ, ລວມ ແລະ ໝັ້ນຄົງໃນອາຊຽນ. ໂຄງການດັ່ງກ່າວໄດ້ຮັບການສະໜັບສະໜູນໂດຍກົມການຕ່າງປະເທດ ແລະ ການຄ້າຂອງລັດຖະບານປະເທດອົອດສເຕຣເລຍ ແລະ ກະຊວງການຕ່າງປະເທດຂອງ ປະເທດການາດາ. ເຊິ່ງມີຢູ່ສາມຈຸດປະສົງຫຼັກ: ການປົກປ້ອງ, ການພັດທະນາ ແລະ ການເຄື່ອນຍ້າຍ.

ການເກັບກຳສະຖິຕິແຮງງານສາກົນໃນອາຊຽນ ໃນປີ *2013* ຜ່ານໂຄງການຮ່ວມມືສາມຝ່າຍໃນອາຊຽນ ແລະ ນັບແຕ່ນັ້ນມາໄດ້ເຜີຍແຜ່ບົດລາຍງານປະຈຳປີ (*ILO, 2022).* ມາຮອດປີ *2022,*ຂໍ້ມູນດັ່ງກ່າວປະກອບດ້ວຍ *21* ຕາຕະລາງກ່ຽວກັບ ສະພາບການ ແລະ ການເໜັງຕີງຂອງການເຄື່ອນຍ້າຍຖິ່ນຖານ ແລະ ແຮງງານເຄື່ອນຍ້າຍໃນລະດັບສາກົນ.

❖ **ຂໍ້ຕົກລົງກ່ຽວກັບການຮັບຮູ້ຫຼາຍຝ່າຍທາງດ້ານອາຊີບການທ່ອງທ່ຽວ ໃນອາຊຽນ**

ຂໍ້ຕົກລົງດັ່ງກ່າວນີ້ແມ່ນສ້າງຂຶ້ນເພື່ອໃຫ້ສາມາດເຄື່ອນໄຫວວຽກເຮັດງານທຳໃຫ້ແກ່ແຮງງານທ່ອງທ່ຽວທີ່ມີສີມືແຮງງານຢູ່ພາຍໃນແຕ່ລະປະເທດສະມາຊິກ ແລະ ຮັບຮູ້ທັກສະ ແລະ ຄຸນສົມບັດຂອງນັກທ່ອງທ່ຽວທີ່ມາຈາກບັນດາປະເທດອາຊຽນ (*ASEAN,* 2015*a).* ໝາຍຄວາມວ່າ ຜູ້ຊ່ຽວຊານດ້ານການທ່ອງທ່ຽວທີ່ມີຄຸນວຸດທິສາມາດສະໝັກວຽກໃນບັນດາປະເທດສະມາຊິກອາຊຽນອື່ນ ແລະ ບໍລິສັດທ່ອງທ່ຽວສາມາດຊອກຫາບຸກຄະລາກອນທີ່ມີຄຸນວຸດທິທາງດ້ານການສຶກສາ ທີ່ມາຈາກຊຸມຊົນເພື່ອຕອບສະໜອງຄວາມຕ້ອງການຂອງພະນັກງານໄດ້.

❖ **ການຮັບຮູ້ສີມືແຮງງານ ແລະ ການເຄື່ອນໄຫວຂອງແຮງງານ ໃນອາຊຽນ**

ກອບການອ້າງອີງຄຸນນະວຸດທິທາງດ້ານການສຶກສາ ໃນອາຊຽນ ແມ່ນກົນໄກຂອງເກນມາດຕະຖານຂອງກອບວຸດທິການສຶກສາແຫ່ງຊາດທີ່ສາມາດທຽບເທົ່າກັບມາດຕະຖານໃນລະດັບພາກພື້ນພາກພື້ນທີ່. ເຊິ່ງກອບມາດຕະຖານດັ່ງກ່າວໄດ້ກຳນົດຄວາມສາມາດໄວ້ຢູ່ *8* ລະດັບ, ແລະ ໄດ້ຮັບການຕົກລົງ ເຫັນດີໃນບັນດາປະເທດສະມາຊິກອາຊຽນ. ກົນໄກດັ່ງກ່າວມີຄວາມສະໝັກໃຈ ແລະ ປະກອບດ້ວຍ *2* ນິຕິກຳທີ່ເປັນເຄື່ອງມືໃນການປະຕິບັດ ເຊັ່ນ: ການເຄື່ອນທີ່ຂອງແຮງງານຄື: ຂໍ້ຕົກລົງກ່ຽວກັບການຮັບຮູ້ຫຼາຍຝ່າຍ, ເຊິ່ງອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງນັກວິຊາຊີບທີ່ມີສີມືໃນອາຊຽນ*;* ແລະ ການຮັບຮູ້ຫຼາຍຝ່າຍທາງດ້ານສີມືແຮງງານ, ເຊິ່ງສຸມໃສ່ທັກສະດ້ານວິຊາການ ແລະ ວິຊາຊີບ.

❖ **ບັນດາປະເທດອະນຸພາກພື້ນແມ່ນ້ຳຂອງ ( GMS)**

ປະເທດດັ່ງກ່າວໝາຍເຖິງສະມາຊິກຂອງ *GMS,* ເຊິ່ງລວມມີ 6 ປະເທດສະມາຊິກ (ກຳປູເຈຍ, ຈີນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມຽນມາ, ໄທ ແລະ ຫວຽດນາມ). ສ້າງຕັ້ງຂຶ້ນໃນປີ 1992 ໂດຍການຊ່ວຍເຫຼືອຂອງ *ADB,* ການຮ່ວມມືດ້ານເສດຖະກິດ ແນໃສ່ເພີ່ມທະວີການພົວພັນດ້ານເສດຖະກິດໂດຍການສະໜັບສະໜູນການຈັດຕັ້ງປະຕິບັດໂຄງການອະນຸພາກພື້ນແມ່ນ້ຳຂອງໃນຂົງເຂດຕ່າງໆ ເຊັ່ນ: ການພັດທະນາຕົວເມືອງ, ກະສິກຳ, ສາທາລະນະສຸກ ແລະ ການພັດທະນາຊັບພະຍາກອນມະນຸດ.

ການເຈລະຈາພາກພື້ນກ່ຽວກັບການເຄື່ອນຍ້າຍແຮງງານໃນ *GMS,* ຮ່ວມກັນໂດຍ *IOM* ແລະ *ADB* *(GMS,* 2020) ມີຈຸດປະສົງເພື່ອເພີ່ມທະວີການຮ່ວມມືໂດຍຜ່ານການປັບປຸງການຄຸ້ມຄອງການເຄື່ອນຍ້າຍແຮງງານ ແລະ ຊີ້ໃຫ້ເຫັນການເຊື່ອມໂຍງຫຼາຍມິຕິລະຫວ່າງການເຄື່ອນຍ້າຍຖິ່ນຖານ ແລະ ການພັດທະນາ.

❖ **ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍ ການຮ່ວມມືຕ້ານການຄ້າມະນຸດໃນອະນຸພາກພື້ນແມ່ນ້ຳຂອງ.**

ບົດບັນທຶກຄວາມເຂົ້າໃຈດັ່ງກ່າວແມ່ນໄດ້ຖືກຮັບຮອງໃນເດືອນຕຸລາ 2010, *MOU (INT*2004/*IA/*93359) ສະແດງໃຫ້ເຫັນເຖິງການຮັບຮູ້ຂອງລັດຖະບານວ່າການຄ້າມະນຸດສົ່ງຜົນກະທົບຕໍ່ຄວາມໝັ້ນຄົງຂອງມະນຸດ ແລະ ສິດທິສ່ວນບຸກຄົນ, ແລະ ສົ່ງຜົນກະທົບໃນຫຼາຍໆດ້ານ ທັງທາງກົງ ແລະ ທາງອ້ອມ ເນື່ອງຈາກຂາດຄວາມປອດໄພທາງດ້ານສັງຄົມມະນຸດ ແລະ ຕ້ອງໄດ້ຮັບການແກ້ໄຂໃນລະດັບທີ່ແຕກຕ່າງກັນ (*GMS*, 2004).

❖ **ຂໍ້ຕົກລົງສອງຝ່າຍ ໃນການສົ່ງແຮງງານລາວ ໄປຕ່າງປະເທດ**

ສັນຍາສອງຝ່າຍກ່ຽວກັບແຮງງານ *3* ສະບັບໄດ້ຮັບການລົງນາມ ໃນປີ 2022. ເຊິ່ງສະບັບທີ 4 ແມ່ນຢູ່ພາຍໃຕ້ການສົນທະນາປຶກສາຫາລື ກັບປະເທດມາເລເຊຍ ໃນໄລຍະເວລາຂອງການເຮັດບົດຄົ້ນຄວ້ານີ້.

- ບົດບັນທຶກຄວາມເຂົ້າໃຈ (*MOU)* ວ່າດ້ວຍການຮ່ວມມືທາງດ້ານແຮງງານ ລະຫວ່າງ ສ ປປ ລາວ ແລະ ລັດຖະບານຂອງປະເທດໄທ.

ທັງສອງປະເທດໄດ້ເຊັນບົດບັນທຶກຄວາມເຂົ້າໃຈ ຮ່ວມກັນຄັ້ງທຳອິດ [51] ໃນວັນທີ *18* ຕຸລາ *2002* (*ລັດຖະບານແຫ່ງສ ປປ ລາວ ແລະ ລັດຖະບານແຫ່ງປະເທດໄທ, 2002)* ແລະ ໄດ້ປັບປຸງໃນປີ *2016.*

*MOU* ປີ *2002* ໄດ້ສະແດງໃຫ້ເຫັນຂະບວນການເຄື່ອນຍ້າຍແຮງງານຢ່າງເປັນທາງການລະຫວ່າງສອງປະເທດ ໂດຍມີຈຸດປະສົງເພື່ອສະກັດກັ້ນບໍ່ໃຫ້ຄົນອົບພະຍົບສວຍໃຊ້ຮູບແບບການເຄື່ອນຍ້າຍຖິ່ນຖານທີ່ບໍ່ຖືກຕ້ອງ. ເຊິ່ງຂະບວນການທາງ *MOU* ເປັນພຽງແຕ່ຊ່ອງທາງດຽວທີ່ເປັນທາງການສຳລັບແຮງງານລາ ເພື່ອຈະເຂົ້າໄປເຮັດວຽກໃນປະເທດໄທຢ່າງຖືກຕ້ອງ. [52] ເຊິ່ງປະກອບດ້ວຍດ້ວຍ *24* ມາດຕາ,ນອກຈາກນັ້ນ *MOU* ຍັງໄດ້ກຳນົດວ່າຜູ້ອອກແຮງງານແຕ່ລະຄົນຈະໄດ້ຮັບໃບອະນຸຍາດເຮັດວຽກ *2* ປີ. ເຊິ່ງໄລຍະເວລາທັງຫມົດຂອງໃບອະນຸຍາດເຮັດວຽກແມ່ນຈະບໍ່ເກີນ 4 ປີ. ສຳລັບຜູ້ອອກແຮງງານທີ່ປະກອບເອກະສານຄົບຖ້ວນຕາມເງື່ອນໄຂຂອງໃບອະນຸຍາດເຮັດວຽກຂອງເຂົາເຈົ້ານັ້ນ ພາຍຫຼັງໄລຍະເວລາ 3 ປີ ແມ່ນສາມາດສະໝັກວຽກຄືນໃໝ່ໄດ້ອີກເທື່ອໜຶ່ງ ໃນໄລຍະວັນໝົດອາຍຸຂອງໃບອະນຸຍາດເຮັດວຽກ ທີ່ອອກໃຫ້ໄລຍະທຳອິດ ແລະ ໄລຍະຂອງການສະໝັກຄືນໃໝ່ (ມາດຕາ *9) (ibid.).* ພ້ອມທັງກຳນົດວ່າຄົນງານເຫຼົ່ານັ້ນຈະ

[51] An MOU is an agreement between two parties in the form of a legal document. It is not fully binding as it does not have any legal enforceability but shows that two parties have agreed to cooperate to achieve an objective.

[52] Thailand signed bilateral agreements on border employment with Myanmar and Cambodia but not with the Lao People's Democratic Republic.

ປະກອບສ່ວນ *15%* ຂອງເງິນເດືອນເຂົ້າໃນກອງທຶນການອົບພະຍົບທີ່ປະເທດເຈົ້າພາບຕັ້ງຂຶ້ນ (ມາດຕາ *11) (ibid.)* ແລະ ຄົນງານເຫຼົ່ານັ້ນຈະໄດ້ຮັບຄ່າຈ້າງ ແລະ ເງິນຊ່ວຍເຫຼືອໃນອັດຕາດຽວກັນກັບຄົນງານແຫ່ງຊາດຕາມຫຼັກການ. ການບໍ່ຈຳແນກ ແລະ ຄວາມສະເໝີພາບ ໂດຍອີງໃສ່ບົດບາດຍິງຊາຍ, ຊົນເຜົ່າ ແລະ ຄຸນລັກສະນະທາງສາສະໜາ (ມາດຕາ *18) (ibid.).*

ໃນປີ *2016*, ປະເທດໄທ ແລະ ສ ປປ ລາວ ໄດ້ລົງນາມບົດບັນທຶກຄວາມເຂົ້າໃຈສະບັບໃໝ່ ວ່າດ້ວຍ ການເຄື່ອນຍ້າຍແຮງງານ ທີ່ເປີດກວ້າງກວ່າຂໍ້ຕົກລົງສະບັບກ່ອນ ເພື່ອກວມເອົາການຮ່ວມມືທາງດ້ານປະກັນສັງຄົມ ແລະ ການພັດທະນາສີມືແຮງງານ. ນອກນັ້ນ, *MOU* ດັ່ງກ່າວຍັງໄດ້ຖືກລັດຕິດເຂົ້າໃນຂໍ້ຕົກລົງການຈັດຕັ້ງປະຕິບັດທີ່ໄດ້ລົງນາມໃນປີ *2017.*

- ສັນຍາວ່າດ້ວຍການບໍລິການລະຫວ່າງ ສປປ.ເກົາຫຼີ ແລະ ສ ປປ ລາວ

ມາຮອດປີ *2022*, ສປປ ເກົາຫຼີ ແລະ ສ ປປ ລາວ ໄດ້ສ້າງ 2 ໂຄງການຮ່ວມກັນກ່ຽວກັບ ການສົ່ງ ແລະ ການຮັບແຮງງານລາວເຂົ້າ ສປປ ເກົາຫຼີ , ເປັນຕົ້ນແມ່ນໂຄງການ ກ່ຽວກັບແຮງງານຕາມລະດູການ ແລະ ໂຄງການ *EPS.*

ນຳພາໂດຍກະຊວງຍຸຕິທຳ ແຫ່ງ ສ ປປ.ເກົາຫຼີ ແລະ ກົມພັດທະນາສີມືແຮງງານ ແລະ ການຈັດຫາງານ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນ ສປປ ລາວ, ໂຄງການກ່ຽວກັບແຮງງານຕາມລະດູການນັ້ນ ແມ່ນໄດ້ມີການກະຈາຍອຳນາດໃນການອະນຸຍາດ ເຊິ່ງເຈົ້າເມືອງໃນທ້ອງຖິ່ນໃດໜຶ່ງໃນ ສ ປປ ລາວ ແລະ ເຈົ້າເມືອງ ຂອງ ສ ປປ ເກົາຫຼີ ສາມາດເຊັນສັນຍາຮ່ວມກັນກັນ ເພື່ອແນໃສ່ການສົ່ງວເສີມທາງດ້ານຄວາມເຂົ້າໃຈເຊິ່ງກັນ ແລະ ກັນ ແລະ ມິດຕະພາບ ພ້ອມທັງການສະໜອງແຮງງານຕາມລະດູການໃຫ້ແກ່ ສ ປປ ເກົາຫຼີ ໃນຂົງເຂດວຽກງານທາງດ້ານກະສິກຳ ເຊັ່ນ: ການເຮັດຟາມ/ການເພາະປູກ ແລະ ການປະມົງ. ໂຄງການດັ່ງກ່າວນີ້ ແມ່ນເປັນໂຄງການໄລຍະສັ້ນ ເຊິ່ງມີໄລຍະ ເວລາພຽງແຕ່ 90 ວັນ ຫາ 5 ເດືອນ.

ຕົວຢ່າງເຊັ່ນ, *MOU* ກ່ຽວກັບໂຄງການກ່ຽວກັບແຮງງານຕາມລະດູການໄດ້ຖືກລົງນາມໃນວັນທີ *21* ເດືອນເມສາປີ *2022* ລະຫວ່າງ ເມືອງ *Changnyeong-Gun*, ພາກໃຕ້ຂອງແຂວງ *Gyeongsang* ສ ປປ ເກົາຫຼີ ແລະ ພະແນກພັດທະນາສີມືແຮງງານ ແລະ ກົມພັດທະນາສີມືແຮງງານ ແລະ ການຈັດຫາງານຂອງກະຊວງແຮງງານ*. MOU* ດັ່ງກ່າວແມ່ນປະກອບດ້ວຍ *6* ມາດຕາ, ເຊິ່ງໃນນັ້ນກໍ່ໄດ້ລະບຸການຈັດຕັ້ງປະຕິບັດ, ພາລະບົດບາດ ແລະ ຄວາມຮັບຜິດຊອບຮ່ວມກັນຂອງທັງສອງຝ່າຍ ພ້ອມທັງການຈັດຕັ້ງປະຕິບັດບັນດາຂໍ້ກຳນົດຕ່າງໆ.

ສຳລັບໂຄງການ *EPS* ແມ່ນຈຸດປະສົງສະເພາະຂອງ *MOU* ທີ່ໄດ້ລົງນາມໃນວັນທີ 29 ມີນາ 2019 ລະຫວ່າງ ກະຊວງແຮງງານ ແລະ ສະຫວັດດີການ ສັງຄົມ, ສ ປປ ລາວ ແລະ ກະຊວງແຮງງານ ແລະ ການຈັດຫາງານ ແຫ່ງ ສ.ປປ.ເກົາຫຼີ (ກະຊວງແຮງງານ ແລະ ສະຫວັດດີການ ສັງຄົມ, ສ ປປ ລາວ, 2019). *MOU* ດັ່ງກ່າວແມ່ນປະກອບດ້ວຍ 17 ວັກ ແນໃສ່ເພື່ອຮັກສາກອບການຮ່ວມມືລະຫວ່າງ 2 ຝ່າຍໃຫ້ຍືນຍົງ ພ້ອມທັງເສີມຂະຫຍາຍຄວາມໂປ່ງໃສ ເພື່ອເຮັດໃຫ້ຂະບວນການສົ່ງແຮງງານລາວໄປ ສປປ ເກົາຫຼີ ໃຫ້ມີປະສິດຕິຜົນ ໂດຍໄດ້ວາງບັນດາຂໍ້ກຳນົດທີ່ກ່ຽວຂ້ອງກັບການສົ່ງ ແລະ ຮັບຄືນງານພາຍໃຕ້ ໂຄງການ *EPS.*

- ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍ ການຮ່ວມມື ລະຫວ່າງ ປະເທດ ຍີ່ປຸ່ນ ແລະ ສ ປປ ລາວ.

ມາຮອດປີ *2022,* ປະເທດ ຍີ່ປຸ່ນ ແລະ ສ ປປ ລາວ ໄດ້ເຊັນສັນຍາ *2* ໂຄງການຮ່ວມກັນ, ຄື: ໂຄງການຝຶກອົບຮົມການຝຶກງານທາງດ້ານເຕັກນິກ-ວິຊາການ ແລະ ໂຄງການສີມືແຮງງານສະເພາະດ້ານ ເຊິ່ງທັງສອງບົດບັນທຶກການຮ່ວມມືນັ້ນແມ່ນໄດ້ແຍກອອກເປັນ *2* ສະບັບ.

ວັນທີ 28 ພະຈິກ 2017 ແລະ ວັນທີ 9 ທັນວາ 2017, ສອງປະເທດໄດ້ເຊັນບົດບັນທຶກການຮ່ວມມືໂຄງການ ຝຶກອົບຮົມການຝຶກງານທາງດ້ານເຕັກນິກ-ວິຊາການ(ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສ ປປ ລາວ, ແລະ ກະຊວງຍຸຕິທຳ, ກະຊວງການຕ່າງປະເທດ ແລະ ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະ ສະຫວັດດີການ ຂອງປະເທດຍີ່ປຸ່ນ; 2017). ຈຸດປະສົງຂອງບົດບັນທຶກດັ່ງກ່າວແມ່ນເພື່ອເປັນການຖ່າຍທອດທັກສະດ້ານວິຊາການຈາກປະເທດຍີ່ປຸ່ນ ມາໃຫ້ ສປປ ລາວ ຢ່າງເໝາະສົມ ແລະ ຄວາມຄ່ອງແຄ້ວ-ວ່ອງໄວ ເຊິ່ງໄດ້ໃຫ້ຄຳໝັ້ນສັນຍາລະຫວ່າງສອງຝ່າຍ ແລະ ຈັດຕັ້ງປະຕິບັດ ຜ່ານໂຄງການພ້ອມທັງ ຍອມຮັບເອົາການຝຶກອົບຮົມການຝຶກງານທາງດ້ານເຕັກນິກ-ວິຊາການ ເພື່ອສົ່ງເສີມການຮ່ວມມືກັນໃນລະດັບສາກົນ. ປັດຈຸບັນ, ສປປ ລາວ ມີ 5 ຫາ 6 ໜ່ວຍງານທີ່ເຄື່ອນໄຫວ ການຄັດເລືອກ ແລະ ສົ່ງຜູ້ທີ່ຈະໄປຝຶກອົບຮົມການຝຶກງານທາງດ້ານວິຊາການ, ໃຫ້ການສະໜັບສະໜູນ ເພື່ອຊອກຫາອາຊີບໃນເວລາກັບຄືນປະເທດ ແລະ ໃຫ້ການຮ່ວມມືໃນການຕິດຕາມການສຳຫຼວດກັບອຳນາດການປົກຄອງປະເທດຍີ່ປຸ່ນ ກ່ຽວກັບການນຳໃຊ້ທັກສະທາງດ້ານເຕັກນິກ ຂອງບັນດາຜູ້ທີ່ໄດ້ໄປຝຶກອົບຮົມ ພາຍຫຼັງທີ່ກັບຄືນມາ ສ ປປ ລາວ.

ວັນທີ 28 ກໍລະກົດ 2022, ສອງປະເທດໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືສະບັບທີ 2 ເພື່ອແນໃສ່ສ້າງກອບການພົວພັນຮ່ວມມືດ້ານຂໍ້ມູນຂ່າວສານ ເພື່ອຮັບປະກັນການສົ່ງ ແລະ ຮັບເອົາຄືນງານທີ່ມີຄວາມຊຳນານງານຕາມທີ່ກຳນົດໄວ້ (ກະຊວງແຮງງານ ແລະ ສະຫວັດດີການ ສັງຄົມ, ສ ປປ ລາວ, ແລະ ກະຊວງຍຸຕິທຳ ປະເທດຍີ່ປຸ່ນ; ກະຊວງການຕ່າງປະເທດ, ກະຊວງສາທາລະນະສຸກ, ກະຊວງ

ແຮງງານ ແລະ ສະຫວັດດີການ, ແລະ ອົງການຕຳຫຼວດແຫ່ງຊາດ, 2022). ພ້ອມທັງແນໃສ່ແກ້ໄຂບັນຫາການສົ່ງອອກ ແລະ ຮັບເອົາຜູ້ອອກແຮງງານທີ່ມີຄວາມຊຳນານງານທີ່ກຳນົດໄວ້ ແລະ ຜູ້ທີ່ອາໄສຢູ່ປະເທດຍີ່ປຸ່ນ, ພ້ອມທັງເສີມຂະຫຍາຍຜົນປະໂຫຍດຂອງທັງສອງປະເທດ ໂດຍຜ່ານການຮ່ວມມືເພື່ອເຮັດໃຫ້ລະບົບການປະຕິບັດງານຖືກຕ້ອງ ແລະ ເໝາະສົມ.

- **ກອບການດຳເນີນງານ ເຊັນໄດ(*Sendai)* ວ່າດ້ວຍ ການຫຼຸດຜ່ອນທາງດ້ານໄພພິບັດ**

ກອບການດຳເນີນງານ ເຊັນໄດ(*Sendai)* ໄດ້ຮັບການຮັບຮອງຈາກສະມັດຊາໃຫຍ່ ຂອງອົງການສະຫະປະຊາຊາດໃນປີ 2015 (*United Nations,* 2015*b).* ເຊິ່ງສຸມໃສ່ການຮັບຮອງເອົາບັນດາມາດຕະການ, ເພື່ອແກ້ໄຂ 3 ວຽກງານທີ່ກ່ຽວຂ້ອງກັບຄວາມສ່ຽງທາງດ້ານໄພພິບັດ, ເປັນຕົ້ນແມ່ນ ການປະເຊີນກັບຄວາມອັນຕະລາຍ, ຄວາມອ່ອນແອ ແລະ ຄວາມອາດສາມາດ, ແລະ ລັກສະນະຂອງຄວາມເປັນອັນຕະລາຍເພື່ອປ້ອງກັນການສ້າງຄວາມສ່ຽງໃຫມ່, ຫຼຸດຜ່ອນຄວາມສ່ຽງທີ່ມີຢູ່ແລ້ວ ແລະ ເພີ່ມຄວາມສາມາດໃນການຟື້ນຟູ ເພື່ອກັບສູ່ສະພາບປົກກະຕິ.

- **ການຮ່ວມມືຂອງບັນດາປະເທດໃນພາກພື້ນລຸ່ມແມ່ນ້ຳຂອງ ເພື່ອຕ້ານການຄ້າມະນຸດ**

ວ່າດ້ວຍບັນຫາກ່ຽວກັບຕ້ານການຄ້າມະນຸດ, ປະເທດໃນພາກພື້ນລຸ່ມແມ່ນ້ຳຂອງໄດ້ເຂົ້າຮ່ວມລົງນາມໃນຫຼາຍໆຂໍ້ກຳນົດເພື່ອສະແດງເຖິງການລິເລີ່ມຂອງການເຂົ້າເປັນສະມາຊິກຂອງກອບການດຳເນີນງານ ບາຫຼີວ່າດ້ວຍ ການລັກລອບ, ການຄ້າມະນຸດ ແລະ ອາຊະຍາກຳຂ້າມຊາດທີ່ກ່ຽວຂ້ອງ[53]. ນອກຈາກນັ້ນ ບັນດາປະເທດໃນພາກພື້ນລຸ່ມແມ່ນ້ຳຂອງ ຍັງເປັນສະມາຊິກຂອງ ການຮ່ວມມືຂອງບັນດາປະເທດໃນພາກພື້ນລຸ່ມແມ່ນ້ຳຂອງ ເພື່ອຕ້ານການຄ້າມະນຸດ (*COMMIT)* ອີກດ້ວຍ, ເຊິ່ງເປັນການປຶກສາຫາລືນະໂຍບາຍລະດັບສູງໃນ ຂອງບັນດາປະເທດອະນຸພາກພື້ນແມ່ນ້ຳຂອງ*GMS.* ຂະບວນການ *COMMIT* ລວມມີການປຶກສາຫາລືສະເພາະດ້ານ ເຊັ່ນ: ການຕ້ານການຄ້າມະນຸດ, ການຕ້ານການລັກລອບຍ້າຍຖິ່ນຖານ ແລະ ການຕ້ານການບັງຄັບໃຊ້ແຮງງານ ແລະ (ຂ້າມ) ກົນໄກການສົ່ງຕໍ່ຄົນຂ້າມຊາດ. ໄດ້ຮັບຮອງເອົາວິທີທີ່ຮອບດ້ານເພາະມັນລວມຄວາມພະຍາຍາມໃນການປ້ອງກັນການຄ້າມະນຸດ, ການປົກປ້ອງຜູ້ເຄາະຮ້າຍແລະການສົ່ງກັບຄືນປະເທດແລະ ການປະສົມປະສານ, ແລະ ການດຳເນີນຄະດີ.

[53] See www.baliprocess.net/.

- ❖ **ການຮ່ວມມືເພື່ອຝ້າລະວັງເຊື້ອພະຍາດຂອງບັນດາປະເທດກຸ່ມແມ່ນໍ້າຂອງ**

ການຮ່ວມມືເພື່ອເຝົ້າລະວັງເຊື້ອພະຍາດຂອງບັນດາປະເທດກຸ່ມແມ່ນໍ້າຂອງ(MBDS) [54] ແມ່ນການຮ່ວມມືໃນລະດັບອະນຸພາກພື້ນໂດຍກະຊວງສາທາລະນະສຸກຈາກບັນດາປະເທດສະມາຊິກກໍາປູເຈຍ, ຈີນ (ແຂວງຢຸນນານ ແລະ ກວາງຊີ), ປ ປປ ລາວ, ມຽນມາ, ໄທ ແລະ ຫວຽດນາມ.

ກຸ່ມການຮ່ວມມື *MBDS* ໄດ້ຖືກສ້າງຕັ້ງຢູ່ທັງໝົດ *16* ບ່ອນ ທີ່ເຮັດວຽກຂ້າມຊາຍແດນຢູ່ດ່ານທີ່ສໍາຄັນລະຫວ່າງ *6* ປະເທດ. ຈຸດປະສົງຂອງສະຖານທີ່ເຫຼົ່ານີ້ແມ່ນເພື່ອອໍານວຍຄວາມສະດວກໃຫ້ແກ່ທີມງານແພດບໍ່ມີພົມແດນ, ທີມງານພາສີ ແລະ ເຈົ້າໜ້າທີ່ກວດຄົນເຂົ້າເມືອງ ເພື່ອດໍາເນີນການຮ່ວມມືໃນການກວດສອບ ແລະ ການຕອບໂຕ້ການລະບາດຂອງພະຍາດຮ່ວມກັນ.

*3.3.2.* ກອບການດໍາເນີນງານໃນລະດັບສາກົນ

- ❖ **ສົນທິສັນຍາ ແລະ ລະບຽບການຂອງ ILO**

ສ ປປ ລາວ ໄດ້ເຂົ້າເປັນສະມາຊິກອົງການ *ILO* ໃນເດືອນມັງກອນ ປີ *1964* ເຊິ່ງເປັນປະເທດສະມາຊິກທີ *120*. ມາຮອດປະຈຸບັນ, ສ ປປ ລາວ ໄດ້ໃຫ້ສັດຕະຍາບັນສົນທິສັນຍາສາກົນ *ILO 12* ສະບັບ, ເຊິ່ງເປັນສົນທິສັນຍາສາກົນທີ່ມີຜົນສັກສິດຄື: *7* ໃນຈໍານວນ *10* ແມ່ນສົນທິສັນຍາທີ່ເປັນພື້ນຖານ, *1* ໃນ *4* ແມ່ນສົນທິສັນຍາທາງດ້ານການປົກຄອງ, ແລະ *4* ໃນຈໍານວນ *176* ແມ່ນສົນທິສັນຍາທາງດ້ານເຕັກນິກ-ວິຊາການ (ຕາຕະລາງ *3).*

**ຕາຕະລາງ 3. ສົນທິສັນຍາຂອງອົງການແຮງງານສາກົນທີ່ໄດ້ໃຫ້ສັດຕະຍາບັນໂດຍ ສ ປປ ລາວ**

| **#** | ສົນທິສັນຍາ ແລະ ປີ | **ປີຂອງການໃຫ້ສັດຕະຍາບັນ** | **ສະຖານະ** |
|---|---|---|---|
| ສົນທິສັນຍາທີ່ເປັນພື້ນຖານ **(7 ໃນ 10)** | | | |

[54] See www.mbdsnet.org/ and www.cordsnetwork.org/networks/mbds/.

| | | | |
|---|---|---|---|
| C029 | ສົນທິສັນຍາແຮງງານແບບບັງຄັບ, *1930* | 1964 | ມີຜົນບັງຄັບໃຊ້ |
| C100 | ສົນທິສັນຍາວ່າດ້ວຍຄ່າຕອບແທນເທົ່າທຽມກັນ, 1951 | 2008 | ມີຜົນບັງຄັບໃຊ້ |
| C111 | ສົນທິສັນຍາວ່າດ້ວຍການຈຳແນກ (ການຈ້າງງານ ແລະ ອາຊີບ),1958 | 2008 | ມີຜົນບັງຄັບໃຊ້ |
| C138 | ສົນທິສັນຍາອາຍຸຕໍ່າສຸດ, 1978 | 2005 | ມີຜົນບັງຄັບໃຊ້ |
| C155 | ສົນທິສັນຍາວ່າດ້ວຍຄວາມປອດໄພດ້ານອາຊີບ ແລະ ສຸຂະພາບ, 1981 | 2022 | ບໍ່ມີຜົນບັງຄັບ ໃຊ້ (ກໍລະກົດ 2023) |
| C182 | ສົນທິສັນຍາວ່າດ້ວຍ ຮູບແບບທີ່ໂຫດຮ້າຍທີ່ສຸດ ຂອງ ແຮງງານເດັກ, 1999 | 2005 | ມີຜົນບັງຄັບໃຊ້ |
| C187 | ສົນທິສັນຍາວ່າດ້ວຍການສົ່ງເສີມຄວາມປອດໄພດ້ານ ອາຊີບ ແລະ ສຸຂະພາບ, 2006 | 2022 | ບໍ່ມີຜົນບັງຄັບ ໃຊ້ (ກໍລະກົດ 2023) |
| ສົນທິສັນຍາທາງດ້ານການປົກຄອງ (1 ໃນ 4) | | | |
| C144 | ສົນທິສັນຍາວ່າດ້ວຍການປຶກສາຫາລືສາມຝ່າຍ (ມາດຕະຖານແຮງງານສາກົນ), 1976 | 2010 | ມີຜົນບັງຄັບໃຊ້ |

| ທາງດ້ານເຕັກນິກ-ວິຊາການ (4 ໃນ 176) | | | |
|---|---|---|---|
| C004 | ສົນທິສັນຍາກ່ຽວກັບວຽກງານກາງຄືນ (ຜູ້ຍິງ), 1919 | 1964 | ບໍ່ມີຜົນບັງຄັບໃຊ້ (ຍົກເລີກ ໃນ 2017) |
| C006 | ສົນທິສັນຍາກ່ຽວກັບວຽກງານກາງຄືນຂອງໄວໜຸ່ມ (ອຸດສາຫະກຳ), 1919 | 1964 | ມີຜົນບັງຄັບໃຊ້ |
| C013 | ສົນທິສັນຍາວ່າດ້ວຍການນຳພາໂດຍການໃຊ້ສີຂາວ (ທາສີ), 1921 | 1964 | ມີຜົນບັງຄັບໃຊ້ |
| C171 | ສົນທິສັນຍາກ່ຽວກັບ ການເຮັດວຽກກາງຄືນ, 1990 | 2014 | ມີຜົນບັງຄັບໃຊ້ |

*ແຫຼ່ງຂໍ້ມູນ*: ILO (n.d.). ສົນທິສັນຍາ ທີ່ ສ ປປ ລາວ ໄດ້ໃຫ້ສັດຕະຍາບັນ Ratifications for Lao People's Democratic.

ໃນບັນດາມາດຕະຖານແຮງງານສາກົນກ່ຽວກັບກະສິກຳ, ສົນທິສັນຍາຄວາມປອດໄພດ້ານອາຊີບ ແລະ ສຸຂະພາບ, 1981 (C155) ແລະ ກອບແຜນດຳເນີນການສົ່ງເສີມສັນຍາວ່າດ້ວຍຄວາມປອດໄພດ້ານອາຊີບ ແລະ ສຸຂະພາບ, ປີ 2006 (C187) ໄດ້ຮັບການໃຫ້ສັດຕະຍາບັນຈາກບັນດາປະເທດສະມາຊິກໃນວັນທີ 4 ກໍລະກົດ 2022 ແລະ ຈະມີຜົນບັງຄັບໃຊ້ໃນວັນທີ 4. ເດືອນກໍລະກົດ ປີ 2023. ສົນທິສັນຍາດັ່ງກ່າວໄດ້ສະໜອງໃຫ້ການຮັບຮອງເອົານະໂຍບາຍແຫ່ງຊາດທີ່ສອດຄ່ອງ ກັບຄວາມປອດໄພດ້ານອາຊີບ ແລະ ສຸຂະພາບ, ພ້ອມທັງການຈັດຕັ້ງປະຕິບັດຂອງ

ລັດຖະບານ ແລະ ພາຍໃນວິສາຫະກິດ ເພື່ອສົ່ງເສີມຄວາມປອດໄພດ້ານອາຊີບ ແລະ ສຸຂະພາບ ແນໃສ່ປັບປຸງບັນດາເງື່ອນໄຂຂອງການເຮັດວຽກ[55].

ນອກຈາກນັ້ນ, ຍັງມີສົນທິສັນຍາທາງດ້ານເຕັກນິກອື່ນໆທີ່ໄດ້ກຳນົດມາດຕະຖານແຮງງານສາກົນທີ່ສຳຄັນຕໍ່ການເຄື່ອນຍ້າຍແຮງງານ ແລະ ທີ່ລັດຖະບານຍັງບໍ່ທັນໃຫ້ສັດຕະຍາບັນຄື:

- ສົນທິສັນຍາວ່າດ້ວຍສະເໝີພາບທາງດ້ານການປິ່ນປົວ (ການຊົດເຊີຍອຸປະຕິເຫດ), 1925 (C019);
- ສົນທິສັນຍາວ່າດ້ວຍການເຄື່ອນຍ້າຍເພື່ອການຈ້າງງານ (ສະບັບປັບປຸງ) 1949 (C097), ເຊິ່ງໄດ້ກຳນົດຫຼາຍມາດຕະການທີ່ປະເທດສະມາຊິກຄວນປະຕິບັດເພື່ອປົກປ້ອງສິດທິຂອງແຮງງານເຄື່ອນຍ້າຍ;
- ສົນທິສັນຍາວ່າດ້ວຍຄວາມສະເໝີພາບທາງດ້ານການປິ່ນປົວ (ປະກັນສັງຄົມ), 1962 (C118);
- ສົນທິສັນຍາວ່າດ້ວຍແຮງງານເຄື່ອນຍ້າຍ (ບົດບັນຍັດເພີ່ມເຕີມ) ປີ 1975 (C143) ເຊິ່ງກ່ຽວຂ້ອງກັບການຍົກຍ້າຍຖິ່ນຖານໃນເງື່ອນໄຂທີ່ລ່ວງລະເມີດ ແລະ ການສົ່ງເສີມຄວາມສະເໝີພາບທາງດ້ານໂອກາດ ແລະ ການປະຕິບັດຕໍ່ແຮງງານເຄື່ອນຍ້າຍ;
- ສົນທິສັນຍາວ່າດ້ວຍອົງການຈັດຫາງານເອກະຊົນ, 1997 (C181);
- ສົນທິສັນຍາວ່າດ້ວຍວຽກງານທີ່ເໝາະສົມສຳລັບແຮງງານພາຍໃນ, ເຊິ່ງເອີ້ນກັນວ່າ ສົນທິສັນຍາແຮງງານພາຍໃນ, 2011 (C189).

ນອກຈາກນັ້ນ, ຂໍ້ສະເໜີແນະຂອງອົງການ ILO ທີ່ກ່ຽວຂ້ອງກັບແຮງງານເຄື່ອນຍ້າຍ ແລະ ຍັງຄົງເປັນຂໍ້ສະຫງວນໄວ້ເພື່ອເປັນແນວທາງ ແລະ ບໍ່ທັນໄດ້ຖືກຮັບຮອງໂດຍລັດຖະບານຂອງປະເທດແຕ່ຢ່າງໃດ (ຕາຕະລາງ 4).

### ຕາຕະລາງ 4. ລາຍຊື່ແນະນຳກ່ຽວກັບ ການເຄື່ອນຍ້າຍຖິ່ນຖານ ຈາກອົງການຈັດຕັ້ງແຮງງານສາກົນ

| # | ບັນດາຄຳແນະນຳຕ່າງໆ | ປີ |
|---|---|---|
| R019 | ການແນະນຳ ທາງດ້ານ ສະຖິຕິຂອງການເຄື່ອນຍ້າຍຖິ່ນຖານ | 1922 |

[55] ຄວາມປອດໄພດ້ານອາຊີບ ແລະ ສຸຂພາບແມ່ນລະບຽບວິໄນກ່ຽວກັບການປ້ອງກັນການບາດເຈັບ ແລະ ພະຍາດທີ່ເກີດຈາກການເຮັດວຽກ, ທັງເປັນການປົກປ້ອງ ແລະ ສົ່ງເສີມສຸຂະພາບຂອງຜູ້ອອກແຮງງານ.

| | | |
|---|---|---|
| R026 | ການແນະນຳ ທາງດ້ານ ການເຄື່ອນຍ້າຍຖິ່ນຖານ(ການປົກປ້ອງແມ່ຍິງຢູ່ທະເລ) | 1926 |
| R061 | ຄຳແນະນຳ ສຳລັບເຄື່ອຍຍ້ານຖິ່ນຖານເພື່ອການຈ້າງງານ | 1939 |
| R062 | ຄຳແນະນຳ ສຳລັບເຄື່ອຍຍ້ານຖິ່ນຖານເພື່ອການຈ້າງງານ (ການຮ່ວມມືລະຫວ່າງລັດ) | 1939 |
| R086 | ຄຳແນະນຳ ສຳລັບເຄື່ອຍຍ້ານຖິ່ນຖານເພື່ອການຈ້າງງານ (ສະບັບປັບປຸງ) | 1949 |
| R100 | ຄຳແນະນຳ ສຳລັບແຮງງານເຄື່ອນຍ້າຍ ( ສຳລັບບັນດາປະເທດທີ່ດ້ອຍພັດທະນາ) | 1955 |
| R151 | ຄຳແນະນຳ ສຳລັບແຮງງານເຄື່ອນຍ້າຍ | 1975 |

*ແຫຼ່ງຂໍ້ມູນ: ຜູ້ຂຽນແມ່ນອີງໃສ່* ເອັບໄຊ ILO.

- **ຖະແຫຼງການສາກົນກ່ຽວກັບສິດທິມະນຸດ**

ຖະແຫຼງການສາກົນກ່ຽວກັບສິດທິມະນຸດ ແມ່ນເປັນຂົດໝາຍສຳຄັນທາງເອກະສານທີ່ເປັນປະຫວັດສາດທາງດ້ານສິດທິມະນຸດ (ສະຫະປະຊາຊາດ, 1948). ເຊິ່ງເປັນຄັ້ງທຳອິດທີ່ກຳນົດຫຼັກການພື້ນຖານທາງດ້ານສິດທິມະນຸດ ທີ່ຈະຕ້ອງໄດ້ຮັບການປົກປ້ອງທົ່ວໂລກ. ຖະແຫຼງການດັ່ງກ່າວນີ້ ຍັງປະກາດວ່າສິດທິມະນຸດຈະຕ້ອງໄດ້ຮັບໂດຍປະຊາຊົນທຸກຄົນ, ບໍ່ວ່າພວກເຂົາຈະເປັນໃຜ ຫຼື ຢູ່ໃສ. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ໃຫ້ສັດຕະຍາບັນຕໍ່ຖະແຫຼງການສາກົນກ່ຽວກັບສິດທິມະນຸດ. ສ ປປ ລາວ ກໍ່ໄດ້ໃຫ້ສັດຕະຍາບັນຕໍ່ກັບຖະແຫຼງການສາກົນກ່ຽວກັບສິດທິມະນຸດ ເຊັ່ນດຽວກັນ.

- **ສົນຍາສາກົນກ່ຽວກັບສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ**

ສົນຍາສາກົນວ່າດ້ວຍສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ ແມ່ນເພື່ອຮັບປະກັນສິດສະເໝີພາບຂອງຊາຍ ແລະ ຍິງ - ລວມທັງຜູ້ເຄື່ອນຍ້າຍຖິ່ນຖານ, ຜູ້ຂໍລີ້ໄພ ແລະ ຊາວອົບພະຍົບ - ເພື່ອໃຫ້ສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ ລວມທັງສິດໃນການສຶກສາ, ຄວາມຍຸດຕິທຳ ແລະ ສະພາບການເຮັດວຽກ.

, ມາດຕະຖານການດຳລົງຊີວິດທີ່ພຽງພໍ, ມາດຕະຖານສຸຂະພາບທີ່ບັນລຸໄດ້ສູງສຸດ, ແລະ ການປະກັນສັງຄົມ (ສະຫະປະຊາຊາດ, 1966a). ສ ປ ປ ລາວ ໄດ້ລົງນາມໃນສົນທິສັນຍາດັ່ງກ່າວໃນວັນທີ 7 ທັນວາ 2000 ແລະ ໄດ້ໃຫ້ສັດຕະຍາບັນໃນວັນທີ 13 ກຸມພາ 2007.

❖ **ສັນຍາສາກົນ ວ່າດ້ວຍ ສິດທິທາງດ້ານ ສັງຄົມ ແລະ ການເມືອງ**

ສັນຍາສາກົນ ວ່າດ້ວຍ ສິດທິທາງດ້ານ ສັງຄົມ ແລະ ການເມືອງ ແມ່ນສົນທິສັນຍາຫຼາຍຝ່າຍທີ່ໃຫ້ຄຳໝັ້ນສັນຍາ ຕໍ່ກັບບັນດາລັດພາຄີໃນການເຄົາລົບສິດທິຂອງພົນລະເມືອງ ແລະ ສິດທາງການເມືອງຂອງບຸກຄົນ, ລວມທັງສິດໃນການມີຊີວິດ, ສິດເສລີພາບໃນການເຊື່ອຖືສາສະໜາ, ສິດເສລີພາບໃນການປາກເວົ້າ ແລະ ສິດເສລີພາບໃນການເຕົ້າໂຮມ-ຊຸມນຸມ. ເຊິ່ງເປັນສ່ວນຫນຶ່ງຂອງຮ່າງກົດໝາຍສາກົນກ່ຽວກັບສິດທິມະນຸດ (ສະຫະປະຊາຊາດ, 1966b). ສົນທິສັນຍາລວມມີການອ້າງອີງຢ່າງຈະແຈ້ງກ່ຽວກັບການເຄື່ອນຍ້າຍຖິ່ນຖານໃນມາດຕາ 9 ແລະ 10 ວ່າດ້ວຍສິດເສລີພາບ ແລະ ຄວາມປອດໄພຂອງບຸກຄົນ. ເຊິ່ງ ສ ປປ ລາວ ໄດ້ລົງນາມໃນສົນທິສັນຍາດັ່ງກ່າວໃນວັນທີ 7 ທັນວາ 2000 ແລະ ໄດ້ໃຫ້ສັດຕະຍາບັນໃນວັນທີ 25 ທັນວາ 2009.

❖ **ສົນທິສັນຍາສາກົນກ່ຽວກັບການລົບລ້າງການຈຳແນກເຊື້ອຊາດທຸກຮູບແບບ**

ສົນທິສັນຍາສາກົນກ່ຽວກັບການລົບລ້າງການຈຳແນກເຊື້ອຊາດທຸກຮູບແບບ ແມ່ນເປັນການແກ້ໄຂທີ່ສຳຄັນ-ຈຳເປັນ " ເພື່ອຮັບຮອງເອົາທຸກມາດຕະການທີ່ຈຳເປັນ ເພື່ອລົບລ້າງປະກົດການ ການຈຳແນກເຊື້ອຊາດ-ສີຜິວ ໃນທຸກຮູບແບບ, ພ້ອມທັງ ສະກັດກັ້ນ ແລະ ຕ້ານບັນດາຄຳສອນ ແລະ ການປະພຶດຂອງການຈຳແນກເຊື້ອຊາດ-ສີຜິວ" (ສະຫະປະຊາຊາດ, 1965). ເຊິ່ງ ສ ປປ ລາວ ໄດ້ເຂົ້າຮ່ວມສົນທິສັນຍາດັ່ງກ່າວໃນວັນທີ 22 ກຸມພາ 1974.

❖ **ສົນທິສັນຍາວ່າດ້ວຍ ການລົບລ້າງ ທຸກຮູບແບບການຈຳແນກຕໍ່ແມ່ຍິງ**

ບັນດາລັດພາຄີ ທີ່ໄດ້ໃຫ້ຄຳໝັ້ນສັນຍາຕໍ່ສົນທິສັນຍາວ່າດ້ວຍ ການລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ແມ່ນມີພັນທະຕາມກົດໝາຍເພື່ອລົບລ້າງການຈຳແນກຕໍ່ແມ່ຍິງ, ໃນນັ້ນມີແຮງງານເຄື່ອນຍ້າຍທີ່ເປັນເພດຍິງ. ສົນທິສັນຍາໄດ້ກຳນົດການຈຳແນກຕໍ່ແມ່ຍິງຢ່າງຄົບຖ້ວນ ລວມທັງຄວາມຮຸນແຮງທາງເພດ ແລະ ຄວາມຮຸນແຮງຕໍ່ກັບແມ່ຍິງ, ແລະ ການລະເມີດສິດທິມະນຸດອື່ນໆ (ສະຫະປະຊາຊາດ, 1979). ສ ປປ ລາວ ໄດ້ລົງນາມໃນສົນທິສັນຍາ ໃນເດືອນ ກໍລະກົດ 1980 ແລະ ໄດ້ໃຫ້ສັດຕະຍາບັນ ໃນເດືອນ ສິງຫາ ປີ 1981.

❖ **ສົນທິສັນຍາ ວ່າດ້ວຍ ສິດທິເດັກ**

ສົນທິສັນຍາໄດ້ກຳນົດວ່າ ເດັກນ້ອຍຜູ້ທີ່ມີສະຖານະເປັນຜູ້ອົບພະຍົບ ຫຼື ຜູ້ທີ່ຖືກຕັດສິນວ່າເປັນຜູ້ອົບພະຍົບ - ບໍ່ວ່າຈະມີ ຫຼື ບໍ່ມີຜູ້ປົກຄອງ ຫຼື ບຸກຄົນອື່ນ ເດີນທາງມານຳກໍ່ຕາມ - ກໍ່ຄວນໄດ້ຮັບການປົກປ້ອງທີ່ເໝາະສົມ ແລະ ການຊ່ວຍເຫຼືອດ້ານມະນຸດສະທຳ. ເຊິ່ງຍັງໝາຍເຖິງຄວາມພະຍາຍາມລວມຕົວກັບຄອບຄົວອີກເທື່ອໜຶ່ງ (ສະຫະປະຊາຊາດ, 1989). ສ ປປ ລາວ ໄດ້ໃຫ້ສັດຕະຍາບັນສົນທິສັນຍາດັ່ງກ່າວໃນວັນທີ 8 ພຶດສະພາ 1991. ນອກຈາກນັ້ນ , ປະເທດດັ່ງກ່າວ ໄດ້ເຂົ້າເຖິງອະນຸສັນຍາທາງເລືອກຂອງສົນທິສັນຍາວ່າດ້ວຍສິດທິເດັກ ກ່ຽວກັບການມີສ່ວນຮ່ວມຂອງເດັກນ້ອຍໃນການຂັດແຍ່ງທາງດ້ານການທະຫານ (ສະຫະປະຊາຊາດ, 2000a) ແລະ ຍັງໄດ້ເຂົ້າເຖິງ ອະນຸສັນຍາທາງເລືອກຂອງສົນທິສັນຍາວ່າດ້ວຍສິດທິເດັກ ກ່ຽວກັບ ການຄ້າເດັກນ້ອຍ , ການຄ້າປະເວນີເດັກ ແລະ ການຖ່າຍພາບອະນາຈານເດັກນ້ອຍ ໃນວັນທີ 20 ເດືອນກັນຍາ 2006 (ສະຫະປະຊາຊາດ, 2000b).

❖ **ສົນທິສັນຍາ ອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ**

ປະເທດດັ່ງກ່າວ ໄດ້ລົງນາມໃນສົນທິສັນຍາ ອາຊຽນ ຕ້ານການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, ເຊິ່ງສະພາແຫ່ງຊາດລາວ ໄດ້ໃຫ້ສັດຕະຍາບັນໃນເດືອນເມສາ 2017 (ASEAN, 2015b). ເຊິ່ງຮັບຮູ້ເຖິງຄວາມຈຳເປັນເພື່ອໃຫ້ມີການການປະສານງານຫຼາຍຂຶ້ນ ພ້ອມທັງ ຈຳເປັນຕ້ອງມີການ ການດຳເນີນການຮ່ວມມືກັນໃນທົ່ວພາກພື້ນເພື່ອໃຫ້ມີການປ້ອງກັນການຄ້າມະນຸດ, ປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍທີ່ດີກວ່າເກົ່າ.

❖ **ສົນທິສັນຍາ ຂອງ ອົງການສະຫະປະຊາຊາດ ວ່າດ້ວຍການຕ້ານອາດຊະຍາກຳຂ້າມຊາດ**

ສົນທິສັນຍາ ຂອງ ອົງການສະຫະປະຊາຊາດ ວ່າດ້ວຍການຕ້ານອາດຊະຍາກຳຂ້າມຊາດ ແມ່ນເຄື່ອງມືສາກົນຫຼັກໃນການຕໍ່ສູ້ຕ້ານອາດຊະຍາກຳທີ່ມີການຈັດຕັ້ງໃນຮູບແບບລັກສະນະຂ້າມຊາດ (ອົງການສະຫະປະຊາຊາດ ວ່າດ້ວຍຢາເສບຕິດ ແລະ ອາດສະຍາກຳ, 2000). ບັນດາປະເທດທີ່ເປັນພາຄີໄດ້ໃຫ້ສັດຕະຍາບັນສົນທິສັນຍາດັ່ງກ່າວໄດ້ມີການໃຫ້ຄຳໝັ້ນສັນຍາປະຕິບັດຫຼາຍມາດຕະການເພື່ອຕ້ານອາດຊະຍາກຳຂ້າມຊາດ, ເຊິ່ງລວມທັງການກະທຳຜິດທາງອາຍາພາຍໃນປະເທດ, ມີການຮັບຮອງເອົາກອບແຜນການດຳເນີນການສົ່ງຜູ້ຮ້າຍແດນຢ່າງກວ້າງຂວາງ, ການຊ່ວຍເຫຼືອດ້ານກົດໝາຍເຊິ່ງກັນແລະ ກັນ ແລະ ມີການຮ່ວມມືຈັດຕັ້ງປະຕິບັດກົດໝາຍ ພ້ອມທັງມີການຊຸກຍູ້ທາງດ້ານການຝຶກອົບຮົມ ແລະ ການຊ່ວຍເຫຼືອດ້ານເຕັກນິກຕ່າງໆ. ເພື່ອສ້າງ ຫຼື ຍົກລະດັບຂີດຄວາມສາມາດທີ່ຈຳເປັນຂອງອຳນາດການປົກຄອງແຫ່ງຊາດ. ສ ປປ ລາວ ໄດ້ລົງນາມ ສົນທິສັນຍາດັ່ງກ່າວນີ້ໃນວັນທີ 26 ກັນຍາ 2003 ແລະໄດ້ສ້າງຂໍ້ສະຫງວນໄວ້ດັ່ງນີ້:

> ອີງຕາມ ວັກ 3, ມາດຕາ 35 ຂອງສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍການຕ້ານອາດຊະຍາກຳ ຂ້າມຊາດ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຖະແຫຼງວ່າພັນທະທີ່ລະບຸຢູ່ໃນມາດຕາ 35 ວັກທີ 2 ຂອງສົນທິສັນຍານີ້ແມ່ນຖືວ່າບໍ່ມີຜົນສັກສິດຕໍ່ກັບປະເທດຕົນ, ເຊິ່ງ ສາທາລະນະລັດ ປະຊາທິປະໄຕ

ປະຊາຊົນລາວ ໄດ້ຖະແຫຼງການໂດຍໃຫ້ເຫດຜົນ ອີງໃສ່ບັນຫາທີ່ພົວພັນກັບ ການຕີຄວາມໝາຍ ແລະ ການນຳໃຊ້ສົນທິສັນຍາດັ່ງກ່າວເພື່ອໄປສູ່ການຕັດສິນໂດຍອານຸຍາໂຕຕຸລາການ ( ການຕັດສິນຊີ້ຂາດ) ຫຼື ເປັນສານຍຸດຕິທຳສາກົນ, ໃນການແກ້ໄຂບັນດາຂໍ້ຂັດແຍ່ງທີ່ຈຳເປັນຕ່າງໆທີ່ເກີດຂຶ້ນໃນສັນຍາລະຫວ່າງ ບັນດາລັດທີ່ເປັນປະເທດພາຄີ.

- **ສັນຍາເພື່ອປ້ອງກັນ, ສະກັດກັ້ນ ແລະ ລົງໂທດການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ.**

ປະເທດພາຄີໄດ້ເຂົ້າເຖິງອານຸສັນຍາ[56], ເຊິ່ງເປັນລະບຽບການເພີ່ມເຕີມຂອງສົນທິສັນຍາຂອງສະຫະປະຊາຊາດຕ້ານອາດຊະຍາກຳຂ້າມຊາດໃນວັນທີ 26 ກັນຍາ 2003 (ອົງການສະຫະປະຊາຊາດ, 2000c). ອະນຸສັນຍາແມ່ນເຄື່ອງມືຜູກມັດທາງກົດໝາຍ ພ້ອມທັງເປັນການກຳນົດນິຍາມການຕ້ານການຄ້າມະນຸດຮ່ວມກັນ ເປັນຄັ້ງທຳອິດຂອງໂລກ, ເຊິ່ງມີຈຸດປະສົງເພື່ອປ້ອງກັນ ແລະ ສະກັດກັ້ນ ການຄ້າມະນຸດ ພ້ອມທັງເປັນການອຳນວຍຄວາມສະດວກໃນການຮ່ວມມືໃນລະດັບສາກົນ ຕໍ່ກັບບັນຫາດັ່ງກ່າວ. ນອກຈາກນັ້ນ, ອານຸສັນຍາສະບັບນີ້ ກໍ່ເພື່ອແນໃສ່ການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອີງໃສ່ສິດທິອັນເຕັມສ່ວນຂອງເຂົາເຈົ້າທີ່ຄວນໄດ້ຮັບການຊ່ວຍເຫຼືອດັ່ງກ່າວ. ເຊິ່ງ ສ ປປ ລາວ ໄດ້ຖືວ່າເປັນຂໍ້ສະຫງວນ57 ດັ່ງນີ້ ( ອົງການສະຫະປະຊາຊາດ, 2000c):

> [T] ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ບໍ່ໄດ້ຖືວ່າຕົນເອງຜູກມັດໃນມາດຕາ 15 ວັກ 2, ຂອງອະນຸສັນຍາສະບັບນີ້. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຖະແຫຼງການໂດຍໃຫ້ເຫດຜົນ ອີງໃສ່ບັນຫາທີ່ພົວພັນກັບການຕີຄວາມໝາຍ ແລະ ການນຳໃຊ້ສົນທິສັນຍາດັ່ງກ່າວເພື່ອໄປສູ່ການຕັດສິນໂດຍອານຸຍາໂຕຕຸລາການ ( ການຕັດສິນຊີ້ຂາດ) ຫຼື [ສານຍຸຕິທຳສາກົນ], ໃນການແກ້ໄຂບັນດາຂໍ້ຂັດແຍ່ງທີ່ຈຳເປັນຕ່າງໆທີ່ເກີດຂຶ້ນໃນສັນຍາລະຫວ່າງບັນດາລັດທີ່ເປັນປະເທດພາຄີ.

- **ອະນຸສັນຍາຕ້ານການລັກລອບການອົບພະຍົບໂດຍທາງບົກ, ທາງທະເລ ແລະ ທາງອາກາດ.**

ອານຸສັນຍາດັ່ງກ່າວນີ້ ແມ່ນເປັນລະບຽບການເພີ່ມເຕີມ ຂອງສົນທິສັນຍາ ຂອງ ອົງການສະຫະປະຊາຊາດ ວ່າດ້ວຍການຕ້ານອາດຊະຍາກຳຂ້າມຊາດ ( (ອົງການສະຫະປະຊາຊາດ, 2000d). ຈຸດປະສົງເພື່ອເປັນການປ້ອງກັນ ແລະ ສະກັດກັ້ນບໍ່ໃຫ້ມີ ການລັກລອບການອົບພະຍົບ ແລະ ເພື່ອສົ່ງເສີມການຮ່ວມມືລະຫວ່າງບັນດາລັດທີ່ເປັນປະເທດພາຄີ, ພ້ອມກັນນັ້ນກໍ່ເພື່ອປົກປ້ອງສິດຂອງຜູ້ທີ່ລັກລອບອົບພະຍົບ ແລະ ປ້ອງກັນການຂູດຮີດໃນທຸກຮູບແບບ ທີ່ມັກ

[56] An *accession* is the act whereby a State accepts the offer or the opportunity to become a party to a treaty already negotiated and signed by other States. It has the same legal effect as ratification.

[57] A *reservation* is a declaration made by a State by which it purports to exclude or alter the legal effect of certain provisions of the treaty in their application to that State. A *declaration* enables a State to accept a multilateral treaty as a whole by giving it the possibility not to apply certain provisions with which it does not want to comply.

ຈະເກີດຂຶ້ນໃນຂັ້ນຕອນຂອງການລັກລອບຂົນສົ່ງ. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຍອມຮັບອານຸສັນຍາສະບັບນີ້ ໃນວັນທີ 26 ກັນຍາ 2003 ແລະ ໄດ້ສ້າງຂໍ້ສະຫງວນໄວ້ດັ່ງນີ້ (???):

> ອີງໃສ່ ມາດຕາ 20 , ວັກ 3 ຂອງອະນຸສັນຍາຕ້ານການລັກລອບການອົບພະຍົບໂດຍທາງບົກ, ທາງທະເລ ແລະ ທາງອາກາດ ເຊິ່ງເປັນເປັນລະບຽບການເພີ່ມເຕີມ ຂອງສົນທິສັນຍາ ຂອງ ອົງການສະຫະປະຊາຊາດ ວ່າດ້ວຍການຕ້ານອາດຊະຍາກຳຂ້າມຊາດ, ເຊິ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ບໍ່ໄດ້ຖືວ່າຕົນເອງຜູກມັດໃນມາດຕາ 20 ວັກ 2, ຂອງອານຸສັນຍາສະບັບນີ້. ເຊິ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຖະແຫຼງການໂດຍໃຫ້ເຫດຜົນ ອີງໃສ່ບັນຫາທີ່ພົວພັນກັບການຕີຄວາມໝາຍ ແລະ ການນຳໃຊ້ສົນທິສັນຍາດັ່ງກ່າວເພື່ອໄປສູ່ການຕັດສິນໂດຍອານຸຍາໂຕຕຸລາການ ( ການຕັດສິນຊີ້ຂາດ) ຫຼື [ສານຍຸຕິທຳສາກົນ], ໃນການແກ້ໄຂບັນດາຂໍ້ຂັດແຍ່ງທີ່ຈຳເປັນຕ່າງໆທີ່ເກີດຂຶ້ນໃນສັນຍາລະຫວ່າງບັນດາລັດທີ່ເປັນປະເທດພາຄີ.

- **ສົນທິສັນຍາ ວ່າດ້ວຍ ການຕ້ານ ການທໍລະມານ ແລະ ປະຕິບັດ ຫຼື ລົງໂທດອື່ນໆ ທີ່ໂຫດຮ້າຍ ແລະ ບໍ່ມີມະນຸດສະທຳ .**

ສົນທິສັນຍາດັ່ງກ່າວນີ້ ແມ່ນແນໃສ່ເພື່ອປ້ອງກັນການທໍລະມານ ແລະ ການປະຕິບັດ ຫຼື ລົງໂທດອື່ນໆ ທີ່ໂຫດຮ້າຍ ແລະ ບໍ່ມີມະນຸດສະທຳ . ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ລົງນາມອານຸສັນຍາສະບັບນີ້ ໃນວັນທີ 21 ກັນຍາ 2012 ແລະ ໄດ້ສ້າງຂໍ້ສະຫງວນວ່າ: "ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນບໍ່ຮັບຮູ້ອຳນາດໜ້າທີ່ ຂອງຄະນະກຳມະການຕ້ານການທໍລະມານ, ທີ່ໄດ້ລະບຸໄວ້ໃນມາດຕາ 20" (???).

ແລະ ກໍ່ຍັງມີບັນດາກົດໝາຍສາກົນຢູ່ 3 ສະບັບ ທີ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຍັງບໍ່ທັນໃຫ້ສັດຕະຍາບັນເທື່ອ:

- **ສົນທິສັນຍາສາກົນ ວ່າດ້ວຍ ການປົກປ້ອງສິດທິຂອງແຮງງານເຄື່ອນຍ້າຍ ແລະ ສະມາຊິກຄອບຄົວຂອງເຂົາເຈົ້າ**

ສົນທິສັນຍາໄດ້ກຳນົດມາດຕະຖານຂັ້ນຕ່ຳສຳລັບແຮງງານເຄື່ອນຍ້າຍ ແລະ ສະມາຊິກໃນຄອບຄົວຂອງພວກເຂົາ, ໂດຍເອົາໃຈໃສ່ຕໍ່ກັບການລົບລ້າງການຂູດຮີດແຮງງານໃນຂະບວນການອົບພະຍົບ (ສະຫະປະຊາຊາດ, 1990). ເພື່ອແນໃສ່ຮັບປະກັນກຽດສັກສີ ແລະ ຄວາມສະເໝີພາບ ໂດຍພິຈາລະນາບັນດາຫຼັກການທີ່ປະກອບໃນບັນດາມາດຕະການທີ່ເປັນພື້ນຖານ ຂອງອົງການສະຫະປະຊາຊາດກ່ຽວກັບສິດທິມະນຸດ, ໃນນັ້ນມີສົນທິສັນຍາສາກົນ ວ່າດ້ວຍສິດທິຂອງພົນລະເມືອງ ແລະ ສິດທິທາງການເມືອງ,ສົນທິສັນຍາສາກົນ ວ່າດ້ວຍການລົບລ້າງການຈຳແນກເຊື້ອຊາດທຸກຮູບແບບ, ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບຕໍ່ກັບການຈຳແນກຕໍ່ແມ່ຍິງ ແລະ ສົນທິສັນຍາວ່າດ້ວຍ

ສິດທິເດັກ, ພ້ອມທັງຫຼັກການ ແລະ ມາດຕະຖານທີ່ກຳນົດໄວ້ໃນຂອບຂອງອົງການ ILO. ແຕ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຍັງບໍ່ທັນໄດ້ໃຫ້ສັດຕະຍາບັນສົນທິສັນຍາດັ່ງກ່າວເທື່ອ.

❖ **ສົນທິສັນຍາປີ 1951 ວ່າດ້ວຍສະຖານະພາບຂອງຊາວອົບພະຍົບ ພ້ອມດ້ວຍ ອະນຸສັນຍາປີ 1967 ແລະ ສົນທິສັນຍາວ່າດ້ວຍການບໍ່ມີສັນຊາດ 1954**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຍັງບໍ່ທັນໄດ້ໃຫ້ສັດຕະຍາບັນຕໍ່ກັບສົນທິສັນຍາປີ 1951 ວ່າດ້ວຍສະຖານະພາບຂອງຊາວອົບພະຍົບ ແລະ ອະນຸສັນຍາປີ 1967 (UNHCR, 1951 ແລະ 1967). ເຊິ່ງບັນດາກົດໝາຍສາກົນດັ່ງກ່າວນັ້ນໄດ້ກຳນົດຄຳວ່າ ຊາວອົບພະຍົບ ແລະ ກຳນົດສິດທິຂອງຜູ້ອົບພະຍົບ, ພ້ອມກຳນົດທັງພັນທະທາງກົດໝາຍຂອງລັດ ເພື່ອປົກປ້ອງພວກເຂົາເຫຼົ່ານັ້ນ. ເຊິ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຍັງບໍ່ໄດ້ລົງນາມໃນສົນທິສັນຍາ ສະບັບປີ 1954 ວ່າດ້ວຍສະຖານະພາບຂອງຄົນທີ່ບໍ່ມີສັນຊາດ (UNHCR, 1954) ຫຼື ສົນທິສັນຍາວ່າດ້ວຍ ການຫຼຸດຜ່ອນການບໍ່ມີສັນຊາດໃນປີ 1961 (UNHCR, 1961).

❖ **ສົນທິສັນຍາສາກົນເພື່ອການປົກປ້ອງໝົດທຸກຄົນຈາກການຖືກບັງຄັບໃຫ້ຫາຍສາບສູນ**

ສົນທິສັນຍາສາກົນວ່າດ້ວຍການປົກປ້ອງໝົດທຸກຄົນຈາກການຖືກບັງຄັບໃຫ້ຫາຍສາບສູນ ແມ່ນເປັນເຄື່ອງມືທີ່ຜູກມັດທາງກົດໝາຍອັນທຳອິດ ທາງດ້ານສິດທິມະນຸດ ທີ່ກ່ຽວຂ້ອງກັບການຖືກບັງຄັບໃຫ້ຫາຍສາບສູນ ເຊິ່ງມີຈຸດປະສົງເພື່ອປ້ອງກັນ ການຫາຍສາບສູນແບບຖືກບັງຄັບ. ເຊິ່ງການຫາຍສາບສູນແບບຖືກບັງຄັບນັ້ນເປັນຕົ້ນແມ່ນການຖືກຈັບກຸມ, ການຖືກກັກຂັງ, ການລັກພາຕົວ ຫຼື ຮູບແບບອື່ນໆຂອງການຕັດອິດສະລະພາບໂດຍ ຕົວແທນຂອງລັດ ຫຼື ໂດຍບຸກຄົນ ຫຼື ກຸ່ມຄົນທີ່ປະຕິບັດໂດຍມີການອະນຸຍາດ, ມີການສະໜັບສະໜູນ ຫຼື ໄດ້ຮັບການຍິນຍອມຂອງລັດ. ມາຮອດເດືອນເມສາ ປີ 2023, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຍັງບໍ່ທັນໄດ້ໃຫ້ສັດຕະຍາບັນສົນທິສັນຍາດັ່ງກ່າວເທື່ອ.

### *3.3.3.* ການຮ່ວມມືໃນລະດັບສາກົນ

❖ **ການຮ່ວມມືກັບ ອົງການສະຫະປະຊາຊາດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ເຂົ້າເປັນສະມາຊິກອົງການສະຫະປະຊາຊາດ ໃນວັນທີ 14 ທັນວາ 1955, ເຊິ່ງມີທັງໝົດ 23 ອົງການຈັດຕັ້ງທີ່ເປັນຕົວແທນຈາກອົງການສະຫະປະຊາຊາດປະຈຳຢູ່ພາຍໃນປະເທດ ພ້ອມກັນນັ້ນກໍ່ຍັງປະກອບດ້ວຍ 16 ໜ່ວຍງານຂອງອົງການສະຫະປະຊາຊາດປະຈຳ ສ ປປ ລາວ. ເຊິ່ງທັງໝົດນັ້ນແມ່ນບັນດາໜ່ວຍງານ ທີ່ຕັ້ງຢູ່ພາຍໃນປະເທດ ຍົກເວັ້ນແຕ່ອົງການ ILO, ອົງການພັດທະນາອຸດສາຫະກຳຂອງສະຫະປະຊາຊາດ ແລະ ອົງການ IOM. ທີມງານຂອງສະຫະປະຊາຊາດໃນປະເທດເຮັດວຽກຢ່າງໃກ້ຊິດກັບທະນາຄານໂລກ , ຄະນະກຳມະການເສດຖະກິດ ແລະ ສັງຄົມຂອງສະຫະປະຊາຊາດສຳລັບອາຊີ ແລະ ປາຊີຟິກ, ອົງການ ADB ແລະ

ອົງການ IMF. ກອບການຮ່ວມມືການພັດທະນາແບບຍືນຍົງຂອງສະຫະປະຊາຊາດ, ແມ່ນສອດຄ່ອງກັບແຜນພັດທະນາ ເສດຖະກິດ-ສັງຄົມ ຄັ້ງທີ 9, ປີ 2021-2025 , ເປັນຕົວແທນການປະກອບສ່ວນເຂົ້າໃນການພັດທະນາແບບຍືນຍົງຈາກ 25 ອົງກອນ, ແລະ ມາຈາກກອງທຶນ ແລະ ມາຈາກໂຄງການຂອງລະບົບການພັດທະນາ ຂອງອົງການສະຫະປະຊາຊາດ.

- **ຂໍ້ຕົກລົງທີ່ຮັດກຸມໃນທົ່ວໂລກ ສໍາລັບຄວາມປອດໄພ, ຄວາມເປັນລະບຽບ ແລະ ການເຄື່ອນຍ້າຍຖິ່ນຖານຕາມສະພາບປົກກະຕິ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ສະແດງຄວາມຍິນດີຕໍ່ການຮັບຮອງເອົາຂໍ້ຕົກລົງທົ່ວໂລກ ກ່ຽວກັບການເຄື່ອນຍ້າຍຖິ່ນຖານ (ສະຫະປະຊາຊາດ, 2018). ເຊິ່ງຂໍ້ຕົກລົງທີ່ຮັດກຸມໃນທົ່ວໂລກສໍາລັບການຍ້າຍຖິ່ນຖານນັ້ນ ແມ່ນເຫັນວ່າຍັງບໍ່ທັນມີການຜູກມັດທາງກົດໝາຍເທື່ອ, ເຊິ່ງເປັນກອບການຮ່ວມມື ແລະ ແຜນວຽກໃນລະດັບສາກົນ ທີ່ມີຈຸດປະສົງສະເພາະແນໃສ່ເພື່ອຊຸກຍູ້ການຮ່ວມມືທາງດ້ານການເຄື່ອນຍ້າຍຖິ່ນຖານໃນລະດັບສາກົນ ແລະ ຫຼຸດຜ່ອນບັນດາປັດໄຈ ແລະ ປະກົດການທາງລົບທີ່ເກີດຈາກຜົນກະທົບທາງດ້ານເສດຖະກິດ ຫຼື ການເມືອງ ທີ່ເປັນສິ່ງກີດຂວາງປະຊາຊົນ ໃນການສ້າງ ແລະ ຮັກສາຊີວິດການເປັນຢູ່ຂອງເຂົາເຈົ້າຢ່າງຍືນຍົງຢູ່ພາຍໃນປະເທດເດີມຂອງຕົນ.

- **ກອບແຜນການດໍາເນີນງານຂອງອົງການສະຫະປະຊາຊາດ ວ່າດ້ວຍສົນທິສັນຍາ ກ່ຽວກັບການປ່ຽນແປງສະພາບດິນຟ້າອາກາດ**

ສ ປປ ລາວ ໄດ້ໃຫ້ສັດຕະຍາບັນສັນຍາກຸງປາຣີ ໃນວັນທີ 7 ກັນຍາ 2016 ແລະ ໃຫ້ສັດຕະຍາບັນໃນອະນຸສັນຍາກຽວໂຕໃນວັນທີ 6 ກຸມພາ 2003 ເປັນປະເທດພາຄີທີ່ກໍາລັງພັດທະນາ. ກອບແຜນການດໍາເນີນງານຂອງອົງການສະຫະປະຊາຊາດ ວ່າດ້ວຍສົນທິສັນຍາ ກ່ຽວກັບການປ່ຽນແປງສະພາບດິນຟ້າອາກາດ ນັ້ນແມ່ນໄດ້ກໍານົດກົດໝາຍ ແລະ ຫຼັກການພື້ນຖານ ຂອງການຮ່ວມມືສາກົນ ທາງດ້ານການປ່ຽນແປງຂອງດິນຟ້າອາກາດ ເພື່ອແນໃສ່ຮັກສາຄວາມສະຖຽນຂອງກາສເຮືອນແກ້ວ ເພື່ອໃຫ້ຢູ່ໃນລະດັບຄົງທີ່ ໃນຊັ້ນບັນຍາກາດ.

## ພາກທີ 4: ສິ່ງທີ່ຄົ້ນພົບ, ຜົນກະທົບທາງດ້ານນະໂຍບາຍ ແລະ ຄຳແນະນຳ

### 4.1. ບັນຫາຫຼັກທີ່ຄົ້ນພົບກ່ຽວກັບທ່າອ່ຽງຂອງການເຄື່ອນຍ້າຍຖິ່ນຖານໃນປັດຈຸບັນ

ການເຮັດບົດລາຍງານກ່ຽວກັບການເຄື່ອນຍ້າຍຖິ່ນຖານ ແມ່ນເປັນໂອກາດທີ່ດີຂອງ ສ ປປ ລາວ ໃນການສຶກສາຄົ້ນຄ້ວາບັນດາຮູບແບບ ແລະ ທ່າອ່ຽງຂອງສະພາບການເຄື່ອນຍ້າຍຖິ່ນຖານໃນປັດຈຸບັນ. ໃນຖານະທີ່ເປັນປະເທດທີ່ບໍ່ມີຊາຍແດນຕິດກັບທະເລ ເຊິ່ງມີຊາຍແດນຕິດກັບກຳປູເຈຍ, ຈີນ, ມຽນມາ, ໄທ ແລະ ຫວຽດນາມ, ສ ປປ ລາວ ເປັນປະເທດທີ່ມີຈຳນວນຕົວເລກຂອງຜູ້ທີ່ຍ້າຍຖິ່ນຖານອອກນອກປະເທດ ຫລາຍກວ່າຈຳນວນຕົວເລກຜູ້ທີ່ຍ້າຍເຂົ້າມາພາຍໃນປະເທດ. ເຊິ່ງຕັ້ງແຕ່ປີ 1975 ຈຳນວນຕົວເລກຂອງຜູ້ທີ່ເຄື່ອນຍ້າຍຖິ່ນຖານອອກນອກປະເທດນັ້ນແມ່ນມີຈຳນວນຕົວເລກສູງກວ່າ ຈຳນວນຕົວເລກຂອງຜູ້ທີ່ຍ້າຍຖິ່ນຖານເຂົ້າມາໃນປະເທດ ແລະ ເທົ່າກັບ -1.4% ໃນໄລຍະປີ 2015-2020.

ການເຄື່ອນຍ້າຍຖິ່ນຖານສຳລັບປະຊາກອນລາວຖືໄດ້ວ່າເປັນໂອກາດໃນການຍົກລະດັບ ແລະ ປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນກວ່າເກົ່າ. ຍ້ອນການຂາດເຂີນວຽກເຮັດງານທຳ ແລະ ໂອກາດດ້ານການສຶກສາພາຍໃນປະເທດ, ປະຊາຊົນລາວບາງຈຳນວນມັກຈະມີການເຄື່ອນຍ້າຍຖິ່ນຖານເພື່ອໄປເຮັດວຽກຢູ່ຕ່າງປະເທດ ແລະ ບາງຈຳນວນກໍ່ມີການເຄື່ອນຍ້າຍຖິ່ນຖານຈາກຊົນນະບົດ ຫາ ຕົວເມືອງ.

ການອົບພະຍົບຂ້າມຊາຍແດນສ່ວນໃຫຍ່ແມ່ນເກີດຂຶ້ນຢູ່ໃນເຂດພາກພື້ນ. ເຊິ່ງແລວທາງຫຼັກຂອງການເຄື່ອນຍ້າຍຖິ່ນຖານແມ່ນຈາກ ສ ປປ ລາວ ໄປຫາປະເທດໄທ. ການເຄື່ອນຍ້າຍສ່ວນໃຫຍ່ແມ່ນກ່ຽວຂ້ອງກັບແຮງງານ ແລະ ມີຮູບແບບທີ່ແຕກຕ່າງກັນ, ຈາກການເຄື່ອນຍ້າຍຖິ່ນຖານລະດູການໄປເຖິງແບບຖາວອນ. ມາຮອດປີ 2020 ມີຄົນລາວອາໄສຢູ່ຕ່າງປະເທດປະມານ 1.296 ລ້ານຄົນ (56% ເປັນເພດຍິງ).

ການເຄື່ອນຍ້າຍຖິ່ນຖານເຂົ້າເມືອງແມ່ນມີຈຳນວນຕົວເລກທີ່ໜ້ອຍ ແລະ ສ່ວນຫຼາຍແມ່ນຍ້ອນການຈ້າງງານ ແລະ ໂອກາດທາງທຸລະກິດ, ໂດຍສະເພາະໃນເຂດເສດຖະກິດພິເສດ. ມາຮອດປີ 2020, ມີຜູ້ເຄື່ອນຍ້າຍຖິ່ນຖານ 48,731 ຄົນທີ່ອາໄສຢູ່ໃນ ສ ປປ ລາວ. ແລະ ມີຫຼາຍກວ່າ 99 ເປີເຊັນ ແມ່ນມາຈາກປະເທດເພື່ອນບ້ານ (ຈີນ, ມຽນມາ ແລະ ຫວຽດນາມ).

ຮູບແບບ ແລະ ທ່າອ່ຽງຂອງການເຄື່ອນຍ້າຍຖິ່ນຖານພາຍໃນ ແມ່ນຕິດພັນກັບໂອກາດທາງດ້ານການສຶກສາ ແລະ ການຈ້າງງານ ແລະ ສ່ວນຫຼາຍແມ່ນຊົນນະບົດ ຫາ ຕົວເມືອງ. ຂໍ້ມູນຈາກ ການສຳຫຼວດປະຊາກອນ ແລະ ທີ່ຢູ່ອາໄສ (PHC) ໄດ້ຈຳແນກໃຫ້ເຫັນຄວາມແຕກຕ່າງລະຫວ່າງປະເພດຂອງການເຄື່ອນຍ້າຍຖິ່ນຖານທີ່ເກີດຂຶ້ນພາຍໃນ, ເຊິ່ງເປັນການເຄື່ອນຍ້າຍຖິ່ນຖານຕະຫຼອດຊີວິດ, ການເຄື່ອນຍ້າຍຖິ່ນຖານໃນປະຈຸບັນ ແລະ ການເຄື່ອນຍ້າຍຖິ່ນ

ຖານກັບຄືນ. ສຳລັບບັນດາສິ່ງທ້າທາຍໃນການຕິດຕາມການເຄື່ອນຍ້າຍຖິ່ນພາຍໃນ ແມ່ນການມີຂໍ້ມູນທີ່ບໍ່ຄົບຖ້ວນ ແຕ່ກໍ່ຍັງສາມາດສະໜອງຂໍ້ມູນໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງໄດ້

ຂໍ້ມູນກ່ຽວກັບການຍ້າຍຖິ່ນຖານກັບຄືນ ແມ່ນເລີ່ມມີຄວາມໜ້າສົນໃຈສຳລັບຜູ້ທີ່ມີອຳນາດໃນການຕັດສິນໃຈ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ນັບຕັ້ງແຕ່ໄລຍະການແຜ່ລະບາດຂອງພະຍາດໂຄວິດ-19. ແຕ່ເຖິງຢ່າງໃດກໍຕາມ, ທ່າມກາງການແຜ່ລະບາດຂອງພະຍາດດັ່ງກ່າວ, ການເກັບກຳຂໍ້ມູນຍັງຄົງກະແຈກກະຈາຍ, ເຊິ່ງເຮັດໃຫ້ຄ່າສະເລ່ຍຂອງຈຳນວນຜູ້ຖືກສົ່ງກັບຄືນມາປະເທດລາວມີຄວາມສ່ຽງ.

ຂໍ້ມູນກ່ຽວກັບສະພາບດິນຟ້າອາກາດ ແລະ ທ່າອ່ຽງຂອງການເຄື່ອນຍ້າຍຖິ່ນຖານໂດຍບໍ່ສະໝັກໃຈ ແມ່ນເຫັນວ່າຍັງບໍ່ທັນມີການເກັບກຳຂໍ້ມູນດັ່ງກ່າວພາຍໃນປະເທດ.

## 4.2. ຄຳແນະນຳກ່ຽວກັບ ວິທີການປັບປຸງ ສະຖິຕິຂອງການເຄື່ອນຍ້າຍຖິ່ນຖານ

### *4.2.1.* ປັບປຸງ ການຄຸ້ມຄອງຂໍ້ມູນຂອງການເຄື່ອນຍ້າຍຖິ່ນຖານ

- **ບັນດາຄຳແນະນຳ ໄລຍະສັ້ນ ( ພາຍໃນ 1 ປີ)**

**ພັດທະນາຄວາມຮູ້ຮອບດ້ານ ແລະ ຄວາມຮູ້ທົ່ວໄປກ່ຽວກັບການຄຸ້ມຄອງຂໍ້ມູນກ່ຽວກັບການເຄື່ອນຍ້າຍຖິ່ນຖານ:**

ສືບຕໍ່ຮັກສາການຝຶກອົບຮົມເພື່ອພັດທະນາຂີດຄວາມສາມາດ ແລະ ສືບຕໍ່ການສຳມະນາກ່ຽວກັບ ພັດທະນາຄວາມຮູ້ຮອບດ້ານ ແລະ ຄວາມຮູ້ທົ່ວໄປກ່ຽວກັບການຄຸ້ມຄອງ (ຂໍ້ມູນ) ກ່ຽວກັບການເຄື່ອນຍ້າຍຖິ່ນຖານ, ການເກັບກຳຂໍ້ມູນ, ການຄຸ້ມຄອງ ພ້ອມທັງການວິເຄາະຂໍ້ມູນກ່ຽວກັບການເຄື່ອນຍ້າຍຖິ່ນຖານຍັງເຫັນວ່າມີຄວາມຈຳເປັນຕ້ອງໄດ້ເຮັດ. ເນື່ອງຈາກເຫັນວ່າມີບາງກົມກອງທີ່ມີອັດຕາການປ່ຽນແປງສູງ, ພ້ອມນັ້ນ, ກິດຈະກຳການຝຶກອົບຮົມໃນການບັນທຶກຂໍ້ມູນ ໃນຮູບແບບອອນລາຍ ແລະ ຮູບແບບບໍ່ອອນລາຍ ເຫັນວ່າຄວນຈະເປັນກິດຈະກຳທີ່ເປັນບຸລິມະສິດ.

**ສ້າງເຄືອຂ່າຍ ທີ່ເປັນສະຖາບັນຫຼັກໃນການຮັບຜິດຊອບຂໍ້ມູນທີ່ກ່ຽວຂ້ອງກັບການເຄື່ອນຍ້າຍຖິ່ນຖານ:**

ຄະນະເຕັກນິກວິຊາການ ITWG ແມ່ນສາມາດປະຕິບັດໜ້າທີ່ໄດ້ ພາຍຫຼັງທີ່ໂຄງການ ການເຄື່ອນຍ້າຍຖິ່ນຖານ ໄດ້ຮັບການອະນຸມັດ ແລະ ໄດ້ຮັບການຮ່ວມມືຈາກ ສູນສະຖິຕິແຫ່ງຊາດ. ຈຸດປະສົງຫຼັກຂອງຄະນະເຕັກນິກວິຊາການ ITWG ໃນຊ່ວງໄລຍະຂອງໂຄງການນັ້ນ ແມ່ນເພື່ອເພີ່ມທະວີການປະສານງານ ແລະ ສະໜອງຂໍ້ມູນດ້ານວິຊາການເຂົ້າໃນການພັດທະນາຂໍ້ມູນກ່ຽວກັບການເຄື່ອນຍ້າຍຖິ່ນຖານ ແລະ ເພື່ອເປັນເຈົ້າການ ແລະ ການມີສ່ວນຮ່ວມຈາກບັນດາພາກສ່ວນທີ່ກ່ຽວຂ້ອງ. ພາຍຫຼັງສິ້ນສຸດໂຄງການ, ຄະນະເຕັກນິກວິຊາການ ITWG ແມ່ນຖືໄດ້ວ່າ ສາມາດເຂົ້າຮ່ວມໃນການພັດທະນາ ແລະ ໃຫ້ຄຳປຶກສາຫາລືກ່ຽວກັບນະໂຍບາຍທາງດ້ານບັນຫາຂອງການເຄື່ອນຍ້າຍຖິ່ນຖານ, ໂດຍສະເພາະບັນຫາທີ່ໄດ້ຄົ້ນພົບ ແລະ ຄຳແນະນຳ ຈາກໂຄງການ.

**ສ້າງຕັ້ງກົນໄກການທົບທວນລະບົບຂໍ້ມູນແຫ່ງຊາດ ກ່ຽວກັບການເຄື່ອນຍ້າຍຖິ່ນຖານ:** ການທົບທວນຄືນນັ້ນ ແມ່ນປະກອບດ້ວຍການກໍານົດແຫຼ່ງຂໍ້ມູນລະດັບຊາດ ເຊິ່ງເປັນຂໍ້ມູນກ່ຽວກັບການເຄື່ອນຍ້າຍຖິ່ນຖານທີ່ມີຢູ່ແລ້ວ ເພື່ອນໍາມາເປັນຂໍ້ມູນພື້ນຖານໃນການປະເມີນຊ່ອງຫວ່າງຂອງຂໍ້ມູນທີ່ເປັນລັກສະເພາະໃນລະດັບປະເທດ ແລະ ໃນລະດັບພາກພື້ນ ຕາມລໍາດັບ.ສູນຂໍ້ມູນໃນລະດັບພາກພື້ນ ທີ່ຕັ້ງຢູ່ຫ້ອງການຂອງພາກພື້ນເອເຊຍ ແລະ ປາຊີຟິກ ແມ່ນສາມາດໃຫ້ການສະໜັບສະໜູນໃນການດໍາເນີນງານ.

❖ **ຄໍາແນະນໍາ ໄລຍະກາງ (ສອງ ຫາ ສາມປີ)**

**ພັດທະນາຍຸດທະສາດທາງດ້ານຂໍ້ມູນທີ່ກ່ຽວຂ້ອງກັບການເຄື່ອນຍ້າຍຖິ່ນຖານ:** ການພັດທະນາຍຸດທະສາດຂອງການເຄື່ອນຍ້າຍຖິ່ນຖານໂດຍລັດຖະບານ ສາມາດຕັດສິນໃຈໂດຍອີງໃສ່ຂໍ້ມູນໃນພາກສະໜາມຂອງການເຄື່ອນຍ້າຍຖິ່ນຖານ. ເຊິ່ງສາມາດເຊື່ອມສານໃສ່ແຜນພັດທະນາເສດຖະກິດ-ສັງຄົມ ແລະ ກວມເອົາວິໄສທັດໃນໄລຍະເວລາ 5-10 ປີ ສໍາລັບວິທີການທີ່ລັດຖະບານຈະເລັ່ງເອົາຂໍ້ມູນທີ່ຕິດພັນກັບການເຄື່ອນຍ້າຍຖິ່ນຖານມານໍາໃຊ້ ເພື່ອໃຫ້ບັນລຸຕາມເປົ້າໝາຍທີ່ຕັ້ງໄວ້. ພ້ອມນັ້ນ ຍຸດທະສາດດັ່ງກ່າວຍັງສາມາດໃຊ້ເຂົ້າໃນການພັດທະນາຂໍ້ມູນທີ່ແຍກອອກໂດຍສະຖານະພາບຂອງການຍົກຍ້າຍຖິ່ນຖານໂດຍອີງໃສ່ SDGs ແລະ ວາລະການພັດທະນາເພື່ອຄວາມຍືນຍົງປີ 2030 (ສະຫະປະຊາຊາດ, 2015). ໂດຍການວາງກອບການປະຕິບັດຂອງລັດຖະບານທາງດ້ານຂໍ້ມູນ, ຍິ່ງໄປກວ່ານັ້ນ ຍຸດທະສາດດັ່ງກ່າວນັ້ນຍັງແນໃສ່ເພື່ອຮັບປະກັນວ່າພາກສ່ວນກ່ຽວຂ້ອງສາມາດແກ້ໄຂທຸກບັນຫາຂອງການເຄື່ອນຍ້າຍຖິ່ນຖານ ແລະ ບັນຫາກ່ຽວກັບຜູ້ທີ່ເຄື່ອນຍ້າຍຖິ່ນຖານ ແລະ ເພື່ອຮັບປະກັນການຕັດສິນໃຈໂດຍອີງໃສ່ຂໍ້ມູນຕາມສະພາບຄວາມເປັນຈິງ.

**ຊຸກຍູ້ການຈັດຕັ້ງປະຕິບັດຂອງການລິເລີ່ມທີ່ກ່ຽວຂ້ອງກັບວຽກງານການເຊື່ອມໂຍງຂໍ້ມູນການເຄື່ອນຍ້າຍຖິ່ນຖານ:** ການພັດທະນາຖານຂໍ້ມູນສະຖິຕິແບບປະສົມປະສານທີ່ກ່ຽວຂ້ອງກັບການເຄື່ອນຍ້າຍຖິ່ນຖານ, ເຊັ່ນ: ປະຕູຂໍ້ມູນການເຄື່ອນຍ້າຍຖິ່ນຖານແບບປະສົມປະສານແຫ່ງຊາດພາຍໃຕ້ການນໍາພາຂອງ ສູນສະຖິຕິແຫ່ງຊາດ, ຄວນໄດ້ຮັບການສົ່ງເສີມ ພ້ອມນັ້ນ ກໍ່ຄວນມີການພິຈາລະນາຍ້າຍຂໍ້ມູນໄປໄວ້ໃນ ຄັງເກັບຂໍ້ມູນໃຫຍ່ທີ່ເປັນລະບົບອອນລາຍ (cloud).

*4.2.2.*ປັບປຸງການເກັບກໍາຂໍ້ມູນການເຄື່ອນຍ້າຍຖິ່ນຖານ, ການຄຸ້ມຄອງ ແລະ ການດໍາເນີນການ

❖ **ຄໍາແນະນໍາໄລຍະສັ້ນ (ພາຍໃນໜຶ່ງປີ)**

**ກໍານົດວິທີການເກັບກໍາຂໍ້ມູນ ແລະ ຄໍານິຍາມ ໃຫ້ເປັນມາດຕະຖານ:** ວິທີການເກັບກໍາຂໍ້ມູນເຊັ່ນ: ແບບສອບຖາມ, ການສໍາພາດແບບສົນທະນາເປັນກຸ່ມ (FGDs) ແລະ ການສໍາພາດຜູ້ໃຫ້ຂໍ້ມູນທີ່ສໍາຄັນ(KIIs) ຄວນເປັນມາດຕະຖານ, ເຊັ່ນດຽວກັນກັບ ຄໍານິຍາມ ທີ່ໃຊ້ເພື່ອລົບລ້າງຄວາມບໍ່ສອດຄ່ອງຕາມໄລຍະເວລາຍາວນານທີ່ຜ່ານ

ມາ. ຄວນມີການກໍານົດມາດຕະຖານຮູບແບບຂອງຂໍ້ມູນ. ສາມາດປ່ຽນຮູບແບບຂໍ້ມູນໃຫ້ເປັນຮູບແບບທົ່ວໄປ ເພື່ອໃຫ້ຜູ້ໃຊ້ສາມາດນໍາເອົາໄປປະເມີນ ແລະ ວິເຄາະໄດ້.

**ສະໜອງຂໍ້ມູນ Metadata (ຂໍ້ມູນທີ່ໃຊ້ອະທິບາຍລາຍລະອຽດຂອງຂໍ້ມູນ):** ລາຍລະອຽດຂອງຂໍ້ມູນທີ່ໄດ້ເກັບກໍາ, ຫຼື ຂໍ້ມູນທີ່ເຮັດອອກມາບໍ່ສອດຄ່ອງຕາມລະບົບທີ່ ຂໍ້ມູນ metadata ກໍານົດໄວ້. ການຄຸ້ມຄອງ ຂໍ້ມູນ metadata ແມ່ນສາມາດຮຽນຮູ້ກ່ຽວກັບຂໍ້ມູນທີ່ມີຢູ່ ແລະ ທ່າແຮງທີ່ມີຄຸນຄ່າ ຂອງບັນດາຂໍ້ມມູນເຫຼົ່ານັ້ນ. ຂັ້ນຕອນທໍາອິດແມ່ນພັດທະນາມາດຕະຖານ ທີ່ນໍາໃຊ້ເພື່ອອະທິບາຍບັນດາຊຸດຂໍ້ມູນ ທີ່ໄດ້ເຜີຍແຜ່ຜ່ານເວັບໄຊ ຂອງສູນສະຖິຕິແຫ່ງຊາດ, ທັງໃນຮູບແບບທີ່ເປັນເນື້ອຫາສາລະ ແລະ ຄຸນນະພາບ. ຂໍ້ມູນ Metadata ຄວນປະກອບມີກອບໂຄງສ້າງກ່ຽວກັບຫົວຂໍ້, ຄໍາອະທິບາຍສັ້ນ, ຊື່ຕົວຫຍໍ້, ຮູບແບບຂໍ້ມູນ, ຂອບເຂດເວລາ ແລະ ກອບການອ້າງອີງທີ່ອະທິບາຍແນວຄວາມຄິດທາງສະຖິຕິ ແລະ ວິທີການທີ່ໃຊ້ສໍາລັບການເກັບກໍາ ແລະ ການກໍານົດຂໍ້ມູນ ພ້ອມທັງສະໜອງຂໍ້ມູນທີ່ ກ່ຽວກັບຄຸນນະພາບຂອງຂໍ້ມູນ. ຂໍ້ສໍາລັບຂັ້ນຕອນທີ2 ແມ່ນສາມາດພັດທະນາແຜນງານທາງດ້ານວິຊາການໃນການກັບຮັກສາ ແລະ ເຜີຍແຜ່ ຂໍ້ມູນ metadata.

- ❖ **ຄໍາແນະນໍາໄລຍະກາງ (ສອງຫາສາມປີ)**

**ພັດທະນາ ການເກັບກໍາ ແລະ ແບ່ງປັນຂໍ້ມູນກ່ຽວກັບ ການເຄື່ອນຍ້າຍຖິ່ນຖານ ໃນຮູບແບບອອນລາຍ.**

ການຄຸ້ມຄອງຂໍ້ມູນ ແລະ ບັນດາຕົວຊີ້ວັດ ອອກມາໃຫ້ເຫັນປະຈັກຕາເປັນຮູບປະທໍານັ້ນ ແມ່ນສາມາດຄຸ້ມຄອງໄດ້ໂດຍການສະຫຼຸບ-ສັງລວມ ຂໍ້ມູນທີ່ສໍາຄັນໄວ້ໃນໜ້າດຽວ (dashboards) ສາມາດຈັດການໄດ້ ແລະ ຄຸ້ມຄອງໄດ້ໂດຍ ຮູບພາບທີ່ສະແດງເຖິງຂໍ້ມູນ ( infographics) ທີ່ໄດ້ລວມຢູ່ໃນເວັບໄຊຂອງ ສູນສະຖິຕິແຫ່ງຊາດ. ການສະແດງຂໍ້ມູນທີ່ເປັນລັກສະນະຮູບປະທໍານີ້ ແມ່ນຊ່ວຍໃຫ້ຜູ້ສ້າງນະໂຍບາຍສາມາດທົບທວນຄືນບັນດາຂໍ້ມູນທີ່ສາມາດເບິ່ງເຫັນໄດ້, ທີ່ສະແດງໃນຕາຕະລາງ ແລະ ຕາຕະລາງສະແດງຜົນຂອງການປະເມີນ ທີ່ສັງລວມຢູ່ໃນໜ້າດຽວ.

**ສືບຕໍ່ປະຕິບັດຕາມຄໍາແນະນໍາຂອງສາກົນ, ໂດຍສະເພາະສສໍາລັບ ຂໍ້ມູນທາງດ້ານການບໍລິຫານ ແລະ ນໍາເອົາຂໍ້ມູນການເຄື່ອນຍ້າຍຖິ່ນຖານ ເຂົ້າໄປເປັນຂໍ້ມູນທີ່ເປັນທາງການ:**

ໄດ້ມີຄວາມພະຍາຍາມຢ່າງໜັກໜ່ວງໃນການດໍາເນີນງານເພື່ອປະຕິບັດຕາມຄໍາແນະນໍາຂອງສາກົນ, ໂດຍສະເພາະສໍາລັບ ການສໍາຫຼວດປະຊາກອນ ແລະ ທີ່ຢູ່ອາໄສ (PHC) ແລະ ການສໍາຫຼວດຕົວຢ່າງທາງດ້ານກໍາລັງແຮງງານ (LFS). ສໍາລັບບັນດາຄໍາຖາມທີ່ຕິດພັນກັບການເຄື່ອນຍ້າຍຖິ່ນຖານ ທີ່ກ່ຽວກັບໄລຍະເວລາຂອງທີ່ຢູ່ອາໃສ, ສະຖານທີ່ ທີ່ເຄີຍອາໄສໃນໄລຍະຜ່ານມາ, ປີທີ່ມາຮອດປະເທດໃນຄັ້ງທໍາອິດ, ນອກຈາກນັ້ນ ກໍ່ມີຄໍາຖາມ ເຊັ່ນວ່າປະເທດທີ່ພໍ່-ແມ່ເກີດ ແລະ ສະຖານະພາບທາງກົດໝາຍແມ່ນສາມາດລວມເຂົ້າໃນ ຄໍາຖາມຂອງການສໍາຫຼວດ

ປະຊາກອນ ແລະ ທີ່ຢູ່ອາໄສ (PHC) ໄດ້. ນອກຈາກນັ້ນກໍ່ຄວນມີການເອົາໃຈໃສ່ ໃນການນຳເອົາຄຳແນະນຳຂອງສາກົນ ເຊື່ອມສານເຂົ້າໃສ່ໃນຂໍ້ມູນການບໍລິຫານເຊັ່ນດຽວກັນ.

**ເພີ່ມທະວີການເກັບກຳຂໍ້ມູນການເຄື່ອນຍ້າຍຖິ່ນຖານ ແລະ ໃຫ້ມີຂໍ້ມູນຢູ່ຕະຫຼອດເວລາ ແລະ ແຍກປະເພດ ສະຖານະພາບຂອງການເຄື່ອນຍ້າຍຖິ່ນຖານ:** ສ່ວນໃຫຍ່ແລ້ວແມ່ນໄດ້ເອົາໃຈໃສ່ໃນການເຄື່ອນຍ້າຍແຮງງານໄປປະເທດໄທ ເຊິ່ງເຮັດໃຫ້ຂາດຂໍ້ມູນທີ່ກ່ຽວຂ້ອງ ແລະ/ຫຼື ສະຖິຕິໃນຂົງເຂດອື່ນໆ ເຊັ່ນ: ການເຄື່ອນຍ້າຍແຮງງານ, ການເຄື່ອນຍ້າຍຖິ່ນຖານຍ້ອນບັນຫາທາງດ້ານສິ່ງແວດລ້ອມ, ການເຄື່ອນຍ້າຍຖິ່ນຖານທີ່ບໍ່ສະໝໍ່າສະເໝີ, ການເຊື່ອມໂຍງຂອງຜູ້ທີ່ເຄື່ອນຍ້າຍ. , ການບັງຄັບໃຫ້ການເຄື່ອນຍ້າຍຖິ່ນຖານ ແລະ ການຍົກຍ້າຍທີ່ມີຜົນກະທົບຕໍ່ສຸຂະພາບ ຫຼື ຕະຫຼາດແຮງງານ. ຂໍ້ມູນທີ່ມີຢູ່ບໍ່ໄດ້ຖືກແບ່ງແຍກຢ່າງເປັນລະບົບໂດຍອີງໃສ່ສະຖານະພາບຂອງການຍ້າຍຖິ່ນຖານ, ແລະ ຂໍ້ມູນທີ່ກ່ຽວຂ້ອງກັບການເຄື່ອນຍ້າຍຖິ່ນຖານ ແມ່ນຫາຍາກ ແລະ ສ່ວນໃຫຍ່ມີຢູ່ນຳຫຼາຍໆພາກສ່ວນ.

ດັ່ງນັ້ນ, ມີຄວາມຈຳເປັນໃນການສ້າງຂໍ້ມູນທີ່ສາມາດແບ່ງອອກໂດຍສະຖານະພາບການເຄື່ອນຍ້າຍຖິ່ນຖານ ແລະ ເຮັດໜ້າທີ່ເປັນຕົວຊີ້ວັດ ຂອງເປົ້າໝາຍການພັດທະນາ ເພື່ອຄວາມຍືນຍົງ (SDG). ພ້ອມນັ້ນ ຍັງມີຄວາມຕ້ອງການເກັບກຳຂໍ້ມູນທີ່ມີຄຸນນະພາບ ໂດຍນຳໃຊ້ເຄື່ອງມືເກັບກຳຂໍ້ມູນເຊັ່ນການສຳພາດຜູ້ໃຫ້ຂໍ້ມູນທີ່ສຳຄັນ (KIIs), ການສຳພາດແບບລົງເລິກ ແລະ ການສຳພາດແບບສົນທະນາເປັນກຸ່ມ(FGDs) ເຊັ່ນວ່າໜ່ວຍສຳຫຼວດຂໍ້ມູນ (panel data) ນຳໃຊ້ເຄື່ອງມືເພື່ອສົມທຽບໄລຍະເວລາ ແລະ ເພື່ອຕິດຕາມຜູ້ຕອບຄຳຖາມ ຫຼື ຜູ້ເຂົ້າຮ່ວມ.

**ສົ່ງເສີມການນຳໃຊ້ ແລະ ການຝຶກອົບຮົມເປັນປົກກະຕິຂອງນັກວິຊາການວຽກງານສະຖິຕິ ແລະ ພະນັກງານໃນທຸກລະດັບ:** ນັກວິຊາການວຽກງານສະຖິຕິ ຊ່ວຍເພີ່ມປະສິດທິພາບການເກັບກຳຂໍ້ມູນ, ການຄຸ້ມຄອງຂໍ້ມູນ, ການໂອນ ແລະ ການວິເຄາະຂໍ້ມູນ. ພວກເຂົາຍັງສາມາດເຂົ້າໃຈຊຸດຂໍ້ມູນ, ກຳນົດຄວາມບໍ່ສອດຄ່ອງ ແລະ ບັນຫາກ່ຽວກັບວິທີການຕ່າງໆ ທີ່ກ່ຽວຂ້ອງໂດຍສະເພາະກັບຂໍ້ມູນດ້ານການບໍລິຫານ. ການຝຶກອົບຮົມໂດຍນຳໃຊ້ຄູ່ມືເຂົ້າຊ່ວຍເຫຼືອນັ້ນ ສາມາດຜັນຂະຫຍາຍຄວາມຮູ້ໃຫ້ແກ່ພະນັກງານທຸກຄົນທີ່ເຮັດວຽກກ່ຽວກັບຂໍ້ມູນໂດຍສະເພາະໃນລະດັບທ້ອງຖິ່ນ.

❖ **ຄຳແນະນຳ ໃນໄລຍະຍາວ (ສີ່ປີ ແລະ ຫຼາຍກວ່າ)**

**ສົ່ງເສີມການນຳໃຊ້ຖານຂໍ້ມູນພິເສດ ເພື່ອທົດແທນການນຳໃຊ້ຕາຕະລາງ Excel:** ການນຳໃຊ້ Excel ສຳລັບການຄຸ້ມຄອງຂໍ້ມູນມີບາງຂໍ້ບົກຜ່ອງທີ່ສຳຄັນ. ຍົກຕົວຢ່າງ, Excel ແມ່ນຂຶ້ນກັບຜູ້ກອກຂໍ້ມູນທີ່ສາມາດຜິດພາດໄດ້, ເພື່ອປ້ອງກັນການຕັດສິນໃຈໄວ, ມີການຂະຫຍາຍທີ່ບໍ່ພຽງພໍ ແລະ ຂາດຄຸນນະສົມບັດໃນການຕັ້ງລະຫັດ ເພື່ອປົກປ້ອງຂໍ້ມູນທີ່ລະອຽດອ່ອນເຊັ່ນ: ຂໍ້ມູນສ່ວນບຸກຄົນ.

**ປະເມີນທາງດ້ານໂອກາດ ແລະ ສິ່ງທ້າທາຍສໍາລັບການນໍາໃຊ້ແຫຼ່ງຂໍ້ມູນໃນການເຄື່ອນຍ້າຍຖິ່ນທີ່ປັບປຸງໃຫມ່:** ແຫຼ່ງຂໍ້ມູນທີ່ມີການປັບປຸງໃໝ່ນັ້ນ ຫມາຍເຖິງຂໍ້ມູນການຕິດຕາມໃນຮູບ ແບບດິຈິຕອນ ເຊັ່ນ: ບັນທຶກ ລາຍລະອຽດການໂທຜ່ານທາງໂທລະສັບມືຖື ແລະ ຂໍ້ມູນຜູ້ໂດຍສານທາງອາກາດ. ເຊິ່ງສູນສະຖິຕິຂໍ້ມູນ(LSB) ສາມາດປະເມີນໂອກາດ ຈາກຂໍ້ມູນທີ່ສະຫນອງໃຫ້ຈາກບັນດາແຫຼ່ງຂໍ້ມູນຕ່າງໆ ເພື່ອເຮັດໃຫ້ການເກັບກໍາຂໍ້ມູນກ່ຽວກັບການເຄື່ອນຍ້າຍຖິ່ນຖານທັນກັບສະພາບການ ແລະ ປະເມີນສິ່ງທ້າທາຍທາງດ້ານຂໍ້ມູນລັບສ່ວນບຸກຄົນ ແລະ ຫຼັກຈັນຍາບັນ ທີ່ສາມາດຄົ້ນຫາໄດ້.

### *4.2.3. ປັບປຸງການເຜີຍແຜ່ຂໍ້ມູນເພື່ອນໍາໃຊ້ໃນສາທາລະນະ ແລະ ເພື່ອບັນດານະໂຍບາຍທີ່ວາງໄວ້*

- **ຄໍາແນະນໍາໄລຍະສັ້ນ (ພາຍໃນໜຶ່ງປີ)**

**ໂດຍການສ້າງລາຍຊື່ຕົວຊີ້ບອກຂອງຂໍ້ມູນ 5 ຫາ 10 ຕົວຊີ້ບອກທີ່ສໍາຄັນໃນລະດັບຊາດ ເພື່ອແຈ້ງໃຫ້ຮູ້ ເພື່ອນໍາໃຊ້ເຂົ້າໃນການພິຈາລະນາຕັດສິນ:** ການພັດທະນາຕົວຊີ້ບອກຫຼັກທີ່ສໍາຄັນນັ້ນ ຈະຊ່ວຍສ້າງຄໍາແນະນໍາທາງດ້ານນະໂຍບາຍ ແລະ ການຕິດຕາມ-ກວດກາ ແລະ ການປະເມີນຜົນກະທົບທາງດ້ານນະໂຍບາຍອີກດ້ວຍ. ເຊິ່ງບາງຕົວຊີ້ບອກຫຼັກທີ່ສໍາຄັນ ສາມາດເປັນຕົວເລກກ່ຽວກັບຈໍານວນຄົນຕ່າງປະເທດທີ່ເກີດ ແລະ ຜູ້ທີ່ເຄື່ອນຍ້າຍຖິ່ນຖານໃນພາຍປະເທດ, ຕົວເລກກ່ຽວກັບການຍື່ນຄໍາຮ້ອງສະຫມັກເອົາໃບອະນຸຍາດເຮັດວຽກ, ຈໍານວນຄົນຕ່າງປະເທດທີ່ເກີດ ແລະ ຄົນຕ່າງປະເທດທີ່ເຂົ້າມາໃນປະເທດ, ຈໍານວນຄົນຕ່າງປະເທດທີ່ອອກຈາກປະເທດ, ຈໍານວນຄົນລາວທີ່ອອກຈາກປະເທດ, ແລະຈໍານວນຄົນລາວທີ່ກັບຄືນປະເທດ.

- **ຄໍາແນະນໍາໄລຍະກາງ (ສອງຫາສາມປີ)**

**ສົ່ງເສີມການເຜີຍແຜ່ຂໍ້ມູນທີ່ກ່ຽວຂ້ອງກັບການເຄື່ອນຍ້າຍຖິ່ນຖານ ເພື່ອນໍາໃຊ້ໃນສາທາລະນະ ແລະ ນໍາໃຊ້ເຂົ້າໃນການຄົ້ນຄວ້າທາງວິຊາການ:** ໃນໄລະຍຜ່ານມາ ຂໍ້ມູນທີ່ເກັບມາໄດ້ແມ່ນບໍ່ໄດ້ມີການເຜີຍແຜ່ໃນສາທາລະນະ ແລະ ແບ່ງປັນກັບນັກວິຊາການ. ສະນັ້ນ, ການເຜີຍແຜ່ຂໍ້ມູນຄວນຈະປະກອບດ້ວຍການສົນທະນາກ່ຽວກັບການປົກປ້ອງຂໍ້ມູນ, ລວມທັງຂໍ້ມູນທີ່ເປັນຄວາມລັບ ແລະ ການເປັນເຈົ້າການຂອງຂໍ້ມູນ. ເຊິ່ງສາມາດນໍາໃຊ້ ເວັບໄຊທ໌ ຂອງ ສູນສະຖິຕິແຫ່ງຊາດ ແລະ ການເຜີຍແຜ່ຂໍ້ມູນຜ່ານຖານຂໍ້ມູນໃນຮູບແບບອອນລາຍ. ນອກຈາກນັ້ນ,ການຕິດຕາມຈໍານວນຂໍ້ມູນ ຫຼື ສິ່ງພິມທີ່ດາວໂຫລດ (ເພື່ອເອົາຂໍ້ມູນ) ຈາກເວັບໄຊທ໌ ສາມາດນໍາໃຊ້ເປັນຕົວຊີ້ບອກຂອງຂໍ້ມູນ ທີ່ກ່ຽວຂ້ອງກັບການເຄື່ອນຍ້າຍຖິ່ນຖານ ໃຫ້ແກ່ນັກວິຊາການຂອງສູນສະຖິຕິແຫ່ງຊາດ ໄດ້.

**ສົ່ງເສີມການຄົ້ນຄວ້າທາງດ້ານວິຊາການ ໃນຫົວຂໍ້ກ່ຽວກັບການເຄື່ອນຍ້າຍຖິ່ນຖານ:** ຕ້ອງມີການຮ່ວມມືກັບສະຖາບັນຄົ້ນຄວ້າທາງດ້ານວິຊາການ. ເຊິ່ງມາຮອດປັດຈຸບັນ, ຍັງບໍ່ມີໜ່ວຍງານເອກະຊົນໃດທີ່ເຮັດວຽກກ່ຽວກັບການຍົກຍ້າຍຖິ່ນຖານຢູ່ໃນປະເທດ ເພາະສະນັ້ນຈິ່ງຄວນຈະມີການຮ່ວມມືໃນລະດັບພາກພື້ນ ຫຼື ລະດັບສາກົນ, ໂດຍ

ສະເພາະກັບ ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ຝຶກອົບຮົມ (DRI). DRI ສາມາດສ້າງຕັ້ງກຸ່ມເຮັດວຽກ ຫຼື ຫນ່ວຍງານເພື່ອເຮັດບົດລາຍງານ ແລະ ເພື່ອພັດທະນາຄົ້ນຄວ້າກ່ຽວກັບບັນຫາການເຄື່ອນຍ້າຍຖິ່ນຖານ.

## 4.3. ຄໍາແນະນໍາກ່ຽວກັບແຜນດໍາເນີນງານ ການຄຸ້ມຄອງວຽກງານການເຄື່ອນຍ້າຍຖິ່ນຖານ

- ❖ **ຄໍາແນະນໍາໄລຍະກາງ (ສອງຫາສາມປີ)**

**ສ້າງໂຄງປະກອບການປະສານງານລະດັບຊາດ ເພື່ອຄຸ້ມຄອງຄົນເຂົ້າເມືອງໃນທຸກລະດັບທີ່ກ່ຽວຂ້ອງ:** ເຊິ່ງມີຄວາມຈໍາເປັນຕ້ອງໄດ້ປັບປຸງກົນໄກການຄຸ້ມຄອງການເຄື່ອນຍ້າຍຖິ່ນຖານ ຂອງ ສ ປປ ລາວ ທີ່ມີຢູ່ແລ້ວ ໂດຍເສີມຂະຫຍາຍການປະສານງານແບບສາຍຂວາງກັບບັນດາກະຊວງທີ່ກ່ຽວຂ້ອງ ແລະ ກັບບັນດາອົງການຈັດຕັ້ງສາກົນທີ່ເຮັດວຽກບໍ່ຫວັງຜົນກໍາໄລ, ພ້ອມກັບປະສານງານກັບລັດຖະບານທີ່ເປັນສາຍຕັ້ງໃນທຸກລະດັບ (ລະດັບສູນກາງ, ຕົວແທນລະດັບສູນກາງ ແລະ ລະດັບແຂວງ). ໂຄງປະກອບການປະສານງານລະດັບຊາດ ເພື່ອຄຸ້ມຄອງຄົນເຂົ້າເມືອງໃນທຸກລະດັບທີ່ກ່ຽວຂ້ອງ ສາມາດສ້າງດ້ວຍໜຶ່ງໃນຮູບແບບຂອງກົນໄກດັ່ງລຸ່ມນີ້:

- ກົນໄກການຄຸ້ມຄອງທີ່ສ້າງຂຶ້ນສະເພາະຈຸດປະສົງດັ່ງກ່າວ, ສ້າງຕັ້ງຂຶ້ນໂດຍກະຊວງໃດໜຶ່ງ ຫຼື ໂດຍຄະນະກໍາມະການທີ່ມາຈາກຫຼາຍໆກະຊວງ;
- ກົນໄກການຄຸ້ມຄອງໂດຍລັດຖະມົນຕີ ທີ່ຂຶ້ນຢູ່ກັບການຄຸ້ມຄອງພາຍໃນຂອງກະຊວງດຽວ ແລະ ສືບຕໍ່ຮັກສາໄວ້ເຊິ່ງ ຄວາມສາມາດຂອງສະຖາບັນ, ແນວທາງການປະຕິບັດ, ເຄືອຂ່າຍ ຫຼື ຄວາມຮູ້ຕໍ່ວຽກງານນັ້ນໆ;
- ກົນໄກການຄຸ້ມຄອງໂດຍຄະນະກໍາມະການທີ່ມາກຈາກຫຼາຍໆກະຊວງ ແມ່ນການລວມຕົວກັນຂອງ 2 ຫຼື ຫຼາຍກະຊວງທີ່ແຕກຕ່າງກັນ ເພື່ອມາເປັນໂຄງຮ່າງການຈັດຕັ້ງ ອັນໜຶ່ງ ອັນດຽວ ແລະ ມີພາລະບົດບາດທາງກົດໝາຍທີ່ເປັນທາງການ, ເຊິ່ງປະກອບດ້ວຍເລຂານຸການຝ່າຍບໍລິຫານ ທີ່ມາຈາກກະຊວງທີ່ກ່ຽວຂ້ອງ;
- ກົນໄກການສ້າງເປັນສະຖາບັນໂດຍ ສ ປປ ລາວ ທີ່ແຍກຕ່າງຫາກ ແລະ ຮັບຜິດຊອບກ່ຽວກັບການປະສານງານທີ່ໄດ້ຮັບງົບປະມານ, ມີພະນັກງານ ແລະ ມີໂຄງຮ່າງການຈັດຕັ້ງພາຍໃນ ພ້ອມກັບມີແຜນການດໍາເນີນງານ ແລະ ເປັນສະຖາບັນ ໃນຮູບແບບອິດສະຫຼະທີ່ແຍກອອກຕ່າງຫາກ.

## 4.4. ຄໍາແນະນໍາກ່ຽວກັບ ການລິເລີ່ມນໍາເອົາບັນຫາກ່ຽວກັບການເຄື່ອນຍ້າຍຖິ່ນຖານໄປສູ່ການພັດທະນາ ປັບປຸງທາງດ້ານນະໂຍບາຍ

- ❖ **ຄໍາແນະນໍາໄລຍະສັ້ນ (ພາຍໃນໜຶ່ງປີ)**

**ແບບຝຶກຫັດໂດຍການເຮັດບົດລາຍງານການເຄື່ອນຍ້າຍຖິ່ນຖານ:** ເຊິ່ງລວມມີຫຼາຍໆບັນຫາທີ່ໄດ້ຄາດຫວັງໃນບົດລາຍງານການເຄື່ອນຍ້າຍຖິ່ນຖານ. ສໍາລັບບັນຫາໃນຂົງເຂດອື່ນຂອງການເຄື່ອນຍ້າຍຖິ່ນຖານນັ້ນ ແມ່ນສາມາດລວມເຂົ້າໃນ ແບບຝຶກຫັດຂອງການດໍາເນີນງານທີ່ກໍາລັງຈະມາເຖິງ, ເປັນຕົ້ນແມ່ນ ການເຄື່ອນຍ້າຍຖິ່ນຖານ

ຍ້ອນການປ່ຽນແປງຂອງສະພາບແວດລ້ອມ, ການເຄື່ອນຍ້າຍແຮງງານທີ່ອາໄສຢູ່ ແລະ ໄປເຮັດວຽກຢູ່ຕ່າງປະເທດ (ການພັດຖິ່ນ diaspora), ການມີສ່ວນຮ່ວມຂອງຄົນທີ່ພັດຖິ່ນ(diaspora engagement), ການເຄື່ອນຍ້າຍຖິ່ນຖານທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ການຍ້າຍເຂົ້າເມືອງ/ປະເທດ.

❖ **ຄໍາແນະນໍາໄລຍະກາງ (ສອງຫາສາມປີ)**

**ສ້າງແຜນປະຕິບັດງານແຫ່ງຊາດກ່ຽວກັບການຍົກຍ້າຍຖິ່ນຖານ:** ເອກະສານນະໂຍບາຍສາມາດບອກຂັ້ນຕອນ ແລະ ກິດຈະກໍາທີ່ຈໍາເປັນເພື່ອບັນລຸເປົ້າຫມາຍຍຸດທະສາດ ແລະ ບູລິມະສິດ. ເຊິ່ງສາມາດສ້າງຮ່າງແຜນວຽກ ແລະ ລາຍຊື່ບັນດາພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງອະທິບາຍຂະບວນການໃນການນໍາເອົາບັນຫາກ່ຽວກັບການເຄື່ອນຍ້າຍຖິ່ນຖານເຂົ້າສູ່ການປັບປຸງແຜນພັດທະນາແຫ່ງຊາດທີ່ກໍາລັງຢູ່ໃນໄລຍະຂອງການປັບປຸງ ໂດຍສະເພາະແມ່ນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ (NSEDP).

❖ **ຄໍາແນະນໍາ ໃນໄລຍະຍາວ (ສີ່ປີ ແລະ ຫຼາຍກວ່າ)**

**ພັດທະນາ ແລະ ຈັດຕັ້ງປະຕິບັດແຜນກິດຈະກໍາ ໂດຍການມີສ່ວນຮ່ວມຈາກຄົນທີ່ພັດຖິ່ນ(**diaspora engagement**):** ເຊິ່ງເປັນສ່ວນໜຶ່ງຂອງການວາງແຜນພັດທະນາ, ທີ່ມີຄວາມຈໍາເປັນສໍາລັບການເຮັດໃຫ້ຄົນພັດຖິ່ນທີ່ອາໄສຢູ່ໃນປະເທດລາວ ເຂົ້າມາມີສ່ວນຮ່ວມໃນການພັດທະນາ. ຍຸດທະສາດການມີສ່ວນຮ່ວມຂອງກຸ່ມຄົນພັດຖິ່ນ ແມ່ນປະກອບດ້ວຍ ສີ່ ຂັ້ນຕອນດັ່ງຕໍ່ໄປນີ້:

(a) ກໍານົດເປົ້າໝາຍເຊັ່ນ: ຫຼຸດຜ່ອນຄວາມທຸກຍາກ ຫຼື ສະໜັບສະໜູນຄວາມດຸ່ນດ່ຽງ ແລະ ຄວາມສາມາດດ້ານການຊໍາລະ ແຫ່ງຊາດ – ເຊັ່ນ: ການລົງທຶນ, ການຖ່າຍທອດຄວາມຮູ້ ຫຼື ທັກສະ, ແລະ ການໂອນເງິນ – ແລະ ກໍານົດເຄື່ອງມື ແລະ ກົນໄກທີ່ຈໍາເປັນສໍາລັບວຽກງານ. ເຊິ່ງມີຄວາມຈໍາເປັນຕ້ອງໄດ້ປຶກສາຫາລືກັບຄົນທີ່ພັດຖິ່ນ ເພື່ອກໍານົດເປົ້າຫມາຍ.

(b) ກໍານົດ/ຄັດເລືອກ ຜູ້ພັດຖິ່ນ ທີ່ລັດຖະບານແຫ່ງ ສ ປປ ລາວ ເຫັນວ່າຢາກໃຫ້ມີສ່ວນຮ່ວມໃນການພັດທະນາ ໂດຍຜ່ານການສ້າງແຜນໂຄງຮ່າງການຈັດຕັ້ງຂອງກຸ່ມຄົນພັດຖິ່ນ, ທັກສະ ແລະ ປະສົບການທີ່ເປັນທ່າແຮງ, ລວມທັງ ກໍານົດການຄຸ້ມຄອງການສໍາຫຼວດ ທາງດ້ານປະລິມານ ແລະ ຄຸນນະພາບຂອງຈໍານວນຜູ້ພັດຖິ່ນ.

(c) ສ້າງຄວາມໄວ້ວາງໃຈໃຫ້ແກ່ເຂົາເຈົ້າ. ເຊິ່ງລັດຖະບານສາມາດເປີດຕົວໂຄງການທົດລອງ, ເຊັ່ນ: ເຮັດກິດຈະກໍາທາງດ້ານວັດທະນະທໍາ, ການສົ່ງເສີມດ້ານພາສາ, ໃຫ້ຜູ້ພັດຖິ່ນມີກິດຈະກໍາຮ່ວມ ກັບລັດຖະບານທີ່ເປັນເຈົ້າພາບ, ການໃຫ້ບໍລິການແກ່ເຂົາເຈົ້າ, ໃຫ້ສິດທິພິເສດສໍາລັບຜູ້ອົບພະຍົບໄປຢູ່ຕ່າງປະເທດ ທີ່ບໍ່ມີທີ່ຢູ່ອາໄສ ພ້ອມດ້ວຍລູກຫລານເຂົາເຈົ້າ, ແລະ ແຈ້ງບັນດາກົງສູນຕ່າງໆທີ່ເປັນເຄືອຂ່າຍ.

(d) ຊຸກຍູ້ໃຫ້ຜູ້ພັດຖິ່ນເຂົ້າມາມີສ່ວນຮ່ວມໃນການພັດທະນາ ໂດຍການພັດທະນານະໂຍບາຍ ທາງດ້ານການເຄື່ອນຍ້າຍຖິ່ນຖານຂອງຄົນພັດຖິ່ນ.

**ພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດ ກ່ຽວກັບການພັດຖິ່ນ:** ໃນໄລຍະຍາວ, ນະໂຍບາຍການພັດຖິ່ນແຫ່ງຊາດສາມາດຈັດຕັ້ງປະຕິບັດໄດ້ ເພື່ອໃຫ້ຄົນພັດຖິ່ນທີ່ເປັນຄົນລາວ ໄດ້ມີສ່ວນຮ່ວມ. ສ້າງຕັ້ງສະຖາບັນທີ່ເປັນລັກສະນະສະເພາະ ເຊັ່ນວ່າ ການສ້າງຕັ້ງກະຊວງ. ເຊິ່ງອີງໃສ່ຫຼາຍໆປັດໃຈໃນການລິເລີ່ມ ເຊິ່ງລວມມີເຫດການທີ່ມີຊື່ສຽງ ທີ່ສຳຄັນ, ໂຄສົກ/ຜູ້ເວົ້າ ທີ່ເປັນຊາວພັດຖິ່ນ/ຜູ້ອົບພະຍົບ (diaspora spokespersons), ການເດີນທາງທີ່ໄດ້ຮັບການສະໜັບສະໜູນສຳລັບຜູ້ນຳທາງດ້ານຄວາມຄິດເຫັນ ແລະ ຊາວໜຸ່ມ, ການສົ່ງເສີມການເປັນຄູ່ຮ່ວມງານ, ແລະ ການອຳນວຍຄວາມສະດວກໃນການລົງທຶນຜ່ານສູນກາງທີ່ເປັນຈຸດດຽວ.

# ເອກະສານປະກອບ 1

## ການລົງຢັ້ງມຢາມຢູ່ພາກສະໜາມ ໃນເດືອນ ຕຸລາ 2022

ຈຸດປະສົງຂອງການລົງໄປຢັ້ງມຢາມຢູ່ສະໜາມ ແມ່ນເພື່ອເກັບກຳຂໍ້ມູນເບື້ອງຕົ້ນດ້ານຄຸນນະພາບລະຫວ່າງຜູ້ຍົກຍ້າຍຖິ່ນຖານທີ່ແຕກຕ່າງກັນ (ເຊັ່ນ: ແຮງງານເຄື່ອນຍ້າຍທີ່ກັບຄືນ, ຜູ້ຍົກຍ້າຍຖິ່ນຖານດ້ວຍຄວາມທະເຍີທະຍານ ແລະ ສະມາຊິກຂອງຊຸມຊົນທີ່ໄດ້ຮັບຜົນກະທົບຈາກການເຄື່ອນຍ້າຍ) ພ້ອມທັງນາຍບ້ານ. ຂໍ້ມູນໄດ້ຖືກເກັບກຳໂດຍທີມງານພາກສະຫນາມໃນລະຫວ່າງວັນທີ 17 ຫາ 25 ຕຸລາ 2022 ໂດຍໃຊ້ ການສຳພາດແບບສົນທະນາເປັນກຸ່ມ (FGDs) ແລະ ການສຳພາດຜູ້ໃຫ້ຂໍ້ມູນທີ່ສຳຄັນ (KIIs). ທີມງານພາກສະຫນາມປະກອບດ້ວຍພະນັກງານຈາກ ອົງການ IOM ລວມທັງທີ່ປຶກສາສາກົນ ແລະພະນັກງານຈາກ ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ຝຶກອົບຮົມ (DRI) ຂອງ ກະຊວງແຜນການ ແລະ ການຮ່ວມມື. ຂໍ້ມູນທີ່ເກັບກຳໄດ້ແມ່ນນຳມາເພື່ອປະກອບສ່ວນເຂົ້າໃນການພັດທະນາບົດລາຍງານການເຄື່ອນຍ້າຍຖິ່ນຖານຂອງປະເທດ.

ຜູ້ເຂົ້າຮ່ວມ ແລະ ຜູ້ໃຫ້ຂໍ້ມູນຫຼັກ ໄດ້ຖືກຄັດເລືອກຈາກເຄືອຂ່າຍທີ່ມີຢູ່ແລ້ວ ຂອງອົງການ IOM ແລະ ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ຝຶກອົບຮົມ DRI, ກະຊວງແຜນການ ແລະ ການລົງທຶນ. ບັນດາຄູ່ຮ່ວມງານລະດັບຊາດ ແລະ ລະດັບທ້ອງຖິ່ນໄດ້ແນະນຳແນວຄວາມຄິດກ່ຽວກັບວິທີການ ການເຂົ້າຫາຜູ້ທີ່ຈະໃຫ້ຂໍ້ມູນ. ເຊິ່ງການສຸ່ມດ້ວຍການໂຍນໝາກບານ ແມ່ນຊ່ວຍໃຫ້ທີມງານສາມາດຫາຜູ້ທີ່ເຂົ້າຮ່ວມໃນການສຳພາດແບບສົນທະນາເປັນກຸ່ມ (FGDs) . ເຊິ່ງກ່ອນທີ່ທີມງານຈະສອບຖາມຂໍ້ມູນສ່ວນຕົວ ພ້ອມທັງລາຍລະອຽດທີ່ຢູ່ຂອງເຂົາເຈົ້ານັ້ນ,ກ່ອນອື່ນໝົດກໍ່ໄດ້ມີການອະທິບາຍຈຸດປະສົງ ແລະ ຂອບເຂດຂອງການສຶກສາຂໍ້ມູນໃຫ້ແກ່ຜູ້ເຂົ້າຮວ່ມ. ນອກຈາກນັ້ນ, ທີມງານພາກສະໜາມກໍ່ໄດ້ຮັບຄວາມຍິນຍອມໃນການສຳພາດ ແລະ ການຖ່າຍພາບຈາກຜູ້ເຂົ້າຮ່ວມ ຢ່າງເປັນລະບົບ ແລະ ເປັນຂັ້ນຕອນ.

ຕາຕະລາງທີ 5 ສະໜອງຂໍ້ມູນກ່ຽວກັບແຂວງ, ເມືອງ ແລະ ບ້ານທີ່ໄດ້ໄປຢັ້ງມຢາມເປັນພາສາອັງກິດ ແລະ ພາສາລາວ. ທັງໝົດ, ໄດ້ເຮັດການສຳພາດແບບ KIIs ກັບ 6 ຄົນ ແລະ ເຮັດການສຳພາດການສົນທະນາແບບເປັນກຸ່ມກັບ 18 ກຸ່ມ, ເຊິ່ງໄດ້ດຳເນີນໃນ 6 ບ້ານທີ່ແຕກຕ່າງກັນ.

### ຕາຕະລາງ 5 ສະໜອງຂໍ້ມູນກ່ຽວກັບແຂວງ, ເມືອງ ແລະ ບ້ານທີ່ໄດ້ໄປຢ້ຽມຢາມ

| No. | Province<br>ແຂວງ | District<br>ເມືອງ | Village<br>ບ້ານ | Date<br>ວັນທີ |
|---|---|---|---|---|
| 1 | Champasak<br>ຈຳປາສັກ | Soukhoumma<br>ສຸຂຸມາ | Houayhae<br>ຫ້ວຍແຮ່ | 17/10/2022 |
| | | Sanasomboun<br>ຊະນະສົມບູນ | Nakeo<br>ນາແກ້ວ | 18/10/2022 |
| 2 | Savannakhet<br>ສະຫວັນນະເຂດ | Songkhone<br>ສອງຄອນ | Nakhammon<br>ນາຄຳມົນ | 19/10/2022 |
| | | Champhone<br>ຈຳພອນ | Houamuang<br>ຫົວເມືອງ | 20/10/2022 |
| 3 | Xayabouly<br>ໄຊຍະບູລີ | Boten<br>ບໍ່ແຕນ | Nakhuk<br>ນາກອກ | 24/10/2022 |
| | | Paklay<br>ປາກລາຍ | Muangva<br>ເມືອງວາ | 25/10/2022 |

ຂໍ້ຈຳກັດຂອງການໄປຢ້ຽມຢາມພາກສະໜາມແມ່ນມີຈຳນວນຫລາຍ. ອີງຕາມຍຸດທະສາດ ການເກັບຕົວຢ່າງ ແລະ ຂະໜາດ, ຜົນປະກົດວ່າບໍ່ແມ່ນຕົວແທນຂອງພົນລະເມືອງ ແລະ ບໍ່ສາມາດກຳນົດເອົາຄົນທົ່ວໄປໄດ້. ມີຜູ້ຄົນຈຳນວນໜ້ອຍທີ່ເຂົ້າຮ່ວມໃນການສຳພາດແບບກຸ່ມການສົນທະນາ. ເຊິ່ງຜູ້ເຂົ້າຮ່ວມອາດຈະຮູ້ສຶກກົດດັນເພື່ອໃຫ້ຄຳຕອບສອດຄ່ອງກັບກົດເກນຂອງສັງຄົມ ແລະ ໃຫ້ຄຳຕອບທີ່ສັງຄົມຕ້ອງການ. ນອກຈາກນັ້ນ, ການເຄື່ອນໄຫວຂອງການສົນທະນາບາງຄັ້ງກໍ່ມີຄວາມຫຍຸ້ງຍາກໃນການຄວບຄຸມ, ເນື່ອງຈາກວ່າຜູ້ເຂົ້າຮ່ວມບາງຄົນພະຍາຍາມຈະຄວບຄຸມການສົນທະນາ ຫຼື ແນະນຳຫົວຂໍ້ໃໝ່ທີ່ບໍ່ກ່ຽວຂ້ອງກັບຈຸດປະສົງການຄົ້ນຄວ້າ.

# ເອກະສານ ອ້າງອີງ

ສະຫະພັນ ສະກັດກັ້ນ-ຕ້ານ ແລະ ອົງການ ECPAT ສາກົນ (2019). ບົດລາຍງານ Sexual exploitation of children in the Lao People's Democratic Republic. ບົດລາຍງານກ່ຽວກັບ ສະພາບການທາງດ້ານສິດທິມະນຸດໃນ ສ ປປ ລາວ, ທີ່ສ ປປ ລາວ ສົ່ງໃຫ້ສະພາສິດທິມະນຸດ, ປະຈໍາ ບາງກອກ.

ທະນາຄານພັດທະນາອາຊຽນ (ADB) (2013). *Facilitating Safe Labor Migration in the Greater Mekong Subregion: Issues, Challenges, and Forward-looking Interventions*. ADB, ເມືອງ Mandaluyong , ປະເທດຟີລິບປິນ.

ສະຖາບັນທະນາຄານພັດທະນາອາຊຽນ, ອົງການຈັດຕັ້ງເພື່ອການຮ່ວມມືທາງດ້ານ ເສດຖະກິດ ແລະ ການພັດທະນາ (OECD) ແລະ ອົງການແຮງງານສາກົນ (ILO) (2022). *Labour Migration in Asia: COVID-19 Impacts, Challenges, and Policy Responses*. ສະຖາບັນທະນາຄານພັດທະນາອາຊຽນ, OECD and ILO, ກຸງໂຕກຽວ , ກຸງ ປາຣີ ແລະ ບາງກອກ.

ສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້(ASEAN) (2007).ຖະແຫຼງການອາຊຽນກ່ຽວກັບການປົກປັກຮັກສາ ແລະການສົ່ງເສີມສິດທິ ຂອງແຮງງານເຄື່ອນຍ້າຍ. ASEAN Declaration on the Protection and Promotion of the Rights of Migrant Workers. Cebu, ປະເທດຟີລິບປິນ..

ASEAN (2015a). ASEAN Mutual Recognition Arrangement on Tourism Professionals.

ASEAN (2015b).ສົນທິສັນຍາອາຊຽນ ວ່າດ້ວຍ ການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ. ASEAN Convention Against Trafficking in Persons, Especially Women and Children. ວັນທີ 23 ເດືອນ ພະຈິກ .

ASEAN (2017).ການລົງມະຕິຮ່ວມກັນຂອງອາຊຽນກ່ຽວກັບການປົກປ້ອງ ແລະ ສົ່ງເສີມສິດທິຂອງແຮງງານເຄື່ອນຍ້າຍ. ASEAN Consensus on the Protection and Promotion of the Rights of the Migrant Workers. ມະນິລາ, ວັນທີ 14 ເດືອນ ພະຈິກ.

ASEAN (n.d.).ພາບລວມ: ສົນທິສັນຍາວ່າດ້ວຍ ສຳພັນທະອະໄມຕີ ແລະ ການຮ່ວມມືໃນອາຊີຕາເວັນອອກສ່ຽງໃຕ້ Overview: Treaty of Amity and Cooperation in Southeast Asia (TAC).

Chamchan, C. and K. Apipornchaisakul (2012). *A Situation Analysis on Health System Strengthening for Migrants in Thailand*. ສະຖາບັນຄົ້ນຄວ້າ ແລະ ວິໄຈ ທາງດ້ານ ພົນລະເມືອງ ແລະ ສັງຄົມ, ມະຫາໄລ Mahidol, ນະຄອນປະຖົມ, ປະເທດໄທ.

Clement, V., K. Kumari Rigaud, A. de Sherbinin, B. Jones, S. Adamo, J. Schewe, N. Sadiq and E. Shabahat (2021). *Groundswell Part 2: Acting on Internal Climate Migration*. ທະນາຄານໂລກ , ວໍຊິງຕັນ.

Crispin, V. and G. Thompstone (2011). Report on the commercial sexual exploitation of children in Lao PDR. ອົງການ Child Frontiers.

Davies, A. A. Basten and C. Frattini (2009). ການເຄື່ອນຍ້າຍຖິ່ນຖານ:

ຕົວກຳນົດທາງດ້ານສັງຄົມ ກ່ຽວກັບສຸຂະພາບຂອງຜູ້ຍ້າຍຖິ່ນຖານ. *Eurohealth*, 16(1):10–12. Available here.

ສະຖາບັນຄົ້ນຄວ້າ ວິໄຈ ການພັດທະນາ (DRI) ແລະ ອົງການ ການເຄື່ອນຍ້າຍຖິ່ນຖານສາກົນ(IOM)(2022). ລັກສະນະຂອງການສົ່ງເງິນ(ຄ່າໃຊ້ຈ່າຍ) ໃນ ສ ປປ ລາວ Remittance landscape in the Lao People's Democratic Republic. ນະໂຍບາຍສະບັບຫຍໍ້. DRI ແລະIOM, ນະຄອນຫຼວງວຽງຈັນ.

Eckstein, D., V. Künzel and L. Shäfer (2021). Global Climate Risk Index 2021: Who suffers most from extreme weather events? Weather-related loss events in 2019 and 2002–2019. ເອກະສານຫຍໍ້. Germanwatch, Bonn.

Epprecht, M., N. Bosoni and D. Hayward (2018). ຂະບວນການຫັນເປັນຕົວເມືອງ ຂອງ ສ ປປ ລາວ: ຂະບວນການ, ສິ່ງທ້າທາຍ ແລະ ໂອກາດ. ສູນເພື່ອການພັດທະນາ ແລະ ສິ່ງແວດລ້ອມ, Bern.

Eurostat (n.d.a). First permits by reason, length of validity and citizenship (MIGR_RESFIRST). Data set (accessed ???).

Eurostat (n.d.b). First permits issued for remunerated activities by reason, length of validity and citizenship (MIGR_RESOCC). Data set (accessed ???).

ບັນດາປະເທດອະນຸພາກພື້ນແມ່ນ້ຳຂອງ (GMS) (2004). Memorandum of Understanding on Cooperation against Trafficking in Persons in the Greater Mekong Sub-Region. Yangon, ວັນທີ 29 ເດືອນ ຕຸລາ.

GMS (2020). Dialogue on Labour Migration in the Greater Mekong Subregion.ວັນທີ 8 ເດືອນກັນຍາ.

Gubert, F. (2007). Migrations et transferts de fonds. Impact sur les pays d'origine. Commentaires. [ການເຄື່ອນຍ້າຍຖິ່ນຖານ ແລະ ການໂອນເງິນ. ຜົນກະທົບຕໍ່ປະເທດຕົ້ນກຳເນີດ. Commentaries]. *Revue d'Economie du Développement*, 15:183–188.

Hancart Petitet, P. and S. Phetchanpheng (2022). Exploring women's mobilities and family transformations in Lao People's Democratic Republic: Historical perspectives and mirrored ethnographic insights. *Space Populations Societies*.

Harkins, B., D. Lindgren and T. Suravoranon (2017). Risks and Rewards: Outcomes of Labour Migration in South-East Asia. ILO ແລະ IOM, ບາງກອກ.

Harrigan, N.M., C.Y. Koh and A. Amirrudin (2017). Threat of deportation as proximal social determinant of mental health amongst migrant workers. *ວາລະສານສຸຂະພາບຂອງ ຄົນເຂົ້າເມືອງ ແລະຊົນເຜົ່າກຸ່ມນ້ອຍ*, 19:511–522.

Hennebry, J. (2014). Falling through the cracks? Migrant workers and the Global Social Protection Floor. *Global Social Policy*, 14(3):369–388. ສາມາດເບິ່ງໄດ້ທີ່ນີ້ here.

Hewitt, S., C. Delacollette and I. Chavex (2013). Malaria situation in the Greater Mekong Subregion. *ວາລະສານອາຊີຕາເວັນອອກສຽງໃຕ້ຂອງແພດສາດເຂດຮ້ອນ ແລະ ສາທາລະນະສຸກ*, 44:46–72.

ອົງການແຮງງານສາກົນ (ILO) (2007). ???

ILO (2020a). *Ensuring Migrant Workers Access to Justice: An Assessment of Thailand's Migrant Workers Assistance Centers*. ອົງການ ILO, ບາງກອກ.

ILO (2020b). *Recruitment Fees and Related Costs: What Migrant Workers from Cambodia, the Lao People's Democratic Republic and Myanmar Pay to Work in Thailand*. ອົງການ ILO, ບາງກອກ. ສາມາດເບິ່ງໄດ້ທີ່ນີ້ here.

ILO (2021). *Working and Employment Conditions in the Agriculture Sector in Thailand: A Survey of Migrants Working on Thai Sugarcane, Rubber, Oil Palm and Maize Farms*. ອົງການ ILO, ບາງກອກ.

ILO (2022). *Measuring Labour Migration in ASEAN: Analysis from the ILO's International Labour Migration Statistics (ILMS) Database*. ອົງການ ILO, ບາງກອກ.

ILO (n.d.). ILO Department of Statistics (ILOSTAT) home page (accessed ???).

ອົງການແຮງງານສາກົນ (ILO) ແລະ ລັດຖະບານແຫ່ງ ສ ປປ ລາວ (2022). ແຜນງານ ການຮ່ວມມືເພື່ອສົ່ງເສີມວຽກງານທີ່ມີຄຸນຄ່າ ແລະ ເປັນທຳ (DWCP) 2022–2025. ສາມາດເບິ່ງໄດ້ທີ່ນີ້ here.

ອົງການແຮງງານສາກົນ (ILO) ແລະ ອົງການ ສະຫະປະຊາຊາດ ເພື່ອການພັດທະນາ (2018). *What's the Incentive? Comparing Regular and Irregular Migrant Work Experiences from the Lao People's Democratic Republic to Thailand*. ILO ແລະ UNDP, ບາງກອກ.

ກອງທຶນການເງິນສາກົນ (IMF) (n.d. ). Regional economic outlook: Asia and Pacific (accessed ???).

ອົງການ ການເຄື່ອນຍ້າຍຖິ່ນຖານສາກົນ (IOM) (2011). *Thailand Migration Report – Migration for Development in Thailand: Overview and Tools for Policymakers*. IOM, ບາງກອກ.

IOM (2014). *Outlook on Migration, Environment and Climate Change*. IOM, ເຈັນນີວາ.

IOM (2016). Assessing potential changes in the migration patterns of Laotian migrants and their impacts on Thailand and Lao People's Democratic Republic. IOM, ບາງກອກ.

IOM (2019). *Glossary on Migration*. ກົດໝາຍສາກົນ ວ່າດ້ວຍ ການເຄື່ອນຍ້າຍຖິ່ນຖານ ເລກທີ. 34. IOM, ເຈັນນີວາ.

IOM (2021a). COVID-19 Situation Report #13. IOM, ນະຄອນຫຼວງວຽງຈັນ.

IOM (2021b). *Assessing Potential Changes in Lao Migration Trends and Patterns*. IOM, ນະຄອນຫຼວງວຽງຈັນ.

IOM (2021c). *An Analysis of Migration Trends of Lao Migrants for Lao People's Democratic Republic in Two Selected Provinces: Savannakhet and Wayaboury*. IOM, ນະຄອນຫຼວງວຽງຈັນ.

IOM (2022). *The 2030 Agenda and Data Disaggregation by Migratory Status: Availability, Gaps and Disparities in Asia and the Pacific*. ສູນຂໍ້ມູນພາກພື້ນອາຊີ-ປາຊີຟິກ, ບາງກອກ.

ອົງການ ການເຄື່ອນຍ້າຍຖິ່ນຖານສາກົນ (IOM) ແລະ ລັດຖະບານ ແຫ່ງ ສ ປປ ລາວ (2021). Country Strategy 2022–2026. ສາມາດເບິ່ງໄດ້ທີ່ນີ້ here.

Jain, R., M.L. Meena, G.S. Dangayach and A.K. Bhardwaj (2018). Association of risk factors with musculoskeletal disorders in manual-working farmers. ເອກະສານລວມ ກ່ຽວກັບ ສຸຂະພາບ ທາງດ້ານສິ່ງແວດລ້ອມ ແລະ ອາຊີບ, 73(1):19–28.

Jampaklay, A. and S. Kittisuksathit (2009). *Migrant Workers' Remittances: Cambodia, Lao PDR and Myanmar*. ຫ້ອງການພາກພື້ນ ຂອງອົງການ ILO ປະຈຳຂົງເຂດ ອາຊີ ແລະ ປາຊີຟິກ, ບາງກອກ.

Kaewboonchoo, O., P. Kongtip and S. Woskie (2015). Occupational health and safety for agricultural workers in Thailand: Gaps and recommendations, with a focus on pesticide use. ວິທີແກ້ໄຂໃໝ່: *ວາລະສານ* ນະໂຍບາຍກ່ຽວກັບສຸຂະພາບ ທາງດ້ານສິ່ງແວດລ້ອມ ແລະ ອາຊີ, 25(1):102–120.

ລັດຖະບານ ແຫ່ງ ສ ປປ ລາວ (1992).ກົດໝາຍວ່າດ້ວຍທະບຽນຄອບຄົວ Law on Family Registration (ເລກທີ. 03/ສປສ). ປະກາດໃຊ້ໂດຍອີງໃສ່ດຳລັດເລກທີ. 21/ສປປ, ວັນທີ 6 ເດືອນເມສາ 1992.

ລັດຖະບານ ແຫ່ງ ສ ປປ ລາວ (2002).ດຳລັດວ່າດ້ວຍ ການຈັດສົ່ງແຮງງານລາວ ໄປເຮັດວຽກຢູ່ຕ່າງປະເທດ Decree on the Dispatching of Lao Labour to Work Abroad (ເລກທີ. 68/2002).

ລັດຖະບານ ແຫ່ງ ສ ປປ ລາວ (2003). ລັດຖະທຳມະນູນ ແຫ່ງ ສ ປປ ລາວ ປີ 1991 ພ້ອມທັງ ປັບປຸງໃນປີ 2003 Lao People's Democratic Republic's Constitution of 1991 with Amendments through 2003.

ລັດຖະບານ ແຫ່ງ ສ ປປ ລາວ (2004). ກົດໝາຍວ່າດ້ວຍ ສັນຊາດລາວ. ປະກາດໃຊ້ໂດຍອີງໃສ່ດຳລັດເລກທີ.. 35/ສປປ, ວັນທີ 17 ເດືອນພຶດສະພາ 2004.ສາມາດເບິ່ງໄດ້ທີ່ນີ້ Available here.

ລັດຖະບານ ແຫ່ງ ສ ປປ ລາວ (2015).ລັດຖະທຳມະນູນ ແຫ່ງ ສ ປປ ລາວ ປີ 1991 ພ້ອມທັງ ປັບປຸງໃນປີ 2015 Lao People's Democratic Republic's Constitution of 1991 with Amendments through 2015.

ລັດຖະບານ ແຫ່ງ ສ ປປ ລາວ (2016).ແຜນພັດທະນາ ເສດຖະກິດ-ສັງຄົມ ຄັ້ງທີ 8 . 8th Five-year National Socio-economic Development Plan (2016–2020).ກະຊວງແຜນການ ແລະ ການລົງທຶນ.

ລັດຖະບານ ແຫ່ງ ສ ປປ ລາວ (2017). ກົດໝາຍ ອາຍາ Penal Code (ເລກທີ. 13/2017).

ລັດຖະບານ ແຫ່ງ ສ ປປ ລາວ (2020). ດຳລັດວ່າດ້ວຍ ການຈັດສົ່ງແຮງງານລາວ ໄປເຮັດວຽກຢູ່ຕ່າງປະເທດ (ເລກທີ. 245/ລບ). ສະໜອງໃຫ້ໂດຍສະມາຊິກ ຄະນະ ITWG, ໂຄງການການເຄື່ອນຍ້າຍຖິ່ນຖານ.

ລັດຖະບານ ແຫ່ງ ສ ປປ ລາວ (2021a). ແຜນຍຸດທະສາດແຫ່ງຊາດ ໃນໄລຍະ 10 ປີ ກ່ຽວກັບ HIV ແລະ AIDS (2021–2030) ແລະ ແຜນຈັດຕັ້ງປະຕິບັດ (2021–2025). ສາມາດເບິ່ງໄດ້ທີ່ນີ້ here.

ລັດຖະບານ ແຫ່ງ ສ ປປ ລາວ (2021b).ແຜນພັດທະນາ ເສດຖະກິດ-ສັງຄົມ ຄັ້ງທີ 9. 9th Five-year National Socio-economic Development Plan (2021–2025). ນະຄອນຫຼວງວຽງຈັນ.

ລັດຖະບານ ແຫ່ງ ສ ປປ ລາວ(2021c). ແຜນປະຕິບັດງານແຫ່ງຊາດ ຄັ້ງທີ 4-5 ກ່ຽວກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ (2021-2025). ສາມາດເບິ່ງໄດ້ທີ່ນີ້ here.

ລັດຖະບານ ແຫ່ງ ສ ປປ ລາວ (2021d). ດຳລັດ ວ່າດ້ວຍການລົງໂທດ ແລະ ມາດຕະການອື່ນໆ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ. ສະໜອງໃຫ້ໂດຍສະມາຊິກ ຄະນະ ITWG, ໂຄງການການເຄື່ອນຍ້າຍຖິ່ນຖານ.

ລັດຖະບານ ແຫ່ງ ສ ປປ ລາວ ແລະ ລັດຖະບານ ແຫ່ງ ປະເທດໄທ (2002).ບົດບັນທຶກຄວາມເຂົ້າໃຈ ລະຫວ່າງລັດຖະບານແຫ່ງ ສ ປປລາວ ແລະ ລັດຖະບານແຫ່ງ ປະເທດໄທ ວ່າດ້ວຍການຮ່ວມມືທາງດ້ານແຮງງານ. Memorandum of Understanding between the Government of Lao People's Democratic Republic and Government of the Kingdom of Thailand on Labour Co-operation.

ລັດຖະບານ ແຫ່ງ ສ ປປ ລາວ ແລະ ລັດຖະບານ ແຫ່ງ ປະເທດໄທ (2016). ບົດບັນທຶກຄວາມເຂົ້າໃຈລະຫວ່າງ ລັດຖະບານແຫ່ງ ປະເທດໄທ ແລະ ລັດຖະບານແຫ່ງ ສ ປປ ລາວ ກ່ຽວກັບການຮ່ວມມືດ້ານການຈ້າງງານ.

ລັດຖະບານ ແຫ່ງ ສ ປປ ລາວ ແລະ ອົງການ ສະຫະປະຊາຊາດ (2016).ສປປ ລາວ - ກອບການຮ່ວມມືຂອງສະຫະປະຊາຊາດ 2017-2021: ການຮ່ວມມືເພື່ອການພັດທະນາແບບຍືນຍົງ Lao PDR – United Nations Partnership Framework 2017–2021: A Partnership for Sustainable Development. ອົງການ ສະຫະປະຊາຊາດ, ລັດຖະບານ ແຫ່ງ ສ ປປ ລາວ.

ລັດຖະບານ ແຫ່ງ ສ ປປ ລາວ ແລະ ອົງການ ສະຫະປະຊາຊາດ (2021).ສປປ ລາວ - ກອບການຮ່ວມມືການພັດທະນາແບບຍືນຍົງຂອງສະຫະປະຊາຊາດ 2022-2026 Lao PDR – United Nations Sustainable Development Cooperation Framework 2022–2026. ອົງການ ສະຫະປະຊາຊາດ, ລັດຖະບານ ແຫ່ງ ສ ປປ ລາວ.

ລັດຖະບານ ແຫ່ງ ສ ປປ ລາວ , ກະຊວງສຶກສາ ແລະ ກິລາ (MOES) (2020).ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 Education and Sports Sector Development Plan 2021–2025. ນະຄອນຫຼວງວຽງຈັນ.

ລັດຖະບານ ແຫ່ງ ສ ປປ ລາວ , ກະຊວງສາທາລະນະສຸກ (MOH) (2013).ຍຸດທະສາດ ແລະ ກອບການປັບປຸງໃໝ່ຂອງຂະແໜງສາທາລະນະສຸກຮອດປີ 2025. Health Sector Reform Strategy and Framework till 2025.

ລັດຖະບານ ແຫ່ງ ສ ປປ ລາວ , MOH (2016). ແຜນຍຸດທະສາດແຫ່ງຊາດໃນການຄວບຄຸມ ແລະ ກຳຈັດໄຂ້ມາເລເຣຍ 2016-2020. National Strategic Plan for Malaria Control and Elimination 2016–2020.

ລັດຖະບານ ແຫ່ງ ສ ປປ ລາວ , MOH (2017).ແຜນຍຸດທະສາດແຫ່ງຊາດ ກ່ຽວກັບພະຍາດວັນນະໂລກ: ອັບເດດ 2017-2020. National Tuberculosis Strategic Plan: Update 2017–2020.

ລັດຖະບານ ແຫ່ງ ສ ປປ ລາວ , ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (MOLSW) (2019). ບົດບັນທຶກຄວາມເຂົ້າໃຈລະຫວ່າງກະຊວງຈັດຫາງານ ແລະ ແຮງງານ ສ.ເກົາຫຼີ ແລະ ກະຊວງແຮງງານ ແລະ ສະຫວັດດີການ

ສັງຄົມ, ສ ປປ ລາວ ວ່າດ້ວຍ ການສົ່ງ ແລະ ຮັບຄືນງານ ຕາມລະບົບການອອກແຮງງານ. ສະໜອງໃຫ້ໂດຍສະມາຊິກ ຄະນະ ITWG, ໂຄງການການເຄື່ອນຍ້າຍຖິ່ນຖານ.

ລັດຖະບານ ແຫ່ງ ສ ປປ ລາວ, MOLSW (2022). ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງວິສາຫະກິດ ບໍລິການຈັດຫາງານ (ເລກທີ. 1050/ຮສສ). ສະໜອງໃຫ້ໂດຍສະມາຊິກ ຄະນະ ITWG, ໂຄງການການເຄື່ອນຍ້າຍຖິ່ນຖານ.

ລັດຖະບານ ແຫ່ງ ສ ປປ ລາວ, MOLSW ແລະ ປະເທດຍີ່ປຸ່ນ, ກະຊວງຍຸດຕິທຳ, ກະຊວງ ການຕ່າງປະເທດ, ກະຊວງ ສາທາລະນະສຸກ ແລະ ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ(2017). ບົດບັນທຶກຄວາມຮ່ວມມືກ່ຽວກັບໂຄງການ ການຝຶກອົບຮົມດ້ານເຕັກນິກລະຫວ່າງກະຊວງຍຸຕິທຳ, ກະຊວງການຕ່າງປະເທດ ແລະ ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການຍີ່ປຸ່ນ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສ ປປ ລາວ. Memorandum of Cooperation on the Technical Intern Training Program between the Ministry of Justice, the Ministry of Foreign Affairs and the Ministry of Health, Labor and Welfare of Japan and the Ministry of Labor and Social Welfare of Lao People's Democratic Republic.

ລັດຖະບານ ແຫ່ງ ສ ປປ ລາວ, MOLSW ແລະ ປະເທດຍີ່ປຸ່ນ, ກະຊວງຍຸດຕິທຳ, ກະຊວງ ການຕ່າງປະເທດ, ກະຊວງ ສາທາລະນະສຸກ ແລະ ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການຕຳຫຼວດແຫ່ງຊາດ (2022).ບົດບັນທຶກການຮ່ວມມືລະຫວ່າງກະຊວງຍຸຕິທຳ, ກະຊວງການຕ່າງປະເທດ, ກະຊວງສາທາລະນະສຸກ, ແຮງງານ ແລະ ສະຫວັດດີການ ແລະ ອົງການຕຳຫຼວດແຫ່ງຊາດຍີ່ປຸ່ນ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມແຫ່ງ ສ ປປ ລາວ ກ່ຽວກັບກອບຂໍ້ມູນພື້ນຖານ ການຮ່ວມມືສຳລັບການປະຕິບັດງານທີ່ຖືກຕ້ອງຂອງລະບົບທີ່ກ່ຽວຂ້ອງກັບຊັບພະຍາກອນມະນຸດຕ່າງປະເທດກັບສະຖານະພາບທີ່ຢູ່ອາໄສຂອງ "ພະນັກງານທີ່ມີທັກສະສະເພາະ".

Memorandum of Cooperation between the Ministry of Justice, the Ministry of Foreign Affairs, the Ministry of Health, Labour and Welfare and the National Police Agency of Japan and the Ministry of Labour and Social Welfare of the Lao People's Democratic

Republic on a Basic Framework for Information Partnership for Proper Operation of the System Pertaining to Foreign Human Resources with the Status of Residence of "Specified Skilled Worker".

ລັດຖະບານ ແຫ່ງ ສ ປປ ລາວ, ກະຊວງແຜນການ ແລະ ການລົງທຶນ (MPI) (2016). ວິໄສທັດ 2030 ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະເວລາ 10 ປີ 2030 (2016–2025). ສະໜອງໃຫ້ໂດຍສະມາຊິກຄະນະ ITWG, ໂຄງການການເຄື່ອນຍ້າຍຖິ່ນຖານ.

ສ ປປ ລາວ, MPI (2021). ແຜນການຟື້ນຟູ COVID-192021–2025. ສະໜອງໃຫ້ໂດຍສະມາຊິກ ຄະນະ ITWG, ໂຄງການການເຄື່ອນຍ້າຍຖິ່ນຖານ.

ສ ປປ ລາວ, MPI ແລະ ກອງທຶນປະຊາກອນ ຂອງສະຫະປະຊາຊາດ (UNFPA) (2020).ນະໂຍບາຍປະຊາກອນແລະການພັດທະນາແຫ່ງຊາດ (2019–2030). UNFPA, ສ ປປ ລາວ.

ສ ປປ ລາວ, ກະຊວງປ້ອງກັນຄວາມສະຫງົບ (MOPS) (2015).ກົດໝາຍວ່າດ້ວຍການຄຸ້ມຄອງຄົນເຂົ້າເມືອງ ແລະ ຄົນຕ່າງປະເທດຂອງ ສປປ ລາວ. Law on Immigration and Foreigner Management of the Lao PDR.

ສ ປປ ລາວ, ສະພາແຫ່ງຊາດ (2013a). ກົດໝາຍປະກັນສັງຄົມ (ເລກທີ. 34/ສພຊ). ສາມາດເບິ່ງໄດ້ທີ່ນີ້ here.

ສ ປປ ລາວ, ສະພາແຫ່ງຊາດ (2013b).ກົດໝາຍແຮງງານ (ສະບັບປັບປຸງ) Labour Law (Amended) (ເລກທີ. 43/ສພຊ). ນະຄອນຫຼວງວຽງຈັນ.

ສ ປປ ລາວ, ສະພາແຫ່ງຊາດ (2014a). ກົດໝາຍວ່າດ້ວຍການຄຸ້ມຄອງການແລກປ່ຽນເງິນຕາຕ່າງປະເທດ Law of Foreign Exchange Management (ເລກທີ. 55/ສພຊ). ນະຄອນຫຼວງວຽງຈັນ.

ສ ປປ ລາວ, ສະພາແຫ່ງຊາດ (2014b).ກົດໝາຍວ່າດ້ວຍການປິ່ນປົວ Law on Health Care, 2014. (ພາສາລາວ).

ສ ປປ ລາວ, ສະພາແຫ່ງຊາດ (2015).ກົດໝາຍວ່າດ້ວຍ ການຕ້ານການຄ້າມະນຸດ Anti-Trafficking Law, 2015 (ເລກທີ. 73). ນະຄອນຫຼວງວຽງຈັນ. ສາມາດເບິ່ງໄດ້ທີ່ນີ້ here.

ສ ປປ ລາວ, ສະພາແຫ່ງຊາດ (2017). ກົດໝາຍວ່າດ້ວຍສະຖິຕິ (ສະບັບປັບປຸງ) (ເລກທີ. 24/ສພຊ). ສາມາດເບິ່ງໄດ້ທີ່ນີ້ here.

ສຳນັກງານນາຍົກ (2021).ຍຸດທະສາດແຫ່ງຊາດ ທາງດ້ານ ການຫຼຸດຜ່ອນຄວາມສ່ຽງທາງດ້ານໄພພິບັດ National Strategy on Disaster Risk Reduction (NSDRR) 2021–2030 (ເລກທີ. 510/ນຍ). (ພາສາລາວ).

ສູນສະຖິຕິແຫ່ງຊາດ (LSB) (2015).ຜົນຂອງການສຳຫຼວດປະຊາກອນ ແລະ ຄົວເຮືອນ Results of Population and Housing Census 2015. ກະຊວງແຜນການ ແລະ ການລົງທຶນ.

ສູນສະຖິຕິແຫ່ງຊາດ (LSB) (2018).ການສຳຫຼວດກຳລັງແຮງງານ ໃນ ສ ປປ ລາວ:ບົດລາຍງານກ່ຽວກັບສິ່ງທີ່ຄົ້ນພົບ ຈາກການສຳຫຼວດ Lao PDR Labour Force Survey 2017: Survey Finding Report. ກະຊວງແຜນການ ແລະ ການລົງທຶນ, ນະຄອນຫຼວງວຽງຈັນ.

ສູນສະຖິຕິແຫ່ງຊາດ (LSB) ແລະ ທະນາຄານໂລກ (2020). ຂໍ້ມູນກ່ຽວກັບຄວາມທຸກຍາກ ໃນ ສ ປປ ລາວ: ບົດລາຍງານກ່ຽວກັບຄວາມທຸກຍາກ ໂດຍການສຳຫຼວດລາຍຈ່າຍ ແລະ ການບໍລິໂພກໃນລາວ. Poverty Profile in Lao PDR: Poverty Report for the Lao Expenditure and Consumption Survey 2018–2019. ນະຄອນຫຼວງວຽງຈັນ.

ອົງການທີ່ໃຫ້ບໍລິການທາງດ້ານ ການໃຫ້ຄຳປຶກສາຢູ່ເຂດຊົນນະບົດ ແລະ ພູດອຍ (LURAS) (2015). ໂຄງການກ່ຽວກັບໃຫ້ບໍລິການທາງດ້ານ ການໃຫ້ຄຳປຶກສາຢູ່ເຂດຊົນນະບົດ ແລະ ພູດອຍ. ສາມາດເບິ່ງໄດ້ທີ່ນີ້ here.

Levitt, P. (1998).ການສົ່ງເງິນທາງສັງຄົມ: ການເຄື່ອນຍ້າຍຖິ່ນຖານມີຜົນຕໍ່ຮູບແບບທາງດ້ານວັດທະນະທຳຂັ້ນທ້ອງຖິ່ນ Social remittances: Migration driven local-level forms of cultural diffusion. *ການທົບທວນຄືນການຍົກຍ້າຍຖິ່ນຖານສາກົນ*, 32(4):926–948. ສາມາດເບິ່ງໄດ້ທີ່ນີ້ here.

Levitt, P. (2001). *The Transnational Villagers*. University of California Press, Berkeley.

Lyttleton, C. and S. Vorabouth (2011). Trade circles: Aspirations and ethnicity in commercial sex in Laos. *ວັດທະນະທຳ, ສຸຂະພາບ ແລະ ເພດສຶກສາ, 13*(2):263–277.

Naing, T., A. Geater and P. Pungrassami (2012). Migrant workers' occupation and healthcare-seeking preferences for TB-suspicious symptoms and other health problems: A survey among immigrant workers in Songkhla Province, Southern Thailand. *BMC ສິດທິມະນຸດດ້ານສຸຂະພາບສາກົນ,* 12:22.

Pavie, A. (1995). *Au pays des millions d'éléphants et du Parasol blanc*. A la Conquête des Cœurs. Editions Terre de Brume, Paris.

Radio Free Asia (Lao) (2018). China's fast track to influence: Building a railway in Laos.

Raitzer, D., F. Bosello, M. Tavoni, C. Orecchia, G. Marangoni and J.G. Samson (2015). *Southeast Asia and the Economics of Global Climate Stabilization*. ທະນາຄານພັດທະນາ ອາຊຽນ, Mandaluyong City, ປະເທດຟີລິບປິນ.

Suphanchaimat, R. (2016). “"ໂຄງການບັດປະກັນສຸຂະພາບ" ສຳລັບຜູ້ອົບພະຍົບຂ້າມຊາຍແດນໃນປະເທດໄທ: ຄຳຕອບໃນການປະຕິບັດນະໂຍບາຍ ແລະ ການປະເມີນຜົນໄດ້ຮັບ [PhD thesis]. London School of Hygiene and Tropical Medicine, London.

ລັດຖະບານແຫ່ງປະເທດໄທ (1990). Social Security Act B.E. 2533 (1990) (Translation).

Thailand, Government of (1998). Labour Protection Act B.E. 2541.

ລັດຖະບານແຫ່ງປະເທດໄທ (2002). Royal Decree on the Establishment of Employees under the Social Security Act B.E. 2533.

ລັດຖະບານແຫ່ງປະເທດໄທ (2007).ກົດໝາຍ ວ່າດ້ວຍການໃຫ້ຄ່າຈ້າງແຮງງານ Workmen's Compensation Act B.E. 2537 (1994). ຫ້ອງການປະກັນສັງຄົມ.

ລັດຖະບານແຫ່ງປະເທດໄທ (2011). Occupational Safety, Health and Environment Act B.E. 2554. ສາມາດເບິ່ງໄດ້ທີ່ນີ້ here.

ລັດຖະບານແຫ່ງປະເທດໄທ (2017). Royal Ordinance Concerning the Management of Employment of Foreign Workers, B.E. 2560 (2017). ສາມາດເບິ່ງໄດ້ທີ່ນີ້ here.

ລັດຖະບານແຫ່ງປະເທດໄທ (2019).ກົດໝາຍ ວ່າດ້ວຍການປົກປ້ອງ ແຮງງານ Labour Protection Act B.E. 2541.

ສະຫະປະຊາຊາດ (1948). ຖະແຫຼງການສາກົນກ່ຽວກັບສິດທິມະນຸດ (UDHR). ສາມາດເບິ່ງໄດ້ທີ່ນີ້ here.

ສະຫະປະຊາຊາດ (1965). International Convention on the Elimination of All Forms of Racial Discrimination,ຖືກຮັບຮອງໂດຍ ວັນທີ 21 ເດືອນ ທັນວາ.

ສະຫະປະຊາຊາດ (1966a). International Covenant on Economic, Social and Cultural Rights, ຖືກຮັບຮອງໂດຍ ວັນທີ 16 ເດືອນ ທັນວາ.

ສະຫະປະຊາຊາດ (1966b). International Covenant on Civil and Political Rights, ຖືກຮັບຮອງໂດຍ ວັນທີ 16 ເດືອນ ທັນວາ.

ສະຫະປະຊາຊາດ (1979). Convention on the Elimination of All Forms of Discrimination against Women, ຖືກຮັບຮອງໂດຍ ວັນທີ 18 ເດືອນ ທັນວາ.

ສະຫະປະຊາຊາດ (1989). Convention on the Rights of the Child, ຖືກຮັບຮອງໂດຍ ວັນທີ 20 ເດືອນ ພະຈິກ.

ສະຫະປະຊາຊາດ (1990). International Convention on the Protection of the Rights of All Migrant Workers and Members of their Families, ຖືກຮັບຮອງໂດຍ ວັນທີ 18 ເດືອນ ທັນວາ.

ສະຫະປະຊາຊາດ (2000a). Optional Protocol to the Convention on the Rights of the Child on the involvement of children in armed conflict, ຖືກຮັບຮອງໂດຍ ວັນທີ 25 ເດືອນພຶດສະພາ.

ສະຫະປະຊາຊາດ (2000b). Optional Protocol to the Convention on the Rights of the Child on the sale of children, child prostitution and child pornography, ຖືກຮັບຮອງໂດຍ ວັນທີ 25 ເດືອນພຶດສະພາ.

ສະຫະປະຊາຊາດ (2000c). Protocol to Prevent, Suppress and Punish Trafficking in Persons, Especially Women and Children supplementing the United Nations Convention against Transnational Organized Crime, ຖືກຮັບຮອງໂດຍ ວັນທີ 15 ເດືອນພະຈິກ.

. ສາມາດເບິ່ງໄດ້ທີ່ນີ້ here.

ສະຫະປະຊາຊາດ (2000d). Protocol against the Smuggling of Migrants by Land, Sea and Air, supplementing the Convention against Transnational Organized Crime, ຖືກຮັບຮອງໂດຍ ວັນທີ 15 ເດືອນພະຈິກ.

ສະຫະປະຊາຊາດ (2015). Transforming our World: The 2030 Agenda for Sustainable Development (A/RES/70/1). ສາມາດເບິ່ງໄດ້ທີ່ນີ້ here.

ສະຫະປະຊາຊາດ (2015a). ການຫັນປ່ຽນໂລກຂອງພວກເຮົາ: ວາລະປີ 2030 ສຳລັບການພັດທະນາແບບຍືນຍົງ. ສາມາດເບິ່ງໄດ້ທີ່ນີ້ here.

ສະຫະປະຊາຊາດ (2015b). ກອບແຜນວຽກ Sendai ສຳລັບການຫຼຸດຜ່ອນຄວາມສ່ຽງທາງດ້ານໄພພິບັດ 2015-2030. ສາມາດເບິ່ງໄດ້ທີ່ນີ້ here.

ສະຫະປະຊາຊາດ (2018). Global Compact for Safe, Orderly and Regular Migration (A/RES/73/195).

ທີມງານ ສະຫະປະຊາຊາດ ປະຈຳ ສປປລາວ (2021). *UN Common Country Analysis for the UN Sustainable Development Cooperation Framework 2022–2026 and the 2030 Agenda: Lao People's Democratic Republic*. ສະຫະປະຊາຊາດ ,ສ ປປ ລາວ.

UNAIDS (2014). ໂຄງການຮ່ວມມືຂອງສະຫະປະຊາຊາດກ່ຽວກັບ HIV/AIDS. ສາມາດເບິ່ງໄດ້ທີ່ນີ້ here.

UNAIDS (2016).ບົດລາຍງານຄວາມຄືບໜ້າຂອງ ສປປ ລາວ: ຄວາມຄືບໜ້າຂອງການຕອບສະໜອງ ທາງດ້ານວຽກງານໂລກເອດສ໌ 2016. Lao PDR Country Progress Report: Global AIDS Response Progress 2016.

ພະແນກເສດຖະກິດ ແລະ ສັງຄົມຂອງສະຫະປະຊາຊາດ (DESA) 1998. ???

DESA (2015). ???

DESA (2018). ຄວາມຄາດຫວັງຂອງໂລກ ໃນການຫັນເປັນຕົວເມືອງ World Urbanization Prospects: The 2018 Revision, Online Edition.

DESA (2019). ຄວາມຄາດຫວັງຂອງປະຊາກອນໂລກ 2019. ສາມາດເບິ່ງໄດ້ທີ່ນີ້ here.

DESA (2020). International Migrant Stock 2020.

ໂຄງການພັດທະນາ ຂອງອົງການສະຫະປະຊາຊາດ(UNDP) (2022). *Human Development Report 2021/22 – Uncertain Times, Unsettled Lives: Shaping Our Future in a Transforming World*. UNDP, New York.

UNESCO ສະຖາບັນສະຖິຕິ (UIS) (n.d.). Homepage.

ຄະນະກຳມະການຂັ້ນສູງ ສຳລັບຊາວອົບພະຍົບ ຂອງອົງການສະຫະປະຊາຊາດ (UNHCR) (1951). ສົນທິສັນຍາ ກ່ຽວກັບສະຖານະການກ່ຽວກັບຊາວອົບພະຍົບ. ສາມາດເບິ່ງໄດ້ທີ່ນີ້ here.

UNHCR (1954). Convention Relating to the Status of Stateless Persons.

UNHCR (1961). Convention on the Reduction of Statelessness.

UNHCR (1967). ອານຸສັນຍາ ວ່າດ້ວຍ ສະຖານະການກ່ຽວກັບຊາວອົບພະຍົບ. ສາມາດເບິ່ງໄດ້ທີ່ນີ້ here.

UNHCR (2013). UNHCR statistical online population database: Sources, methods and data considerations. ວັນທີ 1 ເດືອນ ມັງກອນ.

ເຄືອຂ່າຍຂອງອົງການສະຫະປະຊາຊາດ ກ່ຽວກັບ ການເຄື່ອນຍ້າຍຖິ່ນຖານ (2022). Impact of COVID-19 on migrants in Thailand.ບົດລາຍງານ ສະຖານະການ, ເດືອນເມສາ 2022.

ຫ້ອງການຂອງອົງການສະຫະປະຊາຊາດ ວ່າດ້ວຍ ຢາເສບຕິດ ແລະ ອາດສະຍາກຳ (2000). ສົນທິສັນຍາຂອງອົງການສະຫະປະຊາຊາດຕ້ານອາດຊະຍາກຳຂ້າມຊາດ ແລະ ອະນຸສັນຍາສະບັບດັ່ງກ່າວ. ສາມາດເບິ່ງໄດ້ທີ່ນີ້ here.

ຫ້ອງການຂອງອົງການສະຫະປະຊາຊາດ ວ່າດ້ວຍ ຢາເສບຕິດ ແລະ ອາດສະຍາກຳ (2017). ການຄ້າມະນຸດຈາກປະເທດກຳປູເຈຍ, ສປປ ລາວ ແລະ ມຽນມາ ໄປຍັງປະເທດໄທ, ບາງກອກ. ສາມາດເບິ່ງໄດ້ທີ່ນີ້ here.

ກອງທຶນປະຊາກອນ ຂອງສະຫະປະຊາຊາດ (UNFPA) (2006). ???

ກຸ່ມເຮັດວຽກກ່ຽວກັບ ການເຄື່ອນຍ້າຍຖິ່ນຖານ ຂອງອົງການສະຫະປະຊາຊາດໃນປະເທດໄທ (2019).ບົດລາຍງານການເຄື່ອນຍ້າຍຖິ່ນຖານ ປະເທດໄທ *Thailand Migration Report 2019*. ບາງກອກ.

USAID (2022). *Countering Trafficking in Persons in the Lao People's Democratic Republic: An Ecosystem Approach Using Weak-Signal Analysis*. Washington, D.C.

ກະຊວງ ການຕ່າງປະເທດ ສະຫະລັດ ອາເມລິກາ (2018). *Trafficking in Persons Report June 2018*.

ກະຊວງ ການຕ່າງປະເທດ ສະຫະລັດ ອາເມລິກາ (2019). *Trafficking in Persons Report June 2019*.

ກະຊວງ ການຕ່າງປະເທດ ສະຫະລັດ ອາເມລິກາ (2020). *Trafficking in Persons Report 20th Edition June 2020*.

ກະຊວງ ການຕ່າງປະເທດ ສະຫະລັດ ອາເມລິກາ (2021). *Trafficking in Persons Report June 2021*.

ກະຊວງ ການຕ່າງປະເທດ ສະຫະລັດ ອາເມລິກາ (2022). *Trafficking in Persons Report July 2022*.

ທະນາຄານໂລກ (2017). Bilateral Remittance Matrix. ສາມາດເບິ່ງໄດ້ທີ່ນີ້ here.

ທະນາຄານໂລກ (2020). *Lao People's Democratic Republic Poverty Assessment 2020: Catching Up and Falling Behind*. ທະນາຄານໂລກ, Washington, D.C.

ທະນາຄານໂລກ (2021). Lao PDR Country Economic Memorandum – Summary. 17 ເດືອນກັນຍາ.

ທະນາຄານໂລກ (n.d.a). World Development Indicators: The world by income and region (accessed by ???).

ທະນາຄານໂລກ (n.d.b). ຂໍ້ມູນທະນາຄານ: ຕົວຊີ້ວັດການພັດທະນາຂອງໂລກ. ສາມາດເບິ່ງໄດ້ທີ່ນີ້ https://databank.worldbank.org/source/world-development-indicators (ຍອມຮັບໂດຍ ???).

ທະນາຄານໂລກ (n.d.c). Remittance prices worldwide (ຍອມຮັບໂດຍ ???). ສາມາດເບິ່ງໄດ້ທີ່ນີ້ here.

ທະນາຄານໂລກ (2020a). Human Capital Project. ສາມາດເບິ່ງໄດ້ທີ່ນີ້ here.

ອົງການອະນາໄມໂລກ (WHO) (2010).ບົດລາຍງານແຫ່ງຊາດ ກ່ຽວກັບຂໍ້ມູນທາງດ້ານສຸຂະພາບ- ສ ປປ ລາວ. ມະນີລາ. Country Health Information Profiles – Lao People's Democratic Republic. Manila.

WHO (2015a). *Mobile and Migrant Populations and Malaria Information Systems*. ຫ້ອງການ WHO ປະຈຳພາກພື້ນອາຊີຕາເວັນອອກສຽງໃຕ້, New Delhi.

WHO (2015b). *Strategy for Malaria Elimination in the Greater Mekong Subregion (2015–2030)*. ຫ້ອງການຂອງອົງການອະນາໄມໂລກປະຈຳພາກພື້ນປາຊີຟິກຕາເວັນຕົກ.

WHO (2015c). *The End TB Strategy*. Geneva. ສາມາດເບິ່ງໄດ້ທີ່ນີ້ here.

WHO (2017). *Lao People's Democratic Republic–WHO Country Cooperation Strategy 2017–2021*. ຫ້ອງການພາກພື້ນປາຊີຟິກຕາເວັນຕົກ.

WHO (2021). *WHO Global Technical Strategy for Malaria 2016–2030: 2021 Update*. Geneva.

WHO (n.d.).ສະຖິຕິກ່ຽວກັບສຸຂະພາບໃນທົ່ວໂລກ. ການສຳຫຼວດເກັບຂໍ້ມູນໃນທົ່ວໂລກ ທາງດ້ານສຸຂະພາບ (ຍອມຮັບໂດຍ ???). ສາມາດເບິ່ງໄດ້ທີ່ນີ້ here